ເຄື່ອງໃຊ້ປະຈຳວັນ

Folk Tools of Ethnic Groups of Sekong

ຂອງຊົນເຜົ່າໃນແຂວງເຊກອງ



ສະຖາບັນຄົ້ນຄວ້າວັດທະນະທຳ

Institute for Cultural Research

ເຄື່ອງໃຊ້ປະຈຳວັນ
ຂອງຊົນເຜົ່າ ໃນແຂວງເຊກອງ

Folk Tools of Ethnic Groups of Sekong

ຈັດພິມໂດຍ
ສະຖາບັນຄົ້ນຄວ້າ ວັດທະນະທຳ
ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ

By
The Institute for Cultural Research
Ministry of Information and Cultural

ສະໜັບສະໜູນໂດຍມູນນິທິຍີ່ປຸ່ນອາຊີ
The Japan Foundation Asia Center

2005

ການສຶກສາຄົ້ນຄວ້າ ເຄື່ອງໃຊ້ປະຈຳວັນຂອງຊົນເຜົ່າ ໃນແຂວງເຊກອງ.

Folk Tools of Ethnic Groups of Sekong.

ທີ່ປຶກສາ: ທ່ານ ຈັນທະພິລິດ ຈຸມມະສຸລາດ

ຄະນະຄົ້ນຄວ້າ: ນາງ ສົມພາວັນ ໄຊຍະວົງ
ວິຊາການທາງດ້ານສະຖາປັດຕະຍະກຳແລະ ເຄື່ອງຈັກສານ.

ທ່ານ ທະນົງສອນ ສີບຸນເຮືອງ
ວິຊາການທາງດ້ານຂໍ້ມູນ - ຮູບສ່ຽງ

ທ່ານ ດຣ ໂຢຊິໂນ ອາກິຣະ
Dr. YOSHINO AKIRA
ນັກຄົ້ນຄວ້າທາງດ້ານມະນຸດວິທະຍາ

ທ່ານ ນິຊິໂມໂຕະ ຟູໂຕຊິ
Mr. Nishmoto Futoshi
ນັກຄົ້ນຄວ້າທາງດ້ານມະນຸດວິທະຍາ

ບັນດາທ່ານທີ່ປະກອບຂໍ້ມູນ:

1. ທ່ານ ສີວິໄລ ຈັນທະວົງ
   (ພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງເຊກອງ)
2. ທ່ານ ບຸນທາ ນາຍບ້ານ ບ້ານປະອໍ ເມືອງລະມາມ ແຂວງເຊກອງ
   ພ້ອມດ້ວຍປະຊາຊົນພາຍໃນບ້ານ
3. ທ່ານ ໄບຣ ນາຍບ້ານ ບ້ານກະໂດນໃໝ່ ເມືອງລະມາມ ແຂວງເຊກອງ
   ພ້ອມດ້ວຍປະຊາຊົນພາຍໃນບ້ານ
4. ທ່ານ ບຸນທ່ຽວ ນາຍບ້ານ ບ້ານຫາດວີ ເມືອງກະລຶມ ແຂວງເຊກອງ
5. ທ່ານ ຄຳເກີດ ຮອງ ນາຍບ້ານ ບ້ານຫາດວີ ເມືອງກະລຶມ ແຂວງເຊກອງ
   ພ້ອມດ້ວຍປະຊາຊົນພາຍໃນບ້ານ
6. ທ່ານ ສຸກ ຮອງນາຍບ້ານ ບ້ານຍົກທີ່ງ ເມືອງທ່າແຕງ ແຂວງເຊກອງ
   ພ້ອມດ້ວຍປະຊາຊົນພາຍໃນບ້ານ

ທະບຽນອະນຸຍາດ: 233ພຈ/18072005.
ສະຖານທີ່ພິມ: ໂຮງພິມ ມັນທາຕຸລາດ

ສະຫງວນລິຂະສິດ: ສະຖາບັນຄົ້ນຄວ້າ ວັດທະນະທຳ
ບ້ານ ສີເມືອງ ເມືອງສີສັດຕະນາກ
ນະຄອນຫລວງວຽງຈັນ
ຖະໜົນ: ຄູວຽງ
ໂທລະສັບ: 021 212023 212008
ໂທລະສານ: 021 212009
ຕູ້ ປ.ນ: 5246

ຄວາມເປັນມາ ແລະ ຈຸດປະສົງຂອງການສຶກສາ:

ຈຸດປະສົງຂອງການສຶກສາຄົ້ນຄວ້າໃນຄັ້ງນີ້ ເປັນການບັນທຶກອຸປະກອນ-ເຄື່ອງໃຊ້ແບບພື້ນເມືອງ ແລະ ການນຳໃຊ້ເທັກນິກ ແລະວັດທະນະທຳທ້ອງຖິ່ນ ຂອງຊາວໄຮ່ໃນແຂວງເຊກອງ. ສິ່ງທີ່ປະກອບເປັນວັດທະນະທຳ ມີຫຼາຍລັກສະນະ ແລະ ມັນແມ່ນຕົວຊີ້ບອກເຖິງຈຸດຢືນຂອງວັດທະນະທຳ, ໃນການສຶກສາລະບົບການທຳມາຫາກິນ ຂອງປະຊາຊົນ.ໂດຍການບັນລະຍາຍເຖິງການນຳໃຊ້ເຄື່ອງມືເຂົ້າໃນວຽກງານດ້ານກະສິກຳ, ການລ້ຽງສັດ, ການເຮັດຮີດຄອງ, ການລ່າສັດ ຫຼື ຫາປາ ຊຶ່ງເປັນສິ່ງທີ່ຈຳເປັນທີ່ສຸດແລະ ຂາດບໍ່ໄດ້ ມັນມີຄວາມຈຳເປັນຫຼາຍ ສຳລັບນັກມະນຸດວິທະຍາຕໍ່ການອະທິບາຍກ່ຽວກັບເຄື່ອງມືຂໍ້ມູນຂ່າວສານຂອງພວກເຂົາ. ການອະທິບາຍເຖິງເຄື່ອງມື ມີຄວາມສຳຄັນສຳລັບການສຶກສາທາງດ້ານເຕັກນິກອຸປະກອນ-ເຄື່ອງມື ເຄື່ອງໃຊ້ບາງອັນກໍ່ມີການຫ້າມທາງປະເພນີຄວາມເຊື່ອ. ເຄື່ອງໃຊ້ບາງອັນອາດຈະມີການຈຳກັດດ້ານວັດທະນະທຳແກ່ເດັກຍິງຫຼືອາດຈະເປັນລັກສະນະຂອງກຸ່ມ. ນອກຈາກນັ້ນສິ່ງທີ່ປະກອບເປັນວັດທະນະທຳ ໄດ້ສະແດງອອກຢ່າງຊັດເຈນ ໃນການປ່ຽນແປງວັດທະນະທຳໃນສັງຄົມຂອງຊົນເຜົ່າໃນແຕ່ລະກຸ່ມ.

ປະຊາຊົນຜູ້ທີ່ນຳໃຊ້ ໄດ້ຜະລິດເຄື່ອງໃຊ້ແບບພື້ນເມືອງ ຈາກວັດສະດຸທ້ອງຖິ່ນ ເຄື່ອງໃຊ້ແບບພື້ນເມືອງໄດ້ປະສານກັນລະຫ່ວາງຜະລິດຕະພັນແບບເຕັກນິກແລະຄວາມຮູ້ຂອງຄົນທ້ອງຖິ່ນ.ໃນຈຸດໜຶ່ງ ເຄື່ອງໃຊ້ແບບພື້ນເມືອງແມ່ນຫຼັກມູນທີ່ແຕກຕ່າງກັບເຄື່ອງມືທັນສະໄໝທີ່ເຮັດດ້ວຍຜະລິດຕະພັນທີ່ມີຊື່ສຽງຈາກໂຮງງານ. ພວກເຮົາອາດຈະເວົ້າໄດ້ວ່າ: ເຄື່ອງໃຊ້ພື້ນເມືອງ ແມ່ນເຄື່ອງທີ່ເປັນວັດທະນະທຳ.

ໃນຂະນະທີ່ພວກເຮົາເອີ້ນວ່າ: ເຄື່ອງມືທີ່ເປັນວັດທະນະທຳ, ເຄື່ອງໃຊ້ພື້ນເມືອງ ແມ່ນໄດ້ປ່ຽນແປງໂດຍຜ່ານປະຫວັດສາດທີ່ຍາວນານຄືກັນກັບວັດທະນະທຳອື່ນໆ.ເຄື່ອງໃຊ້ພື້ນເມືອງທັງໝົດໃນປະຈຸບັນ ແມ່ນຮ່ອງຮອຍຂອງການປ່ຽນແປງ ທາງດ້ານປະຫວັດສາດທີ່ເປັນປະສົບການຂອງກຸ່ມຊົນເຜົ່າ.ໃນຄວາມຈິງການຄົ້ນຄ້ວາຂອງພວກເຮົາມີເຄື່ອງມືຈຳນວນໜຶ່ງທີ່ໄດ້ມາຈາກກຸ່ມຊົນເຜົ່າອື່ນ.ໃນນີ້ເຄື່ອງໃຊ້ແບບພື້ນເມືອງຂອງຊົນເຜົ່າໜຶ່ງ ໄດ້ຜ່ານການປ່ຽນແປງຫຼາຍຢ່າງ ແລະ ກໍ່ມີອິດທິພົນແກ່ຊົນເຜົ່າອື່ນໆ.

ດັ່ງນັ້ນ, ເຄື່ອງໃຊ້ແບບພື້ນເມືອງຈຶ່ງສະແດງໃຫ້ເຫັນເຖິງ ການສະສົມທີ່ເປັນເວລາຍາວນານຂອງຄວາມຮູ້ແລະເຕັກນິກສະເພາະກຸ່ມ.ອີກດ້ານໜຶ່ງ ເຄື່ອງໃຊ້ພື້ນເມືອງຍັງສະແດງເຖິງລະດັບຄວາມຮູ້-ຄວາມສາມາດແລະເຕັກໂນໂລຊີຂອງປະຊາຊົນໃນທ້ອງຖິ່ນຢ່າງເປັນຮູບຮ່າງທີ່ສາມາດເຫັນໄດ້. ຄວາມຮູ້ - ຄວາມສາມາດ ແລະ ເຕັກໂນໂລຊີແມ່ນ

ຊັບສິນທາງວັດທະນະທຳທີ່ມີຄວາມສຳຄັນ ສຳລັບມະນຸດໂລກ ກໍ່ຄືແຕ່ລະກຸ່ມຊົນເຜົ່າ. ຍ້ອນເຮົາມີແນວຄິດ ແລະ ທັດສະນະແນວນີ້ ຈຶ່ງໄດ້ມີການຄົ້ນຄວ້າ.

ພາຍໃຕ້ແນວຄິດທີ່ໄດ້ກ່າວມາຂ້າງເທິງນີ້, ພວກເຮົາໄດ້ສຳຫຼວດ ອຸປະກອນສຳລັບການຜະລິດ ລວມໄປເຖິງອຸປະກອນທີ່ບໍ່ແມ່ນຂອງພື້ນເມືອງ. ທຳອິດພວກເຮົາໄດ້ວັດແທກ ແລະ ບັນທຶກອຸປະກອນແຕ່ລະອັນເປັນລາຍລະອຽດ.

ມັນແມ່ນຂໍ້ມູນພື້ນຖານທີ່ຈຳເປັນສຳລັບການສຶກສາກ່ຽວກັບສິ່ງທີ່ປະກອບແລະ ສິ່ງທີ່ກ່ຽວຂ້ອງກັບອົງປະກອບຂອງວັດທະນະທຳ. ພວກເຮົາໄດ້ຮ່າງເປັນແຜນວາດຂອງອຸປະກອນ-ເຄື່ອງໃຊ້ທັງໝົດ.ບາງອຸປະກອນ-ເຄື່ອງໃຊ້ພວກເຮົາໄດ້ສ້າງແຜນວາດທີ່ໄດ້ວັດແທກລາຍລະອຽດຕ່າງໆ, ນອກຈາກການບັນທຶກຂໍ້ມູນກ່ຽວກັບການວັດແທກແລ້ວ ພວກເຮົາໄດ້ຖ່າຍຮູບອຸປະກອນເຄື່ອງໃຊ້ແຕ່ລະອັນອີກດ້ວຍ.

ການສຳຫຼວດອຸປະກອນ-ເຄື່ອງໃຊ້ ທີ່ເປັນເອກກະລັກທາງວັດທະນະທຳນັ້ນມັນ ບໍ່ພຽງພໍຕໍ່ການບັນທຶກວັດຖຸທີ່ເປັນຕົວຂອງອຸປະກອນເຄື່ອງໃຊ້ດັ່ງກ່າວ. ໃນຂະນະທີ່ພວກເຮົາວັດແທກແລະບັນທຶກບັນດາອຸປະກອນ-ເຄື່ອງໃຊ້ນັ້ນ, ພວກເຮົາກໍ່ໄດ້ບັນທຶກວິທີການນຳໃຊ້ເຂົ້າໃນກະສິກຳ, ຫາປາ, ລ່າເນື້ອ ຫຼືແປງຮີດ. ມັນມີຄວາມຈຳເປັນຫຼາຍໃນການນຳເອົາອຸປະກອນ-ເຄື່ອງໃຊ້ແຕ່ລະອັນ ເຂົ້າໃນລະບົບການຜະລິດທ້ອງຖິ່ນ, ຄວາມເຂົ້າໃຈ ແລະການດຳລົງຊີວິດປະຈຳວັນ. ນອກຈາກນັ້ນ ພວກເຮົາຍັງໄດ້ສຳຫຼວດບາງອຸປະກອນ-ເຄື່ອງໃຊ້ ທີ່ມີການຫ້າມທາງປະເພນີຄວາມເຊື່ອຮີດຄອງ ແລະ ສອບຖາມວິທີການເຮັດເຄື່ອງໃຊ້ບາງອັນ. ຄວາມຊຳນິຊຳນານດ້ານການຜະລິດອຸປະກອນ-ເຄື່ອງໃຊ້ ຫັດຖະກຳ ແມ່ນຊັບສິນທາງວັດທະນະທຳທີ່ສຳຄັນຂອງທ້ອງຖິ່ນ.

1. ການສຶກສາຄົ້ນຄ້ວາໃນແຂວງເຊກອງ:

ຄືດັ່ງທີ່ໄດ້ກ່າວມາຂ້າງເທິງ,ການຄົ້ນຄ້ວາໄດ້ດຳເນີນໄປດ້ວຍການບັນທຶກເຄື່ອງ ມືການຜະລິດຕາມຮີດຄອງປະເພນີຂອງຊາວໄຮ່ໃນແຂວງເຊກອງທາງພາກໃຕ້ຂອງລາວ. ມີບາງກຸ່ມຊົນເຜົ່າ ກຳລັງດຳເນີນການເຮັດໄຮ່ ໃນແຂວງເຊກອງ. ພວກເຂົາມີລະບົບເຕັກນິກແລະອຸປະກອນ-ເຄື່ອງໃຊ້ທີ່ແຕກຕ່າງຈາກຊາວນາ.ນອກຈາກການເຮັດໄຮ່ແລ້ວການ ຄົ້ນຄ້ວາກ່ຽວກັບລະບົບ ຂອງສິ່ງທີ່ປະກອບເປັນອຸປະກອນ ວັດທະນະທຳຂອງຊາວໄຮ່ ແມ່ນມີຄວາມແຕກຕ່າງຫຼາຍຈາກຊາວນາ ເຊິ່ງເມື່ອກ່ອນນັ້ນບໍ່ມີຫຼາຍ.

ອີກດ້ານໜຶ່ງ, ສຳລັບການສຶກສາວັດທະນະທຳຂອງຊາວໄຮ່ ໃນລາວມີການສຶກສາຫຼາຍສິ່ງໃນບັນດາແຂວງທາງພາກເໜືອ.ຈາກການສົມທຽບກັບບັນດາແຂວງທາງພາກເໜືອ, ມີ 2-3ການສຶກສາເທົ່ານັ້ນ ທີ່ກ່ຽວຂ້ອງກັບວັດທະນະທຳຂອງຊາວໄຮ່ທາງພາກໃຕ້ຂອງລາວ. ນອກຈາກນັ້ນຍັງມີ 2-3ການສຶກສາທີ່ກ່ຽວກັບ ສິ່ງທີ່ປະກອບເປັນວັດທະນະທຳຂອງພວກເຂົາ. ເຖິງຢ່າງໃດກໍ່ຕາມ ອຸປະກອນ-ເຄື່ອງໃຊ້ພື້ນເມືອງຂອງກຸ່ມຊົນເຜົ່າທັງໝົດແມ່ນຊັບສິນວັດທະນະທຳພື້ນເມືອງທີ່ສຳຄັນ. ດັ່ງນັ້ນພວກເຮົາຈຶ່ງໄດ້ສຳຫຼວດອຸປະກອນ-ເຄື່ອງໃຊ້ ແລະ ທັດສະນະຄະຕິ ຂອງຊາວໄຮ່ໃນແຂວງເຊກອງ.

ອຸປະກອນພື້ນເມືອງສຳລັບການຜະລິດນັ້ນ ຕ້ອງໄດ້ບັນທຶກ ແລະທຳຄວາມເຂົ້າໃຈຕໍ່ກັບການໄຫຼວຽນຂອງລະບົບເຕັກນິກການຜະລິດເຊັ່ນ:ການປູກຝັງຂອງຊາວໄຮ່. ພື້ນຖານແນວຄວາມຄິດນີ້ ພວກເຮົາໄດ້ສຳຫຼວດເຂົ້າໄປເຖິງ ການຜະລິດໃນແຕ່ລະໝູ່ບ້ານເປັນເວລາ1ປີ ຈາກນັ້ນ, ພວກເຮົາໄດ້ສຳຫຼວດຊະນິດ ແລະ ວິທີການຜະລິດຂອງເຄື່ອງມືທີ່ເຂົານຳໃຊ້ເຂົ້າໃນການເຮັດໄຮ່. ພວກເຮົາທັງຖ່າຍຮູບແລະວັດແທກເຄື່ອງມື. ນອກຈາກການບັນທຶກເຄື່ອງມືແລ້ວນັ້ນ, ພວກເຮົາໄດ້ບັນທຶກການນຳໃຊ້ ແລະ ຄວາມຊຳນິຊຳນານໃນການຜະລິດເຄື່ອງໃຊ້ແຕ່ລະຊະນິດເຊັ່ນ: ຂັ້ນຕອນການເຮັດກະຕ່າ ທີ່ມີຂັ້ນຕອນຫຍຸ້ງຍາກ. ການນຳໃຊ້ ແລະ ວິທີການຜະລິດເຄື່ອງມືຫັດຖະກຳ ໄດ້ບັນທຶກດ້ວຍການຖ່າຍວີດີໂອ. ນອກຈາກນັ້ນ, ພວກເຮົາໄດ້ສຳຫຼວດ ຄະຕິເຊື່ອຖື ແລະ ການນຳໃຊ້ເຄື່ອງມືດ້ວຍ.

ດັ່ງນັ້ນ, ພວກເຮົາໄດ້ບັນທຶກຂໍ້ມູນຈຳນວນຫຼາຍແລະ ຫຼາຍຊະນິດ ພວກເຮົາຄິດວ່າສິ່ງເຫຼົ່ານັ້ນ ບໍ່ພຽງພໍເພາະຄວາມຈຳກັດທາງດ້ານເວລາ, ຂໍ້ມູນຂອງພວກເຮົາຈະເປັນພຽງແຕ່ຂໍ້ມູນພື້ນຖານສຳລັບການຄົ້ນຄ້ວາໃນຄັ້ງຕໍ່ໄປເທົ່ານັ້ນ.

ສາດສະດາຈານ ໂຢຊິໂນ ອາກິຣະ

ນັກຄົ້ນຄວ້າທາງດ້ານມະນຸດວິທະຍາ

Dr. YOSHINO AKIRA

Social Anthropology

Department of Area studies

Tokyo GAKUGEI UNIVERSISY.

ບົດນຳ

ເຄື່ອງໃຊ້ໃນຊີວິດປະຈຳວັນ ຊຶ່ງເປັນງານຫັດຖະກຳໜຶ່ງ ທີ່ຕິດແທດກັບການດຳລົງຊີວິດຂອງແຕ່ລະຊົນເຜົ່າ ຖືໄດ້ວ່າເປັນສິ່ງທີ່ຂາດບໍ່ໄດ້ໃນການ ເຮັດໄຮ່ ເຮັດນາ, ໄດ້ປະດິດຂຶ້ນ ດ້ວຍພູມປັນຍາ ດ້ວຍຄວາມຄິດ ຄວາມຕ້ອງການ ເພື່ອຕອບສະໜອງທາງດ້ານການດຳລົງຊີວິດປະຈຳວັນໃນແຕ່ລະຂົງເຂດ ຊຶ່ງປະກອບມີການອຸປະໂພກ ບໍລິໂພກທາງ ດ້ານປະເພນີ ແລະ ທາງດ້ານອື່ນໆອີກ.

ເຄື່ອງໃຊ້ຕ່າງໆ ບໍ່ພຽງແຕ່ສະທ້ອນໃຫ້ເຫັນເຖິງຄວາມສາມາດ ຂອງຊ່າງແຕ່ລະຄົນ ແຕ່ລະທ້ອງຖິ່ນເທົ່ານັ້ນ ມັນຍັງສະທ້ອນໃຫ້ເຫັນ ເຖິງສະພາບພູມສັນຖານ ສັງຄົມວັດທະນະທຳ ຄ່ານິຍົມຂອງຊົນເຜົ່າເຫລົ່ານັ້ນ ຕະຫລອດເຖິງບັນຫາທີ່ສົ່ງຜົນກະທົບ ຕໍ່ການຜະລິດເຄື່ອງຈັກສານ ຊຶ່ງນັບມື້ນັບຈະສູນຫາຍໄປເລື້ອຍໆ ເພື່ອເປັນການອະນຸລັກຮັກສາເຖິງພູມປັນຍາຂອງບັນດາເຜົ່ານີ້ໄວ້ ໃຫ້ຄົນລຸ້ນຫລັງໄດ້ເຫັນເຖິງສິ່ງທີ່ມີຄຸນຄ່ານີ້. ດັ່ງນັ້ນຄະນະຄົ້ນຄວ້າ ຈຶ່ງໄດ້ຮ່ວມມືກັນລົງໄປເກັບກຳເອົາຂໍ້ມູນເພື່ອມາລຽບລຽງແລະຂຽນປະກອບເປັນປຶ້ມດັ່ງກ່າວນີ້. ຜົນງານທີ່ເຫັນໃນຄັ້ງນີ້ກໍ່ຍ້ອນຄວາມເອົາໃຈໃສ່ ຈາກທາງກະຊວງຖະແຫລງຂ່າວ ແລະ ວັດທະນະທຳ ພ້ອມນີ້ທາງຄະນະຄົ້ນຄວ້າກໍ່ຂໍຂອບໃຈນຳທາງ The Japan Foundation Asia Center ທີ່ໃຫ້ການສະໜັບສະໜູນ ໃນການລົງເກັບກຳຂໍ້ມູນໃນຄັ້ງນີ້, ຂໍຂອບໃຈມາຍັງທ່ານ Dr. Professor YOSHINO Akira ທີ່ໄດ້ໃຫ້ຄຳແນະນຳໃນການລົງເກັບກຳຂໍ້ມູນ ແລະ ຂໍຂອບໃຈນຳທຸກທ່ານທີ່ໃຫ້ການຮ່ວມມື ຫວັງຢ່າງຍິ່ງວ່າຈະເປັນການຊ່ວຍເກັບກຳຂໍ້ມູນ ທີ່ມີຄຸນຄ່ານີ້ໄວ້ໃນອີກດ້ານໜຶ່ງເພື່ອເປັນການຊ່ວຍບັນທຶກພູມປັນຍາຂອງບັນດາເຜົ່າ ໃນແຕ່ລະທ້ອງຖິ່ນນີ້ໄວ້ ໃຫ້ປະກົດຢູ່ໃນຮູບແບບຂອງເອກະສານທີ່ຈະມີອາຍຸຍືນຍາວ ສາມາດເຜີຍແຜ່ໄດ້ຢ່າງກວ້າງຂວາງກວ່າຮູບແບບຂອງເຄື່ອງຈັກສານດັ່ງກ່າວ.

ໃນການລົງເກັບກຳຂໍ້ມູນໃນຄັ້ງນີ້ ບໍ່ສາມາດເກັບກຳ ລາຍລະອຽດໄດ້ທັງໝົດ ເນື່ອງຈາກເວລາອັນສັ້ນ ແລະ ເປັນຜົນງານຄັ້ງທຳອິດຂອງຜູ້ຂຽນ ພ້ອມຄະນະຈັດທຳຈຶ່ງເປັນເຫດໃຫ້ການນຳສະເໜີໃນຄັ້ງນີ້ ອາດຈະຂາດຕົກບົກຜ່ອງ ກໍ່ຂໍອະໄພມາພະທີ່ນີ້ດ້ວຍ ພວກເຮົາຍິນດີຮັບຄຳຕິຊົມ ຈາກບັນດາທ່ານເພື່ອນຳໄປປັບປຸງແລະແກ້ໄຂຂໍ້ຜິດພາດ ໃນຄັ້ງຕໍ່ໄປ.

ຄະນະຈັດທຳ

ວຽງຈັນ 25 ສິງຫາ 2004.

ສາລະບານ

ເຄື່ອງໃຊ້ປະຈຳວັນ
ຂອງຊົນເຜົ່າ ແຂວງເຊກອງ

ສັງເຂບກ່ຽວກັບແຂວງເຊກອງ..... 01
ລັກສະນະພູມສັນຖານ..... 05
ວັດສະດຸທີ່ໃຊ້ໃນການຜະລິດເຄື່ອງຈັກສານ 06
ວິທີ່ການເລືອກໄມ້ໄຜ່..... 10
ເຄື່ອງມືທີ່ໃຊ້ເຂົ້າໃນການເຮັດເຄື່ອງຈັກສານ. 11

ບັນດາເຄື່ອງນຳໃຊ້ໃນຊີວິດປະຈຳວັນ
ຊົນເຜົ່າໃນແຂວງເຊກອງ

ໜ້າທີ ແລະ ປະໂຫຍດໃຊ້ສອຍບັນດາເຄື່ອງໃຊ້ປະຈຳວັນ..... 14
ເຄື່ອງມືຮັບໃຊ້ໃນຊີວິດປະຈຳວັນ ຂອງແຕ່ລະຊົນເຜົ່າ..... 15
ເຜົ່າອາລັກ 15
ສະພາບໂດຍລວມຂອງບ້ານປະອໍ ເມືອງລະມາມ 16
ການດຳລົງຊີວິດ (ການເຮັດໄຮ່) ຂອງປະຊາຊົນບ້ານປະອໍ..... 18
ອຸປະກອນການເຮັດໄຮ່..... 20
ອຸປະກອນການຫາປາ..... 42
ສະພາບໂດຍລວມຂອງບ້ານກະໂດນໃໝ່ ເມືອງລະມາມ 52
ການດຳລົງຊີວິດ (ການເຮັດໄຮ່) ຂອງປະຊາຊົນ ບ້ານ ກະໂດນໃໝ່..... 54
ອຸປະກອນການເຮັດໄຮ່..... 57
ອຸປະກອນການຫາປາ..... 98

ກ່ອງເຂົ້າ 112
ການສານກ່ອງເຂົ້າ 113
ເຜົ່າແງະ (ເຜົ່າກະຣຽງ)..... 116
ສະພາບໂດຍລວມຂອງບ້ານຫາດວີ ເມືອງກະລຶມ ແຂວງເຊກອງ..... 117
ການດຳລົງຊີວິດ (ການເຮັດໄຮ່) ຂອງປະຊາຊົນບ້ານຫາດວີ..... 119
ອຸປະກອນການເຮັດໄຮ່..... 122
ອຸປະກອນການຫາປາ..... 162
ເຜົ່າສ່ວຍ..... 182
ສະພາບໂດຍລວມຂອງບ້ານຍົກທົ່ງ ເມືອງທ່າແຕງ 183
ການດຳລົງຊີວິດ (ການເຮັດໄຮ່) ຂອງປະຊາຊົນບ້ານຍົກທົ່ງ..... 184
ອຸປະກອນການເຮັດໄຮ່..... 188
ອຸປະກອນການຫາປາ..... 214

ຄຸນຄ່າຂອງເຄື່ອງຈັກສານໄມ້ໄຜ່
ທີ່ມີຕໍ່ວິຖີຊີວິດຂອງປະຊາຊົນໃນແຂວງເຊກອງ

ເຄື່ອງໃຊ້ປະຈຳວັນ
ຂອງຊົນເຜົ່າໃນແຂວງເຊກອງ

ສັງເຂບກ່ຽວກັບແຂວງເຊກອງ

ເຊກອງແມ່ນແຂວງໜຶ່ງໃນບັນດາ17ແຂວງ1ເຂດພິເສດແລະຕັ້ງຢູ່ທາງພາກຕາເວັນອອກສ່ຽງໃຕ້ຂອງປະເທດສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແຜ່ນດິນຕອນເໜືອຂອງແຂວງເຊກອງ ມີຊາຍແດນຕິດຈອດກັບ ແຂວງສາລະວັນ ທິດໃຕ້ຕິດກັບແຂວງອັດຕະປື ທິດຕາເວັນອອກ ຕິດກັບແຂວງເຫືອທຽນເຫວະ ກວາງນາມ ແຂວງກອນຕູມແຫ່ງ ສ.ສ. ຫວຽດນາມ ທີ່ມີຊາຍແດນຮ່ວມກັນຍາວ 280 ກິໂລແມັດ ທິດຕາເວັນຕົກຕິດກັບແຂວງຈຳປາສັກ.

ແຂວງເຊກອງມີເນື້ອທີ່ທັງໝົດ 7.665 ກິໂລຕາແມັດ ກວມເອົາ 3,24% ຂອງເນື້ອທີ່ທົ່ວປະເທດ ເນື້ອທີ່ຂອງແຂວງເຊກອງແບ່ງອອກເປັນ3 ເຂດຄື: ເຂດພູດອຍ ເຂດພູພຽງ ແລະ ເຂດທົ່ງພຽງແຄມສາຍນ້ຳເຊກອງ ແຄມເສັ້ນທາງເລກທີ 16.

- ເຂດພູດອຍມີເນື້ອທີ່ທັງໝົດ 4.482 ກິໂລຕາແມັດ ຫລື ເທົ່າກັບ 65% ຂອງເນື້ອທີ່ທັງໝົດ ເຂດພູດອຍກວມເອົາ ເມືອງກະລຶມ ດາກຈືງ ນອກນັ້ນຍັງກວມເອົາອີກເຄິ່ງໜຶ່ງຂອງເນື້ອທີ່ເມືອງລະມາມ.

- ເຂດພູພຽງ (ພາກສ່ວນໜຶ່ງຂອງພູພຽງບໍລະເວນ) ມີເນື້ອທີ່ 30% ຂອງເນື້ອທີ່ທັງໝົດ ຊຶ່ງກວມເອົາເນື້ອທີ່ທັງໝົດຂອງເມືອງທ່າແຕງ ພື້ນທີ່ເຂດນີ້ ເປັນເຂດທີ່ມີຄວາມອຸດົມສົມບູນເໝາະແກ່ການປູກຝັງ ຊຶ່ງສາມາດກ້າວໄປເຖິງໃນລະດັບອຸດສະຫະກຳ ໃນອານາຄົດ.

-ເຂດທົ່ງພຽງລຽບຕາມສາຍນ້ຳ ເຊກອງ, ເຊນ້ຳນ້ອຍ ແລະ ລຽບຕາມເສັ້ນທາງເລກທີ16ມີເນື້ອທີ່ທັງໝົດ383.25 ກິໂລຕາແມັດ ຫລື ເທົ່າກັບ 5% ຂອງເນື້ອທີ່ ແຂວງ.

ແຂວງເຊກອງມີສາຍນ້ຳເຊກອງໄຫລຜ່ານແຕ່ເໜືອເຖິງໃຕ້ ເປັນແຫລ່ງທຳມາຫາກິນ ແລະ ເປັນເສັ້ນທາງຄົມມະນາຄົມທາງນ້ຳ ທີ່ສຳຄັນລະຫວ່າງ ເມືອງກະລຶມ ເມືອງລະມາມ ແລະ ແຂວງອັດຕະປືໄປມາໄດ້ສະດວກໄດ້ສອງລະດູ.

ປະຊາກອນ ຊົນເຜົ່າ ແລະ ການປົກຄອງ

- ປະຊາກອນ

ປະຊາກອນຂອງແຂວງທັງໝົດມີ 79.475ຄົນ ຍິງ40.384ຄົນ ປະຊາກອນທັງໝົດຂອງແຂວງເຊກອງ ມີອາຊີບທຳການຜະລິດກະສິກຳແບບທຳມະຊາດເປັນສ່ວນໃຫ່ຍ ເຂດພູດອຍປະຊາຊົນດຳລົງຊີວິດກະແຈກກະຈາຍ ມີອາຊີບເຮັດໄຮ່ ເຮັດນາ ເປັນຕົ້ນຕໍ ເປັນເຂດທີ່ທຸກຍາກ ຫ່າງໄກສອກຫລີກ ແລະ ບໍ່ມີເສັ້ນທາງຄົມມະນາຄົມທີ່ສະດວກ.

- ຊົນເຜົ່າ

ເຊກອງເປັນແຂວງ ທີ່ມີບັນດາຊົນເຜົ່າທີ່ຫລາກຫລາຍຜ່ານການສຳຫລວດຕົວຈິງ ປະຊາກອນທີ່ດຳລົງຊີວິດພາຍໃນແຂວງປະກອບມີ 14 ຊົນເຜົ່າເປັນຕົ້ນ ຕະຫລຽງ, ແຢະ, ດັກກົງ, ຕະຣົວ, ອາລັກ(ຮາຣລັກ), ລະວີ, ສ່ວຍ, ລະເວນ, ຕະໂອ້ຍ, ກະຕູ, ຈະຕ໋ອງ, ກະຽງ(ແງະ), ກະຕາງ ແລະ ລາວລຸ່ມ.

ໃນຈຳນວນ14 ຊົນເຜົ່ານີ້ ໄດ້ຖືກຈັດແຍກອອກເປັນສອງກຸ່ມໃຫ່ຍຄື: ກຸ່ມທີ່ໃຊ້ພາສາລາວ -ໄຕ ແລະ ກຸ່ມທີ່ໃຊ້ພາສາມອນ - ຂະແມ.

- ການປົກຄອງ

ແຂວງເຊກອງໄດ້ແບ່ງການປົກຄອງອອກເປັນ 4 ຕົວເມືອງຄື: ເມືອງລະມາມ (ເຫດສະບານ)ເມືອງທ່າແຕງ ເມືອງກະລຶມ ແລະ ເມືອງດາກຈຶງ ປະກອບມີ 21ເຂດ 262 ບ້ານ 9.434ຫລັງຄາເຮືອນ13.693ຄອບຄົວ. ໃນນັ້ນ8177ຄອບຄົວ ຍັງດຳລົງຊີວິດຢູ່ໃນຄວາມທຸກຍາກ ເຊກອງຫ່າງຈາກນະຄອນຫລວງວຽງຈັນປະມານ 810ກິໂລແມັດ ໂດຍຜ່ານແຂວງບໍລິຄຳໄຊ - ຄຳມ່ວນ - ສະຫວັນນະເຂດ - ຈຳປາສັກ ແລະ ສາລະວັນ.

ດ້ານເສດຖະກິດ ແລະ ດ້ານການຄົມມະນາຄົມ

ອັດຕາການຂະຫຍາຍຕົວ ທາງດ້ານເສດຖະກິດຂອງ ແຂວງເຊກອງຢູ່ໃນທ່ວງທ່າຂະຫຍາຍຕົວຢ່າງຕໍ່ເນື່ອງລວມຍອດຜະລິດຕະພັນ (GDP) ເພີ້ມຂຶ້ນສະເລ່ຍ 5,8%ຕໍ່ປີ ການຜະລິດສະບຽງອາຫານການຜະລິດສິນຄ້າໃນຂົງເຂດຕ່າງໆໄດ້ສືບຕໍ່ຂະຫຍາຍຕົວ

ເຖິງຢ່າງໃດກໍ່ຕາມ ການພັດທະນາທາງດ້ານເສດຖະກິດຈະມີຜົນຄືບໜ້າ ພໍສົມຄວນກໍ່ຕາມ ແຕ່ເຊກອງຍັງເປັນແຂວງທີ່ທຸກຍາກ ລາຍຮັບລວມຍອດ(GDP) ສະເລ່ຍໃສ່ຫົວຄົນຕໍ່ປີພຽງແຕ່161,1ໂດລາສະຫະລັດ ມີ 8177ຄອບຄົວ ຫລື ເທົ່າກັບ59,71%ຂອງ

ຈຳນວນຄອບຄົວທັງໝົດ ຍັງດຳລົງຊີວິດຢູ່ໃນລະດັບຄວາມຍາກຈົນ ເພື່ອບັນລຸເປົ້າໝາຍ ອອກຈາກຄວາມດ້ອຍພັດທະນາ ເທື່ອລະກ້າວນັ້ນທົ່ວ ທັງແຂວງຈະຕ້ອງໄດ້ສູ້ຊົນ ຮັກສາ ອັດຕາການຂະຫຍາຍຕົວທາງດ້ານເສດຖະກິດບໍ່ໃຫ້ຫລຸດ 6-7% ຕໍ່ປີ ເອົາໃຈໃສ່ຈັດຕັ້ງ ປະຕິບັດໂຄງການຢຸດຕິການຖາງປ່າເຮັດໄຮ່ ເພື່ອປະຕິບັດໂຄງການແກ້ໄຂຄວາມທຸກຈົນ ໃຫ້ສຳເລັດຕາມແຜນການຢ່າງມີປະສິດທິຜົນ.

- ວຽກງານຄົມມະນາຄົມ

ແຂວງເຊກອງມີເສັ້ນທາງແຂວງ ຕໍ່ແຂວງແລ່ນໄດ້ຕະຫລອດປີ ມີເສັ້ນທາງເລກ ທີ16Bອອກສູ່ຊາຍແດນຫວຽດນາມມີຄວາມຍາວ125ກິໂລແມັດ ມີເສັ້ນທາງຫລັກ 54 ກິ ໂລແມັດ ເສັ້ນທາງຊອຍ433ກິໂລແມັດ ໃນອານາຄົດແຂວງ ເຊກອງຈະກາຍເປັນທາງ ຜ່ານເຊື່ອມຕໍ່ລະຫວ່າງ ແຂວງກັບແຂວງ ແລະ ລະຫວ່າງປະເທດນອກ ຈາກການຄົມມະ ນາຄົມທາງບົກ ເຊກອງຍັງມີເສັ້ນທາງຄົມມະນາຄົມທາງນ້ຳທີ່ສຳຄັນຄື: ສາຍນ້ຳ ເຊກອງ ທີ່ປະຊາຊົນນຳໃຊ້ກັນມາຊ້ານານ.

ດ້ານວັດທະນະທຳສັງຄົມ

ເຊກອງເປັນແຂວງແຫ່ງຊົນເຜົ່າ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາ ຊົນລາວ ປະຊາຊົນພາຍໃນແຂວງສ່ວນຫລາຍ ແມ່ນດຳລົງຊີວິດແບບຊາວກະສິກອນ ໃນ ຊົນນະບົດ ເຊື່ອຖືຜີ ບັນພະບູລຸດ ແລະ ສ່ວນໜຶ່ງກໍ່ນັບຖືສາດສະໜາພຸດ ສະນັ້ນເຂົາຈຶ່ງ ມີປະເພນີ ທີ່ກ່ຽວຂ້ອງກັບຜີບັນພະບູລຸດເປັນສ່ວນໃຫ່ຍ ວັນທີ່ສຳຄັນຂອງພວກເຂົານັ້ນ ກໍ່ເປັນບຸນເດືອນ3-4 ຊຶ່ງຖືວ່າເປັນບຸນໃຫ່ຍປະຈຳປີຂອງເຂົາ ສ່ວນເຜົ່າລາວລຸ່ມເຂົາກໍ່ຈະ ເຮັດໄປຕາມປະເພນີຄື: ຮີດ12ຄອງ14ຂອງເຂົາເຈົ້າ.

ປະຊາຊົນໃນເຊກອງໄດ້ອາໄສແຜ່ນດິນຕອນນີ້ ມາຫລາຍຟ້າຫລາຍປີ ເຂົາເຈົ້າ ມີຄວາມສາມັກຄີ ເປັນປຶກແຜ່ນອັນດຽວກັນ ມີຄວາມດຸໝັ່ນ ຂະຫຍັນພຽນ ໃນການອອກ ແຮງງານ ໃນການຕໍ່ສູ້ກັບທຳມະຊາດ ແລະ ສັດຕູຂອງຊາດຢ່າງທໍລະຫົດອິດທົນ ຊົນເຜົ່າ ໃນແຂວງເຊກອງ ເຂົາເຈົ້າມີພາສາ ມີສິລະປະວັດທະນະທຳ ເປັນຂອງຕົນເອງ ເມື່ອເວົ້າ ເຖິງສີໄມ້ລາຍມື ໃນດ້ານການຈັກສານ ການຕຳຫູກ ທໍໄໝ ການຄວັດແກະສະລັກ ການ ປັ້ນຫລໍ່ຖືໄດ້ວ່າເຂົາມີຮູບແບບທີ່ເປັນເອກະລັກຂອງແຕ່ລະເຜົ່າຢ່າງເດັ່ນຊັດ ປະຈຸບັນເຂົາ ຍັງຄົງຮັກສາ ແລະ ເສີມຂະຫຍາຍອອກໄປຢ່າງກ້ວາງຂວາງ ສູ່ເຊັ່ນລູກ ເຊັ່ນຫລານ ນອກ ຈາກການຜະລິດທີ່ໃຊ້ສອຍພາຍໃນຄົວເຮືອນແລ້ວ ເຂົາເຈົ້າຍັງຜະລິດເຄື່ອງມືອອກແຮງ

ງານເພື່ອຮັບໃຊ້ການດຳລົງຊີວິດປະຈຳວັນຂອງເຂົາເປັນຕົ້ນ: ພ້າ ຂວານ ສຽມ ເຄື່ອງມືລ່າສັດ ແລະ ອື່ນໆ.

ແຜນທີ່ ສ ປ ປ ລາວ.



ລັກສະນະພູມສັນຖານ

ໂດຍທົ່ວໄປສະພາບພື້ນທີ່ແຂວງເຊກອງ ແມ່ນເຂດທີ່ມີພື້ນທີ່ ພູພຽງ ແລະ ພູສູງ ຊັນ ມີລຳນ້ຳຫ້ວຍໄຫລຜ່ານຂອບເຂດແຕ່ລະບ້ານ ເນື່ອງຈາກສະພາບພື້ນທີ່ເປັນພູພຽງກ່ຳ ໃຫ້ເກີດຝົນຕົກຫລາຍໃນລະດູຝົນແລະ ມີອາກາດໜາວຈັດໃນລະດູໜາວ ລັກສະນະພູມີ ປະເທດ ຈຶ່ງມີເງື່ອນໄຂໃນການຕັ້ງບ້ານເຮືອນຢູ່ຕາມບໍລິເວນອ້ອມຮອບພູພຽງນັ້ນ ອາໄສ ນ້ຳຫວ້ຍໃນການດຳລົງຊີວິດ ສະພາບພື້ນທີ່ດັ່ງກ່າວຈຶ່ງເຮັດໃຫ້ປະຊາຊົນສ່ວນໃຫ່ຍ ມີອາ ຊີບຫລັກແມ່ນການເຮັດໄຮ່ ຫລື ຫາປານັ້ນຈຶ່ງມີຄວາມຈຳເປັນທີ່ຕ້ອງອາໃສເຄື່ອງມືເຄື່ອງ ໃຊ້ທີ່ເຮັດຂຶ້ນດ້ວຍເຄື່ອງຈັກສານ ເປັນເຄື່ອງໃຊ້ທີ່ມາສາດຜະລິດຂຶ້ນເອງໄດ້ແບບງ່າຍ ອີ່ງ ໃສ່ພູມປັນຍາທ້ອງຖິ່ນ ແລະ ວັດຊະດຸທີ່ຫາໄດ້ງ່າຍຈາກທຳມະຊາດ ຊຶ່ງມີຫລາຍຢູ່ຕາມ ພື້ນທີ່ດັ່ງກ່າວນັ້ນ. ນອກຈາກການເຮັດຂຶ້ນເພື່ອຕອບຊະໜອງຄວາມຕ້ອງການດ້ານການ ໃຊ້ສອຍແລ້ວ ເຂົ້າຍັງສາມາດຜະລິດຂຶ້ນເພື່ອການແລກປ່ຽນເອົາວັດສະດຸອື່ນ ແລະ ການ ເປັນສິນຄ້າຂອງຄອບຄົວອີກດ້ວຍ.

ລັກສະນະພູມອາກາດ:


ລັກສະນະພູມອາກາດຂອງແຂວງເຊກອງ ເປັນອາກາດຮ້ອນມີລົມປະຈຳລະດູ ພັດຜ່ານຕະຫລອດປີ ແຂວງເຊກອງມີສາຍພູພາກຕາເວັນອອກເປັນກຳແພງຂວາງກັ້ນສິ່ງ ຜົນສະທ້ອນການປັບປ່ຽນອາກາດກ່ຳຄືລົມພະຍຸຕ່າງໆ ສະນັ້ນອາກາດຢູ່ແຂວງເຊກອງຈຶ່ງ ມີການສົມດຸນກັນລະຫວ່າງສອງລະດູຢ່າງຈະແຈ້ງຄື: ລະດູຝົນ ແລະ ລະດູແລ້ງ ລະດູຝົນ ເລີ້ມແຕ່ເດືອນ 5-10 ລະດູແລ້ງເລີ້ມແຕ່ເດືອນ11-4 ຂອງປີຕໍ່ມາ. ເດືອນ 9-10 ຝົນຕົກ ແຮງ ຫ້ວຍນ້ຳລຳເຊສາຍຕ່າງໆຂຶ້ນເຕັມຝັ່ງ ລະດູຝົນໜ້າດິນຊຸ່ມຊື່ນຕົ້ນໄມ້ໃບຫຍ້າຂຽວ ຊຸດຊຸ່ມ.

ສະພາບດັ່ງກ່າວເປັນປັດໃຈທີ່ສົ່ງຜົນໃຫ້ເກີດມີພືດພັນປະເພດຕ່າງໆທີ່ອຸດົມສົມ ບູນ ແຕກຕ່າງກັນໄປຕາມລະດັບຄວາມສູງຕ່ຳ ຂອງພື້ນທີ່ໃນແຕ່ລະເຂດເຊັ່ນ: ເຂດພູສູງ ເປັນເຂດທີ່ມີປ່າດົງດິບ ຫລື ປ່າຕຶບໜາຈະມີພືດພັນຫລາຍຊະນິດ ປະປົນກັນທັ້ງນ້ອຍ ແລະໃຫ່ຍເຊັ່ນ:ໄມ້ຈຳປາປ່າ ໄມ້ແປກ ໄມ້ເຮັ້ຍ ໄມ້ບົງ ໄມ້ປຶກໄມ້ຊາງໄພ ໄມ້ໄຜ່ປ່າ ເປັນ ຕົ້ນ. ນອກນັ້ນຢູ່ຕາມພື້ນທີ່ດິນ ແລະເລື້ອຍໄປຕາມຫງ່ຳໄມ້ກ່ຳຈະມີຈຳພວກຫວາຍປະເພດ ຕ່າງໆເຊັ່ນ: ຫວາຍດິນ ຫວາຍຫາງໜູ ຫວາຍແດງ ແລະ ອື່ນໆອີກ.

ວັດສະດຸທີ່ໃຊ້ໃນການຜະລິດເຄື່ອງຈັກສານ

ວັດສະດຸທີ່ໃຊ້ໃນການຜະລິດເຄື່ອງຈັກສານ ສ່ວນໃຫ່ຍຈະເປັນໄມ້ໄຜ່ ຊຶ່ງຈະມີຢູ່ຫລາຍສາຍພັນ ທີ່ມີຄວາມແຕກຕ່າງກັນ ເປັນວັດສະດຸຫລັກທີ່ໃຊ້ໃນການຜະລິດ ຜູ້ຜະລິດຈະເປັນຜູ້ເລືອກປະເພດຂອງໄມ້ໄຜ່ ແຕ່ລະຊະນິດເພື່ອຄວາມເໝາະສົມ ຂອງເຄື່ອງຈັກສານນັ້ນໆ ໂດຍຄຳນຶງເຖິງຄວາມທົນທານ ຄວາມຍາກງ່າຍຂອງຮູບຊົງ ແລະ ລວຍລາຍໃນການສານ. ໄມ້ໄຜ່ໃນເຂດດັ່ງກ່າວມີຫລາຍຊະນິດເຊັ່ນ: ໄມ້ໄຜ່ບ້ານ, ໄມ້ສາງໄຜ່ ໄມ້ພຸງ, ໄມ້ໄຜ່ປ່າ, ໄມ້ໄລ່, ໄມ້ບົງ, ໄມ້ຫົກ, ໄມ້ເຮັ້ຍ ແລະ ອື່ນໆ ໄມ້ທີ່ນິຍົມໃຊ້ເຂົ້າໃນການເຮັດເຄື່ອງຈັກສານມີດັ່ງນີ້:

-ໄມ້ບົງ: ໄມ້ບົງມີ 2 ຊະນິດຄື:ໄມ້ບົງໜາມ ແລະ ໄມ້ບົງທຳມະດາ.



ກໍ່ໄມ້ບົງທີ່ຫາກໍ່ໃຫ່ຍ


ໄມ້ບົງໜາມ:ເປັນໄມ້ທີ່ມີລຳຕົ້ນແລະກໍໃຫ່ຍ, ລຳຕົ້ນຂອງມັນໃຫ່ຍເທົ່າກັບ ລຳໄມ້ໄຜ່ ສ່ວນເປື້ອງກໍຂອງມັນຈະມີແໜງຫລາຍ ແລະ ມີໜາມຫລາຍຄືກັບກໍໄມ້ໄຜ່ ໄມ້ບົງຊະນິດນີ້ມີລຳຕົ້ນຊື່ຈັກຕອກງ່າຍແຕ່ເນື້ອຂອງມັນໜຽວເໝາະ ສຳ ລັບສານເຄື່ອງຈັກສານທຸກຊະນິດ.



ໄມ້ບົງທຳມະດາ: ເກີດຢູ່ທຸກພື້ນທີ່,ລຳຂອງມັນນ້ອຍກ່ວາໄມ້ບົງໜາມ ແຕ່ເນື້ອຂອງມັນໜຽວຈັກ ຕອກງ່າຍ ແລະ ມີຄວາມທົນທານດີ.


ໄມ້ບົງເວລາໃຫ່ຍຈະມີຄວາມສູງຫລາຍ.

-ไม้ทิก: ເປັນຊະນິດທີ່ມີລຳຕົ້ນໃຫ່ຍ ແລະ ປ້ອງໃຫ່ຍປະມານ10 -15 ຊັ້ງຕິແມັດ ຄວາມຍາວຂອງປ້ອງປະມານ 80-100ຊັ້ງຕິແມັດ ມີຜິວລຽບແລະເງົາງາມມີລຳຕົ້ນຊື່ຜິວ ຂອງໄມ້ທິກນັ້ນໜຽວແໜ້ນທົນທານເມື່ອນຳມາຈັກເປັນຕອກແລ້ວຈະມີຄວາມເຫລື້ອມ ງາມເຫລົ່າງ່າຍເສັ້ນຂອງ ຕອກເວລາ ຈັກຈະ ເປັນເສັ້ນຍາວ ບໍ່ຂາດແລະບໍ່ແຕກນິຍົມນຳມາ ສານກະພາກະເຈາະກະດົ້ງແລະຊະນິດທີ່ຈະ ໃຊ້ການສານໃຫ້ມີລາຍລະອຽດ.ນອກນັ້ນເຂົາ ຍັງນຳໃຊ້ເປັນກະບັ້ງນ້ຳ ເພາະມີຂະໜາດ ປ້ອງກວ້າງ ແລະ ຍາວ.




ໄມ້ທິກເປັນຊະນິດທີ່ຢູ່ໃນປ່າເລິກ.

-ไม้เรัย: ไม้ไผ่เป็นชะนิดมี ลักสะนะป้องยาว เมื้อไม้เรัยจะอ่อน สามาดปับติวได้ดี ตามรูบแบบของ เถื่องจักสานนั้น เฮานิยมสานก้องเฮ้า กุบ, กะด๊ง มอกนั้นก่ยังมาเรัดเป็นฝา เรือน.



ไม้เรัยเป็นไม้ที่ปูกง่าย ຂึ้นที่อไปตามบ้าน.



-ไม้ไผ่ป่า:ເປັນໄມ້ຊະນິດທີ່ຂຶ້ນຕາມທຳມະຊາດຕາມປ່າຕຶບໜາຊະຫຍາຍກໍ ແຕກໜໍ່ຢ່າງໄວວາແລະແໜ້ນໜາ ມີລັກສະນະກໍໃຫ່ຍ ລຳຕົ້ນໃຫ່ຍໜາ ຊ່ວງຂໍ້ໄຜ່ສັ້ນມີໜາມແຫລມຄົມ.

ไม้ไผ่ป่าสามาดจักสานได้
แต่จะบ่างามเท่าไม้หิก.

ไม้ไผ่ที่ท่าอมาได้แบ่งออกเป็น 2 ปะเพดใหย่ถี: ปะเพดไม้ไผ่ที่มีเนื้อหยาวแหน้น(สามาดเร็ดเถื่องจักสานได้)และ ปะเพดไม้ไผ่เนื้อแฮงหนาแหน้น(ไม้ไผ่ชะนิดที่นำมาเร็ดเถื่องจักสานบ่ได้)

247 VII

1.ปะเพดไม้ไผ่ที่เนื้อหยาวแหน้น


เป็นไม้ไผ่ที่มีเนื้อหยาวแหน้นมีลำต้นซื่เนื้อฮองไม้นั้นหยาวแหน้นหินหานเมื่อนำมาจักเป็นตอกแล้วจะมีดวามเหลื้อมงามเส้นฮองตอกเอลาจัก จะได้เส้นยาวจะบ่ฮาด และบ่แตกง่าย จักได้เป็นเส้นยาวซื่สะเหมิกันเช่น: ไม้หิก, ไม้บิง, ไม้เรัย. ก่อนที่จะลิงมือตัดจะต้องเบิ่งลำไผ่ก่อนว่าในลำไม้ไผ่นั้นบ่ให้มีแมงกินปายก่ำจะต้องมียอด หากบ่มีจะใช้บ่ได้ไม้ไผ่




ທີ່ໃຊ້ໄດ້ດີຈະ ຕ້ອງມີອາຍຸຫລາຍກວ່າສອງປີ ຫາກວ່າໃຊ້ໄມ້ໄຜ່ທີ່ມີອາຍຸບໍ່ຮອດສອງປີ ໃຫ້ນຳມາເຮັດ ເຄື່ອງຈັກສານມັກຈະມີແມງມອດມາກິນ ເຮັດໃຫ້ພາຊະນະຜຸຜັງໄດ້ງ່າຍ.

2. ປະເພດໄມ້ໄຜ່ເນື້ອແຂງ ໜາແໜ້ນ

ເປັນໄມ້ໄຜ່ທີ່ມີເນື້ອແຂງ ໜາແໜ້ນ ເຂົາຈະບໍ່ໃຊ້ເຮັດເຄື່ອງຈັກສານ ເນື່ອງຈາກ ວ່າເວລານຳມາເຫລົາ ຫລື ວ່ານຳມາຈັກເປັນເສັ້ນຈະບໍ່ໄດ້ ແຕກຫັກງ່າຍ ເມື່ອນຳມາສານ ຈະໄດ້ເຄື່ອງຈັກສານທີ່ບໍ່ລຽບງາມ ເຮັດໃຫ້ຮູບຊົງບໍ່ສວຍງາມ ເວລາເກັບຂອບປາກຂອງ ເຄື່ອງຈັກສານແຕ່ລະຊະນິດ ເຮັດໃຫ້ເສັ້ນຕອກແຕກ ແລະ ຫັກງ່າຍ ຈະບໍ່ສາມາດໃຊ້ໄດ້ ສ່ວນໃຫ່ຍ ປະເພດນີ້ນຳໃຊ້ເຂົ້າໃນການເຮັດເຮືອນເຊັ່ນ: ສີຍົວ ຂ້າວ ຂັ້ນໃດ ຮົ້ວອ້ອມ ສວນ ແລະ ສວນອື່ນໆ.




ໄມ້ຊາງໄພ ເປັນຊະນິດທີ່ປູກງ່າຍ
ນິຍົມປູກໃນບ້ານ



ໄມ້ຊາງໄພ ລຳນ້ອຍຍາວ
ເປັນໄມ້ຊະນິດເນື້ອແຂງນຳໃຊ້ເຮັດຂ້າວ ສີຍົວ ແລະອື່ນໆ.

ວິທີ່ການເລືອກໄມ້ເພື່ອນຳມາຈັກສານ

ໄມ້ທີ່ຊາວບ້ານນຳໄປໃຊ້ ເພື່ອຜະລິດເປັນເຄື່ອງຈັກສານນັ້ນ ແມ່ນມີຫລາຍຊະນິດໄມ້ ແຕ່ສຳລັບຢູ່ເຊກອງ ຊາວເຜົ່າທີ່ເຂົາເຈົ້າເຄີຍໃຊ້ນັ້ນໄດ້ແກ່: ໄມ້ຫີກ, ໄມ້ບີງ, ໄມ້ເຮັຍ,ໄມ້ປຶກ,ໄມ້ໄລ່, ໄມ້ໂຄ່ຍຊ້າງ (ບາງເຂດແຂວງເອີ້ນໄມ້ແຮ້) ໄມ້ຊະນິດຕ່າງໆເຫລົ່ານີ້ ເວລານຳເອົາໄປໃຊ້ນັ້ນ ເຂົາຈະເລືອກເອົາໄມ້ທີ່ມີອາຍຸເໝາະສົມຄື: ບໍ່ເລືອກເອົາໄມ້ທີ່ມີອາຍຸອ່ອນໂພດ ແກ່ໂພດ ບໍ່ເອົາໄມ້ປາຍກຸດ ເນື້ອໄມ້ຈະຕ້ອງກ້ຽງງາມປ້ອງຍາວ ແລະບໍ່ມີແມງເຈາະ ອາຍຸທີ່ເໝາະສົມຕັ້ງແຕ່ສອງຫາສາມປີຂຶ້ນ ໄປຖ້າເອົາໄມ້ທີ່ມີອາຍຸອ່ອນໂພດເວລາຈັກຕອກເນື້ອໄມ້ຈະຫ່ຽວ ໃຊ້ງານບໍ່ທົນທານ, ຖ້າໄມ້ແກ່ໂພດເວລາຈັກຕອກເນື້ອໄມ້ຈະບໍ່ໜຽວ ເມື່ອນຳໄປສານເຄື່ອງຕ່າງໆມັນຈະຫັກໄວ.ຖ້າແມ່ນນຳໄມ້ປາຍກຸດ-ໄມ້ແມງເຈາະແມ່ນຈະນຳມາຈັກສານບໍ່ໄດ້ ຫາກຈັກເປັນຕອກກໍ່ຍາກຫລາຍ ແລະ ສານກໍ່ບໍ່ງາມ ນອກນັ້ນຊາວເຜົ່າເຂົາຍັງຖືວ່າເປັນເລື້ອງຄະລຳເຮັດຫຍັງທຳຫຍັງກໍ່ບໍ່ເງີຍຈະສຸດສ້ວຍໄປເລື້ອຍໆ.



ໝາຍເຫດ: ວິທີການຕັດໄມ້ໃນປ່າຮົກເຮື້ອ ບໍ່ສາມາດຕັດໄມ້ໄຜ່ໄດ້ສະດວກ ຊຶ່ງຈະໃຊ້ມືໜຶ່ງຈັບໄມ້ໄຜ່ ແລະ ອີກມືໜຶ່ງຈັບພ້າຟັນໄປທີ່ລຳໄມ້ໄຜ່ນັ້ນ

ຂະໜາດຄວາມຍາວທີ່ເໝາະສົມຂອງແຕ່ລະປ້ອງປະມານ30ຊັງຕິແມັດ ເສັ້ນຜ່າສູນກາງປະມານ10ຊັງຕິແມັດ ຂໍ້ຂອງໄມ້ໄຜ່ຈະຕ້ອງລຽບບໍ່ເປັນຂໍ້ໃຫ່ຍ ບໍ່ມີແມງມອດເຈາະເມື່ອນຳມາເຮັດເປັນເສັ້ນຕອກແລ້ວ ຈະໄດ້ເສັ້ນຂອງຕອກທີ່ມີຄວາມລຽບເງົາງາມ ຈັກໄດ້ເສັ້ນຍາວ ມີຄວາມໜຽວຍືດຫຍຸ່ນໃນການເຫລົາ ເມື່ອເຫລົາໃຫ້ກ້ຽງງາມແລ້ວຈຶ່ງສາມາດນຳໄປສານໄດ້ຖ້າຫາກເຫລົາບໍ່ລຽບຈະເຮັດໃຫ້ເຄື່ອງຈັກສານຈະໄດ້ຮູບຊົງອອກມາບໍ່ສວຍງາມ.

ເຄື່ອງມືທີ່ໃຊ້ເຂົ້າໃນການເຮັດເຄື່ອງຈັກສານ.

ເຄື່ອງມືທີ່ໃຊ້ເຂົ້າໃນການເຮັດເຄື່ອງຈັກສານຂອງຊົນເຜົ່າ ໃນແຂວງເຊກອງນັ້ນ ມີເຄື່ອງມືທີ່ເປັນພື້ນຖານຫລັກໆຄື: ພ້າ,ມີດເຫລົາຕອກ, ເຫລັກຊີ ຊຶ່ງເປັນເຄື່ອງມືທີ່ໃຊ້ຕັ້ງແຕ່ອະດີດ ແຕ່ສ່ວນໃຫ່ຍແລ້ວເຂົາຈະຜະລິດຂຶ້ນເອງ ຕາມຄວາມເໝາະສົມໃນການນຳໃຊ້ການຜະລິດເຄື່ອງຈັກສານ.

ພ້າ:ແມ່ນພາຫະນະຫລັກຂອງການຜະລິດເຄື່ອງຈັກສານ-ເຄື່ອງໃຊ້ສອຍຕ່າງໆ ພ້າທີ່ ຊາວເຜົ່າຕ່າງໆຂອງແຂວງເຊກອງນຳໃຊ້ກັນມາຈາກບັນພະບຸລຸດແລະສືບທອດກັນມາຈົນເຖິງທຸກວັນນີ້ກໍ່ປະກອບມີຫລາຍສະນິດພາສາເອີ້ນແລະພ້າຂອງແຕ່ລະຊົນເຜົ່ານັ້ນກໍ່ມີສ່ວນຕ່າງກັນໄປເຊັ່ນ:

- ອາລັກ(ຮາຣລັກ) : ພ້າໃຫ່ຍ (ບຣາຕະມີ) ພ້ານ້ອຍ (ບາຣເກ໋າະໆ).
- ກະຽງ(ແງະ) : ພ້າໃຫ່ຍ (ໂກະກະຣິ) ພ້ານ້ອຍ (ໂກະເຈີ໋ຣ).
- ສ່ວຍ(ສຣວຍ) : ພ້າໃຫ່ຍ (ບຣາບະກ໋ະ) ພ້ານ້ອຍ (ບຣາເກ໋າະໆ).



ເຜົ່າສ່ວຍ(ບຣາບະກ໋ະ)



ເຜົ່າອາລັກ(ບຣາຕະມີ)




ພາບຖ່າຍ: ຮູບພາບພ້າໃຫ່ຍ - ພ້ານ້ອຍ ແຕ່ລະເຜົ່າລຽບກັນ ເພື່ອໃຫ້ຜູ້ອ່ານເຫັນຮູບພາບຕົວ ຈິງ ແລະມີມະໂນພາບໃນການດຳລົງຊີວິດ.

ການນຳໃຊ້ພ້ານັ້ນແມ່ນຂຶ້ນກັບເປົ້າໝາຍ ແລະຄວາມຊຳນິຊຳນານຂອງຜູ້ນຳໃຊ້ເປັນຕົ້ນ. ໃຊ້ຕັດໄມ້ອອກຈາກກ່ຳຫລືວ່າຕັດ-ຈຸ່ມໄມ້ລຳໃຫ່ຍກ່ຳຕ້ອງໃຊ້ພ້າດວງໃຫ່ຍ ເວລາຈັກຕອກ ກ່ຳນຳໃຊ້ພ້າດວງນ້ອຍກວ່າ ບາງຄົນກ່ຳໃຊ້ພ້າດວງນ້ອຍນີ້ ທັງຈັກຕອກ,ຜ່າໄມ້, ເຫລົາແລະ ກ່ຳສາມາດນຳໄປເຮັດເຄື່ອງຈັກສານໄດ້.

ມີດເຫລົາຕອກ: ໃຊ້ສຳລັບການເຫລົາ ແລະ ຈັກຕອກ ມີຮູບລັກສະນະນ້ອຍ ລຽວ ປາຍແຫລມ ຄອມຂ້າງມີນ້ຳໜັກເບົາ ສັນຈະເປັນເສັ້ນຊື່ ແລະ ມີປາຍງອນຂຶ້ນເລັກ ນ້ອຍ ບາງດວງອາດຈະມີສັນໂຄ້ງ ສ່ວນຄົມມີດນັ້ນຈະໂຄ້ງງໍຂຶ້ນຂະເໜີ ເພື່ອໃຫ້ເໝາະ ກັບການເຫລົາຕອກໃຫ້ໄດ້ຄວາມລະອຽດ ແລະ ກົມ ດ້ານຂອງມີດຂ້ອນຂ້າງຍາວຖ້າທຽບ ໃສ່ດວງມີດນັ້ນ ຄວາມຍາວຂອງດ້ານຈະມີປະມານ45ຊັ້ງຕີແມັດ ຂຶ້ນຢູ່ກັບຂະໜາດຊວງ ແຂນຂອງແຕ່ລະຄົນ ເນື່ອງຈາກວ່າເວລາການໃຊ້ງານຊ່ຳໆຈະໃຊ້ແຂນແນບກັບ ດ້ານພ້າ ໃຫ້ຕິດດ້ານຂ້າງ ເພື່ອການຄວບ ຄຸມໃນການເຫລົາ ຫລື ຈັກຕອກ ໄດ້ງ່າຍ ຊ່ວຍບັງຄັບໃຫ້ຄົມມີດ ໄປຕາມຄວາມຕ້ອງການໄດ້.



ຮູບແບບການຈັກຕອກ.



ເຄື່ອງມືໃນການຈັກຕອກຮູບແບບຕ່າງໆ.

ເຫລັກຊີ: ເຫລັກຊີ ຈະເຮັດດ້ວຍເຫລັກກ້າ ມີສອງລັກສະນະທີ່ມີໜ້າທີ່ການໃຊ້ງານທີ່ແຕກຕ່າງກັນ ລັກສະນະປາຍກົມນັ້ນແມ່ນຈະໃຊ້ຊີ ຫລື ເຈາະໃນເວລາທີ່ຈະສອດສານດ້ວຍຫວາຍທີ່ມີຮູບຮ່າງກົມ ລັກສະນະທີ່ສອງປາຍນັ້ນຈະແປຊຶ່ງໃຊ້ໃນເວລາເຈາະ ສ່ວນທີ່ຈະສານດ້ວຍໄມ້ຕອກ ຫລື ຮູບຮ່າງ ເສັ້ນນັ້ນແປ ຂະໜາດຄວາມຍາວ ປະມານ 5 -10 ຊັ້ງຕິແມັດ ຕໍ່ໃສ່ກັບດ້າມໄມ້ ທີ່ຈັບ ເໝາະກັບມື ຄວາມຍາວຂອງດ້າມ ປະມານ 10-15 ຊັ້ງຕິແມັດ ລວມຄວາມຍາວທັງໝົດ ປະມານ 20 - 30 ຊັ້ງຕິແມັດ.





ເຫລັກຊີ ແບບຫົວກົມ



ເຫລັກຊີ ແບບຫົວແປ

ພາບໃນການນຳໃຊ້ຕົວຈິງ
ໃຊ້ຊີສະເພາະສ່ວນທີ່ຈະສອດເສັ້ນຫວາຍ ແລະ ສ່ວນທີ່ຢາກໃນການສານ.

ໄມ້ຄ້ອນ: ແມ່ນໄມ້ທີ່ເຮັດດ້ວຍໄມ້ເນື້ອແຂງ ຈະເຮັດໃຫ້ມີດ້າມພໍຈັບໃຫ້ເໝາະກັບມືຊ່າງ ມີຄວາມຍາວປະມານ 25 - 35 ຊັ້ງຕິແມັດ ສ່ວນຄວາມກວ້າງ ຫລື ຄວາມໜາ ຂຶ້ນຢູ່ກັບລັກສະນະຂອງທ່ອນໄມ້ນັ້ນ ມີນ້ຳໜັກປະມານ 2 ກິໂລ.

ຊ່າງທີ່ຜະລິດເຄື່ອງຈັກສານອາດຈະມີເຄື່ອງມື ແລະ ອຸປະກອນທີ່ສາມາດຊື້ຫລື ປະດິດຂຶ້ນເອງ ເພື່ອໄວ້ຊ່ວຍແຮງໃນເວລາເຮັດເຄື່ອງຈັກສານນັ້ນ ອາດຈະນຳໃຊ້ເຄື່ອງມືທີ່ແຕກຕ່າງກັນໄປຂຶ້ນຢູ່ກັບ ລັກສະນະຂອງວຽກ ວ່າຈະເປັນຕ້ອງໃຊ້ເຄື່ອງມືຊະນິດໃດ ອາດຈະໃຊ້ໄມ້ຄ້ອນ ໄມ້ໜີບ ເລື່ອຍ ແລະ ອື່ນໆອີກ.

ບັນດາເຄື່ອງທີ່ນຳໃຊ້ໃນຊີວິດປະຈຳວັນ ຂອງຊົນເຜົ່າໃນແຂວງເຊກອງ

ໜ້າທີ ແລະ ປະໂຫຍດໃຊ້ສອຍບັນດາເຄື່ອງໃຊ້ປະຈຳວັນ.

ເຄື່ອງໃຊ້ເຄື່ອງຈັກສານທີ່ຜະລິດຂຶ້ນໃນແຂວງເຊກອງຂອງລາວສ່ວນໃຫ່ຍແລ້ວ ແມ່ນຜະລິດຂຶ້ນເພື່ອຮັບໃຊ້ກະສິກຳເຊັ່ນ:ການເຮັດໄຮ່ ເຮັດສວນ ລ້າສັດແລະຮັບໃຊ້ພາຍໃນຄົວເຮືອນ.

ເຄື່ອງຈັກສານເປັນເຄື່ອງມື ທີ່ສາມາດຕອບສະໜອງປະໂຫຍດ ການໃຊ້ສອຍທີ່ກ່ຽວກັບການນຳໃຊ້ ໃນຊີວິດປະຈຳວັນໄດ້ຫລາຍທີ່ສຸດ ເພາະວິທີການຜະລິດເຄື່ອງຈັກສານສາມາດປັບຂະໜາດ ຮູບຊົງໃຫ້ເໝາະສົມໄດ້ຕາມໜ້າທີ່ການໃຊ້ເຊັ່ນເປັນຮູບຊົງກະບັ້ງນ້ຳ ຮູບຊົງສີ່ລ່ຽມ ຮູບຈວຍ ວິທີການຜະລິດກໍ່ສາມາດເຮັດໄດ້ງ່າຍປະກອບກັບການຫາວັດສະດຸໄດ້ງ່າຍໃນແຕ່ລະຂົງເຂດ ແຕ່ລະທ້ອງຖິ່ນ ວິທີການຜະລິດກໍ່ບໍ່ຊັບຊ້ອນ ສາມາດເລືອກຜະລິດໃຫ້ເໝາະສົມກັບທຸກເພດໄວ ຕັ້ງແຕ່ເດັກນ້ອຍ ຜູ້ເຖົ້າ ແມ່ຍິງ.

ເຄື່ອງໃຊ້ ເຄື່ອງຈັກສານ ດັ່ງກ່າວກໍ່ຢູ່ຄູ່ກັບປະຊາຊົນບັນດາເຜົ່າແຂວງເຊກອງມາດົນນານ ມີທຸກຄົວເຮືອນຕັ້ງແຕ່ອະດີດຈົນເຖິງປະຈຸບັນ ເຄື່ອງຈັກສານດັ່ງກ່າວໄດ້ແບ່ງອອກຕາມໜ້າທີ່ການນຳໃຊ້ງານດັ່ງນີ້:

- ອຸປະກອນເຄື່ອງມືຮັບໃຊ້ການຜະລິດກະສິກຳ(ການເຮັດໄຮ່ແລະການເຮັດນາ)
- ອຸປະກອນເຄື່ອງມືການຈັບສັດແລະ ຂ້ຽສັດ.
- ອຸປະກອນຮັບໃຊ້ພາຍໃນຄົວເຮືອນ.

ເຄື່ອງມືຮັບໃຊ້ໃນຊີວິດປະຈຳວັນ ຂອງແຕ່ລະຊົນເຜົ່າ

ເຜົ່າອາລັກ(ຮາຣລັກ)

ຊົນເຜົ່າອາລັກ (ຮາຣລັກ) ເປັນຊົນເຜົ່າທີ່ມາຕັ້ງຖິ່ນຖານບ້ານເຮືອນ ຢູ່ເມືອງລະ ມາມ ກໍ່ຄືແຂວງເຊກອງກ່ອນໝູ່ (ຂໍ້ມູນຈາກຄະນະກຳມະການຄົ້ນຄວ້າປະຫວັດສາດ ເຊ ກອງ) ດິນແດນທີ່ເຂົ້າມາຕັ້ງຖິ່ນຖານບ້ານເຮືອນຢູ່ກ່ອນນັ້ນ, ແມ່ນດິນແດນຕາແສງອ້ຽ ແກ້ວ. ຊາວເຜົ່າອາລັກໄດ້ສ້າງຢູ່ທຳກິນໃນດິນແດນແຫ່ງນັ້ນເປັນເວລານານປີ ມາເຖິງປີ 1990 ເວລານີ້ປະຊາກອນຂອງເຜົ່າອາລັກກໍ່ໄດ້ຂະຫຍາຍຕົວອອກຫລາຍພໍສົມຄວນ ທີ່ຢູ່ ທຳມາຫາກິນກໍ່ຄັບແຄບເຂົ້າ ມີຫລາຍບ້ານກໍ່ໄດ້ຍົກຍ້າຍໄປຕັ້ງບ້ານຢູ່ທາງເຂດເມືອງທ່າ ແຕງ, ເຂດທົ່ງພຽງລຽບຕາມເສັ້ນທາງເລກທີ16, ເຂດທົ່ງພຽງລຽບຕາມສາຍນ້ຳເຊກອງ, ເຂດຕາແສງຕຸຍ ໂດຍຍົກຍ້າຍໄປຕາມເຈົ້າກົກເຈົ້າເຫລົ່າຂອງໃຜມັນ ສືບຕໍ່ຄົງທີ່ແລະ ຂະ ຫຍາຍຕົວມາຈົນເຖິງປະຈຸບັນນີ້.

ຊາວອາລັກກໍ່ປະກອບມີຫລາຍຕະກຸນຄື: ຮາຣລັກຮັນຢ້ຽ ຮາຣລັກບຣາວ ຮາຣ ລັກກະເຊ, ຮາຣລັກກອ, ຮາຣລັກຣະດຸ.

ບ້ານປະອໍ (ເຂດ5ເມືອງລະມາມ) ເປັນບ້ານຊາຍແດນຂອງເມືອງລະມາມ ທີ່ ເຊື່ອມຕໍ່ໃສ່ເມືອງດາກຈືງ ເປັນບ້ານທີ່ໄດ້ລົງເກັບກຳຂໍ້ມູນລະອຽດ ດ້ານການຜະລິດເຄື່ອງ ມືເຄື່ອງໃຊ້ໃນຊີວິດປະຈຳວັນຂອງຊາວເຜົ່າອາລັກແລະບ້ານກະໂດນໃໝ່. ປະຈຸບັນບ້ານ ກະໂດນໃໝ່ໄດ້ຍົກຍ້າຍລົງມາຕັ້ງຢູ່ເຂດບ້ານຈັດສັນຂອງເມືອງລະມາມຊຶ່ງຕັ້ງຢູ່ຫ່າງຈາກ ເຫດສະບານແຂວງເຊກອງໄປທາງທິດໃຕ້ (ເສັ້ນທາງທີ 16 ໄປອັດຕະປື) ປະມານ9 ກິໂລ ແມັດ ແລະ ເອີ້ນຊື່ບ້ານໃໝ່ວ່າ "ບ້ານກະໂດນໃໝ່".

ອາລັກ(ຮາຣລັກ) ເປັນຊົນເຜົ່າໜຶ່ງທີ່ມີພາສາກົກເຕົ້າມາຈາກຕະກຸນມອນ - ຂະ ແມບູຮານ ຊຶ່ງມີພຽງແຕ່ພາສາເວົ້າ ທີ່ໃຊ້ຕິດຕໍ່ສື່ສານພົວພັນພາຍໃນກຸ່ມຊົນເຜົ່າດຽວກັນ ແລະ ຊົນເຜົ່າອື່ນໆ ທີ່ສືບທອດກັນມາແຕ່ອະດີດຈົນເຖິງປະຈຸບັນ ໂດຍບໍ່ໄດ້ມີການຂຽນ ບັນທຶກເປັນຕົວອັກສອນໄວ້ ນັບຖືສາດສະໜາຜີ ເປັນຊົນເຜົ່າໜຶ່ງທີ່ມີເອກະລັກທາງດ້ານ ທີ່ຢູ່ອາໃສ ຮີດຄອງປະເພນີ ການດຳລົງຊີວິດໃນປະຈຸບັນແມ່ນອາໃສ ການເຮັດໄຮ່, ເຮັດ ນາ, ການລ່າສັດ, ຫາປາ ປຸກພືດ ຜັກຕ່າງໆ.

ການດຳລົງຊີວິດຍັງອີ່ງໃສ່ທຳມະຊາດເປັນສ່ວນໃຫ່ຍ ບໍ່ວ່າຈະທາງດ້ານການອຸ ປະໂພກບໍລິໂພກ ບັນດາເຄື່ອງຮັບໃຊ້ຕ່າງໆ ກໍ່ລ້ວນແຕ່ດັດແປງມາຈາກທຳມະຊາດເຮັດ

ໃຫ້ເກີດບັນດາເຄື່ອງຮັບໃຊ້ໃນຮູບແບບຕ່າງໆທີ່ເໝາະສົມກັບໜ້າທີ່ການນຳໃຊ້ ບວກກັບແນວຄວາມຄິດປະດິດສ້າງເຮັດໃຫ້ເກີດເປັນເຄື່ອງຈັກສານ ທີ່ເປັນເອກະລັກຂອງຊົນເຜົ່າຕົນເອງດັ່ງທີ່ຈະກ່າວໃນຂ້າງລຸ່ມນີ້.

ສະພາບໂດຍລວມຂອງບ້ານປະອໍ ເມືອງລະມາມ ແຂວງເຊກອງ

ບ້ານປະອໍ ດັ່ງເດີມຕັ້ງຢູ່ຫ່າງຈາກບ້ານປະຈຸບັນ4ກິໂລແມັດ(ເອີ້ນຊື່ບ້ານເດີມວ່າ ປະອໍເທິງ) ບ້ານປະອໍປະຈຸບັນໄດ້ຍົກຍ້າຍລົງມາຈາກບ້ານປະອໍເທິງໃນປີ1988. ໂດຍລວມເອົາບ້ານໄກສວຍ ບ້ານກະໂດນເຂົ້າກັນເປັນບ້ານດຽວແລະ ໄດ້ແບ່ງອອກເປັນສາມຄຸ້ມຄື: ຄຸ້ມເໜືອ(ບ້ານໄກສວຍ) ຄຸ້ມກາງ(ປະອໍ) ຄຸ້ມໃຕ້(ກະໂດນ) ມາເຖິງປີ 2001 ຄຸ້ມເໜືອ(ບ້ານໄກສວຍ) ໄດ້ຍົກຍ້າຍມາໂຮມເຂົ້າກັບບ້ານນ້ຳຫຸ່ງໃໝ່ ຄຸ້ມໃຕ້(ກະໂດນ) ໄດ້ຍ້າຍລົງມາຢູ່ບ້ານຈັດສັນ ເຂດລຳພັນ ແລະ ເອີ້ນ ບ້ານໃໝ່ວ່າ: "ກະໂດນໃໝ່".



ບ້ານປະອໍປະຈຸບັນຕັ້ງຢູ່ລຽບຕາມເສັ້ນທາງເລກທີ່16B (ເສັ້ນທາງເຊກອງ-ດາກຈຶງ) ຫ່າງຈາກເຂດເທດສະບານແຂວງເຊກອງປະມານ 40ກວ່າກິໂລແມັດ ຜູ້ນຳພາຊາວບ້ານລົງມາຕັ້ງຢູ່ບ້ານປະຈຸບັນນີ້ທຳອິດແມ່ນພໍ່ເຖົ້າບຸນຄຳສາເຫດຂອງການຍົກຍ້າຍເນື່ອງຈາກວ່າ: ບ້ານເດີມຕັ້ງຢູ່ພູດອຍທີ່ຫ່າງໄກສອກຫລີກ ການໄປມາຫາສູ່ກັນກໍ່ພົບກັບຂໍ້ຫຍຸ້ງຍາກຫລາຍຢ່າງ ທີ່ດິນທຳການຜະລິດບໍ່ພຽງພໍ ແຫລ່ງນ້ຳກິນ ນ້ຳໃຊ້ເປື້ອນເປິແລະ ບໍ່ພຽງພໍກໍ່ໃຫ້ເກີດພະຍາດໄຂ້ຍຸງ,ຖອກທ້ອງ,ທ້ອງບິດ ເຮັດໃຫ້ເກີດພະຍາດລະບາດຢູ່ເລື້ອຍໆ.

ບ້ານປະອໍ ປະຈຸບັນລວມມີ 22ຫລັງຄາເຮືອນ ມີ62ຄອບຄົວ ມີປະຊາກອນທັງໝົດ304 ຄົນ ຍິງ137 ຄົນ ມີຊາຍແດນຕິດກັບເຂດບ້ານຕ່າງໆດັ່ງນີ້:

ທິດເໜືອ: ຕິດກັບບ້ານ ຕອກອີ່ງແກ້ວ

ທິດໃຕ້: ຕິດກັບບ້ານ ດາກນີ່ງ ເມືອງສານໄຊ (ແຂວງອັດຕະປື)

ທິດຕາເວັນອອກ: ຕິດກັບບ້ານ ດາກລານ ເມືອງດາກຈຶງ

ທິດຕາເວັນຕົກ: ຕິດກັບບ້ານ ກະຊັ່ງກາງ

ຊາວບ້ານປະອໍທຸກໆຄອບຄົວ ລ້ວນແຕ່ມີມູນເຊື້ອ ແລະ ສີໄມ້ ລາຍມືທາງດ້ານການຈັກສານທີ່ປານີດ. ນອກຈາກການຜະລິດເພື່ອໃຊ້ສອຍແລ້ວຊາວບ້ານຍັງສາມາດຜະລິດເປັນສິນຄ້າ ສາມາດນຳມາຈຳໜ່າຍທີ່ຕະຫລາດຂອງແຂວງເຊກອງແລະ ແຂວງອື່ນໆ ໄດ້ສາມາດສ້າງລາຍຮັບໃຫ້ແກ່ຄອບຄົວ ເພື່ອແກ້ໄຂຄວາມທຸກຈົນໄດ້ດີພໍສົມຄວນ.



ສະພາບລະບຽງໜ້າບ້ານ.



ສະພາບພາຍໃນໝູ່ບ້ານ.

ການດຳລົງຊີວິດ (ການເຮັດໄຮ່) ຂອງປະຊາຊົນບ້ານປະອໍ

ວິຖີຊີວິດຂອງຊົນເຜົ່າອາລັກສ່ວນໃຫ່ຍ ຈະຢູ່ນຳການເຮັດໄຮ່ເປັນຕົ້ນຕໍ່ໃນການກິນຂອງພວກເຂົາແລ້ວແມ່ນກິນເຂົ້າໜຽວເປັນຫລັກ ແຕ່ອາດຈະປູກເຂົ້າຈ້າວໄວ້ເພື່ອປະກອບພິທີແລະອື່ນໆແຕ່ກໍ່ມີໜ້ອຍ ນອກຈາກນັ້ນຍັງປູກພືດທີ່ສາມາດກິນທົດແທນເຂົ້າໃນເວລາອຶດຫິວໄດ້ເຊັ່ນ: ສາລີ, ມັນຕົ້ນ, ເຜືອກ, ໝາກອຶ, ໝາກແຕງ ເປັນຕົ້ນ. ຖ້າເວົ້າເຖິງການລ້ຽງສັດແລ້ວ ຄວາຍກໍ່ແມ່ນສັດປະເພດໜຶ່ງທີ່ຂາດບໍ່ໄດ້ ໃນຄອບຄົວໜຶ່ງຈະຕ້ອງໄດ້ລ້ຽງ ເນື່ອງຈາກວ່າຄວາຍເປັນສັດທີ່ຈະຕ້ອງໄດ້ໃຊ້ ເຂົ້າໃນທຸກຮີດຄອງຂອງຊົນເຜົ່າອາລັກຄືການແປງຮີດທີ່ພວກເຂົາຍັງຍຶດຖືຄ້າຍຄືກັບຊົນເຜົ່າອື່ນໃນແຂວງເຊກອງ ນອກຈາກລ້ຽງຄວາຍແລ້ວຊາວບ້ານຍັງລ້ຽງໝູ,ໄກ່,ແບ້,....ປະຈຸບັນລັດຖະບານໄດ້ມີໂຄງການຈັດຊື້ງົວເພື່ອສົ່ງເສີມໃຫ້ຊາວບ້ານປະອໍລ້ຽງເພື່ອຂະຫຍາຍແນວພັນແລະເປັນສິນຄ້າໃນຕໍ່ໜ້າ.

ເວົ້າສະເພາະແລ້ວການເຮັດໄຮ່ຂອງຊົນເຜົ່າອາລັກ ແມ່ນເລີ້ມຕັ້ງແຕ່ເດືອນ 4 -ເດືອນ12 ຂອງທຸກໆປີ.

- ການຖາງໄຮ່: ເລີ້ມແຕ່ຕົ້ນເດືອນ4ເຖິງກາງເດືອນ5 ກ່ອນຈະຖາງໄຮ່ຈະຕ້ອງຂອກມື້ ໂດຍຂໍນຳເຈົ້າທີ່ເຈົ້າທາງຜີປ່າຜີດົງ ພາຍຫລັງທີ່ຂອກມື້ໄດ້ແລ້ວແມ່ນເຂົາຈະເລີ້ມຖາງປະໄວ້ປະມານ1- 2ວາ ເພື່ອໄປນອນສົງເອົາຄວາມຝັນ ຖ້າຫາກວ່າຝັນດີກໍ່ສາມາດຖາງຕໍ່ໄດ້ ແຕ່ຖ້າຫາກວ່າຝັນຮ້າຍໃຫ້ໄປຂອກຫາສະຖານທີ່ໃໝ່ ແລະ ກໍ່ສົ່ງຄວາມຝັນເຊັ່ນເດີມຈົນກວ່າຈະໄດ້ການຖາງໃຊ້ເວລາຢູ່ປະມານ15-30ວັນ ອີ່ງໃສ່ປ່າດົງຕຶບໜາຫລືວ່າເປັນປ່າເຫລົ່າເກົ່າ.

- ການຈູດໄຮ່: ພາຍຫລັງຖາງໄຮ່ແລ້ວເຂົາຈະຕາກໄຮ່ໄວ້ປະມານ15 ວັນ ກ່ອນຈະຈູດເຂົາຈະເລືອກເອົາມື້ເດືອນແຮມ ຫລື ເດືອນດັບ ແລະ ຈະເບິ່ງທິດລົມໃຫ້ລົມພັດໄປທາງທິດຕາເວັນອອກ ເຊື່ອກັນວ່າຈະໄໝ້ດີໄໝ້ລາມໄປທົ່ວໄຮ່.

- ຮື້ໄຮ່: ຢູ່ໃນລະຫວ່າງເດືອນ 6 ພາຍຫລັງທີ່ຈູດໄຮ່ແລ້ວ ຈາກນັ້ນກໍ່ປະໄວ້ປະມານ15-20ມື້ກ່ອນຈະຮື້ໄຮ່,ການຮື້ໄຮໝາຍເຖິງການນຳເອົາໄມ້ທີ່ໄຟໄໝ້ບໍ່ໝົດນັ້ນອອກໄປເຮັດຟືນຫລືເຮັດຮົ້ວ ຊຶ່ງເປັນໄມ້ທີ່ໃຫ່ຍແລະເຮັດໃຫ້ຫຍຸ້ງຍາກ ໃນການສັກເຂົ້າໄຮ່.

- ສັກເຂົ້າໄຮ່: ປະມານທ້າຍເດືອນ6 ຕ່ໃສ່ຕົ້ນເດືອນ 7ເມື່ອມີຝົນເລີ້ມຕົກພໍສົມຄວນ ຈຶ່ງເລີ້ມສັກໂດຍບໍ່ໄດ້ປັບໜ້າດິນຄືນ ໄປພ້ອມໆກັບການສັກເຂົ້າໄຮ່ນັ້ນເຂົາຍັງສັກສາລີ ປູກມັນຕົ້ນ ເຜືອກ ໄວ້ໃນໄຮ່ດຽວກັນ ອາດຈະປູກກ່ອນຫລື ປູກຫລັງກໍ່ໄດ້ພາຍຫລັງທີ່ສັກເຂົ້າໄຮ່ແລ້ວສິ່ງທີ່ຄະລຳທີ່ສຸດແມ່ນບໍ່ໃຫ້ເອົາໄມ້ສັກເຂົ້ານັ້ນໄປປະໄວ້ຢູ່ກາງໄຮ່ເຊື່ອ

ວ່າຈະເຮັດໃຫ້ເຂົ້າບໍ່ເກີດ ແລະ ບ່ໆາມຕາມຄວາມຕັ້ງໃຈ ການເລີ້ມຕົ້ນສັກເຂົ້າໄຮ່ທຳອິດ ແມ່ນຈະເລີ້ມຕົ້ນຈາກເຈົ້າຂອງເຮືອນເປັນຜູ້ສັກກ່ອນປະມານ10-20ຫລຸມ ພ້ອມທັ້ງຍອດ ເມັດ ໃນຂະນະທີ່ຍອດເມັດນັ້ນຈະຕ້ອງໄດ້ຫລັບຕາ ອາດຈະລົ້ງຫລື ບໍ່ລົ້ງກໍ່ແລ້ວແຕ່ ຈາກ ນັ້ນກໍ່ຖົມດິນຄືນພ້ອມທັ້ງທິດນ້ຳ ເຊື່ອກັນວ່າຈະເຮັດໃຫ້ເບ້ຍເຂົ້າຊຸ່ມຊື້ນ ແລະ ເປັນການ ປ້ອງກັນບໍ່ໃຫ້ມົດແມງໄມ້ມາກິນແນວພັນ ເຮັດໃຫ້ມັນຕາບອດບໍ່ສາມາດກິນເຂົ້າທີ່ສັກນັ້ນ ໄດ້.

- ເສຍຫຍ້າ: ການເສຍຫຍ້າແມ່ນໃຊ້ເວລາຫລາຍຈົນກວ່າເຂົ້າຈະໃຫ່ຍແລະສາ ມາດຮູດໄດ້ ເຂົ້າຈະດາຍຫຍ້າ (ເສຍຫຍ້າ) ປະມານ 2-3 ອາທິດຕໍ່ຄັ້ງ ໃນປີໜຶ່ງແມ່ນຈະ ເສຍຫຍ້າປະມານ2-3ເທື່ອ ມີບາງໄຮ່ອາດຈະເສຍຫຍ້າ 4-5 ຄັ້ງຕໍ່ປີ ຂຶ້ນກັບແຕ່ລະ ພື້ນ ທີ່ ໃນໄລຍະເສຍຫຍ້າຈະເລີ້ມຕັ້ງແຕ່ເດືອນ8 -9 -10 ໃນໄລຍະນີ້ພືດຜັກທີ່ປູກໄວ້ແຄມ ສວນສາມາດເກັບກ່ຽວໄດ້ເຊັ່ນ ສາລີ ປູກປະມານ 4ເດືອນ ກໍ່ສາມາດເກັບກ່ຽວໄດ້ ໃນລະ ຫວ່າງເດືອນ10 ຕໍ່ຈາກນັ້ນກໍ່ກະກຽມໃສ່ການຮູດເຂົ້າດໍ ແລະ ໃນເດືອນຕໍ່ໄປພືດຜັກອື່ນໆ ກໍ່ສາມາດເກັບກ່ຽວໄດ້.

- ຮູດເຂົ້າ:ຢູ່ໃນໄລຍະເດືອນ11ເຖິງເດືອນ12 ໃນໄລຍະນີ້ຈະຮູດເຂົ້າດໍກ່ອນຊຶ່ງ ເປັນເຂົ້າທີ່ສາມາດເກັບກ່ຽວໄດ້ໄວ ຕໍ່ຈາກນັ້ນກໍ່ຈະເກັບກ່ຽວເຂົ້າປີເຂົ້າດັ່ງກ່າວບໍ່ສາມາດ ຮູດໄດ້ຕ້ອງໄດ້ກ່ຽວເປັນຮວງ ຈາກນັ້ນກໍ່ໃຊ້ຕີນຫຍຽບໃຫ້ເມັດເຂົ້າຫລຸດອອກ ແລະ ກໍ່ຝັດ ເອົາຕັ້ງແຕ່ເມັດເຂົ້າ.


ກ່ອນຈະຮູດເຂົ້ານັ້ນຈະຕ້ອງໄດ້ເຮັດພິທີເອີ້ນຂວັນເຂົ້າ ເພື່ອໃຫ້ໄດ້ເຂົ້າຫລາຍພິ ທີນີ້ຈະເຮັດຢູ່ໃນໄຮ່ ຢ່າງຕ່ຳແມ່ນຈະເຮັດ3ປີຕໍ່ໜຶ່ງຄັ້ງ ຫລື ຖ້າມີເງື່ອນໄຂອາດຈະເຮັດປີ ລະຄັ້ງກໍ່ໄດ້ ເຊື່ອກັນວ່າຈະເຮັດໃຫ້ເຂົ້າງອກງາມ ຄອບຄົວບໍ່ອຶດບໍ່ຢາກໄດ້ດິນທີ່ອຸດົມສົມ ບູນເຮັດໜ້ອຍ ໄດ້ກິນຫລາຍ.

ອຸປະກອນການເຮັດໄຮ່.

№ 01 - ຊື່ພາສາລາວ: ພ້າໃຫ່ຍ

- ຊື່ພາສາທ້ອງຖິ່ນ: ບຣາຕະມີ
- ເຈົ້າຂອງເຄື່ອງ: ບຸນທາ
- ບ່ອນເກັບມ້ຽນ: ໄວ້ຂ້າງຝາເຮືອນ ຫລື ຖ້ຽງໄຮ່






- ຜູ້ນຳໃຊ້: ພໍ່,ລູກ.
- ການນຳໃຊ້:ໃຊ້ຖ້ຽງປ່າ ຕັດຟືນ ຮື້ໄຮ່ ຈັກຕອກ.

ພ້າ (ບຣາຕະມີ)

ເປັນອຸປະກອນຊະນິດທຳອິດໃນການເຮັດໄຮ່ - ເຮັດສວນ. ພ້າຂອງຊົນເຜົ່າ ອາ ລັກມີລັກຊະນະຄ້າຍຄືກັບມີດອີໂຕ້, ມີສັນໜາແລະຊື່ມີປາຍຕັດ. ສ່ວນປາຍທາງດ້ານຄົມ ຈະງໍເລັກນ້ອຍເພື່ອປ້ອງກັນຄົມພ້າບໍ່ໃຫ້ຖືກກ້ອນຫີນເວລາຖາງຫ້ຍາ.ຄວາມຍາວປະມານ 30-40ຊ້ຽຕິແມັດ. ປະກອບມີຂະໜາດນ້ອຍຫລືໃຫ່ຍຂຶ້ນກັບຜູ້ຊົມໃຊ້ ແລະ ດ້າມຈັບເຮັດ ດ້ວຍໄມ້ປຶກປະມານ 25-35 ຊ້ຽຕິແມັດ ລວມຄວາມຍາວປະມານ 50-60 ຊ້ຽຕິແມັດ.



ການຜະລິດ:

ເຄື່ອງມືການເຮັດໄຮ່-ເຮັດສວນ. ສ່ວນໃຫ່ຍຈະປະກອບຂຶ້ນເອງ ຕາມທີ່ຫາໄດ້ຜະລິດຂຶ້ນເອງໃນແຕ່ລະ ປີ ໂດຍເອົາເຫລັກເສດມາເຜົາໄຟ ຕີ ໃຫ້ໄດ້ຮູບຕາມທີ່ຕ້ອງການ. ຈາກນັ້ນ ຈຶ່ງນຳຂໍ້ໄມ້ປຶກມາເຈາະໃຫ້ເປັນຮູແລະ ນຳມາປະກອບໃຫ້ເປັນດ້າມພ້າ ທີ່ສາ ມາດໃຊ້ງານໄດ້.

ວິທີນຳໃຊ້:

ເຄື່ອງມືຊະນິດນີ້ ສາມາດໃຊ້ໄດ້ທຸກເພດໄວ ສ່ວນຫລາຍແລ້ວແມ່ນນຳໃຊ້ໃນ ການຖາງໄຮ່ ຕັດຟືນ ຕັດຫ່ຳໄມ້ ຕັດໄມ້ລ້ອມຮົ້ວ. ນອກຈາກນັ້ນຍັງສາມາດໃຊ້ໃນການ

ເຫລົ່າໄມ້, ຈັກຕອກເພື່ອເຮັດເຄື່ອງຈັກສານ ຖືໄດ້ວ່າໃຊ້ໄດ້ສາລະພັດປະໂຫຍດ ໄປຈົນເຖິງການປ້ອງກັນຕົວຈາກສັດປ່າ.

ເຄື່ອງມືດັ່ງກ່າວ ນອກຈາກຈະໃຊ້ເຂົ້າໃນການເຮັດໄຮ່ແລ້ວພວກເຂົາຍັງໃຊ້ເຂົ້າໃນການແຕ່ງຢູ່ຄົວກິນໃນຊີວິດປະຈຳວັນເຊັ່ນ: ຊ້ອຍຜັກ ຊ້ອຍຊີ້ນແລະອື່ນໆ ວິທີການນຳໃຊ້ ແມ່ນໃຊ້ມືຈັບດ້າມປະມານສ່ວນກາງຂອງດ້າມ. ລັກສະນະພິເສດຂອງດ້າມພ້າຂອງເຜົ່ານີ້ຕ້ອງມີສ່ວນງໍ ສະເພາະສ່ວນທີ່ຈະຈັບໃຊ້ນັ້ນ ເພື່ອປ້ອງກັນໃນເວລາໃຊ້ງານ ບໍ່ໃຫ້ມືມັນຫລຸດລົງໄປຖືກຄົມຂອງພ້ານັ້ນ. ສຳລັບບ່ອນເກັບມ້ຽນແມ່ນຈະໄວ້ໃນຖຸງໄຮ່ແຕ່ສ່ວນຫລາຍແລ້ວແມ່ນຈະໄວ້ເຮືອນຄັດໄວ້ຝາເຮືອນແລະສ່ວນຕ່າງໆຂອງເຮືອນ.




ໃຊ້ໄວ້ຖາງປ່າໃນໄຮ່
ຕັດຕົ້ນໄມ້ນ້ອຍຕ່າງໆ.




ຜູ້ຊາຍຈະໃຊ້ໃນເວລາຖາງໄຮ່
ຜູ້ຍິງໃຊ້ໃນເວລາແຕ່ງກິນ, ຕັດຟືນ.

№ 02 - ຊື່ພາສາລາວ: ຂວານ

- ຊື່ພາສາທ້ອງຖິ່ນ: ຈຽ
- ເຈົ້າຂອງເຄື່ອງ: ບຸນທາ
- ບ່ອນເກັບມ້ຽນ: ຖຽງໄຮ່






- ຜູ້ນຳໃຊ້: ພໍ່,ລູກຊາຍ.
- ການນຳໃຊ້: ໃຊ້ຟັນໄມ້ໃຫ່ຍ ເວລາຮື້ໄຮ່,ຖາງປ່າ.

ຂວານ (ຈูง)

ຂວານເປັນເຄື່ອງມືທີ່ໃຊ້ໃນການເຮັດໄຮ່ ຮูบร่างใหญ่ และ ด้ามยาวต่างกับขวานยู่ตามที่างพูง ถวามยาวทั้งหมดประมาน 70 ซ้งติแม้ด. สะเพาะด้ามจับประมาน24ซ้งติแม้ด จะมีส่วนงุ่ของด้ามขวานเพื่อสูบปายขวาน สะเพาะใบขวานถวามยาวประมาน18 -19 ซ้งติแม้ด ถวามก้วางของปายคิมขวานประมาน 6 - 8 ซ้งติแม้ด.



No. 2

ในการผะลิดเอ้าสะเพาะขวานแล้ว สำลับเผ่าอาลักบ่เคียผะลิดจะซื้มาจากเมืองถากจิงแขวงเชกองพูงแต่ผะลิดด้ามขวานเอ้าเองเท่านั้น.สะเพาะขวานบ้ำเบิ 01 แม่นผะลิดในเดือน 4 ปี 2003. ขวานได้แยกออกเป้น 3 ส่วน

ສ່ວນທີ່ໜຶ່ງແມ່ນດ້ານຈັບຈະນຳໃຊ້ໄມ້ຊອດຊຶ່ງເປັນໄມ້ມີລັກສະພິເສດມີຮູເພື່ອສອດດ້ານຂວານໄດ້ງ່າຍແລະຮັດດວ້ຍຫວາຍ ສ່ວນທີ່ສອງແມ່ນດ້ານຂວານເຮັດດ້ວຍໄມ້ຍຸງຫລືໄມ້ເນື້ອແຂງ ຈຶ່ງຈະທົນທານແຂງແຮງ ສ່ວນທີ່ສາມແມ່ນຂວານທີ່ຈະຊື້ມາປະກອບໃສ່ເອງ.

ວິທີນຳໃຊ້: ໃຊ້ໄວ້ຕັດໄມ້ໃຫ່ຍເຊັ່ນ: ບັກຕົ້ນໄມ້ໃຫ່ຍ ປ້ຳກິກໄມ້ ນອກນັ້ນຍັງໃຊ້ໃນການຖາກເສົາເຮືອນ, ຖາກແປ້ນເຮືອນ, ເຈາະຫີບສົບ,ເຈາະຄົກຕຳເຂົ້າ. ສາມາດນຳໃຊ້ໄດ້ທຸກຄົນທຸກເພດໄວ ບໍ່ມີຂໍ້ຫ້າມ ແຕ່ສ່ວນໃຫ່ຍຈະແມ່ນພໍ່ ຫລື ຜູ້ທີ່ແຂງແຮງເທົ່ານັ້ນນຳໃຊ້.




ໃນການຈັບຂວານຈະຕ້ອງຈັບໃຫ້ໃກ້ເພື່ອປ້ອງກັນເສດໄມ້ເດັນເຂົ້າຕາ.



ນຳໃຊ້ສະເພາະແຕ່ຜູ້ຊາຍ.

№ 04 - ຊື່ພາສາລາວ: ຈົກ

- ຊື່ພາສາທ້ອງຖິ່ນ: ກະໂຈະໂຣ
- ເຈົ້າຂອງເຄື່ອງ: ບຸນທາ
- ບ່ອນເກັບມ້ຽນ: ຖຸ້ງໄຮ່




- ຜູ້ນຳໃຊ້: ພໍ່,ລູກຊາຍ
- ການນຳໃຊ້: ຮື້ໄຮ່, ເສຍຫຍ້າ, ຂຸດດິນ
  ສັກສາລີ (ຂຸດຂຸມຢອດເມັດສາລີ).


№ 05 - ຊື່ພາສາລາວ: ຈົກ

- ຊື່ພາສາທ້ອງຖິ່ນ: ກະໂຈະໂຣ
- ເຈົ້າຂອງເຄື່ອງ: ບຸນທາ
- ບ່ອນເກັບມ້ຽນ: ຖຸງໄຮ່






- ຜູ້ນຳໃຊ້: ພໍ່,ລູກຊາຍ.
- ການນຳໃຊ້: ຮີ້ໄຮ່ ເສຍຫຍ້າ ຂຸດດິນ .
  ສັກສາລີ (ຂຸດຊຸມຢອດເມັດສາລີ).



ກະຈົກ (ກະໂຈະໂຣ)

ເປັນຊະນິດທີ່ໃຊ້ໄວ້ຂຸດດິນ ລັກຊະນະຂອງກະຈົກແມ່ນມີດ້າມ ແມ່ນມີດ້າມຊື່ ແຕ່ກະຈົກຈະງໍເຂົ້າຫາຄົນໃນເວລານຳໃຊ້ ຂະໜາດຄວາມຍາວປະມານ 45 ຊັ່ງຕິແມັດ ປາຍຈົກມີຄວາມກວ້າງ 5 -7 ຊັ່ງຕິແມັດ ແລະ ຄວາມຍາວ 12-14 ຊັ່ງຕິແມັດ ໃນເວລາໃຊ້ງານສ່ວນໃຫ່ຍໄລຍະຈັບຢູ່ປະມານ 17-20 ຊັ່ງຕິແມັດ ກະຈົກມີຂັ້ນຕອນການຜະລິດທີ່ບໍ່ຊັບຊ້ອນ ມີສອງສ່ວນຄື: ດ້າມຈັບແລະ ກະຈົກ ສ່ວນດ້າມແມ່ນຈະນຳເອົາຂໍ້ໄມ້ຊອດ ຫລື ເຫງົ້າຂອງໄມ້ຊອດເພາະມັນມີຄວາມແຂງແຮງທົນທານຈະບໍ່ແຕກງ່າຍສຳລັບການຜະລິດ ກະຈົກບໍ່ມີຂັ້ນຕອນທີ່ຫຍຸ້ງຍາກພຽງແຕ່ນຳເຫລັກເສດມາເຜົາໄຟ ແລະ ຕີໃຫ້ໄດ້ຮູບແບບທີ່ຕ້ອງການ ສ່ວນທາງຄົມຂອງປາຍກະຈົກແມ່ນຈະຝົນດ້ວຍຫີນ.



No.5

ສຳລັບ ຈົກ 04 ຜະລິດຂຶ້ນ ເດືອນ 4 ປີ 1999.


ສຳລັບ ຈົກ 05 ຜະລິດຂຶ້ນ ເດືອນ 5 ປີ 1993.

ການນຳໃຊ້: ນຳໃຊ້ເຂົ້າໃນເວລາຮີ້ໄຮ່,ຂຸດດິນ,ເສຍຫຍ້າ ຫລື ໃນເວລາສັກສາລີ (ຂຸດຊຸມເພື່ອຢອດເມັດສາລີ)ໃຊ້ໄດ້ທຸກເພດໄວ ບໍ່ມີຂໍ້ຫ້າມ. ວິທີການແມ່ນຈະໃຊ້ ສອງມື ຈັບກະຈົກນັ້ນແລ້ວກະຈົກຍົກຂຶ້ນສັບລົງດິນໃນບ່ອນທີ່ມີຕົ້ນຫຍ້າ.




ຮູບພາບສະແດງການນຳໃຊ້

ນຳໃຊ້ໄດ້ສະເພາະ ແຕ່ການ
ເສຍຫຍ້າ ແລະ ຂຸດດິນປູກພືດເທົ່ານັ້ນ.



ໃຊ້ໃນເຂດທີ່ມີພູສູງຊັນ
ຈຶ່ງເໝາະສົມ.

№ 06 - ຊື່ພາສາລາວ: ໄມ້ສັກເຂົ້າໄຮ່
- ຊື່ພາສາທ້ອງຖິ່ນ: ຍີ້ມູ
- ເຈົ້າຂອງເຄື່ອງ: ບຸນທາ
- ບ່ອນເກັບມ້ຽນ: ໄວ້ຂ້າງຖ້ຽງໄຮ່




- ຜູ້ນຳໃຊ້: ພໍ່,ລູກຊາຍ.
- ການນຳໃຊ້: ໃຊ້ສັກເຂົ້າໄຮ່.


ໄມ້ສັກເຂົ້າ (ຍີ້ມູ)


ເປັນໄມ້ຊ້ຽກົມ ຍາວ ປາຍແຫລມ ຄວາມຍາວປະມານ 190 - 220 ຊັ້ງຕິແມັດ ເສັ້ນຜ່າສູນກາງ 3-4ຊັ້ງຕິແມັດ ໄລຍະການໃຊ້ງານປະມານ110ຊັ້ງຕິແມັດ ນຳໃຊ້ຕັ້ງແຕ່ ສັກເຂົ້າໄຮ່ເທົ່ານັ້ນ ບໍ່ສາມາດນຳໃຊ້ຢ່າງອື່ນໄດ້ ໄມ້ທີ່ນຳມາຜະລິດຈະຕ້ອງເປັນໄມ້ເນື້ອ ແຂງເພື່ອໃຫ້ຄ້ຽກົມປາຍບໍ່ປ້ຽງ່າຍ ກ່ອນຈະນຳມາໃຊ້ງານຈະຕ້ອງນຳໄປຂ້າງໄຟ ຫລັງຈາກ ນັ້ນກໍ່ມາເຫລົາ ເຮັດແນວນັ້ນຫລາຍເທື່ອແລ້ວຈຶ່ງນຳໄປໃຊ້ໄມ້ສັກເຂົ້າໄຮ່ ສາມາດນຳໃຊ້ ໄດ້ທຸກຄົນ ແຕ່ເວລານຳໃຊ້ແລ້ວຫ້າມປະຖິ້ມໄວ້ກາງໄຮ່ ເຊື່ອກັນວ່າຈະເຮັດໃຫ້ເຂົ້າໄຮ່ບໍ່ ງາມ.

№ 07 - ຊື່ພາສາລາວ: ກະເຈາະ

- ຊື່ພາສາທ້ອງຖິ່ນ: ຢ້ອງ
- ເຈົ້າຂອງເຄື່ອງ: ບຸນທາ
- ບ່ອນເກັບມ້ຽນ: ເທິງເຕົາໄຟ








- ຜູ້ນຳໃຊ້: ແມ່, ລູກສາວ.
- ການນຳໃຊ້: ເວລາສັກເຂົ້າໄຮ່,ຮູດເຂົ້າ ຫາເຄື່ອງປ່າຂອງດົງ,ໃສ່ປາ.


ກະເຈາະ (ຢ່ອງ)

ກະເຈາະມີຮູບຮ່າງຄ້າຍຄືກະຕ່າ ຮູບຊົງສີ່ຫລ່ຽມ ປາກດ້ານເທິງມົນ ສ່ວນດ້ານກົນຈະເປັນຮູບສີ່ຫລ່ຽມ ປະກອບໄມ້ເປັນຂາຕັ້ງ ຄວາມສູງທັງໝົດປະມານ 28 ຊັ້ງຕິແມັດ ເສັ້ນຜ່າສູນກາງ 23 ຊັ້ງຕິແມັດ, ຂາເຮັດດ້ວຍໄມ້ ຄວາມສູງປະມານ 4 - 5 ຊັ້ງຕິແມັດ, ຄວາມຍາວປະມານ 15 - 25 ຊັ້ງຕິແມັດ.



ທາງດ້ານລຸ່ມຂອງກົ້ນກະເຈາະຈະມີໄມ້ຂັດໄຂວ້ກັນ ເພື່ອປ້ອງກັນກົ້ນຫລຸ. ດ້ານຂ້າງຂອງກະເຈາະປະກອບມີໄມ້ ສີ່ດ້ານເພື່ອປະກອບເປັນຂາ ເພື່ອເສີມໃຫ້ດ້ານຂ້າງແໜ້ນໜາຂຶ້ນ ສ່ວນສອງຂ້າຂອງກະເຈາະ ຈະມັດດ້ວຍເຊືອກສອດໃສ່ທາງກົນ ເພື່ອໄວ້ມັດໃສ່ແອວໃນເວລາໃຊ້ງານ.

ວິທີນຳໃຊ້: ກະເຈາະກາມນຳໃຊ້ຫລັກເພື່ອໃຊ້ໃນເວລາຮູດເຂົ້າ ແລະ ໄລຍະສັກເຂົ້າໄຮ່ ສອງຂ້າງຂອງກະເຈາະມັດເຊືອກໄວ້ ອາດຈະໄວ້ທາງດ້ານຂ້າງ ຫລື ດ້ານໜ້າກໍ່ແລ້ວແຕ່ເພື່ອຄວາມສະດວກໃນຂະນະໃຊ້ງານ ຜູ້ນຳໃຊ້ສ່ວນໃຫ່ຍຈະເປັນຜູ້ຍິງນອກຈາກກາມນຳໃຊ້ທີ່ໄດ້ກ່າວມາຍັງໃຊ້ໃນເວລາໄປຫາເຄື່ອງປ່າຂອງດົງ ໄປຫາປາໃສ່ໄດ້ທຸກຢ່າງຕາມຕ້ອງກາມຈະໃສ່.




<u>ຮູບພາບກາມນຳໃຊ້ແບບຕ່າງໆ.</u>

ໃຊ້ໃນເວລາຮູດເຂົ້າມັດໃສ່ແອວ
ພາຍໃສ່ບ່າໃນເວລາໄປໄຮ່ ໃສ່ສິ່ງຂອງທີ່ຕ້ອງກາມ.



ມັດໃສ່ແອວເມື່ອໃນ ເວລາເຂົ້າປ່າ
ເພື່ອໄວ້ໃສ່ພ້າ ແລະ ສິ່ງຂອງອື່ນໆ.


ວິທີການຜະລິດ: ກະເຈາະເປັນເຄື່ອງຈັກສານທີ່ຕ້ອງການຄວາມລະອຽດ ສ່ວນໃຫ່ຍຈະນຳໃຊ້ໄມ້ເຮັຍມາຈັກສານ ເນື່ອງຈາກມັນມີຄວາມໜຽວ ແລະ ສາມາດເຫລົ່າໃຫ້ນ້ອຍໄດ້. ຂັ້ນຕອນທຳອິດແມ່ນຈະເລີ້ມຕົ້ນຈາກກົ້ນ ສານດ້ວຍລາຍສອງໃຫ້ໄດ້ຕາມຂະໜາດທີ່ຕ້ອງການ.ຈາກນັ້ນກໍ່ສານສ່ວນໂຕຂຶ້ນໂດຍເລີ້ມຈາກສານລາຍສອງໃຫ້ໄດ້ໄລຍະໜຶ່ງກໍ່ປ່ຽນລາຍ. ສານດ້ວຍລາຍສາມ ຂຶ້ນໄປເລື້ອຍຕາມຂະໜາດທີ່ເໝາະສົມ ສ່ວນທາງປາກຈະສານລາຍຂັດ ຈາກນັ້ນກໍ່ຈະໃຊ້ໄມ້ເຮັຍ ຫລື ຫວາຍ ເຫລົ່າໃຫ້ກ້ຽງດີ ແລ້ວນຳມາແນບໃສ່ປາກກະເຈາະທັງດ້ານນອກ ແລະ ດ້ານໃນ ແລ້ວກໍ່ຈະນຳຫວາຍ ທາງໜູມາສອດມັດຖັກໃຫ້ແໜ້ນເສີມຄວາມທົນທານ. ສ່ວນດ້ານຂ້າງແມ່ນຈະໃຊ້ໄມ້ຂໍເຫລົ່າໃຫ້ລະອຽດເສັ້ນຜ່າສູນທາງດ້ານຕັ້ນຂະໜາດປະມານ 0,5-0,8 ຊັງຕິແມັດ. ແນບໃສ່ທັງສີ່ດ້ານຂອງກະເຈາະ ຈາກນັ້ນກໍ່ນຳຕັ້ນທີ່ເຮັດຈາກໄມ້ຂໍ ສານດ້ວຍຫວາຍໃຫ້ຕິດກັບ ກະເຈາະທາງດ້ານກົ້ນຂອງມັນ ແມ່ນຈະໃຊ້ໄມ້ຂັດກົ້ນໄວ້ ແລະ ໃຊ້ຫວາຍມັດຕິດເພື່ອປ້ອງກັນກົ້ນຫລຸ. ຈາກນັ້ນກໍ່ຖັກສາຍດ້ວຍຫວາຍ ຫລືເຊືອກປໍທີ່ມີຄວາມໜັ້ນໜຽວ.





ໃຊ້ໃນເວລາຕຳເຂົ້າ
ຕັກເຂົ້າອອກຈາກເລົ້າເພື່ອມາຕຳ.

№ 08 - ຊື່ພາສາລາວ: ກະດົ້ງ

- ຊື່ພາສາທ້ອງຖິ່ນ: ດຶຫວີ
- ເຈົ້າຂອງເຄື່ອງ: ບຸນທາ
- ບ່ອນເກັບມ້ຽນ: ມ້ຽນເທິງ ເຕົາໄຟ









- ຜູ້ນຳໃຊ້: ແມ່, ລູກສາວ.
- ການນຳໃຊ້: ຝັດເຂົ້າ, ຕາກຊີ້ນ, ຕາກປາ, ຢຽບເຂົ້າ.

ກະດົ້ງ (ດິຫວີ)


ກະດົ້ງຄ້າຍຄືກັບຮູບໄຂ່ ມີລັກສະນະມົນລ້ຽວ ມີເສັ້ນຜ່າສູນກາງຢູ່ໃນລະຫວ່າງ 65-75 ຊັງຕິແມັດ ສ່ວນໃຫ່ຍຈະສານລາຍສອງ ໂດຍໃຊ້ຕົ້ວໄມ້ຫົກ(ເປືອກນອກຂອງໄມ້ຫົກ) ໄມ້ໄຜ່ທີ່ນຳມາສານຈະມີຄວາມກ້ວາງຂອງເສັ້ນຢູ່ໃນລະຫວ່າງ0,5 - 0,8 ຊັງຕິແມັດ ຂອບຈະໃຊ້ໄມ້ເຮັຍ ເສັ້ນໜາປະມານ 0,5 ຊັງຕິແມັດ ກວ້າງປະມານ 2,5 - 3 ຊັງຕິແມັດ ເຫລົ່ານໃຫ້ລຽບປິດຂອບທັງດ້ານນອກແລະດ້ານໃນຂອງກະດົ້ງ ແລະ ຍຶດດ້ວຍຫວາຍເພື່ອ ເສີມຄວາມແຂງແຮງ.



ວິທີໃຊ້: ພາຊະນະໃຊ້ພາຍຫລັງຮູດເຂົ້າແລ້ວ ເມື່ອຮູດເຂົ້າເຕັມກະເຈາະຈາກ ນັ້ນກ່ໍຈະຖອກໃສ່ກະດົ້ງເພື່ອຢຽບເອົາຫງ່ຳເຂົ້າອອກ ແລະ ກ່ໍຝັດເອົາຫງ່ຳອອກເຫລືອໄວ້ ພຽງແຕ່ເມັດເຂົ້າ ວິທີເອົາຫງ່ຳອອກນັ້ນແມ່ນໃຊ້ຕີນຢຽບຢູ່ເທິງກະດົ້ງ ແລະ ຖູໄປມາເພື່ອ ໃຫ້ຫງ່ຳມັນອອກໄວ.ນອກນັ້ນຍັງໃຊ້ໃນເວລາຕຳເຂົ້າ ກ່ໍຄືຕຳເຂົ້າແລ້ວຈະເອົາອອກມາໃສ່ ກະດົ້ງຈາກນັ້ນກ່ໍຈະຝັດເອົາກາກເຂົ້າອອກ(ເປືອກເມັດເຂົ້າ) ບ່ໍພຽງແຕ່ກາກເຂົ້າອອກເທົ່ຳ ນັ້ນຍັງມີເຂົ້າລີບອອກນຳ (ໃນການຕຳເຂົ້າເນ່ືອງຈາກວ່າໃນເຂດດົ່ງກ່ຳວບ່ໍມີໂຮງສີເຂົ້າຍັງ ຕ້ອງໄດ້ສີເຂົ້າດ້ວຍມື ກ່ໍຄືຕຳເຂົ້າໃສ່ຄົກທີ່ເຮັດດ້ວຍໄມ້).



ວິທີການຝັດເອົາກາກຂອງເຂົ້າເປືອກອອກ
ພາຍຫລັງຕຳແລ້ວ.





ພາຍຫລັງຮູດເຂົ້າໄດ້ແລ້ວ ກໍ່ຈະນຳມາຢຽບ
ຖູກັນໄປມາເພື່ອໃຫ້ເມັດຫລຸດອອກ.

ດັ່ງນັ້ນຈຶ່ງໄດ້ສານກະດົ້ງໃຫ້ມີລັກສະນະມົນລ້ຽວ ຄືກັບຮູບໄຂ່ເພື່ອສະດວກໃນ
ເວລາຝັດເຂົ້າ ໃນຂະນະທີ່ໃຊ້ງານ ພວກເຮົາຈະເອົາສອງມືຈັບຂອບກະດົ້ງ ທັງສອງດ້ານ
ສົ້ນທີ່ໃຫ່ຍແມ່ນຈະໃຫ້ຢູ່ຕິດກັບຄົນຝັດເຂົ້າ ສ່ວນດ້ານລ້ຽວແມ່ນຈະປັ່ນອອກດ້ານນອກ
ແລະ ກໍ່ຝັດຂຶ້ນລົງ ສ່ວນທີ່ເປັນຮຳມັນຈະປົວອອກ ເຂົ້າຫັກ ເຂົ້າລີບ ຈະຢູ່ດ້ານໜ້າ ສ່ວນ
ທີ່ເປັນກາກເຂົ້າ ແລະ ເມັດເຂົ້າທີ່ສົມບູນຈະຢູ່ທ້າຍຂອງກະດົ້ງ. ຊຶ່ງງ່າຍຕໍ່ການແຍກເມັດ
ເຂົ້າທີ່ສົມບູນ ຜູ້ນຳໃຊ້ກະດົ້ງສ່ວນໃຫ່ຍແລ້ວແມ່ນແຕ່ຜູ້ຍິງເຊັ່ນ: ແມ່, ລູກສາວ ແລະ ຜູ້
ອື່ນໆ ພາຍຫລັງໃຊ້ງານແລ້ວພວກເຂົ້າຈະເກັບ ມ້ຽນໄວ້ຢູ່ເທິງຂື່.

№ 09 - ຊື່ພາສາລາວ: ກະພາ

- ຊື່ພາສາທ້ອງຖິ່ນ: ຫຣະ
- ເຈົ້າຂອງເຄື່ອງ: ບຸນທາ
- ບ່ອນເກັບມ້ຽນ: ຖ້ຽງໄຮ່ ເຮືອນ






24 / VII
ห้ามจำหน่าย

- ຜູ້ນຳໃຊ້: ແມ່ ລູກສາວ.
- ການນຳໃຊ້: ໃສ່ເຂົ້າ, ເກັບມ້ຽນເຄື່ອງນຸ່ງ, ໃສ່ຜົນລະປູກ.


ກະພາ (ຫຣະ)

ກະພາເປັນເຄື່ອງໃຊ້ທີ່ປະກອບໃນການເຮັດໄຮ່, ເຮັດສວນ ແລະ ການໃຊ້ໃນຊີວິດປະຈຳວັນມີຮູບຮ່າງຄ້າຍຄືກັບກະເຈາະ ແຕ່ກະພາຈະມີຮູບຮ່າງໃຫ່ຍສູງກວ່າກະເຈາະ ລັກສະນະລວມແມ່ນຈອຍ ກົມ ກົ້ນກະພາເປັນຮູບສີ່ຫລ່ຽມ ເສີມຕີນຂຶ້ນປະມານ 5-6 ຊັ້ງຕິແມັດ ຄວາມກ້ວາງຂອງກົ້ນຢູ່ໃນລະຫວ່າງ 34 - 45 ຊັ້ງຕິແມັດ ຄວາມສູງລວມທັງໝົດຢູ່ໃນລະຫວ່າງ 60-70 ຊັ້ງຕິແມັດ ເສັ້ນຜ່າສູນກາງປາກຂອງກະພາປະມານ 55-65 ຊັ້ງຕິແມັດ.ຈະມີເຊືອກສອງເສັ້ນ ສົ້ນໜຶ່ງມັດໃສ່ທາງດ້ານເທິງໃກ້ກັບປາກແລະອີກສົ້ນໜຶ່ງມັດໃສ່ທາງພື້ນຂອງກະພາເພື່ອໄວ້ສອດແຂນໃສ່ໃນເວລາໃຊ້ງານ.



ວິທີໃຊ້: ພາຍຫລັງການຮູດເຂົ້າແລ້ວ ຈະນຳເຂົ້າໃນກະເຈາະມາຖອກໃສ່ກະພາ ຈາກນັ້ນຈຶ່ງຂົນໄປມ້ຽນເລົ້າເຂົ້າ ໜຶ່ງກະພາສາມາດບັນຈຸໄດ້ເຖິງ40-50ກິໂລ ຊຶ່ງເປັນສິ່ງສະດວກໃນການຂົນຍ້າຍເຂົ້າເປັນຈຳນວນຫລາຍ ກະພາມີລັກສະນະຍາວ ມັນການອອກແບບມາເພື່ອເປັນການເປ່ຢ່າງດຽວໃນເວລາໃຊ້ແມ່ນຈະເອົາສອງແຂນສອດໃສ່ສາຍແລະ

ກົ້ມຕົວລົງເລັກນ້ອຍ ຈາກນັ້ນກ່ຍົກໃສ່ຫລັງເປ້ໄປໄດ້ທຸກບ່ອນສະດວກສະບາຍ ນອກນັ້ນ ຍັງສາມາດເກັບມ້ຽນເຄື່ອງອື່ນໆ ອີກເຊັ່ນ: ເກັບມ້ຽນເຄື່ອງນຸ່ງ ສາມາດປ້ອງກັນໜູກັດ ເສື້ອຜ້າໄດ້ໃສ່ເຄື່ອງທີ່ສຳຄັນໃນເວລາເດີນທາງໄກຍັງເປັນພາຊະນະ ທີ່ໃສ່ເຂົ້າຂອງອາຫານການກິນທີ່ຈຳເປັນໄດ້ ຈຳນວນຫລາຍ ແລະສະດວກທີ່ສຸດຫລືໃນຍາມເກັບກ່ຜົນລະປູກເຊັ່ນ:ເຜືອກ,ມັນ,ສາລີ ກ່ຈະນຳໃຊ້ພາຊະນະດັ່ງກ່າວການເວລານຳໃຊ້ສ່ວນໃຫ່ຍແມ່ນ ແຕ່ຜູ້ຍິງເປັນຜູ້ນຳໃຊ້



ໃຊ້ໃນເວລາຮຸດເຂົ້າແລະ
ເວລາເກັບກ່ງວຜົນລະປູກຕ່າງໆ



ຮູບພາບການນຳໃຊ້ກະພາ
ໃນຊີວິດປະຈຳວັນ

ວິທີການຜະລິດ: ຂັ້ນຕອນທຳອິດໃນການສານກະພາ ແມ່ນຈະເລີ້ມຕົ້ນຈາກທາງກົ້ນໄປ ສານດ້ວຍລາຍສອງ ຈົນໃຫ້ໄດ້ຕາມຂະໜາດທີ່ກຳນົດໄວ້ ປະມານ 34 - 45 ຊັ້ງຕິແມັດ ກະພາຖ້າວ່າສຳເລັດແມ່ນຈຳມີລັກສະນະແອນລະຫວ່າງກາງໜ່ອຍ ໃນເວລາຜະລິດນັ້ນ ພວກເຂົາຈະນຳເສັ້ນທາງຕັ້ງນັ້ນມາເຫລົາໃຫ້ນ້ອຍກ່ວາທາງສ່ວນປາຍເພື່ອ

ໃຫ້ມັນໂຄ້ງເຂົ້າໃຫ້ແນບກັບສ່ວນຫລັງຂອງຄົນ ສ່ວນເສັ້ນທີ່ສານທາງນອນນັ້ນເຫລົ່ານີ້ ສະເໝີກັນຕາມເດີມ ຫລັງຈາກທີ່ສານກົ້ນໄດ້ຕາມກຳນົດ ຈະເລີ້ມສານໜ່ວຍຊຶ່ງເຂົາຈະນິຍົມກັນສານລາຍສີ່ ເຜົ່າອາລັກເອີ້ນວ່າ(ຊະເວກ) ສານໃຫ້ໄດ້ຄວາມຍາວຕາມຕ້ອງການ ຈາກນັ້ນຈຶ່ງໃສ່ໄມ້ທາງດ້ານຂ້າງເສີມໃຫ້ແຂງແຮງຂຶ້ນ ໄມ້ດັ່ງກ່າວເຮັດດ້ວຍໄມ້ຂໍ ເສັ້ນຜ່າສູນກາງ ທີ່ໃຫ່ຍສຸດຈະເປັນທາງຕີນ ປະມານ1-1,5 ຊັ້ງຕິແມັດ ຈະມີນລ່ງວແນບໄປຕາມ



ຍ່າງໄປໄຮ່ຈະເປ້ເຄື່ອງກິນ, ນ້ຳ ແລະ ເຄື່ອງມືໃນການເຮັດໄຮ່.




ເວລາກັບເກັບຜົນລະປຸກ ແລະຜັກຕ່າງໆ


ຕົວກະພາ ໃຊ້ຫວາຍມັດກ້ຽວ ແລະສານຕິດກັບກະພາ ສ່ວນຕີນກະພາກໍ່ຈະໃຊ້ໄມ້ຂໍເຊັ່ນດຽວກັນຕັດໃຫ້ໄດ້ຕາມຂະໜາດກົ້ນ ແລະ ເຈາະຮູທາງກາງຈະໃຊ້ຫວາຍສານຕີນຍຶດຕິດກັບກະພາ ທາງກົ້ນກະພານັ້ນ ແມ່ນຈະນຳໄມ້ຂໍ ຫລືໄມ້ເຮັຍ ມາຂັດຕິດ ແລະ ມັດດ້ວຍຫວາຍປ້ອງກັນບ່ໃຫ້ກົ້ນຫລຸ ສຳລັບພາກສ່ວນປາກ(ຕະນຣໍ)ນັ້ນແມ່ນຈະໃຊ້ໄມ້ເຮັຍຂະໜາດປະມານ1-1,5ຊັ້ງຕິແມັດ ແນບໃສ່ປາກທັ້ງດ້ານນອກແລະດ້ານໃນ ຖັກດ້ວຍຫວາຍຕ່ຈາກປາກລົ່ງມາເພີ່ນເອີ້ນວ່າ(ປະກອນ) ແມ່ນຈະໃຊ້ຫວາຍທາງໜູປະມານ5ເສັ້ນ ໃສ່ທັ້ງດ້ານນອກ ແລະ ດ້ານໃນ ຈາກນັ້ນນຳຫວາຍທາງໜູມາສານປະກອນໃຫ້ຕິດກັບກະພາເຮັດແນວນີ້ ເພື່ອປ້ອງກັນບ່ໃຫ້ປາກກະພານັ້ນຂາດໄວ ຈາກນັ້ນຈຶ່ງນຳສາຍມາມັດຕິດໃສ່ກະພາຊຶ່ງຈະສານດ້ວຍຫວາຍ ຫລື ອາດຈະໃຊ້ເຊືອກປໍ່ກ່ຳຄົ່ງທົນເຊັ່ນດຽວກັນ.

ອຸປະກອນຫາປາ

№ 10 -11

- ຊື່ພາສາລາວ: ສ້ອນ
- ຊື່ພາສາທ້ອງຖິ່ນ: ຈະລ່ອກລູ
- ເຈົ້າຂອງເຄື່ອງ: ບຸນຫາ
- ບ່ອນເກັບມ້ຽນ: ໄວ້ເທິງເຮືອນ ເທິງຂີ້






- ຜູ້ນຳໃຊ້: ພໍ່,ລູກຊາຍ
- ການນຳໃຊ້: ໃຊ້ຕັ້ງເອົາປາຕາມຫ້ອຍນ້ຳ.

ส้อม (จะล่อก)


ຈะล่อกเป็นเถื่องมือหาปา ที่ใช้ในยามแล้ง หลื ยามน้ำน้อย มีลักสะนะรูบจวย ปากก้วางๆ ก้นตัน ส้อมน้อย(จะล่อกนาดิม) มีขะหนาดปะมาน 40-50 ซังติแม้ด, มีเส้นผ่าสูนกางๆอยู่ในละหว่างๆ 20-30ซังติแม้ด ถ้าว่าส้อมขะหนาดใหย่จะเอิ้นว่า(จะล่อกลู) ขะหนาดปะมาน80-100 ซังติแม้ด เส้นผ่าสูนกางๆปะมาน 30-40 ซังติแม้ด จะใส่อยู่ห้วย หลื แม่น้ำที่ไหลน้อย เฮาจะก้นบน้ำไว้ด้วยไม้ไผ่ อาดจะใช้หินก่ำได้ จิ่งแต่บ่อนบน้ำไหลให้เท่ากับปากของส้อม เมื่อปาลอยมาตามบน้ำไหลก่ำจะเข้าส้อม ซึ่งมันบ่สามาดออกได้ พวกเฮาจะมาย้ำมเบิ่งย่างๆต่ำมื้ละเที่อ.



ວິທີໃส่ส้อมใหย่ เร็ดไม้ก้นปาไว้ ให้เฮ็าส้อม.



ເวลาได้ปาก่ำบำส้อมขึ้นมาถอกเอาปา.



ใส่ไว้ในห้อยบ่ำใหย่.



ນ່ຳກ້ອນຫີນເຕັ່ງສ້ອນໄວ້ເພື່ອບໍ່ ໃຫ້ໄຫລໄປບ່ຳ.

ວິທີຜະລິດ:


ໃນການຜະລິດກໍ່ມີຂັ້ນຕອນບໍ່ຫຍຸ້ງຍາກ ມີພຽງແຕ່ໄມ້ຫີກ ຫລື ໄມ້ເຮັຍ ແລ້ວແຕ່ ຂະໜາດນ້ອຍໃຫ່ຍຂຶ້ນຢູ່ກັບຄວາມຕ້ອງການ ແລະການຊອກໄມ້ ພາຍຫລັງໄດ້ໄມ້ແມ່ນ ຈະນ່ຳມາຜ່າໃຫ້ເປັນດ້ວໜຶ່ງດ້ວຂະໜາດປະມານ0,5-1ຊັ້ງຕິແມັດ ໃນໜຶ່ງລ່ຳຈະແບ່ງ ໄດ້ປະມານ10-12ດ້ວ ຂຶ້ນກັບຄວາມໃຫ່ຍຂອງໄມ້ ຕ່ຳຈາກນັ້ນກ່ໍນ່ຳເສັ້ນຫວາຍ ຫລື ອາດ ຈະເປັນໄມ້ໄຜ່ກ່ໍໄດ້ ເສັ້ນຍາວນ່ຳມາສານລາຍຂັດດັດດ້ວໄມ້ໄຜ່ໃຫ້ມີໄລຍະຫ່າງອອກ ເລື້ອຍໆຈົນຮອບ ພໍຈະໄກ້ຮອດປາກແມ່ນຈະສານໃຫ້ຖີ່ຂຶ້ນແລະມັດດ້ວຍຫວາຍອີກຮອບ ເພື່ອເສີມຄວາມແຂງແຮງທົນທານບ່ໃຫ້ປາກຫັກໄວ.

№ 12 - ຊື່ພາສາລາວ: ເຄື່ອງສ້ອມປາ

- ຊື່ພາສາທ້ອງຖິ່ນ: ນູກ
- ເຈົ້າຂອງເຄື່ອງ: ບຸນທາ
- ບ່ອນເກັບມ້ຽນ: ໃນເຮືອນຄົວ








- ຜູ້ນຳໃຊ້: ແມ່ ລູກສາວ.
- ການນຳໃຊ້: ໃຊ້ສ້ອນເອົາປາຕາມ ເທີບຫີນ.

№ 13 - ຊື່ພາສາລາວ: ເຄື່ອງສ້ອນປາ

- ຊື່ພາສາທ້ອງຖິ່ນ: ນູກ
- ເຈົ້າຂອງເຄື່ອງ: ບຸນທາ
- ບ່ອນເກັບມ້ຽນ: ໃນເຮືອນຄົວ








- ຜູ້ນຳໃຊ້: ແມ່ ລູກສາວ.
- ການນຳໃຊ້: ໃຊ້ສ້ອນເອົາປາຕາມ ເທິບຫີນ.

ເຄື່ອງສ້ອນປາ (ນຸກ)

ນຸກເປັນເຄື່ອງມືຫາປາຊະນິດໜຶ່ງ ມີລັກສະນະມີປາກເປັນຮູບສາມຫລ່ຽມສວຍ ກົມກ້ວຂອງປາຍ ແລະ ມີກົ້ນມົນຄວາມຍາວປະມານ 50-65 ຊັ້ງຕິແມັດ ເສັ້ນຜ່າສູນກາງ ປະມານ 25-35 ຊັ້ງຕິແມັດ ສ່ວນທີ່ກ້ວສຸດນັບຈາກກົ້ນຂຶ້ນມາປະມານ 8 -10ຊັ້ງຕິແມັດ ເປັນເຄື່ອງມືຫາປາທີ່ຈະໃຊ້ສະເພາະຜູ້ຍິງ ວິທີສ້ອນປາເຂົາຈະຈັບປາກສ້ອນ ຊຸບໃສ່ໂງ່ນ ຫີນແລ້ວຍົກຫີນຢູ່ໃນນ້ຳໃຫ້ເໜັງຕິງ ເພື່ອໃຫ້ປາທີ່ຢູ່ໃນຫລືບຫີນ ແລ່ນອອກມາເຂົ້າໃນ ສ້ອນ ການຈັບປາແບບນີ້ສ່ວນໃຫ່ຍແລ້ວແມ່ນຈະໄດ້ແຕ່ປາຂະໜາດນ້ອຍ.



ວິທີຜະລິດ: ວັດຖຸທີ່ນຳມາໃຊ້ເຮັດນຸກ ແມ່ນໃຊ້ຫວາຍຫາງໝູ ຊຶ່ງເປັນຫວາຍທີ່ມີຄວາມແຂງແຮງທົນທານ ຂັ້ນຕອນທຳອິດແມ່ນແມ່ນເລີ້ມຕົ້ນຈາກສ່ວນກົ້ນ ຄວາມຍາວຂອງເສັ້ນຫວາຍທີ່ນຳມາສານປະມານ100 -120 ຊັງຕິແມັດ ຈຳນວນ4 - 6 ເສັ້ນ ຂຶ້ນກັບຄວາມນ້ອຍໃຫ່ຍທີ່ຕ້ອງການ ນຳມາສານຂັດກັນຢູ່ຈຸດເຄິ່ງກາງ ຈາກນັ້ນກໍ່ນຳຫວາຍຫາງໝູເຊັ່ນດຽວກັນມາສານຂັດໄຂວກັນໄປມາ ສານຂຶ້ນໄປຈົນເຖິງບ່ອນກົ້ວສຸດ ຈາກນັ້ນກໍ່ສານຕໍ່ໄປປະມານ 15-20 ຊັງຕິແມັດ ຈຶ່ງເສີມເສັ້ນຫວາຍເຂົ້າຕື່ມ ຈາກໜຶ່ງເສັ້ນເປັນໜຶ່ງຄູ່ແລ້ວສານຕໍ່ໄປ ແລະກໍ່ເຮັດເຊັ່ນດຽວກັນເພື່ອເພີ້ມຄວາມໃຫ່ຍຂອງປາກສ້ອນອອກ ໃນສ້ອນໜຶ່ງອັນຈະເພີ້ມເສັ້ນຫວາຍຢູ່ປະມານ3-4ເທື່ອ ຕາມຂະໜາດຂອງສ້ອນສານດ້ວຍລາຍສອງຈົນສຸດເສັ້ນຫາງຍາວ ສ່ວນຫາງປາກແມ່ນຈະສານລາຍຂັດ ຈາກນັ້ນກໍ່ຈະນຳຫວາຍມາມັດໃຫ້ເປັນຮູບສາມຫລ່ຽມ ນຳຫວາຍຫາງໝູມາຖັກ ໃຫ້ຍຶດຕິດກັບຂອບປາກເພື່ອປ້ອງກັນການຫລຸ້ຍຫ້ຽນ ແລະ ເພີ້ມຄວາມສະດວກໃນການໃຊ້ງານ.




ໃຊ້ສະເພາະແຕ່ສ້ອນປາຕາມນ້ຳຫ້ວຍ.




ວິທີ່ການສ້ອນປາຕາມຫ້ວຍ.

№ 14 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ບົ້ງໂບະ
- ເຈົ້າຂອງເຄື່ອງ: ບຸນທາ
- ບ່ອນເກັບມ້ຽນ: ໃນເຮືອນ ຂັດໄວ້ຝາເຮືອນ







- ຜູ້ນຳໃຊ້: ແມ່, ລູກສາວ.
- ການນຳໃຊ້: ໃຊ້ເວລາຫາປາ ໃສ່ປາ ໃສ່ຜັກ.

ຂ້ອງ (ບິ່ງໂບະ)

ຂ້ອງຂອງເຜົ່າອາລັກ ມີຮູບຮ່າງທີ່ແຕກຕ່າງຈາກຂ້ອງ ຂອງເຜົ່າລາວລຸ່ມຄື ຈະມີ ກົ້ນມົນ ຕົວຂ້ອງຈະມົນກ້ວາງອອກເລື້ອຍໆ ເສັ້ນຜ່າສູນກາງປະມານ15-20 ຊັ່ງຕິແມັດ ສ່ວນປາກຈະຈ້ອມເຂົ້າເປັນຊົ່ງກົມເສັ້ນຜ່າສູນກາງປະມານ 8-10 ຊັ່ງຕິແມັດ ຄວາມຍາວ ທັ່ງໝົດປະມານ 30-35 ຊັ່ງຕິແມັດ ໃຊ້ໃສ່ ກຸ້ງ ປາ ຫ້ອຍ ກົບ ທີ່ອອກຈັບຕາມຫ້ວຍຮ່ອງ ສ່ວນໃຫ່ຍຈະມີແຕ່ຜູ້ຍິງໃຊ້ ຖ້າເປັນຊາຍໃຊ້ແມ່ນຈະໃສ່ພ້າ ມີດ ມັດໃສ່ແອວໃນເວລາ ເຂົ້າປ່າໄປຫາກິນ ຂ້ອງດັ່ງກ່າວນີ້ຈະບໍ່ມີຝາອັດປາກ ມີພຽງແຕ່ຫູຂ້ອງເພື່ອໄວ້ສອດເຊືອກ ມັດແອວ.




ວິທີຜະລິດ: ພວກເຂົາຈະນຳໃຊ້ຫວາຍແດງ ໂດຍເລີ້ມຈາກກົ້ນກ່ອນ ຈະເອົາຫລັກຂອງຂ້ອງມາສານຂັດໃສ່ກັນ ຈາກນັ້ນກໍ່ເອົາເສັ້ນຫາງນອນມາສານດ້ວຍລາຍສອງຫລືລາຍສາມ ດ້ວຍຫວາຍແດງເຊັ່ນດຽວກັນ ທີ່ມີລັກສະນະກົມນ້ອຍໃຫ້ຖີ່ ໃນໄລຍະສານນັ້ນຈະປັບໃຫ້ກວ້າງອອກ ເປັນທໍ່ຂຶ້ນໄປ ຈົນຮອດປະມານ20-25ຊັ້ງຕິແມັດ ແລ້ວຄ່ອຍໆ ລອບເຂົ້າເພື່ອເຮັດໃຫ້ປາກນ້ອຍລົງ ສຳລັບປາກຈະເປັນບ່ອນແຄບທີ່ສຸດທາງປາກແມ່ນຈະໃຊ້ຫວາຍຫາງ ໜູຖັກໃຫ້ຖີ່ໆອີກເທື່ອໜຶ່ງ ເພີ້ມຄວາມແຂງແຮງ ແລະ ເສີມຄວາມສວຍງາມນຳອີກ ສ່ວນຕົວຂ້ອງຈະເອົາຫວາຍຫາງໜູມາຖັກໃສ່ ສາມຂ້າງສອງຂ້າງທີ່ເຄິ່ງຄືກັນແມ່ນຈະຖັກໃຫ້ເປັນຮູເພື່ອສອດເຊືອກມັດແອວ ແລະຂອບທາງຂວາງບ່ອນທີ່ກ້ວາງສຸດກໍ່ຈະຖັກຫວາຍຫາງເສີມເຂົ້າໄປເພີ້ມຄວາມແຂງແຮງຕື່ມອີກ.



ສະພາບລວມຂອງບ້ານກະໂດນໃໝ່ ເມືອງລະມາມ ແຂວງເຊກອງ

ບ້ານກະໂດນເກົ່າ ຕັ້ງຢູ່ທິດເໜືອຂອງບ້ານປະອໍໃນປະຈຸບັນປະມານ300 ແມັດ ເຖິງປີ 1987 ໄດ້ຍ້າຍລົງມາຕັ້ງຢູ່ລຸ່ມບ້ານປະອໍ. ໃນປີ 1989 ໄດ້ຍ້າຍລົງມາຢູ່ປາກຫ້ວຍ ນອນ. ມາເຖິງເດືອນ4ປີ2001ທາງເຈົ້າເມືອງ-ເມືອງລະມາມໄດ້ຕົກລົງໃຫ້ຊາວບ້ານກະ ໂດນລົງມາຢູ່ບ້ານຈັດສັນເຂດລຳພັນ.ໂດຍປະຕິບັດຕາມແຜນການລົບລ້າງຄວາມທຸກຈົນ ຂອງເມືອງແລ້ວເອີ້ນຊື່ບ້ານໃໝ່ວ່າ: ບ້ານກະໂດນໃໝ່.

ແຜນທີ່ ເມືອງລະມາມ
LAMAM DISTRICT MAP



ບ້ານກະໂດນໃໝ່ປະກອບມີ 16 ຫລັງຄາເຮືອນ 35 ຄອບຄົວ ມີປະຊາກອນ ທັງໝົດ 176 ຄົນ ຍິງ 96 ຄົນ ມີຊາຍແດນຕິດກັບບັນດາເຂດບ້ານຕ່າງໆ ດັ່ງນີ້:

ທິດເໜືອ: ຕິດກັບບ້ານ ລາວີຝັ່ງແດງ.
ທິດໃຕ້: ຕິດກັບບ້ານ ດອນຈັນ.
ທິດຕາເວັນອອກ: ຕິດກັບບ້ານ ສາຍນ້ຳເຊກອງ.
ທິດຕາເວັນຕົກ: ຕິດກັບບ້ານ ລາວີນ້ອຍ.

ຊາວບ້ານກະໂດນໃໝ່ໃນປະຈຸບັນໄດ້ຫັນປ່ຽນອາຊີບຈາກການເຮັດໄຮ່ມາສູ່ອາຊີບທີ່ໝັ້ນຄົງຄືການເຮັດນາໂດຍແມ່ນລັດຖະບານເປັນຜູ້ບຸກເບີກເນື້ອທີ່ດິນນາໃຫ້ແຕ່ລະຄອບຄົວ ສົ່ງເສີມການລ້ຽງສັດ ໂດຍແມ່ນການສະໜອງດ້ານທຶນຮອນໃຫ້ໃນເບື້ອງຕົ້ນ.

ຊາວບ້ານກະໂດນໃໝ່ ໃນປະຈຸບັນຊີວິດການເປັນຢູ່ຂອງເຂົາເຈົ້າໄດ້ຮັບການປັບປຸງ ແລະດີຂຶ້ນຢ່າງເຫັນໄດ້ຊັດ ທີ່ດິນການຜະລິດໄດ້ຮັບການຈັດສັນຢ່າງເປັນລະບຽບ ເດັກນ້ອຍໃນໄວຮຽນໄດ້ຮັບການສຶກສາ ການບໍລິການດ້ານຕ່າງໆ ຂອງລັດຖະບານ ແລະ ອົງການພາຍນອກໄດ້ເຂົ້າໄປເຖິງຊາວບ້ານພໍໃຈກັບສະພາບຊີວິດການເປັນຢູ່ໃນປະຈຸບັນ ຊົນເຜົ່າອາລັກ ທີ່ບ້ານກະໂດນໃໝ່ ກໍ່ແມ່ນບ້ານໜຶ່ງທີ່ມີມູນເຊື້ອທາງດ້ານ ການຈັກສານ ແລະ ການຜະລິດເຄື່ອງມືເຄື່ອງໃຊ້ ທີ່ສືບທອດກັນມາແຕ່ລຸ້ນປູ່ ຍ່າຕາຍາຍ ຊາວບ້ານກະໂດນໃໝ່ບໍ່ວ່ານ້ອຍ ຫລື ໃຫ່ຍ ຍິງ ຊາຍ ລ້ວນແຕ່ມີຝີມືທາງດ້ານການຈັກສານ.



ສະພາບເຮືອນທີ່ບ້ານກະໂດນໃໝ່.



ສະພາບໝູ່ບ້ານ.

ການດຳລົງຊີວິດໃນຮອບໜຶ່ງປີ ຂອງປະຊາຊົນບ້ານ ກະໂດນໃໝ່.

ການດຳລົງຊີວິດຂອງປະຊາຊົນບ້ານກະໂດນໃໝ່ ເປັນບ້ານຂອງຊົນເຜົ່າອາລັກ ແຕ່ເດີມກໍ່ແມ່ນການຖາງປ່າເຮັດໄຮ່ ຊຶ່ງເປັນອາຊີບຕົ້ນຕໍ່ຂອງພວກເຂົາ ແຕ່ໃນປະຈຸບັນ ຍ້ອນການສົ່ງເສີມຂອງທາງພາກລັດຖະບານ ເພື່ອຫລຸດຜ່ອນຄວາມຫຍຸ້ງຍາກລຳບາກ ໃຫ້ແກ່ປະຊາຊົນຈຶ່ງໄດ້ຍົກຍ້າຍບ້ານກະໂດນໃໝ່ ລົງມາຈາກພູສູງລົງມາຢູ່ທີ່ງພຽງໃນປີ 2001 ເຮັດໃຫ້ການດຳລົງຊີວິດຂອງພວກເຂົາປ່ຽນໄປຫລາຍຈາກເດີມທີ່ເຄີຍເຮັດພຽງແຕ່ໄຮ່ເລີ້ມມີການຮຽນຮູ້ການເຮັດນາ ດັ່ງນັ້ນອຸປະກອນເຄື່ອງມືໃນການດຳລົງຊີວິດກໍ່ປ່ຽນໄປ ເຊັ່ນວ່າ ເຄີຍຫາປາຢູ່ຫ້ວຍຫ້ວຍໂຫລ ກໍ່ປ່ຽນມາຫາປາຢູ່ທີ່ງນາ ຫລື ບໍ່ນ້ຳ ໃນການປ່ຽນແປງ ດັ່ງກ່າວມີບາງຄອບຄົວກໍ່ບໍ່ສາມາດຫັນປ່ຽນໄດ້ທັງໝົດ ບາງຄອບຄົວກໍ່ໄດ້ເຮັດໄຮ່ ແລະ ເຮັດທັງນາໄປພ້ອມໆກັນ ຊຶ່ງຖ້າເວົ້າການເຮັດໄຮ່ແລ້ວແມ່ນຈະເລີ້ມຕັ້ງແຕ່ເດືອນ 2ເຖິງ ເດືອນ 11 ຂອງທຸກໆປີລາຍລະອຽດດັ່ງຕໍ່ໄປນີ້:

ການຖາງປ່າ: ເລີ້ມຕົ້ນຕັ້ງແຕ່ເດືອນ 2ເຖິງ ເດືອນ 3 ກ່ອນ ຈະຖາງໄຮ່ຈະຕ້ອງຂໍນຳເຈົ້າທີ່ດິນເຊັ່ນ: ເຈົ້າປ່າເຈົ້າເຂົາ ຖາງປະມານໜຶ່ງແລ້ວກໍ່ກັບເມື່ອນອນສຽງ ຄວາມຝັນດັ່ງເດີມ. ໃນປະຈຸບັນນີ້ບາງຄອບຄົວບໍ່ໄດ້ເຮັດແລ້ວ ເນື່ອງຈາກວ່າໃນຂອບເຂດການເຮັດໄຮ່ນັ້ນລັດຖະບານເປັນຜູ້ກຳນົດໃຫ້ ຖ້າຈະເຮັດກໍ່ເຮັດໃນຈຸດເດີມ ທີ່ໄດ້ກຳນົດໃຫ້ແຕ່ລະຄອບຄົວບໍ່ໃຫ້ຖາງປ່າເຮັດໄຮ່ໄປເຕີມອີກ. ພາຍຫລັງການຖາງປ່າແລ້ວຈະໄປໄວ້ປະມານ 15 ເຖິງ 20 ມື້ ເພື່ອກະກຽມການຈູດໄຮ່.

ການຈູດໄຮ່: ພາຍຫລັງການຖາງປ່າແລ້ວ ໃນໄລຍະເດືອນ4ຕໍ່ໃສ່ເດືອນເຂົ້າຈະບໍ່ມີການເຮັດພິທີກ່ອນ ພຽງແຕ່ກະກຽມການຈູດ ແລະ ປ້ອງກັນບໍ່ໃຫ້ໄໝ້ລາມໄປເຂດອື່ນນອກຈາກໄຮ່ຂອງຕົນ ໄຮ່ທີ່ບໍ່ມີຕົ້ນໄມ້ໃຫ່ຍຫລາຍກໍ່ໃຊ້ເວລາບໍ່ດົນ ປະມານ 4 ເຖິງ 5 ມື້ ບາງໄຮ່ກໍ່ອາດຈະກາຍ ຫລັງຈາກນັ້ນກໍ່ກະກຽມການຮີ້ໄຮ່ໝາຍເຖິງການເກັບມ້ຽນໄມ້ທີ່ບໍ່ໄໝ້ໄຟເພື່ອສະດວກໃນເວລາສັກເຂົ້າໄຮ່.

ການສັກເຂົ້າໄຮ່: ຕົກມາຮອດເດືອນ 5 ຕໍ່ໃສ່ເດືອນ 6 ພາຍຫລັງຈູດໄຮ່ແລ້ວປະໄວ້ປະມານ15ເຖິງ20ວັນ ຕໍ່ຈາກນັ້ນກໍ່ກະກຽມແນວພັນທີ່ດີ ເພື່ອໃຊ້ໃນເວລາສັກເຂົ້າ ວິທີ ການຍັງເຮັດດັ່ງເດີມ ໂດຍເລີ້ມຈາກຜູ້ຊາຍນຳໄມ້ແຫລມ ມາສັກດິນໃຫ້ເປັນຮູ ຈາກນັ້ນຜູ້ຍິງກໍ່ຈະຢອດເມັດພ້ອມທັງຖົມດິນ ຊາຍສັກໜຶ່ງຄົນ ຜູ້ຍິງຈະຢອດເມັດສອງຄົນ. ໄປພ້ອມກັບການສັກເຂົ້າໄຮ່ນັ້ນແມ່ນເຂົາຈະປູກພືດສຳຮອງອີກເຊັ່ນ: ສາລີ, ມັນຕົ້ນ, ເຜືອກ, ມັນ

ແລະ ພືດສວນຄົວ ຜັກຫອມ, ໝາກເຜັດ, ຫົວສິງໄຄ, ຂີງ, ຂ່າແລະອື່ນໆ..

ການເສຍຫຍ້າ: ຫລັງຈາກສັກເຂົ້າໄຮ່ແລ້ວປະມານ10ເຖິງ15ວັນ ຝົນກໍ່ເລີ້ມຕົກ ເຂົ້າໄດ້ແຕກໜໍ່ ແລະ ມັນກໍ່ຈະມີຫຍ້າຂຶ້ນມາແຊມພ້ອມກັບຕົ້ນເຂົ້າ ຈາກນັ້ນກໍ່ຕ້ອງໄດ້ ເລີ້ມເສຍຫຍ້າ ໃນການເສຍຫຍ້ານັ້ນເພື່ອແມ່ນເຮັດໃຫ້ຕົ້ນເຂົ້າໃຫ່ຍໄວ. ໃນປີໜຶ່ງໂດຍ ປົກກະຕິແລ້ວເຂົ້າຈະໄດ້ເສຍຫຍ້າ2ເຖິງ3ຄັ້ງເທົ່ານັ້ນແຕ່ໃນເຂດທີ່ຍ້າຍມານີ້ຈະຕ້ອງເສຍ ຫຍ້າຢູ່ປະມານ 5ເຖິງ6 ຄັ້ງຕໍ່ປີ ຊຶ່ງເປັນການຫຍຸ້ງຍາກລຳບາກໃຫ້ແກ່ຄອບຄົວທີ່ເຮັດໄຮ່.

ຮູດເຂົ້າໄຮ່: ໃນໄລຍະເດືອນ10ເຖິງເດືອນ11 ກະກຽມການຮູດເຂົ້າ ຊຶ່ງຈະຮູດ ເຂົ້າດໍ່ກ່ອນ ຈາກນັ້ນກໍ່ຕໍ່ໃສ່ການເກັບກ່ຽວເຂົ້າປີ ວິທີເກັບກ່ຽວກໍ່ແມ່ນໃຊ້ມືຮູດເຂົ້າໃສ່ກະ ເຈາະທີ່ມັດຢູ່ແອວ ຈົນກວ່າຈະເຕັມແລ້ວນຳໄປຖອກໃສ່ກະພາ ພາຍຫລັງທີ່ຮູດເຂົ້າແລ້ວ ກໍ່ນຳເຂົ້າມາຢຽບໃສ່ ກະດົ້ງ ແລະ ຟັດເອົາຫ່າອອກເຫລືອໄວ້ແຕ່ເມັດເຂົ້າ.

ການດຳລົງຊີວິດແບບໃໝ່ ຂອງຊາວບ້ານກະໂດນໃໝ່ ຊົນເຜົ່າອາລັກພວກເຂົາ ໄດ້ຮຽນຮູ້ການເຮັດນາ ຢູ່ເຂດທົ່ງພຽງນຳຄົນລາວລຸ່ມ ວິທີການເຮັດນາບໍ່ມີຫລາຍຂັ້ນຕອນ ບໍ່ລຳບາກເທົ່າກັບການເຮັດໄຮ່ ຊຶ່ງເລີ້ມຕົ້ນຈາກ.

ໄຖນາ: ປະມານເດືອນ 7 ເຂົາຈະເລີ້ມກະກຽມການເຮັດນາ ກ່ອນຈະໄຖນາຈະ ຕ້ອງໄດ້ກະກຽມການແປງຄັນຄູ ເພື່ອກັ້ນນ້ຳໃສ່ນາໂດຍໃຊ້ຈົກ ເປັນອຸປະກອນຊ່ວຍຂຸດ ໃຫ້ທົ່ວນາ ຈາກນັ້ນຈຶ່ງປ່ອຍນ້ຳເຂົ້ານາ ແລະ ເລີ້ມໄຖນາທົ່ວ ໂດຍປົກກະຕິແລ້ວແມ່ນຈະ ໃຊ້ຄວາຍໄຖ ແຕ່ໃນໜູບ້ານນີ້ແມ່ນລັດຖະບານສົ່ງເສີມໃຫ້ລົງມາເຮັດນາເພີ່ນຈຶ່ງໄດ້ຊ່ວຍ ເຄື່ອງໄຖນາໃຫ້ເພື່ອຮັບໃຊ້ພາຍໃນບ້ານນັ້ນ ຍິ່ງເພີ້ມຄວາມສະດວກສະບາຍໃຫ້ແກ່ຊາວ ນາຫລາຍຂຶ້ນ.

ໄລຍະຕໍ່ໄປແມ່ນຈະເລີ້ມໄຖ ສະເພາະເຂດທີ່ຈະຫວ່ານກ້າເສຍກ່ອນແລ້ວ ຈຶ່ງ ມາຫວ່ານກ້າໃສ່ ກ່ອນຈະເປັນກ້າໄດ້ນັ້ນ ຕ້ອງຜ່ານການຄັດເລືອກເອົາແນວພັນທີ່ດີ ເມັດ ໃຫ່ຍແລະເຂົ້າເປັນຮວງໃຫ່ຍ ເວລາກິນຈະບໍ່ແຂງອາດຈະມີກຽມໄວ້ໃນປີກ່ອນໆ ຫລືອາດ ຈະຊື້ຕາມທ້ອງຕະຫລາດກໍ່ມີ ຈາກນັ້ນກໍ່ນຳແນວພັນໄປແຊ່ນ້ຳໄວ້ປະມານ2ມື້ ເອົາຂຶ້ນມາ ຕາກແດດໃຫ້ແຫ້ງ ແລະ ເອົາໄປຫວ່ານໃສ່ນາທີ່ ໄດ້ກະກຽມໄວ້ກ່ອນໜ້ານັ້ນແລ້ວ.

ດຳນາ: ເລີ້ມຕົ້ນໃນເດືອນ8 ພາຍຫລັງ ຫວ່ານກ້າໄດ້ປະມານ10ເຖິງ15ວັນ ກ້າ ກໍ່ຈະແຕກໜໍ່ສູງຂຶ້ນຕ່ຳສຸດປະມານໜຶ່ງຄືບ ຫລືຫລາຍກວ່ານັ້ນພໍໃຫ້ກ້າແຂງແຮງແລ້ວຈຶ່ງ ຫລົກໄວ້ ແລະມາມັດລວມກັນໃຫ້ເປັນມັດໃຫ່ຍ ຈາກນັ້ນກໍ່ແຈກຍາຍໄປທົ່ວນາເພື່ອລໍຖ້າ ການດຳ ໃນເວລາດຳນາແມ່ນທັງຍິງ ແລະ ຊາຍຈະດຳພ້ອມກັນ ນຳຕົ້ນກ້າມາປະມານ2

ຫາ 3 ຕົ້ນ ແລ້ວນຳໄປປັກລົງທີ່ດິນທີ່ໄຖໄວ້ກ່ອນໜ້າແລ້ວ ເວລາດຳຈະຕ້ອງໃຫ້ຊິ່ກັນຕົ້ນ ກ້ານ້ຳຕ້ອງຕັ້ງຊິ່ເພື່ອເວລາກ່ຽວຈຶ່ງບໍ່ຫຍຸ້ງຍາກ ແລະຈະບໍ່ໃຫ້ຕົ້ນກ້າລົ້ມ ເພາະອາດເຮັດໃຫ້ຕົ້ນກ້າຕາຍແຊ່ນ້ຳໄດ້.


ກ່ຽວເຂົ້າ: ໃນໄລຍະເດືອນ11 ເຖິງເດືອນ12 ເວລາກ່ຽວເຂົ້ານັ້ນເຂົາຈະນຳໃຊ້ກ່ຽວເປັນອຸປະກອນຮັບໃຊ້ຈະບໍ່ໃຊ້ມືຮູດ ໃຊ້ມືຊ້າຍຈັບກຳເຂົ້າ ແລະໃຊ້ມືຂວາຈັບກ່ຽວເອົາເຂົ້າ ຈາກນັ້ນກໍ່ນຳເຂົ້າໄປຟາດ ຫລື ຢຽບໃສ່ກະດົ້ງເຊັ່ນດຽວກັບການຮູດເຂົ້າ. ບາງບ້ານກໍ່ຟາດເຂົ້າແບບລາວລຸ່ມ ການເຮັດນາຈະບໍ່ໄດ້ເສຍຫຍ້າຕະຫລອດເວລາເຊັ່ນດຽວກັບການເຮັດໄຮ່ເມື່ອເຂົ້າເລີ້ມອອກຮວງກໍ່ຈະກະກຽມ ເຮັດເຄື່ອງເພື່ອປ້ອງກັນນົກທີ່ມາກິນເຂົ້າຈະນຳເອົາເຟືອງມາມັດໃສ່ກັບໄມ້ໃຫ້ເປັນຮູບຮ່າງຄ້າຍຄືກັບຄົນຈາກນັ້ນກໍ່ນຳເສື້ອ,ໝວກມາໃສ່ແລ້ວນຳໄປຕັ້ງໄວ້ກາງໄຮ່ນາ ເມື່ອນົກບິນກາຍມາເຫັນກໍ່ບໍ່ກ້າລົງມາກິນເຂົ້າມັນຄິດວ່າຄົນຍັງຢູ່ໃນໄຮ່ນານັ້ນ.

ບ້ານກະໂດນໃໝ່ ຖືວ່າເປັນບ້ານໜຶ່ງທີ່ຍັງຄົງຮັກສາມູນເຊື້ອເດີມ ແຕ່ກໍ່ໄດ້ຮັບວັດທະນະທຳຂອງຊົນເຜົ່າອື່ນເຂົ້າມາ ເຮັດໃຫ້ວິທີການດຳລົງຊີວິດປ່ຽນໄປໄດ້ຮຽນຮູ້ສິ່ງໃໝ່ໆເຂົ້າມາຫລາຍ. ພື້ນຖານແລ້ວເຜົ່າອາລັກກໍ່ເປັນເຜົ່າໜຶ່ງ ທີ່ມີມູນເຊື້ອໃນການເຮັດເຄື່ອງຈັກສານຮັບໃຊ້ການດຳລົງຊີວິດ ພົວພັນກັນມາແຕ່ດົນນານ ແຕ່ມາໃນປະຈຸບັນກໍ່ໄດ້ຮຽນຮູ້ການຜະລິດເຄື່ອງມືຮັບໃຊ້ການດຳລົງຊີວິດເຊັ່ນ: ການຜະລິດກ່ຽວຈາກທີ່ບໍ່ເຄີຍໄດ້ໃຊ້ກໍ່ຕ້ອງມານຳໃຊ້ແລະຮຽນຮູ້ວິທີ່ການຜະລິດ ນອກນັ້ນເຂົາຍັງຮຽນເຮັດຂ້ອງໃສ່ປາແບບລາວລຸ່ມ ກ່ອງເຂົ້າ ຈົນສາມາດນຳສິ່ງຂາຍສູ່ຕະຫລາດພາຍໃນແຂວງໄດ້ ຖືວ່າເປັນການປ່ຽນແປງຊີວິດໃຫ້ດີຂຶ້ນ.ຈາກຜະລິດຮັບໃຊ້ພຽງແຕ່ການເຮັດໄຮ່ ແລະໃຊ້ປະຈຳວັນເທົ່ານັ້ນ ມັນຍັງເປັນສິນຄ້າສົ່ງອອກຂອງໝູ່ບ້ານນຳອີກ.

ອຸປະກອນການເຮັດໄຮ່

№ 15 - ຊື່ພາສາລາວ: ຜ້າໃຫ່ຍ


- ຊື່ພາສາທ້ອງຖິ່ນ: ບຣາຕະມິ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ໄວ້ຂ້າງຝາເຮືອນ



- ຜູ້ນຳໃຊ້: ພໍ່,ລູກ
- ການນຳໃຊ້: ໃຊ້ຖາງປ່າ ຮື້ໄຮ່ ຈັກຕອກ.

№ 16 - ຊື່ພາສາລາວ: ພ້າໃຫ່ຍ

- ຊື່ພາສາທ້ອງຖິ່ນ: ບຣາຕະມີ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ໄວ້ຂ້າງຝາເຮືອນ




24 / VII


ຫ້າມຈຳໜ່າຍ

- ຜູ້ນຳໃຊ້: ພໍ່,ລູກ
- ການນຳໃຊ້: ໃຊ້ຖາງປ່າ, ຮື້ໄຮ່, ຈັກຕອກ.

ພ້າໃຫ່ຍ (ບຣາຕະມີ)


ເປັນເຄື່ອງມືທີ່ໃຊ້ ເປັນຫລັກໃນການເຮັດໄຮ່ ມີລັກສະນະໃຫ່ຍ ສັນພ້າ ໜາ ແລະ ໜັກ ມີສ່ວນທາງປາຍງໍເຂົ້າເລັກນ້ອຍ ຄວາມຍາວຂອງດວງພ້າ ສະເລ່ຍປະມານ 25 -35 ຊັງຕິແມັດ. ສ່ວນທີ່ຄົມສຸດຈະຢູ່ກາງດວງພ້າ ປາຍຕັດ ດ້ານພ້າເຮັດດ້ວຍໄມ້ ໄຜ່ ລັກສະນະງໍເພື່ອປ້ອງກັນມືມື່ນໃສ່ດ້ານພ້າ ຂະໜາດດ້ານພ້າປະມານ 28 - 42 ຊັງຕິ ແມັດ ມີນ້ຳໜັກປະມານ0,15 - 0,3 ກິໂລ.





ການວັດແທກຂະໜາດຕ່ໍຈາ

ການຜະລິດ: ຜະລິດຂຶ້ນເອງ ໂດຍການນຳເອົາສ່ວນປະກອບຂອງລົດນຳມາຕີ ຊຶ່ງຈະຕັດຊີ້ນສ່ວນໃຫ້ໄດ້ຂະໜາດປະມານ19 -28 ຊັ້ງຕິແມັດ ໜາປະມານ3 -5 ຊັ້ງຕິແມັດ ເຜົ້າໄຟໃຫ້ແດງພ້ອມຕີໃຫ້ໄດ້ຕາມຮູບແບບທີ່ຕ້ອງການ ຈາກນັ້ນກໍ່ຈະເຮັດດ້າມດ້ວຍໄມ້ບົງ ຊຶ່ງຈະເລືອກເອົາສະເພາະສ່ວນທີ່ເປັນຮາກ ເຮັດດ້ວຍໄມ້ບົງທີ່ມີລັກສະນະງໍ ນຳມາເຈາະແລ້ວປະກອບດວງພ້າໃສ່ ຕອກຍຶດດ້ວຍໄມ້ເພື່ອໃຫ້ຈັບກັນແໜ້ນຂຶ້ນ.



ການຖາງຫຍ້າຢູ່ໃນໄຮ່.




ການນຳໃຊ້:

ສາມາດນຳໃຊ້ໄດ້ທຸກເພດໄວ ໃຊ້ເຂົ້າໃນການຖາງປ່າເຮັດໄຮ່, ຕັດຕົ້ນໄມ້ນ້ອຍ,ຕັດຫງ່າໄມ້, ຖາງຫຍ້າເປັນເຄື່ອງມືທີ່ຈະຕ້ອງໃຊ້ແຮງ.ດັ່ງນັ້ນຈຶ່ງເໝາະສົມສຳລັບຜູ້ຊາຍເທົ່ານັ້ນ. ສ່ວນຜູ້ຍິງຈະນຳໃຊ້ຂະໜາດນ້ອຍກວ່າ ຊຶ່ງຜະລິດຂຶ້ນສະເພາະເຊັ່ນ №16 ທີ່ເຫັນດັ່ງຮູບ

ການເສຍຫຍ້າເຂົ້າຈະຈັບຢູ່ສ່ວນປາຍຂອງພ້າ ໃຊ້ແຕ່ການຖາງຫຍ້າ ແລະ ຕັດຕົ້ນໄມ້ນ້ອຍ.

№ 17 - ຊື່ພາສາລາວ: ຂວານ


- ຊື່ພາສາທ້ອງຖິ່ນ: ຈູງ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ໃນເຮືອນ ຂັດໄວ້ຝາເຮືອນ



- ຜູ້ນຳໃຊ້: ພໍ່,ລູກຊາຍ.
- ການນຳໃຊ້: ໃຊ້ຟັນໄມ້ໃຫຍ່ ເວລາຮື້ໄຮ່,ຖາງປ່າ.

ຂວານ (ຈູງ)


ໃຊ້ໃນການຕັດຕົ້ນໄມ້ທີ່ມີຂະໜາດໃຫ່ຍ ກະຕໍໄມ້ ຜ້າໄມ້ເຮັດຟືນ ລັກສະນະລວມດ້ວມຂ້ອນຂ້າງຍາວ ດ້ວມຂວານຈະງໍເຂົ້າປະມານ30 ອົງສາ ເພື່ອໄວ້ຈັບກັບດວງຂວານ ຂະໜາດສະເພາະຄວາມຍາວປະມານ15 -18 ຊັ່ງຕີແມັດ ຄວາມກ້ວາງຂອງຄົມປະມານ8 ຊັ່ງຕີແມັດ ອີກສົ້ນໜຶ່ງຈະເປັນແຜ່ນເຫັລກ ຕີໃຫ້ງໍເຂົ້າຫາກັນໃຫ້ເປັນຮູເພື່ອໄວ້ສອດໃສ່ດ້ວມ ຄວາມຍາວລວມທັງໝົດປະມານ60- 70 ຊັ່ງຕີແມັດ ນ້ຳໜັກທັງໝົດ1.05 ກິໂລ




ການຜະລິດ:

ສຳລັບການຜະລິດຂວານ ເວ້ົາສະເພາະດວງຂວານພວກແລ້ວ ເຂົາຈະບໍ່ຊຳນານໃນການຜະລິດ.ຊຶ່ງຈະຊ້ືມາຈາກຄົນເຜ່ົາຕຮ່ງຊຶ່ງພວກເຂົາເຈ້ົາ ຜະລິດໄວ້ຈຳໜ່າຍ ເມ່ືອໄດ້ດວງຂ້ອນແລ້ວ ເຂົາຈ່ຶງເອົາມາຜະລິດດ້ວມໃສ່ເອງ ດ້ວມນ້ັນເຮັດຂ້ຶນຈາກໄມ້ເນ້ືອແຂງຊຶ່ງຈະຫາເອົາສະເພາະສ່ວນທ່ີງໍ ຫລ ື ສ່ວນທ່ີເປັນຫ່ຳງານຳມາເຫລ່ົາເອົາແຕ່ເປ ືອກນອກອອກໃຫ້ກ ັ ງ ດ້ວມຂວານແບ່ງອອກເປັນສອງສ່ວນ, ສ່ວນທ ີ່ໜ ຶ ່ ງຈະເປັນສ່ວນທ ີ່ຈ ັ ບກ ັ ບດວງຂວານແລະ ສ່ວນທ ີ່ສ ອ ງແ ມ ່ ນສ ່ ວນທ ີ ່ ໄ ວ ້ ສ ຳ ລ ັ ບຈ ັ ບໃ ນ ເ ວ ລ າ ໃ ຊ ້ ງ ານ

ຈະໃຊ້ໄມ້ປຶກຊຶ່ງມັນມີລັກສະນະພິເສດເປັນຮູເຂົ້າຈະນຳເອົາສ່ວນທີ່ໜຶ່ງມາສູບໃສ່ປະກອບເປັນຂວານ ຕອກເຂົ້າຮູໃຫ້ແໜ້ນ ຮັດສ່ວນທີ່ຕໍ່ກັນນັ້ນດ້ວຍຫວາຍ ຫລື ດ້ວຍອະລູມິນຽມກໍ່ໄດ້ເພີ້ມຄວາມທົນທານ. ຕໍ່ຈາກນັ້ນຈຶ່ງນຳດວງຂວານ ມາສູບໃສ່ດ້ານຕອກໃຫ້ແໜ້ນແລ້ວກໍ່ຝົນປາຍໃຫ້ຄົມກໍ່ສາມາດນຳໃຊ້ໄດ້.



ໃຊ້ໃນເວລາຖ່າງປ່າ ຮື້ໄຮ່




ໃຊ້ຕັດຕົ້ນໄມ້ໃຫ່ຍ.


ການນຳໃຊ້:

ໃຊ້ໄວ້ສຳລັບຕັດຕົ້ນໄມ້ໃຫ່ຍ, ຜ່າຟືນ,ຕັດຫງ່ຳໄມ້ດ້ວຍການໃຊ້ສອງມືຈັບດ້ານໃຫ້ຂວານຢູ່ໃນລັກສະນະແນວນອນ ຈາກນັ້ນ ກໍ່ໃຊ້ແຮງແກ່ວງຂວານໄປສັບໃສ່ຕົ້ນໄມ້ທີ່ຕ້ອງການຕັດນັ້ນດວງຂວານ ຈະຢູ່ໃນລັກສະນະຢູ່ທາງດ້ານຂ້າງຂອງ ລຳຕົວຄົນສາມາດນຳໃຊ້ ໄດ້ໝົດທຸກຄົນແຕ່ຜູ້ນຳໃຊ້ຫລັກ ຈະເປັນຜູ້ຊາຍເທົ່ານັ້ນບໍ່ວ່າຈະເປັນພໍ່ຫລືລູກຊາຍກໍ່ໄດ້.

№ 18 - ຊື່ພາສາລາວ: ກະຈົກ

- ຊື່ພາສາທ້ອງຖິ່ນ: ກະໂຈະໂຣ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ໃນເຮືອນ







- ຜູ້ນຳໃຊ້: ພໍ່, ລູກ.
- ການນຳໃຊ້: ເສຍຫຍ້າ, ຂຸດກະຕໍ ຂຸດຂຸມຢອດເມັດສາລີ.

№ 19 - ຊື່ພາສາລາວ: ກະຈົກ

- ຊື່ພາສາທ້ອງຖິ່ນ: ກະໂຈະໂຣ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ໃນເຮືອນ




- ຜູ້ນຳໃຊ້: ພໍ່, ລູກ.
- ການນຳໃຊ້: ເສຍຫຍ້າ, ຂຸດກະຕໍ
ຂຸດຂຸມຢອດເມັດສາລີ.



ø 46 mm
ø 40 mm
ø 42 mm
A bamboo slip
is inserted

№ 20 - ຊື່ພາສາລາວ: ກະຈົກ

- ຊື່ພາສາທ້ອງຖິ່ນ: ກະໂຈະໂຣ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ໃນເຮືອນ




- ຜູ້ນຳໃຊ້: ພໍ່, ລູກ.
- ການນຳໃຊ້: ເສຍຫຍ້າ, ຂຸດກະຕໍ,
ຂຸດຂຸມຢອດເມັດສາລີ.



24/VII
ຫ້າມຈຳໜ່າຍ


№ 19 - ຊື່ພາສາລາວ: ກະຈົກ

- ຊື່ພາສາທ້ອງຖິ່ນ: ກະໂຈະໂຣ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ໃນເຮືອນ




- ຜູ້ນຳໃຊ້: ພໍ່, ລູກ.
- ການນຳໃຊ້: ເສຍຫຍ້າ, ຂຸດກະຕໍ
  ຂຸດຂຸມຢອດເມັດສາລີ.





ø 46 mm
ø 40 mm
ø 42 mm
A bamboo slip
is inserted

№ 20 - ຊື່ພາສາລາວ: ກະຈົກ

- ຊື່ພາສາທ້ອງຖິ່ນ: ກະໂຈະໂຣ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ໃນເຮືອນ





- ຜູ້ນຳໃຊ້: ພໍ່, ລູກ.
- ການນຳໃຊ້: ເສຍຫຍ້າ, ຂຸດກະຕໍ,
ຂຸດຂຸມຢອດເມັດສາລີ.


ø 41. mm
ø 38 mm
ø 39,5 mm

ກະຈົກ (ກະໂຈະໂຣ)

ເຄື່ອງມືສະນິດນີ້ ເດີມເປັນຂອງຊົນເຜົ່າຕຽງເຂດເມືອງດາກຈຶງຖືວ່າເປັນເຄື່ອງມືທີ່ສາມາດນຳໃຊ້ໄດ້ສະດວກເໝາະສົມ ໃນການໃຊ້ໃນເວລາເຮັດໄຮ່ ຈຶ່ງນຳໃຊ້ກັນແຜ່ຫລາຍໃນທົ່ວເຂດພາກໃຕ້ ລັກສະນະຄ້າຍຄືກັບ ກະຈົກຂອງຄົນລາວລຸ່ມແຕ່ວ່າມັນຈະມີຂະໜາດນ້ອຍກວ່າ ດ້ານຈັບທີ່ສັ້ນກວ່າ ສະເພາະດວງກະຈົກ ສ່ວນຄົມຂອງມັນກ້ວາງປະມານ 5 -7 ຊັ່ງຕິແມັດ ແລະ ຈະນ້ອຍເຂົ້າເລື້ອຍໆຈົນສຸດດວງ ຄວາມຍາວ14-16 ຊັ່ງຕິແມັດ ສ່ວນດ້ານຈະມີຄວາມຍາວຢູ່ປະມານ40 - 50 ຊັ່ງຕິແມັດ ອາດຈະຍາວກວ່ານັ້ນຂຶ້ນກັບຄວາມຕ້ອງການຂອງຜູ້ນຳໃຊ້ ນ້ຳໜັກສະເລ່ຍປະມານ 0,5 ກິໂລ.





ການຜະລິດ: ກະຈົກເປັນເຄື່ອງມືທີ່ຜະລິດຂຶ້ນເອງ ດ້ວຍການນຳເອົາເຫລັກເສດທີ່ຫາໄດ້ ຕັດໃຫ້ໄດ້ຂະໜາດຍາວປະມານ 150 ຊັງຕິແມັດ ກວ້າງ 65 ຊັງຕິແມັດ ນຳໄປຂາງໄຟໃຫ້ສາມາດຕີໄດ້ ແລ້ວຕີປັບໃຫ້ຈົມໄດ້ຕາມຮູບຮ່າງ ແລະ ຂະໜາດທີ່ຕ້ອງການ ສະເພາະສ່ວນປາຍຈະຕີໃຫ້ບາງ ສ່ວນກົກນັ້ນແຫລມ ແລະ ໜາ ເພື່ອໄວ້ສູບໃສ່ໄມ້ບົງ. ຈາກນັ້ນເຂົາກໍ່ຈະເຮັດດ້າມ ຊຶ່ງຈະເລືອກເອົາສະເພາະສ່ວນທີ່ເປັນຮາກຂອງໄມ້ບົງ ຫລື ໄມ້ຊຸນຳມາເຈາະໃຫ້ເປັນຮູໃຫ້ໄດ້ ຂະໜາດຕາມສ່ວນກົກຂອງມັນນັ້ນນຳກະຈົກມາສຽບໃສ່ແລ້ວຕອກໃຫ້ແໜ້ນ ຖ້າຫາກວ່າເຈາະຮູໃຫ່ຍເກີນຂະໜາດ ເຂົາຈະໃຊ້ໄມ້ຂັດເຂົ້າຕື່ມເພື່ອໃຫ້ແໜ້ນຂຶ້ນອີກ ເພື່ອປ້ອງກັນບໍ່ໃຫ້ດວງກະຈົກຫລຸດອອກຈາກດ້ານ.




ຕົວຢ່າງວິທີ່ການນຳໃຊ້.

ການນຳໃຊ້: ເນື່ອງຈາກເຂດທີ່ໃຊ້ນັ້ນເປັນເຂດພູສູງຊັນ ໃນເວລານຳໃຊ້ຈະຕ້ອງໄດ້ກົ້ມໂຕລົງຈະໃຊ້ສອງມືຈັບດ້ານກະຈົກ ແລະ ສັບລົງດິນເພື່ອຂຸດເອົາກະຕໍ່ໄມ້ຕົ້ນໄມ້ນ້ອຍ ຂຸດດິນ ເສຍຫຍ້າແລະອື່ນໆ.ອີກສ່ວນໃຫ່ຍແມ່ນນຳໃຊ້ເຂົ້າໃນເວລາຮື້ໄຮ່ການເຮັດສວນໃນເວລາເກັບກ່ຽວ ເຜືອກ ມັນດ້າງ ມັນຕົ້ນ ຜູ້ນຳໃຊ້ຈະເປັນຜູ້ຍິງ ຫລື ຜູ້ຊາຍກໍ່ໄດ້ ເໝາະສຳລັບເຂດສູງຊັນ.

№ 21 - ຊື່ພາສາລາວ: ແວກເສຍຫຍ້າ


- ຊື່ພາສາທ້ອງຖິ່ນ: ກະເນຍເລ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ໃນເຮືອນ




- ຜູ້ນຳໃຊ້: ຍິງ ແລະ ຊາຍ
- ການນຳໃຊ້: ເສຍຫຍ້ານ້ອຍ

ແວກເສຍຫຍ້າ (ກະເນຍເລ)

ເຄື່ອງມືສະນິດນີ້ເດີມເປັນຂອງຊົນເຜົ່າອາລັກ ໃຊ້ສະເພາະແຕ່ເສຍຫຍ້າເທົ່ານັ້ນ ລັກສະນະລວມປະກອບມີດ້າມຈັບຊື່ ຍາວປະມານ 40-50 ຊັງຕິແມັດ ສ່ວນຕົວແວກນັ້ນ ໃນເວລາໃຊ້ທາງຄົມຈະງໍເຂົ້າຫາຜູ້ໃຊ້ ຄົມນັ້ນມີຄວາມກ້ວາງປະມານ10 -18 ຊັງຕິແມັດ ເພື່ອຮັບກັບໜ້າດິນໃນເວລາເສຍຫຍ້າ ສ່ວນງໍຫັກຂຶ້ນ ປະມານ 90ອົງສາ ທີ່ເປັນສ່ວນຕໍ່ມາຈາກດ້າມຍາວປະມານ 8 - 9 ຊັງຕິແມັດ.






ການຜະລິດ:

ການຜະລິດມີຂັ້ນຕອນທີ່ບໍ່ສັບສົ້ນ ດັ່ງນັ້ນພວກເຂົາຈຶ່ງຜະລິດໃຊ້ເອົາເອງອີ່ງໃສ່ ການເຮັດໄຮ່ ຈະນຳເຫລັກເສດທີ່ຫາມາໄດ້ ເຜົາໄຟ ແລະ ຕີ ເຮັດໃຫ້ໄດ້ຕາມຂະໜາດທີ່ ຕ້ອງການສຳລັບດ້າມຈັບແມ່ນເຮັດຈາກໄມ້ບົງຕັດເອົາສ່ວນທີ່ໄກ້ກັບຮາກເພາະເປັນສ່ວນ ທີ່ແຂງແຮງທີ່ສຸດ ຕັດໃຫ້ຂະໜໜາດ 8 - 9ຊັງຕິແມັດ ແລ້ວນຳແວງທີ່ເຮັດແລ້ວນັ້ນມາໃສ່ ຕອກອັດໃຫ້ແຈບ ຖ້າຫາກຫລົມເຂົາກໍ່ຈະໃຊ້ໄມ້ຍັດເຂົ້າໃຫ້ແຈບຕື່ມຈຶ່ງສາມາດໃຊ້ໄດ້.

№ 22 - ຊື່ພາສາລາວ: ໄມ້ສັກເຂົ້າ

- ຊື່ພາສາທ້ອງຖິ່ນ: ຍີ່ມູ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ຂ້າງເຮືອນ ກ້ອງຕາລ່າງ



- ຜູ້ນຳໃຊ້: ພໍ່,ແມ່,ລູກ
- ການນຳໃຊ້: ໃຊ້ສັກເຂົ້າໄຮ່.

ໄມ້ສັກເຂົ້າໄຮ່ (ຍີ່ມູ)

ໄມ້ສັກເຂົ້າໄຮ່ ມັນມີລັກສະນະເປັນທອນຍາວກົມ ປາຍແຫລມ ຂະໜາດຄວາມຍາວປະມານ190 ຊັ້ງຕິແມັດ ເສັ້ນຜ່າສູນກາງທີ່ເໝາະສົມໃນການໃຊ້ງານປະມານ10-12ຊັ້ງຕິແມັດ ປາຍໄມ້ແຫລມຍັງມີບາງເຂດທີ່ເຮັດປອກເຫລັກແຫລມສູບໃສ່ ປາຍໄມ້ສັກເຂົ້ານັ້ນຄວາມຍາວໃນເວລາຈັບປະມານ 80 -90 ຊັ້ງຕິແມັດ ມີນ້ຳໜັກ1,15 ກິໂລ.


ການຜະລິດ:

ມີຂັ້ນຕອນທີ່ງ່າຍພຽງແຕ່ຊອກຫາໄມ້ເນື້ອແຂງ(ລອງຈາຍ) ໃຫ້ມີລັກສະນະຊື່ ບໍ່ຄົດງໍ ຈາກນັ້ນກໍ່ນຳມາເຊາະເອົາເປືອກນອກຂອງໄມ້ອອກໃຫ້ທົ່ວສ່ວນປາຍແມ່ນຈະເຫລົາໃຫ້ແຫລມດ້ວຍພ້າ ກໍ່ສາມາດນຳໃຊ້ໄດ້ ແຕ່ຈະບໍ່ທົນທານໃຊ້ໄດ້ພຽງແຕ່ປີ ຫາສອງປີເທົ່ານັ້ນ. ນອກນັ້ນເຂົາຍັງຕີເຫລັກແຫລມໄວ້ເພື່ອສູບໃສ່ປາຍໄມ້ທີ່ເຫລົ່າແລ້ວນັ້ນ ເພື່ອປ້ອງ ກັນສວ່ນປາຍຂອງໄມ້ເພີ້ມຄວາມທົນທານຕື່ມນຳໃຊ້ໄດ້ຫລາຍກວ່າສອງປີ.

ການນຳໃຊ້: ໄມ້ສັກເຂົ້າໄຮ່ ນຳໃຊ້ໃນເວລາສັກເຂົ້າໄຮ່ເທົ່ານັ້ນ ຜູ້ຊາຍຈະເປັນຜູ້ສັກ ແລະ ຜູ້ຍິງຈະເປັນຜູ້ຍອດເມັດເຂົ້ານຳຫລັງພ້ອມກັບຖົມຂຸມ.



ซาวจ๊าซาย





ຕົວຢ່າງການສັກເຂົ້າໄຮ່.

№ 23 - ຊື່ພາສາລາວ: ກະເຈາະ

- ຊື່ພາສາທ້ອງຖິ່ນ: ຢອງ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ເທິງເຕົາໄຟ









- ຜູ້ນຳໃຊ້: ແມ່
- ການນຳໃຊ້: ສັກເຂົ້າ,ຮູດເຂົ້າ,
  ໃສ່ ເຂົ້າໄປຕຳ,ຫາໜໍ່ໄມ້.

ກະເຈາະ (ຢ່ອງ)

ກະເຈາະເປັນເຄື່ອງໃຊ້ສຳລັບໃນເວລາຮູດເຂົ້າ ລັກສະນະມັນຈະຄ້າຍຄືກັບກະຕ່າ ມີຂະໜາດນ້ອຍຮູບຊົງກົມ ສະເພາະຕີນປະກອບກັນເປັນຈະຮູບສີ່ຫລ່ຽມ ຄວາມສູງຂອງຕີນປະມານ 2,5 - 3 ຊັ້ງຕິແມັດ ຄວາມຍາວຂຶ້ນຢູ່ກັບກົ້ນກະເຈາະປະມານ 10 - 15 ຊັ້ງຕິແມັດ ຂອງແຕ່ລະດ້ານຄວາມສູງຂອງກະເຈາະປະມານ 24- 30 ຊັ້ງຕິແມັດ ປາກກະເຈາະມີລັດສະໝີປະມານ 20 - 30 ຊັ້ງຕິແມັດ ນ້ຳໜັກປະມານ 0,3 ກິໂລ.







ການຜະລິດ:

ວັດສະດຸທີ່ໃຊ້ຜະລິດຫລັກແມ່ນໄມ້ເຮັຍ ຕັດເອົາສະເພາະຂະໜາດ ຜ່າໃຫ້ເປັນດີ້ວນຳມາເຫລົາ ໃຫ້ເປັນເສັ້ນສະເໝີກັນ ເຂົາຈະເລີ້ມຕົ້ນໃນການສານຂຶ້ນ ຈາກສ່ວນກົ້ນຂອງກະເຈາະສານດ້ວຍລາຍສອງ ໃຫ້ໄດ້ຂະໜາດປະມານ20-25 ຊັ້ງຕິແມັດ ຈາກນັ້ນກໍ່ພັບຂຶ້ນທັ້ງສີ່ດ້ານ ແລ້ວສານຕໍ່ໃຫ້ເປັນຮູບຫລ່ຽມກົມ ຂຶ້ນຕາມຂະໜາດເສັ້ນຫລັກນັ້ນ ພໍຮອດສ່ວນປາຍກໍ່ສານພັບສິ້ນ ສ່ວນປາກນັ້ນຈະໃຊ້ໄມ້ເຮັຍ ຫລື ຫວາຍນຳມາເຫລົາໃຫ້ມີຄວາມກ້ວາງ1,5-2ຊັ້ງຕິແມັດ ມາແນບໃສ່ປາກທັ້ງເບື້ອງໃນແລະເບື້ອງນອກ ຈາກນັ້ນກໍ່ເອົາຫວາຍເຄືອ ຫລື ຫວາຍຫາງໜູ ມາສານມັດເພື່ອຍຶດປາກກະເຈາະນັ້ນໃຫ້ແໜ້ນ.ສຳລັບດ້ານຂ້າງຂອງກະເຈາະ ຈະສອດໄມ້ທັ້ງສີ່ດ້ານ ເຫລົາໃຫ້ແຫລມເຮັດດ້ວຍໄມ້ເຮັຍສອດໃສ່ດ້ານຂ້າງໃຫ້ເປັນຕີນສ່ວນທາງກົ້ນແມ່ນຈະໃຊ້ໄມ້ຂັດເພີ້ມເພື່ອປ້ອງກັນບ່ໃຫ້ກົ້ນຫລຸໃນເວລາໃຊ້ງານ.



ການນຳໃຊ້:


ກະເຈາະເປັນອຸປະກອນທີ່ໃຊ້ເຂົ້າໃນເວລາສັກເຂົ້າໄຮ່ຮູດເຂົ້າໄຮ່ ແລະ ໃນເວລາໄປເກັບຜັກຫາໜໍ່ໄມ້. ນອກຈາກນັ້ນຍັງໃຊ້ເຂົ້າໃນເວລານຳເຂົ້າໄປຕຳເພື່ອກິນແຕ່ລະມື້ວິທີການນຳໃຊ້ແມ່ນ ຈະນຳກະເຈາະມັດໃສ່ແອວໂດຍຈະໃຫ້ກະເຈາະຢູ່ທາງດ້ານໜ້າຫລືດ້ານຂ້າງເມື່ອເວລາຮູດເຂົ້າ ຫລື ສັກເຂົ້າໄຮ່ຈະແມ່ນແຕ່ຜູ້ຍິງນຳໃຊ້ເທົ່ານັ້ນ.


ບ່ອນເກັບມ່ຽນຈະຫ້ອຍໄວ້ຂ້າງຝາ.

№ 24 - ຊື່ພາສາລາວ: ກະຈົກ

- ຊື່ພາສາທ້ອງຖິ່ນ: ກະຈົກ
- ເຈົ້າຂອງເຄື່ອງ: ເດັກ
- ບ່ອນເກັບມ້ຽນ: ຫຼັງບ້ານ








- ຜູ້ນຳໃຊ້: ພໍ່, ລູກຊາຍ.
- ກາມນຳໃຊ້: ຂຸດດິນ.


ກະຈົກ (ກະຈົກ)

ເປັນເຄື່ອງທີ່ໃຊ້ປະກອບເຂົ້າໃນການເຮັດນາຂຸດດິນເຮັດສວນເໝາະສົມນຳໃຊ້ໃນເຂດທົ່ງພຽງ ມີດ້ານຈັບຍ້ອນຍ້າງຍາວປະມານ110 -130 ຊັ່ງຕິແມັດ ມີນ້ຳໜັກ 2,35 ກິໂລ. ເວົ້າສະເພາະດວງກະຈົກແລ້ວສາມາດຫາຊື້ໄດ້ຕາມທ້ອງຕະຫລາດປາຍຈະຄົມ ຂະໜາດຄວາມກວ້າງປະມານ12-15ຊັ່ງຕິແມັດ ສ່ວນຍາວປະມານ27ຊັ່ງຕິແມັດອີກສິ້ນໜຶ່ງນັ້ນຈະລຽວເຂົ້າເລັກນ້ອຍ ມີເຫລັກສູງຂຶ້ນຢູ່ລະຫວ່າງກາງປະມານ5 ຊັ່ງຕິແມັດເປັນຮູຢູ່ລະຫວ່າງກາງເພື່ອໄວ້ໃສ່ໄມ້.



ການຜະລິດ: ແຕ່ເດີມກະຈົກແມ່ນນຳໃຊ້ສະເພາຄົນລາວລຸ່ມທີ່ມີອາຊີບເຮັດໄຮ່ເຮັດນາ ຢູ່ຕາມທົ່ງພຽງ ວິທີການຜະລິດແຕ່ດັ່ງເດີມ ກໍ່ແມ່ນຕີເອົາດ້ວຍມື ນຳໃຊ້ເຫລັກມາເຜົາໄຟຈົນໃຫ້ຮ້ອນເນື້ອເຫລັກ ອອກເປັນສີແດງ ຈຶ່ງສາມາດຕີໄດ້ ແຕ່ຈະບໍ່ໄດ້ນຳໃຊ້ແຜ່ຫລາຍ ເນື່ອງຈາກພວກເຂົາຈະບໍ່ຊຳນານໃນການຕີ ຈຶ່ງນຳໃຊ້ກັນສະເພາະບາງເຂດເທົ່ານັ້ນ. ໃນປະຈຸບັນຄົນລາວລຸ່ມກໍ່ສາມາດຜະລິດໃຊ້ເອົາເອງໄດ້ມີໂຮງງານນ້ອຍຫລໍ່ເອົາຈະບໍ່ໄດ້ຕີ ໃຫ້ຫຍຸ້ງຍາກ ສາມາດຜະລິດອອກຈຳໜ່າຍໄດ້ໄວໃນທ້ອປະເທດ ເຂົາຈະຜະລິດຂາຍສະເພາະແຕ່ດວງກະຈົກ ແລະ ບາງຮ້ານກໍ່ຈະເຮັດດ້າມໃສ່ສຳເລັດ ພ້ອມທີ່ຈະໃຊ້ງານໄດ້ແຕ່ຈະມີລາຄາຕ່າງກັນ ສະເພາະກະຈົກແລ້ວແມ່ນຈະລາຄາຖືກກ່ວາມີດ້າມ ຫລັງຈາກນັ້ນເຂົາຈຶ່ງນຳມາປະກອບດ້າມໃສ່ເອງ ໄມ້ທີ່ຈະມາປະກອບໃສ່ນັ້ນຈະຕ້ອງເປັນໄມ້ເນື້ອແຂງເຂົາເອີ້ນວ່າໄມ້(ໄມ້ເກີຣງ)ເພາະແຂງແຮງທົນທານນຳໃຊ້ໄດ້ນານ ຕັດໃຫ້ໄດ້ຕາມຂະໜາດທີ່ຕ້ອງການ ໃຫ້ໄດ້ທ່ອນໄມ້ຍາວມີລັດສະໝີປະມານ 4- 5 ຊັ່ງຕິແມັດ ພໍໃຫ້ສູບເຂົ້າຮູຂອງກະຈົກ ນຳທ່ອນໄມ້ມາເຫລົາເອົາກາບຂອງໄມ້ອອອກໃຫ້ກ້ຽງ ແລ້ວຕອກໃສ່ດວງກະຈົກໃຫ້ແໜ້ນ ຖ້າຫາກບໍ່ແໜ້ນກໍ່ຈະໃຊ້ໄມ້ນ້ອຍຕອກອັດເຂົ້າຕື່ມກ່ອນນຳໃຊ້ໄດ້.

ການນຳໃຊ້: ຜູ້ນຳໃຊ້ຫລັກຈະແມ່ນຜູ້ຊາຍໃຊ້ໄວ້ຂຸດດິນ,ເຮັດນາ, ເຮັດສວນ ຂຸດຂຸມ, ຂຸດກະຕໍ່ໄມ້, ຂຸດຂຸມຕັ້ນເສົາເຮືອນ, ຂຸດຂຸມປູກຕົ້ນໄມ້ຕ່າງໆ ໃນເວລາໃຊ້ງານເຂົາຈະໃຊ້ສອງມືຈັບດ້າມກະຈົກແລ້ວສັບລົງດິນຂຸດດິນຂຶ້ນມາກະຈົກນີ້ນິຍົມກັນໃຊ້ທົ່ວໄປສະເພາະຊາວໄຮ່ນາ ຜູ້ນຳໃຊ້ສ່ວນໃຫ່ຍຈະເປັນຜູ້ຊາຍ ຜູ້ຍິງກໍ່ໃຊ້ໄດ້ ແຕ່ສ່ວນນ້ອຍ ພາຍຫລັງໃຊ້ງານ ເຂົາຈະເກັບມ້ຽນໄວ້ຫລັງເຮືອນຄ໊ວ ສາງເທິງຫລັງຄາເຮືອນ ຫລື ວ່າຖຸງໄຮ່.




ບ່ອນເກັບມ້ຽນໄວ້ເທິງຫລັງຄາ.

№ 25 - ຊື່ພາສາລາວ: ກະພາ

- ຊື່ພາສາທ້ອງຖິ່ນ: ຫຣະ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ເທິງຂີ່







- ຜູ້ນຳໃຊ້: ພໍ່,ແມ່,ລູກ
- ການນຳໃຊ້: ໃສ່ເຂົ້າໄຮ່ ໃສ່ສາລີ ເກັບມ້ຽນເຄື່ອງ.

ກະພາ (ຫຣະ)

ນຳໃຊ້ພາຍຫລັງທີ່ຮູດເຂົ້າມາແລ້ວຈະເກັບມ້ຽນໃນກະພາ ເພື່ອລໍຖ້າການເກັບໄວ້ໃນເລົ້າເຂົ້າໃນຂັ້ນຕໍ່ໄປ ລັກສະນະທົ່ວໄປຂອງກະພາຈະມີຮູບຊົງຫລ່ຽມ ປາກມົນ ມີສ່ວນໂຄງເລັກນ້ອຍ ຢູ່ລະຫວ່າງກາງຂອງກະພາ ຈະມີໄມ້ແນບໄວ້ທັງສີ່ດ້ານຂ້າງກະພາຕໍ່ລົງເປັນຕີນກະພາ ຄວາມສູງຂອງຕີນນັ້ນ ປະມານ3 - 4 ຊັ້ງຕິແມັດ ຄວາມກ້ວາງ ປະມານ24-30 ຊັ້ງຕິແມັດ ຄວາມສູງທັ້ງໝົດ 45-55ຊັ້ງຕິແມັດປາກຂອງກະພາ ກວ້າງກວ່າຕີນຂອງມັນເອງມີລັດສະໝີປະມານ 35 - 45ຊັ້ງຕິແມັດ ຢູ່ສອງຂ້າງຂອງກະພາ ມີເຊືອກມັດ ໄວ້ສຳລັບເປ້ເຂົ້າຂຶ້ນໃສ່ຫລັງ ເພີ້ມຄວາມສະດວກໃນເວລາໃຊ້ງານ.





ການຜະລິດ: ກະພາເຮັດດ້ວຍໄມ້ເຮັຍດວ້ຍການນຳໄມ້ມາຜ່າ ແລະຈັກໃຫ້ເປັນເສັ້ນເຫລົ່າໃຫ້ລຽບ ຈາກນັ້ນກ່ຳນຳມາປະກອບກັນ ດ້ວຍການສານລາຍສອງ ຊຶ່ງເຂົາຈະເລີ່ມຕົ້ນຈາກສ່ວນກົ້ນຂອງມັນກ່ອນ ໃຫ້ໄດ້ຕາມຂະໜາດທີ່ຕ້ອງການຈາກນັ້ນກ່ຳທົບຂຶ້ນມາເພື່ອເປັນເສັ້ນຫລັກແລ້ວກ່ຳສານຕ່ຳຂຶ້ນໄປເລື້ອຍໆ ສານດ້ວຍລາຍສີ່(ສະແວກ) ໃນລະຫວ່າງຊ່ວງກາງຂອງກະພາ ຜູ້ສານນັ້ນຈະຕ້ອງເຫລົ່າເສັ້ນຫລັກ ຂອງໜ່ວຍກະພາອອກເລັກນ້ອຍ ເວລາສານກ່ຳຈະຮັດເສັ້ນຫລັກເຂົ້າ ເພື່ອໃຫ້ມັນຈອ້ມເຂົ້າ ສານໄປໄລຍະໜຶ່ງກ່ຳຈະສານໃຫ້ກວ້າງອອກເລື້ອຍໆ ຈົນໃຫ້ໄດ້ຂະໜາດທີ່ຕ້ອງການ ສ່ວນຕີນຂອງມັນນັ້ນຈະເຮັດດ້ວຍໄມ້ຊຸໜລືໄມ້ປຶກ ຕັດໃຫ້ໄດ້ຂະໜາດເທົ່າເຄິ່ງໜຶ່ງຂອງກະພາ ເປັນຮູບທ່ຳກົມ, ສ່ວນຕີນມີຂະໜາດໃຫ່ຍສຸດຂອງທ່ອນມີລັດສະໝີ 3- 4 ຊັ້ງຕີແມັດ ແລະ ເຫລົ່າໃຫ້ລຽວເຂົ້າເພື່ອໃຊ້ສອດໃສ່ແຈກະພາໄດ້ງ່າຍຂຶ້ນ ພ້ອມປະກອບໄມ້ເພື່ອຍຶດຕີນທັ້ງສີ່ທີ່ເຮັດດ້ວຍໄມ້ຊະນິດດຽວກັນ ສານຍຶດຕິດກັນດ້ວຍຫວາຍຫາງໜູ(ຕະນ້ອມ) ຄຽມດ້ວຍຫວາຍໃຫ້ໄມ້ຍຶດຕິດກັບກະພາ, ສ່ວນກົ້ນຂອງກະພານັ້ນຈະນຳໄມ້ມາຂັດກັນ ເຮັດດ້ວຍໄມ້ປຶກມັດຍຶດກັນຢູ່ກ້ອງກົ້ນກະພາດ້ວຍຫວາຍຫາງໜູ ສ່ວນຫາງປາກກະພານັ້ນຈະນຳໄມ້ເຮັຍມາເຫລົ່າໃຫ້ໄດ້ຄວາມກວ້າງ 2-3ຊັ້ງຕີແມັດ ຍາວຕາມຂະໜາດຂອງປາກກະພາແນບໃສ່ທັ້ງດ້ານທັ້ງດ້ານນອກ ແລະ ດ້ານໃນ ສານຍຶດຕິດກັນດ້ວຍລາຍມັດຫລັງຈາກນັ້ນກ່ຳນຳໄມ້ປະກອບ, ກະນົມ,ສານຕິດກັນດ້ວຍຫວາຍຫາງໜູອີກສາມຮອບເພີ້ມຄວາມແຂງແຮງ ແລະ ຄວາມທົນທານຕື້ມອີກ ສ່ວນເຊືອກທີ່ມັດຢູ່ກະພານັ້ນຈະຕ້ອງສານຕ່ອງໄວ້ເພື່ອມັດສາຍເປ້ກະພາທັ້ງສອງຂ້າງຈຶ່ງຈະສາມາດໃຊ້ງານໄດ້ຕາມຕ້ອງການ.



ເກັບມ້ຽນເຈົ້ໃນຍື
ກ້ອາຫລ້ຄາເຮືອນ

№ 26 - ຊື່ພາສາລາວ: ກ່ຽວ
- ຊື່ພາສາທ້ອງຖິ່ນ: ກ່ຽວ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ຟາເຮືອນ





- ຜູ້ນຳໃຊ້: ພໍ່ (ຜູ້ຊາຍ).
- ການນຳໃຊ້: ກ່ຽວເຂົ້າ.


24/VII
ຫ້າມຈຳໜ່າຍ

ກ່ຽວ (ກ່ຽວ)

ເປັນເຄື່ອງທີ່ໃຊ້ກ່ຽວເຂົ້າໃນນາ ມີດ້າມຈັບຊື່ຍາວປະມານ10 - 5 ຊັ້ງຕິແມັດ ສຳລັບກ່ຽວຈະເປັນຮູບໂຄ້ງມົນ ທາງດ້ານຄົມຢູ່ດ້ານໃນ ມີປາຍແຫລມ ຄວາມກວ້າງ ຂອງກ່ຽວປະມານ 6 ຊັ້ງຕິແມັດ ຄວາມຍາວ 8 ຊັ້ງຕິແມັດ ທັ້ງໝົດຍາວມີ 21 ຊັ້ງຕິແມັດ



ການຜະລິດ: ເຫລັກທີ່ນຳໃຊ້ ຈະນຳໃຊ້ເຫລັກເສັ້ນທີ່ໃຊ້ກໍ່ສ້າງທົ່ວໄປ ຕັດໃຫ້ໄດ້ຂະໜາດ ນຳມາຂາງໄຟ ຕີດ້ວຍແຮງງານຂອງຄົນ ປັບໃຫ້ໄດ້ຕາມຮູບແບບທີ່ຕ້ອງ ການນອກຈາກຈະຕີເອົາເອງແລ້ວ. ຍັງສາມາດຫາຊື້ໄດ້ຕາມທ້ອງຕະຫລາດສາມາດ ໃຊ້ໄດ້ ຫລື ອາດຈະຊື້ມາປະກອບກໍ່ໄດ້ ພຽງແຕ່ນຳໄມ້ບົ່ງມາຕັດໃຫ້ໄດ້ຂະໜາດ ແລ້ວກໍ່ເອົາກ່ຽວທີ່ຊື້ມາປະກອບໃສ່ຮັດໃຫ້ແໜ້ນດ້ວຍໂລມິນຽມ ສ່ວນຄົມກ່ຽວຝົນໃຫ້ຄົມໆຈຶ່ງສາ ມາດໃຊ້ໄດ້.




ການນຳໃຊ້:


ກ່ຽວເປັນເຄື່ອງມືທີ່ໃຊ້ກ່ຽວເຂົ້າສະ ເພາະ ບໍ່ສາມາດນຳໃຊ້ກ່ຽວຢ່າງ ອື່ນໄດ້ ໃນ ເວລາກ່ຽວນັ້ນເຂົາຈະໃຊ້ມືເບື້ອງຂວາຈັບກ່ຽວ ມືເບື້ອງຊ້າຍຈັບກົກຕົ້ນເຂົ້າ ແລະ ດຶງໃຫ້ຕົ້ນ ເຂົ້າຂາດອອກ, ກ່ຽວເອົາຕົ້ນເຂົ້າ ແລ້ວດຶງໃຫ້ ອອກໄປທາງດ້ານຂ້າງສາມາດໃຊ້ ໄດ້ທຸກຄົນ ທັ້ງຍິງ ແລະ ຊາຍ.

ຕົວຢ່າງວິທີການກ່ຽວເຂົ້າ

№ 27 - ຊື່ພາສາລາວ: ສຽມ

- ຊື່ພາສາທ້ອງຖິ່ນ: ຈະກາດ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ຫຼັງເຮືອນ






- ຜູ້ນຳໃຊ້: ຍິງ, ຊາຍ.
- ການນຳໃຊ້: ເວລາຫາກິນ, ຫາໜໍ່ໄມ້, ເວລາປູກສາລີ.

ສຽມ (ສຽມ)

ເປັນເຄື່ອງມືທີ່ໃຊ້ໄວ້ຂຸດສວນ, ປູກຕົ້ນໄມ້, ເປັນເຄື່ອງໃຊ້ຂອງຄົນລາວລຸ່ມ ລັກສະນະຂອງສຽມຄ້າຍຄືກັບຊວ້ນ ແຕ່ມີຂະໜາດນ້ອຍ ປາຍມົນ ບໍ່ຄົມຫລາຍ ອີກສົ້ນໜຶ່ງຈະເປັນຮູເພື່ອໄວ້ໃສ່ໄມ້ເປັນດ້າມສຽມ ຂະໜາດຄວາມຍາວປະມານ 22 ຊັງຕິແມັດ ຄວາມກວ້າງປະມານ4ຊັງຕິແມັດ ຄວາມໜາຂອງສ່ວນທີ່ໄວ້ໃສ່ໄມ້ປະມານ3 ຊັງຕິແມັດ ດ້າມເຮັດດ້ວຍໄມ້ເນື້ອແຂງ(ລອງກະເລິງ) ຄວາມຍາວທັງໝົດ100 ຊັງຕິແມັດນ້ຳໜັກທັງໝົດ 0,85 ກິໂລ.



ການນຳໃຊ້:


ໃຊ້ໄວ້ຂຸດດິນ ຂຸດຫາໜໍ່ໄມ້ ປູກສາລີ ປູກມັນຕ່າງໆ ໃຊ້ສອງມືຈັບສຽມ ແລ້ວໃຊ້ແຮງເອົາປາຍສຽມຂຸດລົງດິນອອກເພື່ອເມັດພືດຜັກຕ່າງໆເຂົ້າໃສ່ ໃຊ້ໄດ້ທັງຍິງແລະຊາຍ.




ໃຊ້ສຽມຂຸດເພື່ອປູກຕົ້ນໄມ້ແຄມຮົ້ວ.

№ 28 - ຊື່ພາສາລາວ: ກະດິ້ງ

- ຊື່ພາສາທ້ອງຖິ່ນ: ດິ່ວ
- ເຈົ້າຂອງເຄື່ອງ: ແມ່ຈະເລຍ
- ບ່ອນເກັບມ້ຽນ: ເທິງຂໍ ເທິງເຕົາໄຟ








- ຜູ້ນຳໃຊ້: ເມຍ, ລູກໄພ້.
- ການນຳໃຊ້: ຟັດເຂົ້າ, ຕາກເຂົ້າ, ຕາກຊີ້ນ, ຕາກໝາກເຜັດ.


№ 29 - ຊື່ພາສາລາວ: ກະດົ້ງໃຫ່ຍ

- ຊື່ພາສາທ້ອງຖິ່ນ: ໂດ້ງ
- ເຈົ້າຂອງເຄື່ອງ: ແມ່ຈະເລຍ
- ບ່ອນເກັບມ້ຽນ: ເທິງຂີ່, ເທິງເຕົາໄຟ






1,5 kg



- ຜູ້ນຳໃຊ້: ເມຍ, ລູກໄພ້.
- ການນຳໃຊ້: ຢຽບເຂົ້າ, ຟັດເຂົ້າ, ຕາກເຂົ້າ, ຕາກຊີ້ນ, ຕາກໝາກເພັດ.


ກະດົ້ງ (ດຶຫ້ວ)

ກະດົ້ງຮູບຮ່າງມົນລີ ທາງປາຍຂ້ອນຂ້າງແຫລມມົນ ມີເສັ້ນຜ່າສູນກາງຢູ່ປະມານ 65 -75 ຊັ້ງຕິແມັດ ຄວາມສູງຂອງກະດົ້ງປະມານ 6 - 8 ຊັ້ງຕິແມັດ ຂອບຂອງມັນມີຂະໜາດ ປະມານ1,5 - 2 ຊັ້ງຕິແມັດ ລັກສະນະທີ່ກ່າວມານັ້ນ ເປັນຈຸດດີໃຫ້ການນຳໃຊ້.



ทาบผะลิด:

ເຮັດດ້ວຍໄມ້ເຮັຍຫລືໄມ້ປົກສານດ້ວຍລາຍສອງ(ເຢົາບຮາ)ທັງໝົດ ຊຶ່ງຈະນຳໄມ້ປົກຜ່າແລະ ແລ້ວນຳມາເຫລົາໃຫ້ໄດ້ຂະໜາດ ນຳມາສານໃຫ້ໄດ້ຂະໜາດທີ່ຕ້ອງການແລະກໍ່ປັບແຕ່ງໃຫ້ດີ ຕໍ່ຈາກນັ້ນນຳໄມ້ຂອບທີ່ເຮັດດ້ວຍໄມ້ໄລ່ມາເຫລົາໃຫ້ກ້ຽງດີຈຳນວນສອງເສັ້ນ ນຳມາປະກອບໃສ່ກັນທັງດ້ານນອກ ແລະ ດ້ານໃນ ນຳເສັ້ນຫວາຍດິນມາສານມັດ (ກືມ) ໃຫ້ອອ້ມຂອບກະດົ້ງນັ້ນ ຫລັງຈາກທີ່ເຮັດສຳເລັດແລ້ວເຂົາຈະນຳໄປຂາງໄຟ ເພື່ອປ້ອງກັນບໍ່ໃຫ້ມອດ ແມງໄມ້ຕ່າງໆໄປກັດກິນ ແລະ ເພີ້ມຄວາມແຂງແຮງທົນທານກວ່າເດີມ.



ວິທີການຟັດເຂົ້າທີ່ຖືກຕ້ອງ.


ການນຳໃຊ້:

ກະດົ້ງນຳໃຊ້ໄວ້ຟັດເຂົ້າອອກໃນເວລາຕຳເຂົ້າ ແລະ ຍັງໃຊ້ໃນເວລາທີ່ຮູດເຂົ້າມາແລ້ວ ນຳເຂົ້າຖອກໃສ່ກະດົ້ງເພື່ອໃຊ້ຕີນຢຽບ ໃຫ້ຫງ່າເຂົ້ານັ້ນອອກ ຫລັງຈາກນັ້ນກໍ່ຟັດອອກວິທີຟັດເອົາຫງ່າເຂົ້າຫລືແກບອອກນັ້ນໃນເວລາຕຳເຂົ້າ ຈະໃຊ້ມືຈັບສອງສົ້ນຂອງຂອບກະດົ້ງ ດ້ວຍການປັ່ນສ່ວນທີ່ຂ້ອນຂ້າງແຫລມນັ້ນ ໄປທາງດ້ານໜ້າແລ້ວກໍ່ຟັດເຂົ້າໄປມາ ໃຫ້ກາກ ແລະ ເມັດ ເຂົ້າລີບນັ້ນປົວອອກ ຍັງແຕ່ເມັດເຂົ້າທີ່ຕ້ອງການໄປໂຮມຕົວກັນທີ່ສ່ວນກ້ວາງ ສາມາດແຍກເມັດເຂົ້າອອກໄດ້ງ່າຍ ນອກນັ້ນຍັງສາມາດໃຊ້ໃນການຕາກເຂົ້າ ຕາກຊີ້ນ ໝາກເຜັດ ແລະ ອື່ນໆ ຜູ້ນຳໃຊ້ສ່ວນໃຫ່ຍຈະເປັນຜູ້ຍິງ ສຳລັບຜູ້ຊາຍແລ້ວຈະບໍ່ຟັດໜຽງ ແຕ່ເປັນຜູ້ຜະລິດເທົ່ານັ້ນ.


№ 30 - ຊື່ພາສາລາວ: ກຸບ

- ຊື່ພາສາທ້ອງຖິ່ນ: ຈະຫຼີບຣ
- ເຈົ້າຂອງເຄື່ອງ: ຈະເລຍ (ໄບຣເປັນຜູ້ຜະລິດ)
- ບ່ອນເກັບມ້ຽນ: ຫ້ອຍໄວ້ຝາເຮືອນ






N: 30-1




- ຜູ້ນຳໃຊ້: ແມ່, ລູກໄພ້.
- ການນຳໃຊ້: ສັກເຂົ້າ, ເສຍຫຍ້າ, ດຳນາ, ຮູດເຂົ້າ.

ກຸບ (ຈະຫຣິບ)

ກຸບເປັນອຸປະກອນໜຶ່ງ ທີ່ໃຊ້ເຂົ້າໃນເວລາເຮັດໄຮ່-ເຮັດນາ ເພື່ອປ້ອງກັນແສງ ແດດເວລາເຮັດວຽກ ລັກສະນະຄ້ານຄືຮູບຈວຍ ຢູ່ທາງດ້ານໃນກຸບຈະມີເສັ້ນຊີ່ທີ່ສານ ດ້ວຍລາຍສອງ(ຕັດສະບຣາ) ທີ່ໂຄ້ງເປັນວົງຂະໜາດເທົ່າຫົວຂອງຜູ້ທີ່ຈະໃສ່ ມັດຕິດໄວ້ ກັບກຸບດ້ວຍຫວາຍ ຂະໜາດຂອງກຸບມີລັດສະໝີປະມານ50ຊັງຕິແມັດຄວາມສູງແຕ່ ຂອບຫາປາຍປະມານ 20 -30 ຊັງຕິແມັດ.







ການຜະລິດ:

ວິທີການເຮັດກຸບ ເປັນຂັ້ນຕອນໜຶ່ງທີ່ບໍ່ຫຍຸ້ງຍາກຊຶ່ງຈະເລີ້ມຈາກການເຫລົາໄມ້ໄຜ່ຫລື ໄມ້ປຶກໃຫ້ໄດ້ເສັ້ນທີ່ລຽບແລະສະເໝີກັນ ຈາກນັ້ນກໍ່ນຳມາສານ ດ້ວຍການເລີ້ມຕົ້ນຈາກຈອມຂອງກຸບ(ກູ) ພັບເຄິ່ງຂອງເສັ້ນຕອກເພື່ອຫາຈຸດໃຈກາງ ແລ້ວກໍ່ເລີ້ມສານດ້ວຍລາຍສອງ(ເຢິກບຣາ ຄຳສອງຍໍ່ສອງ) ສານຕໍ່ໄປຈົນຮອດສິ້ນສຸດແລ້ວກໍ່ຈະກຽມໃຫ້ສະເໝີກັນ ນຳໄມ້ໄຜ່ ຫລື ໄມ້ປຶກ ມາເຫລົາໃຫ້ໄດ້ຂະໜາດກວ້າງປະມານ1-2ຊັ້ງຕິແມັດ ຈຳນວນສອງເສັ້ນນຳມາແນບໃສ່ກັບຂອບຂອງກຸບ ແລ້ວສານຍຶດຕິດດ້ວຍຫວາຍສະວັ້ງ ສຳລັບ ບ່ອນທີ່ໄວ້ຊູບໃສ່ຫົວນັ້ນ ເຂົາຈະສານຢູ່ຂ້າງນອກກ່ອນ ຄວາມກວ້າງປະມານ 3- 4 ຊັ້ງຕິແມັດ ຄວາມຍາວຕາມຂະໜາດຫົວຂອງຜູ້ໃສ່ມີປະມານ 18 -25 ຊັ້ງຕິແມັດ ຈາກນັ້ນກໍ່ນຳມາສານຕິດກັນໃຫ້ເປັນວົງມົນສານຕິດໃສ່ໜ່ວຍກຸບທີ່ສານໄວ້ກ່ອນໜ້ານັ້ນ.


ການນຳໃຊ້: ນິຍົມກັນໃຊ້ ສວມໄວ້ກັນແດດ ໃຊ້ໃນຂະນະທີ່ເຮັດວຽກ ຢູ່ຕາມໄຮ່ນາ ແລະ ບ່ອນອື່ນໆ ໃຊ້ໄດ້ທຸກສະພາບການ ສາມາດກັນແດດໄດ້ດີ ນຳໃຊ້ໄດ້ທຸກເພດໄວໂດຍສະເພາະຜູ້ຍິງ.



ໃຊ້ໄວ້ກັນແດດ ໃນເວລາເຮັດວຽກ

№ 31 - ຊື່ພາສາລາວ: ມີດ

- ຊື່ພາສາທ້ອງຖິ່ນ: ກະກຣິບ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ຝາໄມ້ເຕົາໄຟ




0,3 Kg

- ຜູ້ນຳໃຊ້: ພໍ່, ແມ່, ລູກສາວ (ຍິງ-ຊາຍ).
- ການນຳໃຊ້: ຈະຕອກ, ເຫລົາຫວາຍ, ຊອຍຊີ້ນ, ຊອຍຜັກ.

ມີດ (ກະກຣິນ)

ມີດເປັນເຄື່ອງມືທີ່ໃຊ້ໃນເວລາເຮັດເຄື່ອງຈັກສານ ຮູບລັກສະນະລຽວໂຄ້ງ ມີນ້ຳໜັກເບົາປະມານ0,3ກິໂລ ສຳລັບດວງມີດມີຄວາມບາງດ້ານມີຄົມຈະໂຄ້ງງໍຂຶ້ນເພື່ອໃຫ້ສາມາດເຫລົາຕອກໄດ້ງ່າຍ ປາຍມີດຈະມົນເລັກນ້ອຍ ເພື່ອປ້ອງກັນອັນຕະລາຍແກ່ຜູ້ນຳໃຊ້ ຂະໜາດປະມານ 20 -25 ຊັ້ງຕິແມັດ ສ່ວນດ້ານນັ້ນຍາວປະມານ 30 -35 ຊັ້ງຕິແມັດ ຄວາມຍາວທັ້ງໝົດ50 - 60 ຊັ້ງຕິແມັດ.



ການຜະລິດ: ມີດເປັນເຄື່ອງມືທີ່ຜະລິດຂຶ້ນເອງ ອີງຕາມຄວາມຕ້ອງການໃນການໃຊ້ງານ ວັດຖຸທີ່ໃຊ້ກໍ່ຫາໄດ້ຕາມທ້ອງຖິ່ນນັ້ນ ສ່ວນຫລາຍແມ່ນຈະນຳຊິ້ນສ່ວນຂອງເຫລັກເສດຈາກລົດທີ່ບໍ່ໃຊ້ງານ ຕັດເອົາເຫລັກສ່ວນທີ່ຍັງດີໃຫ້ໄດ້ຕາມຂະໜາດທີ່ຕ້ອງການ ນຳມັນມາເຜົາໄຟ ແລ້ວຕີໃຫ້ໄດ້ຕາມຮູບແບບທີ່ເໝາະສົມ ໃນການໃຊ້ງານ ແລະເຫັນຕົວຢ່າງທີ່ສືບທອດກັນມາ ຕໍ່ຈາກນັ້ນກໍ່ນຳໄມ້ໄຜ່ຕັດໃຫ້ໄດ້ຕາມຂະໜາດນຳ

ມາເຫລົາໃຫ້ກ້ຽງດີ ນຳມາປະກອບໃສ້ດວງມີດທີ່ຕີໄວ້ແລ້ວນັ້ນ ຕອກອັດແໜ້ນດ້ວຍໄມ້ ຮັດດ້ວຍປອກໂລມີນຽມເສີມຄວາມທົນທານຕື່ມ.

ການນຳໃຊ້: ນຳໃຊ້ເຂົ້າໃນການເຫລົາຕອກ ຈັກຕອກ ດ້ວຍການນຳໃຊ້ມືຈັບດ້າມໃກ້ກັບມີດ ແລ້ວດ້າມອີກສ່ວນໜຶ່ງແມ່ນແນບໃສ່ກັບແຂນ ເພື່ອການຄວບຄຸມມີດໃຫ້ໄດ້ຕ້ອງການ ເຮັດໃຫ້ການເຫລົາຕອກນັ້ນສະເໝີກັນນອກຈາກນັ້ນຍັງໃຊ້ຊອຍຊີ້ນຊອຍຜັກຕ່າງໆໄດ້ ແຕ່ວິທີແມ່ນຈະແຕກຕ່າງຈາກການນຳໃຊ້ມີດຂອງຊົນເຜົ່າລາວລຸ່ມ ຊຶ່ງເຂົາຈະໃຊ້ຂາໜີບດ້າມໄວ້ຢູ່ສ່ວນພັບຂອງຫົວເຂົາ ໂດຍຈະປັ່ນຄົມມີດຂຶ້ນ ຈາກນັ້ນກໍ່ນຳຜັກ ຫລື ຊີ້ນຈັບສອງມືແລ້ວເນັ່ນລົງໄປທີ່ຄົມມີດນັ້ນ ເພື່ອໃຫ້ຊີ້ນແລະຜັກນັ້ນຂາດອອກ ຜູ້ຍິງຈະນຳໃຊ້ໃນການແຕ່ງກິນ. ສ່ວນຜູ້ຊາຍນັ້ນຈະນຳໃຊ້ເຂົ້າໃນເວລາເຮັດເຄື່ອງຈັກສານ ແລະ ອື່ນໆອີກ.



ວິທີການເຫລົາໄມ້ໄຜ່.




ວິທີການເປືອກໝາກໄມ້.

ອຸປະກອນການຫາປາ

№ 32 - ຊື່ພາສາລາວ: ສ້ອນ (ເຄື່ອງສ້ອນປາ)

- ຊື່ພາສາທ້ອງຖິ່ນ: ນູກ
- ເຈົ້າຂອງເຄື່ອງ: ແມ່
- ບ່ອນເກັບມ້ຽນ: ເທິງເຕົາໄຟ







- ຜູ້ນຳໃຊ້: ແມ່ ລູກໄພ້ (ຍິງ) .
- ການນຳໃຊ້: ສ້ອນປາ.

ส้อม (มูก)


ເປັນເຄື່ອງມືທີ່ໃຊ້ໃນການຫາປາ ຮູບລັກສະນະເປັນຮູບຈວຍ ລຽວ ປາກເປັນຮູບສາມຫລ່ຽມ ທາງດ້ານກົ້ນຈະມົນແລະ ມີສ່ວນກົ້ວກ່ອນຈະຮອດກົ້ນສ້ອນ(ມູກ) ຄວາມຍາວທັ້ງໝົດ 60-70ຊັ້ງຕິແມັດ ເສັ້ນຜ່າສູນກາງຂອງປາກປະມານ 20-30ຊັ້ງຕິແມັດ ກົ້ນສ້ອນເອີ້ນວ່າ(ແຕ່ດ) ມີລັດສະໝີ 5-6 ຊັ້ງຕິແມັດ ນັບຈາກກົ້ນປະມານ10-15 ຊັ້ງຕິແມັດ ຈະເປັນສ່ວນກົ້ວທີ່ສຸດຂອງສ້ອນປະມານ 4-5 ຊັ້ງຕິແມັດ.







ການຜະລິດ: ວັດສະດຸທີ່ນຳມາໃຊ້ໃນການຜະລິດ ແມ່ນຫວາຍຕາເລິກ (ດ໊ຣ໊ີ) ຊຶ່ງເປັນຫວາຍທີ່ມີຄວາມທົນທານ ໝັ້ນໝຸ່ງອຸຍນິດໜຶ່ງ ນຳຫວາຍມາເຫລົາໃຫ້ໄດ້ເສັ້ນທີ່ສະເໝີກັນປະມານ4-6 ເສັ້ນ ໃນເບື້ອງຕົ້ນມາສານຂັດກັນ ຕ່ຈາກນັ້ນກ່ນຳຫວາຍຕາເລິກເຊັ່ນດຽວກັນ ມາສານດ້ວຍລາຍຂັດ(ຕານສະໂມຍ) ຊຶ່ງຈະເລີ້ມຈາກສ່ວນກົ້ນກ່ອນ ສານໄປເລື້ອຍໆ ໃນຂະນະທີ່ສານຢູ່ນັ້ນ ຜູ້ສານຈະຕ້ອງປັບໃຫ້ກວ້າງອອກ ຫລ ກ໋ືອເຂ໊ົ້າຕາມເຫັນເໝາະສົມ ສານໄປຈົນກ່າຍເປັນບ່ອນກ໋ືອປະມານ 15-20 ຊັ້ງຕິແມັດ ຈະຕ້ອງໄດ້ເສີມເສັ້ນຫວາຍເຂ໊ົ້າຕ໋ືມຈາກ 4ເສັ້ນເປັນ 8 ເສັ້ນ ໂດຍອີງຕາມເສັ້ນຫລັກຂອງສ້ອນສານໄປຂ໊ຶ້ນດ້ວຍລາຍຂັດປະມານ 10-20 ຊັ້ງຕິແມັດ ກ່ຕ໋ືມເສັ້ນຫວາຍເຂ໊ົ້າຕ໋ືມອີກເສັ້ນ ເພ໋ືອໃຫ້ສ້ອນນັ້ນມີ ລັດສະໝີກວ້າງອອກ ໃນສ້ອນໜຶ່ງອັນຈະເພ໋ີ້ມເສັ້ນຫວາຍເຂ໊ົ້າໄປສານເຖິງສ໋ີ່ຄັ້ງ ຕ່ຈາກນັ້ນກ່ນຳໄມ້ໄລ່ມາດັດໃຫ້ໄດ້ຮູບສາມຫລ່ຽມ ມັດດ້ວຍຫວາຍໃຫ້ແໜ້ນເພ໋ືອໃຊ້ເປັນຂອບ(ກະນ໋ີມ) ແລະ ນຳມາແນບໃສ່ຂອບສ້ອນ ມັດຄຽນດ້ວຍຫວາຍຫາງໜູເພ໋ີ້ມຄວາມແຂງແຮງທົນທານ.





ວິທີການສ້ອນປາໃນນ໋ຳຫ້ວຍ.


ການນຳໃຊ້: ສ້ອນໃຊ້ໄວ້ຫາປາຕາມລຳຫ້ວຍ ນ໋ຳເຊ ປາກສ້ອນທ໋ີ່ເປັນຮູບສາມ ຫລ່ຽມນັ້ນໄວ້ເພ໋ືອວາງໃສ່ ກ້ອນຫີນຈະງ່າຍ ໄດ້ເນ໋ືອທ໋ີ່ຂອງປາກກວ້າງກວ່າປາກສ້ອນທ໋ີ່ເປັນຮູບວົງມົນ ໃນເວລາສ້ອນປາເຂ໊ົ້າຈະຈັບປາກສ້ອນຊູບໃສ່ໂງ່ນຫີນ ທ໋ີ່ຢູ່ໃນນ໋ຳ ແລ້ວຍົກຫີນຂ໊ຶ້ນໃຫ້ເໜັງຕີງ ເພ໋ືອໃຫ້ປາລ໋ີ້ຢູ່ໃນກ້ອນຫີນນັ້ນລອຍອອກມາ ມັນກ່ຈະແລ່ນເຂ໊ົ້າສ້ອນປາທັນທ໋ີ ປາທ໋ີ່ເຂ໊ົ້າໃນສ້ອນນັ້ນຈະໄປໂຮມກັນຢູ່ກ໋ົ້ນຂອງມັນຈະອອກຈາກບ່ອນກ໋ືອນັ້ນຍາກຫລັງຈາກສ້ອນໄດ້ປາແລ້ວ ໃຊ້ມ໋ືເຄາະຫລ ກ໋ືຈັບເອ໋ົາປາ ກຸ້ງນັ້ນໃສ່ໃນກະເຈາະທ໋ີ່ມັດຢູ່ແອວຜູ້ນຳໃຊ້ຈະເປັນຜູ້ຍິງ ສ່ວນຜູ້ຊາຍຈະເປັນຜູ້ຜະລິດໃຫ້.

№ 33 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ບົງໂບະ
- ເຈົ້າຂອງເຄື່ອງ: ໄບຣ
- ບ່ອນເກັບມ້ຽນ: ເທິງເຕົາໄຟ








- ຜູ້ນຳໃຊ້: ຍິງ, ຊາຍ.
- ການນຳໃຊ້: ຕຶກແຫ, ຫາປາ, ໜໍ່ໄມ້ ຜັກຕ່າງໆ.


ຂ້ອງ (ບົ່ງໂບະ)

ເປັນອຸປະກອນທີ່ໃຊ້ຫາປາ ຮູບຮ່າງລັກສະນະຈະແຕກຕ່າງ ຈາກຂ້ອງເຂດດັ່ງ ກ່າວ ເພາະມັນຈະຄ້າຍຄືກັບຂ້ອງຂອງລາວລຸ່ມ ຄືປາກຈອມ ສ່ວນໂຕຈະໃຫ່ຍ ແລະ ມີ ກົ້ນນ້ອຍເປັນຮູບຫົກຫລ່ຽມ ມີຄໍຍາວຂຶ້ນເລັກນ້ອຍປະມານ5 -6 ຊັ່ງຕິແມັດ ໜາປະມານ 12-13 ຊັ່ງຕິແມັດ ຄວາມສູງທັ້ງໝົດ 20-25 ຊັ່ງຕິແມັດ ກົ້ນຂອງຂ້ອງຈະເປັນຮູບ 6 ຫລ່ຽມ (ເບິ່ງຕາມຮູບ).



ການຜະລິດ: ວັດສະດຸທີ່ນຳໃຊ້ໃນການຜະລິດແມ່ນໄມ້ຫົກ ຫລື ໄມ້ປຶກ ເປັນໄມ້ທີ່ມີຄວາມໜຽວແໜ້ນ ແລະ ທົນທານກວ່າໝູ່ຢູ່ໃນຕະກຸນໄມ້ໄຜ່ ເຂົາຈະນຳໄມ້ຫົກຜ່າເອົາແຕ່ສ່ວນເປືອກນອກເອີ້ນວ່າ "ຕີວໄມ້ຫົກ" ໃຫ້ໄດ້ຂະໜາດເທົ່າກັນ ນຳມາສານກັນ ຊຶ່ງເລີ້ມຈາກສ່ວນກົ້ນ(ແຕ່ດ) ສານດ້ວຍລາຍຂັດ(ປະແນດ) ສ່ວນຕົວຂອ້ງສານດ້ວຍລາຍໜຶ່ງ(ສະໂມຍ)ສານໄປເລື້ອຍໆຕາມຮູບແບບ ສະເພາະສ່ວນທີ່ໄກ້ກັບປາກ(ກາງ) ນັ້ນ ເຂົາຈະສານຂັດຂຶ້ນໄປປະມານ 3 - 4 ຊັ້ງຕິແມັດ ຈາກນັ້ນເຂົາກໍ່ຈະສານມ້ວນສິ້ນ ຂອງ ເສັ້ນທາງຕັ້ງ ສານຂັດກັນປະກອບເປັນຂອບປາກ (ປະແນດ) ສ່ວນຝາອັດແມ່ນຈະສານຕ່າງຫາກ ດ້ວຍການນຳເສັ້ນໄມ້ໄຜ່ມາຫັກທົບເຄິ່ງ ແລ້ວສານກັນດ້ວຍລາຍຂັດ ຈົ່ງສິ້ນໄມ້ນັ້ນໃຫ້ຈຸກັນເປັນຮູບຈວຍ ລັດສະໝີຂອງຝາອັດຈະນ້ອຍກວ່າປາກຂອ້ງເລັກນ້ອຍ ເພື່ອສາມາດສູບເຂົ້າກັນໄດ້ ຈາກນັ້ນຈົ່ງນຳເຊືອກມາມັດໃສ່ໂຕຂ້ອງ ໄວ້ເພື່ອມັດແອວ ໃນເວລາຫາປາ.


ການນຳໃຊ້: ໃຊ້ໃນເວລາຫາປາ ຫວານແຫ ສ້ອນປາ ຫາໜໍ່ໄມ້ ດ້ວຍການນຳເຊືອກທີ່ຢູ່ຂ້ອງນັ້ນ ມາມັດໃສ່ແອວໄວ້ ດ້ານຫລັງ ຫລື ດ້ານຂ້າງ ໃນຂະນະທີ່ສ້ອນປາເມື່ອໄດ້ ກໍ່ນຳປາໃສ່ຂ້ອງທີ່ມັດຂ້າງແອວນັ້ນໄດ້ສະດວກ ຜູ້ນຳໃຊ້ສາມາດນຳໃຊ້ໄດ້ໝົດ ທຸກຄອບຄົວບໍ່ວ່າ ຈະເປັນ ພໍ່, ແມ່, ລູກ ແລ້ວແຕ່ຜູ້ຈະນຳໃຊ້ໃນເວລາໃດ.





ບ່ອນເກັບມຸ້ງນຫ້ອຍໄວ້ຂ້າງ
ຝາ ຫລັ ໄວ້ເທິງເຕົາໄຟ.


№ 34 - ຊື່ພາສາລາວ: ກະຊັ້ງ

- ຊື່ພາສາທ້ອງຖິ່ນ: ກະຊັ້ງ
- ເຈົ້າຂອງເຄື່ອງ: ເດັກ
- ບ່ອນເກັບມ້ຽນ: ກ້ອງລ່າງເຮືອນ











- ຜູ້ນຳໃຊ້: ຍິງ, ຊາຍ.
- ການນຳໃຊ້: ໃສ່ກົບຂຽດ.

24/ ข้าวจ้าวใหญ่

ກະຊັ້ງ (ກະຊັ້ງ)

ເປັນເຄື່ອງມືທີ່ໃຊ້ໃນການຮັກສາປາ ກົບ ຂຽດ ບ່ໃຫ້ຕາຍ ຂັ້ງໄວ້ໃນກະຊັ້ງ ແລ້ວ ນຳກະຊັ້ງໄປແຊ່ນ້ຳ ລັກສະນະຄ້າຍຄືກັບທ່ໍ ມີຄວາມຍາວທັ້ງໝົດ 45-50 ຊັ້ງຕິແມັດ ລັດ ສະໝີຂະໜາດ15- 20 ຊັ້ງຕິແມັດ ມີຝາອັດຢູ່ສ່ວນກາງຂອງກະຊັ້ງ ເພື່ອໄວ້ໃສ່ປາຫລືກົບ ທີ່ຫາມາໄດ້ ມີເຊືອກມັດຢູ່ສອງສົ້ນເພື່ອໄວ້ເກາະໃສ່ໄມ້ ໃນເວລາແຊ່ໃນນ້ຳ.




ຫາງກັນເຮັດດ້ວຍໄມ້ໄຜ່


ການຜະລິດ: ເຄື່ອງມືສະນິດນີ້ສ່ວນຫລາຍ ຈະແມ່ນຄົນລາວລຸ່ມນຳໃຊ້ ຂັ້ນຕອນການຜະລິດ ແມ່ນ ຈະນຳໄມ້ໄຜ່ມາຜ່າໃຫ້ເປັນຕົ້ວ ຕົ້ວໜຶ່ງປະມານ0,5 -1 ຊັ້ງຕິແມັດ ເຫລົາໃຫ້ກ້ຽງບ່ໃຫ້ມີຄົມໄມ້ໄຜ່ ໃຫ້ໄດ້ຄົບ ຕາມຄວາມກວ້າງຂອງໂຕກະຊັ້ງ ຈາກນັ້ນກ່ໍນຳຫວາຍ ຫາງໜູມາສານໃຫ້ແຕ່ລະຕົ້ວຢຶດຕິດກັນ ໃຫ້ເປັນຮູບທ່ໍ ແລະ ນຳໄມ້ໄຜ່ ເປັນຕົ້ວມັດຕິດເຊັ່ນດຽວກັນແລ້ວຕັດໃຫ້ ເປັນຮູບວົງມົນ ຕາມຂະໜາດລັດສະໝີຂອງກະຊັ້ງ ປະມານ 15-20 ຊັ້ງຕິແມັດ ນຳມາອັດ ກະຊັ້ງແລ້ວສານຢຶດຕິດກັນດ້ວຍຫວາຍຫາງໜູ ສ່ວນທີ່ເປັນປາກ ກ່ໍຈະເຈາະໄມ້ໄຜ່ ອອກໃຫ້ໄດ້ຂະໜາດປະມານ 10 -15 ຊັ້ງຕິແມັດ ກວ້າງປະມານ 8 -12ຊັ້ງຕິແມັດ ມີຝາ ອັດທີ່ເຮັດດ້ວຍກະໂປະໝາກພ້າວ ຫລື ວັດສະດຸອື່ນທີ່ຫາໄດ້ຕາມເຂດນັ້ນ.

ການນຳໃຊ້: ນຳໃຊ້ໃນການຂັ້ງປາ ກົບຂຽດ ຕ່າງໆ ເພື່ອໄວ້ກິນໃນໄລຍະຍາວ ດ້ວຍການນຳສັດທີ່ຫາມາໄດ້ນັ້ນໄປຂັ້ງໄວ້ໃນກະຊັ້ງ ແລະ ກະຊັ້ງຈະຕ້ອງນຳໄປແຊ່ນ້ຳໄວ້ ປາ, ກົບກ່ໍສາມາດລອຍນ້ຳໄດ້ໂດຍບ່ໍຕາຍ ຫລື ໃຊ້ໃນຂະນະທີ່ຫາປາ ເມື່ອໄດ້ປາກ່ໍຈະໃສ່ ໄວ້ໃນກະຊັ້ງກ່ອນຈະນຳໄປແຕ່ງເປັນອາຫານ.


№ 35 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ບົງໂບະ
- ເຈົ້າຂອງເຄື່ອງ: ຫົດ
- ບ່ອນເກັບມ້ຽນ: ເທິງເຕົາໄຟ
  ຂ້າງຝາເຮືອນ






0,05 kg



- ຜູ້ນຳໃຊ້: ຍິງ, ຊາຍ.
- ການນຳໃຊ້: ຫາປາ, ຫາປູ, ຫາຂຽດ.

ຂ້ອງ (ບິ່ງໂບະ)

ເປັນຂອງຊິນເຜົ່າດັ່ງເດີມເປັນອີກຮູບແບບໜຶ່ງຂອງຊິນເຜົ່າອາລັກ ຊຶ່ງລັກສະນະລວມແລ້ວຈະເປັນຮູບ ສີ່ຫລ່ຽມຍາວ ມີປາກເປັນຮູບວົງມົນ ຂະໜາດຄວາມສູງທັງໝົດ 10 - 20 ຊັ່ງຕິແມັດ ຄວາມກ້ວາງຂອງຂ້ອງ 10 -15 ຊັ່ງຕິແມັດ ສ່ວນປາກມີລັດສະໝີ 8 -10ຊັ່ງຕິແມັດ ມີນ້ຳໜັກ 0,05 ກິໂລ.




ການຜະລິດ: ເຮັດດ້ວຍໄມ້ໄລ່ນ້ຳມາເຫລ້ຳໃຫ້ກ້ຽງດີ ກ່ອນນ້ຳມາສານ ຊຶ່ງເລີ້ມສານຈາກ ກົ້ນກ່ອນດ້ວຍລາຍຂັດ ຫລື ລາຍໜຶ່ງໃຫ້ໄດ້ຂະໜາດຕາມຕ້ອງການ ແລ້ວກ່ໍເລີ້ມສານຕ່ໍໄປສ່ວນໂຕ ດ້ວຍການສານລາຍຂັດເຊັ່ນດຽວກັນ ພໍຮອດສ່ວນປາກແມ່ນຈະສານລາຍຂັດມ້ວນສິ້ນ ຫລື ວ່າຫລິບຂອບ(ເປກ) ຈາກນັ້ນນ້ຳໄມ້ໄຜ່ ຜ່ານແລ້ວເຫລ້ຳໃຫ້ກ້ຽງດີນ້ຳມາຂັດໃສ່ກົ້ນຂ້ອງເອີ້ນວ່ານ ໄມ້(ກາຍຣດ້ຽ) ເພື່ອປ້ອງກັນບ່ໍໃຫ້ມັນລຸ ສ່ວນໄກ້ກັບຄໍຂ້ອງແມ່ນຈະນ້ຳຫວາຍຫາງໜູມາສານ ດ້ວຍລາຍມັດ ແລະ ສານຫູໄວ້ເພື່ອມັດເຊືອກ.

ການນ້ຳໃຊ້: ໃຊ້ໃນເວລາຫາປາ ກົບຂຽດຕ່າງໆ ຜູ້ນ້ຳໃຊ້ຈະໃຊ້ໄດ້ໝົດທຸກຄົນ ໃນເວລາໄປຫາປາ ໂດຍມັດໃສ່ແອວດ້ານຫລັງຫລືດ້ານຂ້າງ ຂ້ອງຈະມີຫລາຍຂະໜາດ ທັງນ້ອຍ ແລະໃຫ່ຍ ເຮັດຕາມຄວາມຕ້ອງການຂອງຜູ້ນ້ຳໃຊ້.

№ 36 - ຊື່ພາສາລາວ: ພ້າ

- ຊື່ພາສາທ້ອງຖິ່ນ: ບຣາຕະມີ່
- ເຈົ້າຂອງເຄື່ອງ: ເດັກ
- ບ່ອນເກັບມ້ຽນ: ຂ້າງຝາເຮືອນ




- ຜູ້ນຳໃຊ້: ພໍ່, ລູກຊາຍ.
- ການນຳໃຊ້: ຟັນຕົ້ນໄມ້ ຖາງໄຮ່ ເສຍຫຍ້າ.

ພ້າ(ບຣາຕະມີ່)

ພ້າເປັນເຄື່ອງມືໜຶ່ງ ທີ່ໃຊ້ເຂົ້າໃນການເຮັດໄຮ່ ລັກສະນະສະເພາະພ້າແມ່ນ ສ່ວນປາຍຈະໃຫ່ຍກວ່າສ່ວນກົກ ຄວາມຍາວປະມານ 25- 35 ຊັ້ງຕິແມັດ ຄວາມກວ້າງ ຂອງປາຍພ້າ6-7 ຊັ້ງຕິແມັດ ປາຍຕັດ ຈະມີສ່ວນງໍເລັກນ້ອຍທາງດ້ານຄົມ ສ່ວນກົກແມ່ນ


ຈະປະມານ3-4 ຊັ້ງຕິແມັດ ດ້ານພ້າຈະເຮັດດ້ວຍໄມ້ເຮັຍ ໃຊ້ສະເພາະຮາກ ຊອກເອົາແຕ່ສ່ວນຮາກທີ່ງໆຕາມຮູບ ເພື່ອປ້ອງກັນໃນເວລາໃຊ້ງານບໍ່ໃຫ້ມີມີ່ນໄປຖືກຄົມພ້າ ຄວາມຍາວປະມານ 25-30 ຊັ້ງຕິແມັດ ຄວາມຍາວທັ້ງໝົດປະມານ 60-70 ຊັ້ງຕິແມັດ ມີນ້ຳໜັກ 1,4 ກິໂລ.



ການຜະລິດ: ຜະລິດຂຶ້ນໃນປີ 2000 ລຸງເປັນຜູ້ຜະລິດໃຫ້ ກ່ອນຈະຍ້າຍລົງມາຢູ່ບ້ານໃໝ່ນີ້ ວິທີການແມ່ນຈະນຳເຫລັກໄປເຜົາໄຟ ແລ້ວນຳມາຕີ ເຫລັກຈະຕ້ອງເປັນມີຄວາມໜາແລະບໍ່ເປັນໜ້ຽງ ຕີໃຫ້ໄດ້ຕາມຮູບແບບທີ່ຕ້ອງການຈາກນັ້ນກໍ່ນຳໄປປະກອບໃສ່ ກັບຮາກໄມ້ໄລ່ຫລືໄມ້ເຮັຍແລ້ວນຳໄປຝົນໃຫ້ຄົມດີ ຈຶ່ງສາມາດນຳໃຊ້ໄດ້.

ການນຳໃຊ້: ນຳໃຊ້ເຂົ້າໃນການຖາງປ່າ, ເຮັດໄຮ່, ເຮັດນາ ເຮັດຮົ້ວ, ສວນຜັກຕ່າງໆ ຊຶ່ງສາມາດນຳໃຊ້ໄດ້ທຸກວຽກງານ ບໍ່ວ່າຈະເປັນວຽກໜັກ ຫລືເບົາຜູ້ນຳໃຊ້ຫລັກຈະເປັນຜູ້ຊາຍ.

№ 37 - ຊື່ພາສາລາວ: ເຫລັກຊີ
- ຊື່ພາສາທ້ອງຖິ່ນ: ຈີລິນ
- ເຈົ້າຂອງເຄື່ອງ: ເດັກ
- ບ່ອນເກັບມ້ຽນ: ຂ້າງຝາເຮືອນ






- ຜູ້ນຳໃຊ້: ຜູ້ຊາຍ
- ການນຳໃຊ້: ເວລາສານກະຕິບ ຊີ ຂອບກະດົ້ງ ຂອບກະພາ ໃນເວລາຈັກສານ.

ເຫລັກຊີ (ຈີ່ລິນ)

ເປັນເຄື່ອງມືທີ່ໃຊ້ໃນການເຮັດເຄື່ອງຈັກສານ ຮູບຮ່າງຄ້າຍຄືກັບເຫັລກແຫລມ ສ່ວນປາຍຈະແຫລມຄົມ ມົນ ຂະໜາດຍາວປະມານ 10-15 ຊັ້ງຕິແມັດ ມີລັດສະໝີ 0,6 ຊັ້ງຕິແມັດ ມີດ້າມທີ່ເຮັດດ້ວຍໄມ້ຍາວປະມານ12-15 ຊັ້ງຕິແມັດ ລັດສະໝີຂອງດ້າມຈັບ 1,5 -2 ຊັ້ງຕິແມັດ ລວມຄວາມຍາວທັ້ງໝົດ 20-30ຊັ້ງຕິແມັດ.



ການຜະລິດ: ເຫລັກທີ່ນຳໃຊ້ຈະຕ້ອງເປັນເຫລັກທີ່ດີ ມາຕີໃຫ້ໄດ້ຮູບມົນ ຈາກນັ້ນຈຶ່ງປາຍໄປຝົນໃຫ້ຄົມ ສ່ວນທາງກົກຈະສູບໃສ່ດ້າມທີ່ເຮັດດ້ວຍຮາກໄມ້ໄຜ່ ນຳເຫລັກຊີ ນັ້ນມາສູບໃສ່ອັດແໜ້ນດ້ວຍໄມ້ນຳປອກເຫລັກມາຮັດໃຫ້ແໜ້ນອີກຮອບໜຶ່ງເພື່ອປ້ອງກັນບໍ່ໃຫ້ເຫລັກແຫລມນັ້ນຫລຸດອອກຈາກໄມ້ເວລານຳໃຊ້.



ການນຳໃຊ້: ໃຊ້ໄວ້ໃນເວລາເຮັດເຄື່ອງຈັກສານ ໃນເວລາຫຍິບຂອບ ກະດົ້ງ ກະພາ ຫລື ຂອບ ກະຕິບເຂົ້າ ແລະ ອື່ນໆ ທີ່ຕ້ອງການຊີໃຫ້ເປັນຮູເພື່ອສອດຫວາຍໄດ້ງ່າຍຂຶ້ນ ຊ່ວຍແຮງຜູ້ຜະລິດໄດ້ດີ.

ນຳໃຊ້ເຂົ້າໃນການເຮັດເຄື່ອງຈັກສານ.

ກ້ອງເຂົ້າ

ກ້ອງເຂົ້າ ເປັນເຄື່ອງຈັກສານຊະນິດໜຶ່ງທີ່ໃຊ້ເຂົ້າໃນການດຳລົງຊີວິດປະຈຳວັນ ໃຊ້ໄວ້ໃສ່ເຂົ້າໜຽວທີ່ໜຶ່ງສຸກແລ້ວ ສາມາດເກັບຕົວຮ້ອນໄດ້ໄລຍະໜຶ່ງ ເຮັດໃຫ້ເຂົ້າບໍ່ຊຶ້ນ ແລະ ສາມາດຖືກພາໄປໄຮ່ ໄປນາ ໄດ້ສະດວກສະບາຍ. ກ້ອງເຂົ້າເດີມເປັນເຄື່ອງໃຊ້ສະເພາະຂອງຄົນລາວລຸ່ມ ແຕ່ໃນປະຈຸບັນນຳໃຊ້ ກັນແຜ່ຫລາຍໃນທົ່ວປະເທດ ແລະ ກໍ່ສາມາດຜະລິດໄດ້ເອງຕາມຮູບແບບຄວາມຕ້ອງການ ຂອງແຕ່ລະທ້ອງຖິ່ນມີຮູບແບບແຕກຕ່າງກັນໄປ ອີ່ງໃສ່ວັດສະດຸ ແລະ ພູມປັນຍາຂອງແຕ່ລະທ້ອງຖິ່ນ.

ຊົນເຜົ່າອາລັກ ບ້ານກະໂດນໃໝ່ ຊຶ່ງເປັນບ້ານທີ່ໄດ້ຍົກຍ້າຍມາຈາກ ບ້ານກະໂດນຢູ່ເຂດຕຸ່ຍມາຢູ່ເຂດເທດສະບານ ນອກຈາກການສານເຄື່ອງມືເຄື່ອງໃຊ້ທີເປັນເອກະລັກຂອງຊົນເຜົ່າຂອງຕົນເອງແລ້ວກໍ່ຍັງໄດ້ຮຽນຮູ້ຮັບເອົາເຄື່ອງຈັກສານຂອງຊົນເຜົ່າອື່ນໆ ເຂົ້າມາເພື່ອຮັບໃຊ້ເຂົ້າໃນຊີວິດປະຈຳວັນ ນອກນັ້ນພວກເຂົາຍັງຜະລິດຂຶ້ນເພື່ອຈຳໜ່າຍຕາມທ້ອງຕະຫລາດ ຊຶ່ງເປັນຮູບແບບມາດຕະຖານທີ່ຄົນລາວລຸ່ມຕ້ອງການ ຈະມີຄົນມາເກັບຊື້ຕາມໝູ່ບ້ານ.




ການສານກ່ອງເຂົ້າ:

ເບື້ອງຕົ້ນແມ່ນຈະກະກຽມຕອກ ເຮັດຈາກໄມ້ບິງ ຫລື ໄມ້ຫີກ ຈະເລືອກເອົາໄມ້ບິງທີ່ມີປ່ອງຂະໜາດຍາວ ຂະໜາດປະມານ40-50 ຊັງຕີແມັດ ເປັນໄມ້ທີ່ມີອາຍຸປະມານ 2-3 ປີ ຂຶ້ນໄປຕອກທີ່ຈະນຳມາສານກ່ອງເຂົ້າຈະຕ້ອງເຫລົາໃຫ້ໄດ້ປະມານ 100 - 150 ເສັ້ນ ກ່ອງເຂົ້າຂະໜາດນ້ອຍ ຫລືໃຫ່ຍ ຂຶ້ນຢູ່ກັບຈຳນວນເສັ້ນຕອກນັ້ນ.



ວິທີການເຫລົາເສັ້ນຕອກ

ເລີ້ມຕົ້ນການສານດ້ວຍ ການຫາຈຸດໃຈກາງຂອງເສັ້ນຕອກ ແລ້ວສານຈົນຄົບເສັ້ນຕອກ ຫລື ຕາມຂະໜາດທີ່ຕ້ອງການແລ້ວ ຈຶ່ງນຳມາສານຕິດກັນ ຕໍ່ຈາກນັ້ນສານຕໍ່ດ້ວຍລາຍສອງ ຫລື ລາຍສາມກໍ່ແລ້ວ ແຕ່ຄວາມຕ້ອງການທັງດ້ານລຸ່ມແລະ ດ້ານເທິງສຳລັບທາງດ້ານປາຍຂອງຕອກນັ້ນ ເຫລົາໃຫ້ໄດ້ລັກສະນະລຽວເລັກນ້ອຍ ເພື່ອງ່າຍຕໍ່ການສານ ແລະ ການດຶງເສັ້ນຕອກ ເມື່ອສານຈົນສຸດເສັ້ນຕອກ ກໍ່ຈະສານມ້ວນເກັບເສັ້ນຕອກ



ການສານຈຸດເລີ້ມຕົ້ນຂອງກ່ອງເຂົ້າ

ດ້ວຍລາຍຂັດ ເກັບສົ້ນໃຫ້ລະອຽດ ຈາກນັ້ນກໍ່ນຳມັນມາພັບເຄິ່ງໃຫ້ມີລັກສະນະຊ້ອນກັນ ເປັນຫ້າງສອງຊັ້ນ ໂດຍໃຊ້ມືຫ້າງສອງຂ້າງກົດພັບອີກສົ້ນໜຶ່ງລົງພັບເຂົ້າດ້ານໃນໃຫ້ປາຍຫ້າງ ສອງຂ້າງນັ້ນຕິດ ແລະ ສະເໝີກັນ.



ການສານຂົ້ນຮູບໜ່ວຍກ່ອງເຂົ້າ.

ການສານກ່ອງເຂົ້າຈະຕ້ອງປະກອບ ມີໜ່ວຍກ່ອງເຂົ້າແລະ ຝາກ່ອງເຂົ້າ ໃນການສານ ນັ້ນ ໃຫ້ມີລັກສະນະຄ້າຍກັນ ແຕ່ໃນການສານຝາ ກ່ອງເຂົ້ານັ້ນ ຕ້ອງໃຫ້ມີຂະໜາດໃຫ່ຍກວ່າ ກ່ອງ ເຂົ້າເລັກນ້ອຍຈຳນວນເສັ້ນທີ່ສານຈະຕ້ອງລົ່ນກັນ ປະມານ 3-4 ເສັ້ນ ເມື່ອໄດ້ໜ່ວຍກ່ອງເຂົ້າທີ່ສຳ ເລັດແລ້ວ ຈະຕ້ອງເລີ້ມສານຝາອັດ ໜ່ວຍກ່ອງ ເຂົ້ານັ້ນ.



ການສານມ້ວນສົ້ນຕອກ


ວິທີການສານແມ່ນຈະນຳເສັ້ນຕອກທີ່ມີ ຂະໜາດຄວາມກວ້າງປະມານ 4 - 5 ຊັ່ງຕິແມັດ ໜາປະມານ0.5ຊັ່ງຕິແມັດ ມາສານໃນລັກສະນະ ສະຫລ່ຽງດ້ວຍລາຍຕາແຫລວ ຝາກ່ອງເຂົ້າຈະ ສານ ຝາອັດສອງອັນ ນຳຂະໜາດຂອງກ່ອງເຂົ້າ ນັ້ນມາແທກ ໃຫ້ໄດ້ຕາມລັດສະໝີຂອງກ່ອງເຂົ້າ ກຽມໃຫ້ເປັນວົງມົນ ຕາມກ່ອງເຂົ້ານັ້ນ ເມື່ອຕັດ ກຽມລຽບຮ້ອຍແລ້ວ ນຳມາສອດໃສ່ສ່ວນທີ່ພັບໄວ້ ນັ້ນທາງດ້ານນອກແລະທາງດ້ານໃນນຳຫວາຍມາ ສານດ້ວຍລາຍດົ້ນຖອຍຫລັງ ທັງຝາກ່ອງເຂົ້າ ແລະ ໜ່ວຍກ່ອງເຂົ້າ ເຊັ່ນດຽວກັນແຕ່ຈະ ແຕກຕ່າງກັນເລັກນ້ອຍຄື ທາງດ້ານກົ້ນຂອງກ່ອງເຂົ້າແມ່ນຈະໃຊ້ໄມ້ຂັດກ່ອນທີ່ຈະສານ

ດ້ວຍຫວາຍເພື່ອເສີມຄວາມທົນທານ ເມື່ອສຳເລັດແລ້ວກໍ່ຈະນຳຕີນກ່ອງເຂົ້າມາປະກອບໃສ່ ສຳລັບຕີນຂອງມັນແມ່ນເຮັດດ້ວຍໄມ້ຍໍປ່າ ທີ່ຕັດມາແລ້ວແຊ່ນ້ຳໄວ້ປະມານ ໜຶ່ງມື້ ແລ້ວຈຶ່ງນຳມາເຫລົາ ໃຫ້ໄດ້ຕາມຂະໜາດປະມານກວ້າງ8-10ຊັງຕີແມັດຍາວຕາມຂະໜາດຂອງໜ່ວຍແຕ່ຈະນ້ອຍກວ່າເລັກນ້ອຍ.



ຂະໜາດຄວາມກວ້າງ ຄວາມສູງກ່ອງເຂົ້າ
ຂຶ້ນຢູ່ກັບຈຳນວນເສັ້ນຕອກ ແລະ ຄວາມຍາວເສັ້ນຕອກ

ຈາກນັ້ນນຳມາຂັດໃຫ້ຮູບວົງມົນມັດຕິດກັນດ້ວຍຫວາຍໃຫ້ແໜ້ນໃຊ້ເຫລັກເຈາະຕີນກ່ອງເຂົ້າ ແລະ ສ່ວນກົ້ນຂອງກ່ອງເຂົ້ານັ້ນ ສານຂອບໃຫ້ງາມລະອຽດດ້ວຍລາຍກ້ານປາສານດ້ວຍຫວາຍ ແລະ ເຮັດຫູປະກອບໃສ່ທັງສອງດ້ານເຄິ່ງຄືກັນດ້ວຍການມັດຫວາຍຢູ່ສ່ວນຂອງດ້ານເທິງຂອບຂອງກ່ອງເຂົ້າ ສ່ວນທາງດ້ານຕີນກ່ອງເຂົ້ານັ້ນ ກໍ່ຈະເຈາະໃຫ້ເປັນຮູທັງສອງດ້ານເຄິ່ງຄືກັນ ເພື່ອໄວ້ສອດເຊືອກມັດຕິດເພື່ອເວລາໃຊ້ງານຕໍ່ໄປ.



ເມື່ອສານສຳເລັດແລ້ວກໍ່ຈະຕາກຄວັນໄຟໄວ້ເພື່ອເພີ້ມຄວາມທົນທານ.

ຊົນເຜົ່າແງະ(ເຜົ່າກະຮຽງ).

ຊົນເຜົ່າກະຮຽງ(ແງະ) ແລະ ຊົນເຜົ່າຈະຕ່ອງເປັນຊົນເຜົ່າທີ່ດຳລົງຊີວິດຢູ່ເມືອງກະລຶມກ່ອນໝູ່.ຊົນເຜົ່າກະຮຽງເປັນກຸ່ມເຜົ່າໃຫ່ຍອັນດັບສອງຕ່ຳຈາກເຜົ່າກະຕູ ຊົນເຜົ່າກະຮຽງ ມີຊື່ເອີ້ນມາແຕ່ດຶກດຳບັນ ໃນໄລຍະຕ່ໍມາໄດ້ເອີ້ນຊື່ວ່າ "ເຜົ່າແງະ" ເນື່ອງຈາກວ່າໃນເມື່ອກ່ອນໄດ້ມີຄົນຝຣັ່ງເຂົ້າມາໃນເຂດນີ້ແລະໄດ້ສອບຖາມເຂົາວ່າເປັນຄົນເຜົ່າໃດ ພວກເຂົາກ່ໍຕອບວ່າ "ແງະຈອມ" ຊຶ່ງແປວ່າ "ບ່ໍຮູ້" ເຂົາກ່ໍໄດ້ຖາມຊ້ຳອີກຄັ້ງ ຄົນແງະກ່ໍຕອບວ່າ "ແງະຈຶກ" ຊຶ່ງແປວ່າ "ບ່ໍຈັກ" ເມື່ອຖາມອີກກ່ໍຕອບວ່າແຕ່ວ່າ "ແງະຈອມ ແງະຈຶກ " ດັ່ງນັ້ນຄົນຝຣັ່ງຈຶ່ງໄດ້ຮຽກຊື່ຊົນເຜົ່ານີ້ດ້ວຍຄວາມເຂົ້າໃຈຜິດວ່າ " ຊົນເຜົ່າ ແງະ" [1]

ຄົນເຜົ່າແງະຈຶ່ງຕິດປາກຈົນມາຮອດປະຈຸບັນ ແລະ ມັກຈະໃຊ້ຄວບຄູ່ກັນໄປກັບຊື່ເດີມຄື "ກະຮຽງ" ສັງເກດໄດ້ວ່າເມື່ອຖາມເຖິງຊື່ເຜົ່າວ່າເປັນຄົນເຜົ່າໃດ ສ່ວນຫລາຍຈະຕອບວ່າ"ກະຮຽງ"ຫລື"ຄົນກະຮຽງ" ແຕ່ຄົນຊົນເຜົ່າອື່ນໆເຂົາມັກຈະເອີ້ນວ່າ"ເຜົ່າແງະ" ກtຮຽງ ຫລື ແງະ ໄດ້ແບ່ງອອກເປັນສອງກຸ່ມໃຫ່ຍ ໂດຍອີ່ງຕາມລັກສະນະຂອງພື້ນທີ່ຢູ່ອາໄສຄື: "ກຮຽງດ~ຣ" ຈະຕັ້ງເຮືອນຢູ່ຕາມແຄມນ້ຳເຊກອງ ແລະ "ກຮຽງໂກ~ະຮ" ມັກຈະຕັ້ງເຮືອນຢູ່ຕາມພູດອຍຄຳວ່າ "ດ~ະຮ" ເອີ້ນຕາມສຳນຽງຂອງເຜົ່າແງະຈະເອີ້ນວ່າດາກຊຶ່ງແປວ່າ "ນ້ຳ" ແລະ "ໂກ~ະຮ" ເອີ້ນຕາມສຳນຽງພາສາແງະຊຶ່ງແປວ່າ "ພູເຂົາ"

ເຜົ່າແງະຖືໄດ້ວ່າເປັນກຸ່ມທີ່ມີປະຊາກອນຫລາຍກວ່າໝູ່ໃນເມືອງກະລຶມ ນັບຖືສາດສະໜາຜີ ມີພາສາເວົ້າເປັນຂອງຕົນເອງທີ່ໃຊ້ຕິດຕ່ໍສື່ສານກັນ ມີກົກເຄ້ົາມາຈາກພາສາມອນ - ຂະແມ ແຕ່ບ່ໍມີພາສາຂຽນ ໃນທ່ົວເມືອງຈະເວົ້າພາສາແງະເປັນຫລັກ ເພື່ອການຕິດຕ່ໍກັນ ສ່ວນພາສາເຜົ່າອື່ນໆ ມີຄວາມແຕກຕ່າງກັນໃນສ່ວນລາຍລະອຽດເລັກນ້ອຍ ແລະ ມັກອາໄສຢູ່ຮ່ວມກັນເປັນບ້ານໃຫ່ຍກວ່າຊົນເຜົ່າອື່ນໆເຊ່ັນ: ເຜົ່າກະຕູ ແງະ ຈຶ່ງກາຍເປັນກຸ່ມຊົນເຜົ່າຫລັກທີ່ມີອິດທິພົນ ທາງດ້ານວັດທະນະທຳສູງ ໃນເມືອງກະລຶມນອກຈາກເຜົ່າແງະ ແລ້ວຍັງມີ ເຜົ່າກະຕູ, ຈະຕ່ອງ, ຕະໂອ່ຍ ທີ່ມີພາສາເວົ້າເປັນຂອງໂຕເອງ. ດັ່ງນັ້ນໃນທ່ົວເມືອງກະລຶມຈຶ່ງໃຊ້ພາສາແງະເປັນການຕິດຕ່ໍພົວພັນເຊ່ືງກັນແລະກັນ.


---

[1] (17/12/ 03 ສຳພາດ: ໜ່ໍ ຄຳເກິດ ແສງມະນີ ອາຍຸ 58 ປີ ຮອງນາຍບ້ານ ບ້ານໜາດວີ)

ສະພາບໂດຍລວມຂອງ ບ້ານຫາດວີ ເມືອງກະລຶມ ແຂວງເຊກອງ

ບ້ານຫາດວີ ບ້ານດັ່ງເດີມຕັ້ງຢູ່ເໜືອແກ້ງກາວ ຫລັງຈາກນັ້ນກໍ່ຍ້າຍລົງມາຕັ້ງ ບ້ານຢູ່ປາກຕາຢາຍ ຢູ່ໄດ້ປະມານ 3 ປີ ກໍ່ຍ້າຍລົງມາຕັ້ງຢູ່ເຂດແກ້ງປືນ ໃນປີ 1964. ພໍມາເຖິງປີ 1971-72 ຊາວບ້ານໄດ້ຍົກຍ້າຍມາຢູ່ເຂດປາກໂຈນ. ໃນປີ 1977-78 ກໍ່ໄດ້ ຍ້າຍໄປອີກເທື່ອໜຶ່ງ ໄປຢູ່ບ້ານປາກຕັ່ງແລ ບ້ານປາກຕັ່ງແລນີ້ເປັນບ້ານເກົ່າແກ່ແຫ່ງໜຶ່ງ ຂອງຊາວບ້ານ ບ້ານຫາດວີ ມາເຖິງປີ 1993 ຊາວບ້ານຈຶ່ງໄດ້ພາກັນຍົກຍ້າຍມາຕັ້ງບ້ານ ຢູ່ເຂດຫາດວີ ແກ້ງຫ໋ວປາ ຈົນຮອດປະຈຸບັນນີ້ ແລະກໍ່ໄດ້ໃສ່ຊື່ບ້ານໃໝ່ວ່າ "ບ້ານຫາດວີ "

ແຜນທີ່ ເມືອງກະລຶມ
KALUM DISTRICT MAP



ສາເຫດຂອງການຍົກຍ້າຍບ້ານໄປມາຢູ່ເລື້ອຍໆ ມີຫລາຍສາເຫດ ອັນທີ່ໜຶ່ງ ແມ່ນຍ້ອນສິ່ງຄາມທຳລາຍບ້ານເຮືອນ. ເຫດຜົນທີ່ສອງແມ່ນຍ້ອນຍ້າຍໄປຕາມເຂດດິນ ທຳມາຫາກິນ ແລະ ການຜະລິດ ຂາດເຂີນ

ບ້ານຫາດວີ ແມ່ນບ້ານຂອງຊົນເຜົ່າແງະ(ກະຮຽງ)ປະຈຸບັນປະກອບມີ30 ຫລັງ ຄາເຮືອນ, ມີ36 ຄອບຄົວ, ປະຊາກອນທັງໝົດ218 ຄົນ, ຍິງ146ຄົນ ຊາຍແດນຕິດກັບ ເຂດບ້ານຕ່າງໆດັ່ງນີ້:

ທິດເໜືອ: ຕິດກັບບ້ານ ຫາດແປະ.

ທິດໃຕ້: ຕິດກັບບ້ານ ຮ້ຽໃຕ້.

ທິດຕາເວັນອອກ: ຕິດກັບບ້ານ ຕ້ຽກາດ.

ທິດຕາເວັນຕົກ: ຕິດກັບບ້ານ ຕະນົບ (ແຂວງສາລະວັນ).

ບ້ານຫາດວີ ເປັນບ້ານໜຶ່ງທີ່ຕັ້ງຢູ່ແຄມນ້ຳເຊກອງ ຊຶ່ງເປັນແມ່ນ້ຳສາຍຫລັກທີ່ຫລໍ່ລ້ຽງ ປະຊາຊົນເຊກອງມາຕັ້ງແຕ່ໃດໆມາ ພວກເຂົາດຳລົງຊີວິດດ້ວຍການຖາງປ່າ, ເຮັດໄຮ່ ການດຳລົງຊີວິດແມ່ນອີ່ງໃສ່ທຳມະຊາດເປັນຕົ້ນຕໍ່.



ສະພາບທາງຂຶ້ນ
ຈາກນ້ຳເຊກອງ ຂອນຂ້າງຊັ້ນເລັກນ້ອຍ



ສະພາບພາຍໃນໝູ່ບ້ານ
ຂອງບ້ານຫາດວີ

ການດຳລົງຊີວິດໃນຮອບ ໜຶ່ງປີ ຂອງປະຊາຊົນ ບ້ານຫາດວີ

ອາຊີບຫລັກຂອງຊົນເຜົ່າແກ ແມ່ນການຖາງປ່າ-ເຮັດໄຮ່ ໃນໃນປະຈຸບັນເຂົ້າ ທີ່ປູກເປັນຕົ້ນຕໍ່ແມ່ນເຂົ້າໜຽວ ປູກເຂົ້າຈ້າວແດ່ເລັກນ້ອຍ ນອກຈາກການປູກເຂົ້າແລ້ວ ຍັງປູກພືດທີ່ເປັນອາຫານເສີມເຊັ່ນ: ສາລີ, ມັນຕົ້ນ, ເຜືອກ, ມັນດ້ຳ ເພື່ອເອົາໄວ້ຫຸງ ຫລື ໜຶ່ງປົນກັບເຂົ້າໜຽວເມື່ອເວລາອິດເຂົ້າ ຍັງມີການປູກ, ກວ້ຍ, ອ້ອຍ, ໝາກອຶ, ໝາກ ແຕງ, ໝາກເຂືອ, ຜັກສະນິດຕ່າງ ທີ່ໃຊ້ເຂົ້າໃນການປຸງແຕ່ງອາຫານໃນຊີວິດປະຈຳວັນ ນອກຈາກພືດຜັກຕ່າງໆ ທີ່ໄດ້ກ່າວມານັ້ນພວກເຂົາຍັງມັກປູກຢາສູບ ເນື່ອງຈາກວ່າຄົນ ຊົນເຜົ່ານີ້ມັກສູບຢາຫລາຍບໍ່ວ່າຈະເປັນຜູ້ໃຫ່ຍ ເດັກນ້ອຍ ຜູ້ສາວ ກໍ່ຈະສູບກັນຕະຫລອດ ເວລາ ເຖິງຈະເປັນເວລາຕຳຫູກສະເພາະແມ່ຍິງ ແລະ ໃນເວລາລົມກັນໃນເວລາຕ່າງໆ.

ສຳລັບໄລຍະເວລາທີ່ເຮັດການຜະລິດຂອງຊົນເຜົ່ານີ້ດັ່ງຕໍ່ໄປນີ້:

ການຖາງໄຮ່: ໃນໄລຍະເດືອນໜຶ່ງຕໍ່ໃສ່ເດືອນສອງ ພວກເຂົາຈະເລີ້ມຖາງໄຮ່ ກ່ອນຈະເລີ້ມແມ່ນຈະຫ້າງຫາກະກຽມອຸປະກອນຕ່າງໆເຊັ່ນ:ຂວານ,ພ້າທີ່ໃຊ້ໃນການຖາງ ໄຮ່ກ່ອນຈະຖາງໄຮ່. ຫາກວ່າເປັນໄຮ່ທີ່ບຸກເບີກໃໝ່ນັ້ນຈະຕ້ອງເຮັດພິທີຂໍດິນໄຮ່ ຈາກຜີ ປ່າ-ຜີດົງເສຍກ່ອນຄືໃນເບື້ອງຕົ້ນ ພວກເຂົາຈະຖາງໄວ້ປະມານ1-2ແມັດຈາກນັ້ນກໍ່ ເມື່ອ ນອນສ່ຽງຄວາມຝັນ ຖ້າຫາກວ່າຝັນດີກໍ່ໝາຍຄວາມວ່າໃຫ້ເລີ້ມຖາງໄດ້ ແຕ່ຖ້າຝັນບໍ່ດີກໍ່ ໃຫ້ໄປຖາງເອົາບ່ອນໃໝ່, ດ້ວຍການສ່ຽງຄວາມຝັນເຊັ່ນເດີມ ແລະໃນມື້ທີ່ສ່ຽງຄວາມຝັນ ຢູ່ນັ້ນຈະບໍ່ໃຫ້ຄົນອື່ນໆ ຫລືຄົນພາຍໃນໝູ່ບ້ານເຂົ້າເຮືອນເດັດຂາດ ຈະຂະລຳມື້ໜຶ່ງພາຍ ຫລັງທີ່ຊອກໄດ້ຈຶ່ງສາມາດໃຫ້ຄົນອື່ນໆຂຶ້ນເຮືອນໄດ້ ໄຮ່ທີ່ຖາງໃໝ່ນັ້ນຈະໃຊ້ໄດ້ພຽງ2 -3 ປີເທົ່ານັ້ນ. ຫລັງຈາກນັ້ນຈະຕ້ອງປະໄວ້ໄລຍະໜຶ່ງ ປະມານ 5 - 6 ປີ ຈຶ່ງສາມາດກັບມາ ນຳໃຊ້ໄດ້ ໃນລະຫວ່າງນີ້ຄົນຜູ້ອື່ນຈະມານຳໃຊ້ ບໍ່ໄດ້ ເດັດຂາດ ຖ້າບໍ່ໄດ້ຮັບອະນຸຍາດ.

ຈູດໄຮ່:ໄລຍະຈູດໄຮ່ແມ່ນເລີ້ມ ເດືອນ 3 ຕໍ່ໃສ່ເດືອນ4 ການຈູດໄຮ່ແມ່ນ ພວກ ເຂົາຈະເລີ້ມຈູດ ພາຍຫລັງທີ່ຖາງໄຮ່ສຳເລັດ ແລະໄດ້ຕາກໃຫ້ແຫ້ງປະມານ 2 - 3 ອາທິດ ຈະຕ້ອງຈູດກ່ອນຝົນຈະຕົກໃນເວລາທີ່ຈູດໄຮ່ນັ້ນເຂົາຈະຄະລຳ1ມື້ບໍ່ໃຫ້ເວົ້ານຳຄົນແລະບໍ່ ໃຫ້ຖືກທາຍນຳຄົນຮ້ອງຖາມຄົນ ຫ້າມໃຫ້ຄົນນອກເຂົ້າບ້ານຈົນກວ່າຈະໄດ້ຈູດໄຮ່ເຊື່ອ ກັນວ່າຈະເຮັດໃຫ້ໄຟໄໝ້ໄມ້ດີ ຈົນເຖິງກະຕໍ ແລະ ໄໝ້ລາມໄປທົ່ວໄຮ່ຕໍ່ຈາກນັ້ນປະມານ 15 - 20 ມື້ກໍ່ຈະຮີ້ໄຮ່.

ສັກເຂົ້າໄຮ່: ໄລຍະເລີ້ມ ແມ່ນເດືອນ4ຕ່ໃສ່ເດືອນ 5 ໃນການສັກເຂົ້າແມ່ນເຂົາ ຈະນຳໄມ້ສັກເຂົ້າທີ່ເຮັດຈາກໄມ້ແກ່ນຫລືໄມ້ເນື້ອແຂງຜູ້ຊາຍຈະເປັນຜູ້ສັກໂດຍໃຊ້ສອງມື ຈັບແລ້ວສັກໄປທາງໜ້າ ສ່ວນຜູ້ຍິງເປັນຜູ້ຢອດເມັດໄປນຳຫລັງ ຊຶ່ງຈະນຳເຂົ້າທີ່ຢູ່ໃນກະ ເຈາະທີ່ມັດໄວ້ແອວດ້ານຂ້າງ ແລ້ວກ່ໂຄມດິນຄືນ ໃນໄລຍະສັກເຂົ້າແລ້ວພວກເຂົາຈະສັກ ສາລີ, ເມັດພືດອື່ນໆ ເຊັ່ນ: ໝາກອີ, ໝາກແຕງ, ໄວ້ບໍລິເວນແຄມໄຮ່ໄປພ້ອມໆກັນ ໃນ ໄຮ່ຕອນດຽວກັນ ທຸກຄອບຄົວຈະຕ້ອງສັກເຂົ້າແຂ່ງກັບເວລາ ຖ້າຫາກວ່າຄອບຄົວໃດສັກ ເຂົ້າແລ້ວໄວກ່ອນ ກ່ໍຈະໄປຊ່ວຍຄອບຄົວທີ່ຍັງບ່ທັນແລ້ວ ເພາະວ່າຖ້າບ່ແລ້ວຈະເຮັດໃຫ້ ຫຍຸ້ງຍາກໃນການເກັບກ່ຽວ ເພາະວ່າເຂົ້າມັນຈະບ່ສຸກພ້ອມກັນ ເວລາກ່ຽວຈະກ່ຽວຍາກ ໄລຍະທີ່ກຳລັງສັກເຂົ້າໄຮ່ນີ້ ເປັນຊ່ວງເວລາທີ່ຈະຕ້ອງຄະລຳຫລາຍທີ່ສຸດ ຜູ້ຊາຍບ່ໃຫ້ ຕັດຜົມສ່ວນຜູ້ຍິງບ່ໃຫ້ເອົານ້ຳເຂົ້າມອກມາສະຜົມເຊື່ອວ່າຈະເຮັດໃຫ້ເຂົ້າລົບເຮັດໃຫ້ເຂົ້າ ອອກຮວງບ່ງາມ ຫລ ອາດ ເຮັດໃຫ້ແມງໄມ້ມາກັດກິນຕົ້ນເຂົ້າ.

ເສຍຫຍ້າ: ໄລຍະເດືອນ5ຕ່ໃສ່ເດືອນ6 ພໍສັກເຂົ້າແລ້ວໄລຍະໜຶ່ງຝົນກ່ໍຈະຕົກ ເຂົ້າກ່ໍເລີ້ມແຕກໜໍ່ ຫຍ້າກ່ໍຈະປົ່ງແຊກຂຶ້ນນຳຕົ້ນເຂົ້າ ໃນໄລຍະນີ້ພວກເຂົາຈະຕ້ອງເສຍ ຫຍ້າອອກຈາກຕົ້ນເຂົ້າ ຖືວ່າເປັນການເສຍຫຍ້າຄັ້ງທຳອິດ ໃນໄລຍະນີ້ຖ້າຫາກວ່າຄອບ ຄົວໃດລ້ຽງສັດພວກເຂົາກ່ໍຈະພ້ອມກັນເຮັດ ຄອກຄວາຍ, ງົວ ໄວ້ເພື່ອປ້ອງກັນບ່ໃຫ້ມາທຳ ລາຍຕົ້ນເຂົ້າ ແລະ ພືດອື່ນໆທີ່ພວມຂຽວງາມ.

ໃນໄລຍະເດືອນ 7 ຕ່ໃສ່ ເດືອນ8 ເປັນໄລຍະທີ່ເຂົ້າໃນໄຮ່ກຳລັງ ຈະອອກຮວງ ດັ່ງນັ້ນຈ່ຶງຈະຕ້ອງເສຍຫຍ້າເລື້ອຍໆ ໝາຍວ່າຈະຕ້ອງເສຍຫຍ້າຕະຫລອດເວລາບ່ໃຫ້ມີ ຫຍ້າຂຶ້ນເພາະຈະມີຜົນເຮັດໃຫ້ເຂົ້າໃຫ່ຍອອກຮວງບ່ງາມ ແລະ ບ່ໄດ້ຈຳນວນເຂົ້າຫລາຍ ໃນເວລານີ້ສາລີກ່ໍເລີ້ມເປັນໝາກອ່ອນ ກະກຽມກ່ຽວໃນເດືອນຕ່ໄປ.

ໄລຍະເດືອນ 8 ຕ່ໃສ່ ເດືອນ9 ເຂົ້າກຳລັງຈະໄດ້ເກັບກ່ຽວ ໄລຍະນີ້ລະວັງທີ່ສຸດ ແມ່ນພວກໜູແມງໄມ້ຕ່າງໆ ຈະມາກິນເຂົ້າຊຶ່ງເຂົາຈະເຮັດເຄື່ອງສະນິດໜ່ຶງທີ່ສາມາດໄລ່ ນົກແມງໄມ້ ທີ່ເຮັດຈາກໄມ້ໄຜ່ເປັນປ່ອງ ຜູກສາຍເຊືອກໄວ້ຢູ່ຖຽງໄຮ່ເມື່ອນົກບິນມາກ່ໍຈະ ດ່ຶງສາຍເຊືອກນັ້ນເຮັດໃຫ້ໄມ້ໄຜ່ກະທົບກັນເກີດມີສຽງດັງ ສາມາດໄລ່ນົກໄດ້ ແລະ ໃນໄລ ຍະນີ້ ສາລີກ່ໍສາມາດເກັບກ່ຽວໄດ້ ໂດຍໃຫ້ແລ້ວກ່ອນຈະຮອດເວລາຮູດເຂົ້າດ ທີ່ເປັນວຽກ ທີ່ໜັກໃນເດືອນຕ່ຈາກນີ້ໄປ.

ໄລຍະເດືອນ 11 ເຖິງເດືອນ 12 ເຂົ້າໃນໄຮ່ກ່ໍເລີ້ມສຸກສ່ວນໄຮ່ໃດທີ່ມີເຂົ້າດ ກ່ໍ ແມ່ນສາມາດຮູດໄດ້ ຊຶ່ງເຂົາຈະເລີ້ມເກັບກ່ຽວໃນທ້າຍເດືອນ9ຕ່ໃສ່ຕົ້ນເດືອນ10

ຕໍ່ ຈາກນັ້ນກໍ່ຈະກ່ຽວເຂົ້າປີ ໄລຍະນີ້ເຂົາມັກຈະນຳເຂົ້າທີ່ກຳລັງສຸກ ນັ້ນມາເຮັດເຂົ້າ ເໜົ້າເພື່ອເຮັດຮີດ "ບຸນເຂົ້າໃໝ່" ຈະເຮັດພ້ອມກັນທັງໝົດບ້ານເປັນເວລາ 3 ມື້ ໃນຊ່ວງ ເວລານີ້ເຂົາຈະບໍ່ໃຫ້ຄົນນອກເຂົ້າບ້ານຫລືເຂົ້າໄຮ່ກ່ອນຈະເກັບກ່ຽວເຂົາຈະຕ້ອງໄດ້ເຮັດ ພິທີລວມກັນທັງໝົດບ້ານ ໂດຍທີ່ຂ້າໄກ່ເຮັດພິທີແລ້ວ ນຳເອົາເລືອດໄກ່ໃສ່ໃນກະບຸ້ງໄວ້ ເພື່ອແບ່ງກັນໃນແຕ່ລະເຮືອນ ເມື່ອພໍເຖິງວັນທີ່ຈະເກັບກ່ຽວ ກໍ່ຈະເອົາເລືອດໃນກະບຸ້ງນັ້ນ ສາດໃສ່ຕົ້ນເຂົ້າແລ້ວກໍ່ບອກຜີວ່າ"ໃຫ້ເຂົ້າໄດ້ຫລາຍຂຶ້ນທຸກປີໃຫ້ເຂົ້າໂຮມຢ່າໃຫ້ມົດແມງ ໄມ້ມາກິນ ໃຫ້ໄດ້ຜົນຜະລິດຫລາຍຂຶ້ນທຸກໆປີເດີ " ຈາກນັ້ນກໍ່ລົງມືກ່ຽວ

ພາຍຫລັງທີ່ກ່ຽວເຂົ້າໄດ້ໝົດ ແມ່ນຈະນຳມາຢຽບ ຫລັງຈາກນັ້ນກໍ່ຝັດເອົາແຕ່ ເມັດເຂົ້ານຳໄປໃສ່ກະພາ ແຕ່ມີເຂົ້າບາງສະນິດທີ່ສາມາດຮູດເອົາໂດຍບໍ່ຕ້ອງເອົາມາຢຽບ ຮູດໃສ່ກະເຈາະນຳໄປໃສ່ກະພາ ຈາກນັ້ນກໍ່ຂົນຂຶ້ນເລົ້າ ກ່ອນຈະນຳຂຶ້ນເລົ້າເຂົາຈະຕ້ອງ ໄດ້ເຮັດພິທີກ່ອນຄື ນຳເຂົ້າໃສ່ກະບຸ້ງພ້ອມທັງນົກແລະໜູໃສ່ກະບຸ້ງເຊັ່ນດຽວກັນຈາກນັ້ນ ກໍ່ຈະນຳໄປໄວ້ທີ່ຮ້ານ ທີ່ເຮັດໄວ້ໃກ້ກັບເລົ້າເຂົ້າ ຕໍ່ຈາກນັ້ນກໍ່ນຳອາຫານທີ່ຕຽມໄວ້ນັ້ນ ຂຶ້ນ ຮ້ານພ້ອມທັງຮ້ອງໃສ່ຜີວ່າ "ໃຫ້ມາກິນອາຫານ ນີ້ເດີ ຂໍໃຫ້ຮັກສາເຂົ້າໃນເລົ້າ ແລະກໍ່ຂໍໃຫ້ ໃນປີຕໍ່ໆໄປ ໃຫ້ໄດ້ເຂົ້າຫລາຍຂຶ້ນເລື່ອຍໆ ເດີ "


ສຳລັບຊົນເຜົ່າແງະ ສ່ວນຫລາຍແລ້ວແມ່ນຈະເຮັດເລົ້າເຂົ້າໄວ້ໃກ້ກັບໄຮ່ ຫລື ໃນໄຮ່ ເມື່ອຈະກິນເຂົ້າແຕ່ລະມື້ຈະຕ້ອງໄປຂົນມາໄວ້ປະມານ 2 - 3 ເທົ່ານັ້ນ.

ການປູກພືດອື່ນໆ ແລ້ວແມ່ນຈະປູກສາລີ ມັນຕົ້ນ, ເຜືອກ, ມັນດ້ຳ, ຄືຈະປູກ ພ້ອມກັນເວລາສັກເຂົ້າໄຮ່ ຊຶ່ງຈະປູກແຄມຮົ້ວໄຮ່ໄລຍະເດືອນ4ຕໍ່ໃສ່ເດືອນ5 ເນື່ອງຈາກ ວ່າໃນຊ່ວງນີ້ຈະມີຝົນຕົກ ເຮັດໃຫ້ມັນແຕກໜໍ່ໄວ ສາລີ ສາມາດເກັບໄດ້ໃນໄລຍະເດືອນ7 ພືດສະນິດອື່ນໆເຊັ່ນ: ໝາກອຶ, ໝາກແຕງ, ໝາກເຂືອ, ຈະເກັບໃນເດືອນ7-8 ພືດທີ່ວ່າ ນັ້ນແມ່ນເປັນອາຫານທີ່ດີສຸດສຳລັບເວລາອຶດເຂົ້າ. ນອກນັ້ນຍັງປູກພືດທີ່ສາມາດນຳໃຊ້ ໃນການປຸງແຕ່ງອາຫານເຊັ່ນ:ໝາກເຜັດ, ໝາກເລັນ, ຫົວຫອມ, ຂີງຂ່າ ແລະອື່ນໆ. ໂດຍ ສະເພາະປູກຢາສູບ ເພາະເຂົາຈະນິຍົມກັນຫລາຍ ທັງຍິງ, ຊາຍ, ນ້ອຍ, ໃຫ່ຍ .

ອຸປະກອນການເຮັດໄຮ່

№ 40 - ຊື່ພາສາລາວ: ພ້າ
- ຊື່ພາສາທ້ອງຖິ່ນ: ໂກະ
- ເຈົ້າຂອງເຄື່ອງ: ຄຳເກີດ
- ບ່ອນເກັບມ້ຽນ: ຖຸ່ງໄຮ່






- ຜູ້ນຳໃຊ້: ພໍ່,ລູກຊາຍ.
- ການນຳໃຊ້: ຖາງໄຮ່.

№ 42 - ຊື່ພາສາລາວ: ພ້າ

- ຊື່ພາສາທ້ອງຖິ່ນ: ໂກະ
- ເຈົ້າຂອງເຄື່ອງ: ຄຳເກີດ
- ບ່ອນເກັບມ້ຽນ: ຖ້ຽງໄຮ່






- ຜູ້ນຳໃຊ້: ພໍ່, ລູກຊາຍ
- ການນຳໃຊ້: ຖາງໄຮ່

ພ້າ (ໂກະ)

ພ້າເປັນເຄື່ອງມືຫລັກທີ່ໃຊ້ໃນການເຮັດໄຮ່ ລັກສະນະເດັ່ນຂອງພ້າແມ່ນຈະມີສັນທີ່ບໍ່ຊື່ ມີລັກສະນະໂຄ້ງຢູ່ສ່ວນສັນພ້າ ຄົມຂອງພ້າຈະໂຄ້ງງໍເລັກນ້ອຍ ທາງປາຍຄົມຈະມີສ່ວນປາຍແຫລມອອກມາເລັກນ້ອຍ ເພື່ອປ້ອງກັນຄົມຖືກກ້ອນຫີນໃນເວລາໃຊ້ງານ ສະເພາະພ້າຄວາມຍາວປະມານ30 - 40 ຊັ້ງຕິແມັດ ຄວາມກວ້າງຂອງປາຍພ້າ 7 ຊັ້ງຕິແມັດ ປາຍຕັດ ສ່ວນກົກຈະມີພຽງແຕ່ 1,5 - 2 ຊັ້ງຕິແມັດເທົ່ານັ້ນ ດ້າມຈັບມີຂະໜາດ 20 -25 ຊັ້ງຕິແມັດ ລວມຄວາມຍາວທັ້ງໝົດ 55 - 65 ຊັ້ງຕິແມັດ




ການຜະລິດ: ເຄື່ອງມື ທີ່ຮັບໃຊ້ເຂົ້າໃນການຜະລິດ ແມ່ນຈະເຮັດເອງຕາມສະພາບຄວາມເໝາະສົມຂອງການໃຊ້ງານ ເຫລັກທີ່ນຳມາໃຊ້ຜະລິດເອີ້ນວ່າ (ต่า) ເປັນສະນິດທີ່ແຂງແຮງທົນທານ ບໍ່ມີໝ້ຽງ ສ່ວນຫລາຍແມ່ນເຂົາຈະນຳເອົາເຫັລກທີ່ຢູ່ຕາມຊີ້ນສ່ວນຂອງລົດທີ່ປະຖິ້ມເຊັ່ນ: ແນບລົດທີ່ມີລັກສະນະຍາວ ຈາກນັ້ນນຳມາຕັດຕາມຂະໜາດຕ້ອງການໄປເຜົາໄຟຈົນໃຫ້ເຫລັກແດງ ແລ້ວຕີໃຫ້ໄດ້ຕາມຮູບແບບ ມີສັນ(ໂກຣນ) ໂຄ້ງເລັກນ້ອຍ ປາຍຕັດຊື່ ມີສ່ວນງໍເລັກນ້ອຍ(ໂງກ) ທາງກົກຂອງພ້າຈະນ້ອຍແຫລມເຂົ້າ ຄວາມໜາຕາມຂະໜາດຂອງສັນພ້າເພື່ອໄວ້ສູບໃສ່ດ້າມ ດ້າມທີ່ຈະໃຊ້ນັ້ນຈະຕ້ອງເປັນສ່ວນຂອງຮາກເພາະມັນໜາແລະແຂງແຮງທີ່ສຸດ ຖ້າເອົາສ່ວນອື່ນຈະແຕກງ່າຍບໍ່ສາມາດໃຊ້ການໄດ້.

ການນຳໃຊ້: ວິທີນຳໃຊ້ເພື່ອການຖາງໄຮ່ ຕັດຕົ້ນໄມ້ ມືຂວາຈັບດ້າມໃຊ້ແຮງຍົກຂຶ້ນສ່ວນທີ່ເປັນຄົມຂອງພ້າ ຟັນໄປທີ່ຕົ້ນໄມ້ ຜູ້ນຳໃຊ້ສ່ວນໃຫ່ຍຈະເປັນຜູ້ຊາຍ ທີ່ຈະໃຊ້ແຮງຫລາຍ.

24 / VII

№ 43 - ຊື່ພາສາລາວ: ຂວານ


- ຊື່ພາສາທ້ອງຖິ່ນ: ຈຽ
- ເຈົ້າຂອງເຄື່ອງ: ບຸນທ່ຽວ (ຜະລິດເອງ ປີ 2002)
- ບ່ອນເກັບມ້ຽນ: ຂັດໄວ້ຝາເຮືອນ



- ຜູ້ນຳໃຊ້: ຜູ້ຊາຍ.
- ການນຳໃຊ້: ບັກໄມ້ໃຫ່ຍ ເຈາະຄົກ.

№ 45 - ຊື່ພາສາລາວ: ຂວານ

- ຊື່ພາສາທ້ອງຖິ່ນ: ຈຽ
- ເຈົ້າຂອງເຄື່ອງ: ບຸນທ່ຽວ (ຜະລິດເອງ ປີ 2002)
- ບ່ອນເກັບມ້ຽນ: ຂັດໄວ້ຝາເຮືອນ



- ຜູ້ນຳໃຊ້: ຜູ້ຊາຍ
- ການນຳໃຊ້: ບັກໄມ້ໃຫ່ຍ,ເຈາະຄົກ.

ຂວານ (ຈ)

ຂວານເປັນເຄື່ອງມືທີ່ໃຊ້ຕັດຕົ້ນໄມ້ໃຫ່ຍ ທີ່ພ້າບໍ່ສາມາດຕັດໄດ້ ລັກສະນະຂອງ ຂວານແມ່ນຈະມີດ້າມໃຫ່ຍ, ຍາວ ສ່ວນຈັບຂອງຂວານຈະງໍເຂົ້າເລັກນ້ອຍ ສຳລັບດວງ ຂວານຄວາມກ້ວາງດ້ານຄົມ(ບຣາ) ສະເລ່ຍ6-8ຊັ້ງຕິແມັດ ຄວາມຍາວ19-24ຊັ້ງຕິແມັດ ບ່ອນທີ່ຕໍ່ໃສ່ດ້າມຂວານ ກວ້າງປະມານ 4-5 ຊັ້ງຕິແມັດ ສ່ວນດ້າມຂວານແບ່ງອອກເປັນ ສອງສ່ວນ ສ່ວນທີ່ໃຊ້ໄວ້ຈັບຂວານ ແລະ ສ່ວນທີ່ເປັນບ່ອນຈັບສຳລັບໃຊ້ງານ ຄວາມຍາວ ທັງໝົດປະມານ 60-66 ຊັ້ງຕິແມັດ ລັກສະນະຂອງດ້າມນັ້ນອາດຈະເປັນດ້າມໂຄ້ງງໍ ຫລື ຊື່ ຂຶ້ນຢູ່ກັບໄມ້ທີ່ນຳມາໃຊ້.


ການຜະລິດ:

ຂວານໃນເຂດນີ້ແມ່ນຈະຜະລິດຂຶ້ນເອງ ຂັ້ນຕອນການຕີຂວານນັ້ນ ກ່ຳນຳໃຊ້ເຫລັກແຜ່ນ ຫລືເຫລັກເສດກ່ຳໄດ້ເຊັ່ນດຽວກັນ ແຕ່ຈະຕ້ອງຫາ ຂະໜາດເຫລັກທີ່ຂ້ອນຂ້າງໜາປະມານ0,3-0,4 ຊັ້ງຕິແມັດ ນຳໄປເຜົ່າໄຟໃຫ້ແດງ ແລ້ວຕີໃຫ້ໄດ້ ຕາມຮູບແບບທີ່ຕ້ອງການ ສ່ວນທີ່ຈະໄວ້ສູບໃສ່ດ້າມນັ້ນເຂົ່າຈະເຫລັກໃຫ້ແບນອອກຫລັງ ຈາກນັ້ນກ່ຳຕີ ງໍເຂົ້າໃຫ້ເປັນຮູແລະຈອດເຫລັກໃຫ້ຕິດກັນ ຈຶ່ງສາມາດໃສ່ດ້າມຂວານນັ້ນໄດ້ ສຳລັບການເຮັດດ້າມຂວານຈະແບ່ງອອກເປັນສອງສ່ວນຄື: ສ່ວນທີ່ໜຶ່ງ ແມ່ນດ້າມທີ່ໃຊ້

ຈັບກັບດວງຂວານຈະເຮັດດ້ວຍໄມ້(ລຣວນ)ເປັນໄມ້ເນື້ອແຂງ ຊຶ່ງຈະຫາໄມ້ທີ່ມີລັກສະນະງ່ຫລືຫງ່າໄມ້ ທີ່ແຍກອອກເປັນສອງສ່ວນ ຕາມລັກສະນະທີ່ເຫັນຕາມຮູບຂວານ ສ່ວນທີ່ສອງ ແມ່ນເຮັດດ້ວຍໄມ້ໄລ່(ແລຣ) ຈະເອົາສະເພາະບ່ອນທີ່ແກ່ທີ່ສຸດຂອງລຳໄມ້ໄລ່ນັ້ນ (ໄກ້ກັບຮາກ)ໄມ້ໄລ່ເປັນໄມ້ທີ່ມີທ່ກົມມີຮູຢູ່ຂ້າງໃນເຂົາຈະນຳດ້ານ(ຕອ່ງ) ສ່ວນທີ່ໜຶ່ງນັ້ນ ມາຕອກໃສ່ອັດໃສ່ກັນ ແລ້ວຮັດແໜ້ນດ້ວຍເຫລັກປອກທ້ງສ່ວນກົກ ແລະ ສ່ວນປາຍຂອງ ດ້ານສ່ວນທີ່ສອງນັ້ນ ເພື່ອປ້ອງກັນບ່ໃຫ້ປ້ອງໄມ້ໄລ່ແຕກ ພາຍຫລັງທີ່ເຮັດດ້ານສຳເລັດ ແລ້ວຈຶ່ງນຳຂວານນັ້ນມາປະກອບໃສ່ດ້ານ ຕອກໃຫ້ແໜ້ນ ຖ້າບ່ແໜ້ນເຂົາເອົາສິ້ນໄມ້ມາ ຕອກເຂົ້າຕື້ມໃຫ້ແໜ້ນ.



ໃຊ້ສອງມືຈັບດ້ານ
ໃຊ້ແຮງແຮງຟັນໄປທີ່ຕົ້ນໄມ້




ການນຳໃຊ້: ນຳໃຊ້ໃນການບັກຕົ້ນໄມ້ ໃຫ່ຍ, ຜ່າຟືນ, ຕັດຕົ້ນໄມ້ໃຫ້ເປັນທ່ອນໃຊ້ຕັດ ເສົາເຮືອນ, ຖາກໄມ້ ທີ່ເຮັດເຮືອນ ເຈາະໄມ້ເຮັດ ເຮືອ, ຕັດໄມ້ເຮັດຄົກຕຳເຂົ້າແລະອື່ນໆ ອີກຜູ້ໃຊ້ ຈະເປັນຜູ້ຊາຍ ສຳລັບຜູ້ຍິງຈະບ່ນຳໃຊ້.


ໃຊ້ໄວ້ຕັດສະເພາະການຕັດຕົ້ນ
ໄມ້ໃຫ່ຍໃນໄຮ່ ຫລື ຕັດຕົ້ນໄມ້ເຮັດເຮືອນ.

№ 46 - ຊື່ພາສາລາວ: ແອ

- ຊື່ພາສາທ້ອງຖິ່ນ: ແອ
- ເຈົ້າຂອງເຄື່ອງ: ບູນທ່ຽວ (ຜະລິດເອງ ປີ 2002)
- ບ່ອນເກັບມ້ຽນ: ເຮືອນຄົວ ຝາເຮືອນ









- ຜູ້ນຳໃຊ້: ຍິງ,ຊາຍ
- ການນຳໃຊ້: ເສຍຫຍ້າ,ເສຍໄຮ່

№ 47 - ຊື່ພາສາລາວ: ແວ໋ງ

- ຊື່ພາສາທ້ອງຖິ່ນ: ແວ໋ງ
- ເຈົ້າຂອງເຄື່ອງ: ຄຳເກີດ (ຜະລິດເອງ ປີ 2000)
- ບ່ອນເກັບມ້ຽນ: ເຮືອນຄົວ ຝາເຮືອນ






- ຜູ້ນຳໃຊ້: ຍິງ,ຊາຍ
- ການນຳໃຊ້: ເສຍຫຍ້າ,ເສຍໄຮ່

ແວກເສຍຫຍ້າ (ແວ)

ເປັນເຄື່ອງໃຊ້ໃນເວລາເສຍຫຍ້າ ລັກສະນະຈະມີດ້າມຂອ້ງຂ້າງຊື່ ປາຍແວ່ງຈະງໍເຂົ້າເລັກນ້ອຍ ປາຍນັ້ນຈະມົນເຂົ້າ ມີບາງດວ່ງປາຍຫັກງໍເຂົ້າປະມານ 90 ອົງສາ ສຳລັບແວ່ງຄວາມຍາວປະມານ 8 - 9 ຊັ່ງຕິແມັດ ຄວາມຍາວສ່ວນທີ່ງໍປະມານ 10 -11 ຊັ່ງຕິແມັດ ເວລາໃຊ້ປັ່ນໃຫ້ສ່ວນຄົມນັ້ນຂູດລົງດິນ ດ້າມຈັບນັ້ນມີຂະໜາດປະມານ 30-40 ຊັ່ງຕິແມັດ ລວມຄວາມຍາວທັ່ງໝົດ 39 - 45 ຊັ່ງຕິແມັດ ຮູບຮ່າງຂອງແວ່ງຈະແຕກຕ່າງກັນຕາມຮູບທີ່ເຫັນຕົວຈິງ.





ການຜະລິດ: ໃນການຜະລິດແວ່ງກໍ່ບໍ່ມີຂັ້ນຕອນຫຍຸ່ງຍາກ ເຮັດດ້ວຍເຫລັກທີ່ມີຂະໜາດປະມານ 15 -20 ຊັ່ງຕິແມັດ ໜາປະມານ 0,3 -0,4 ຊັ່ງຕິແມັດ ກວ້າງປະມານ 5-6 ຊັ່ງຕິແມັດ ນຳໄປເຜົາໄຟຕີສະເພາະສ່ວນທີ່ເປັນຄົມນັ້ນບາງ ເພື່ອງ່າຍໃນເວລາຝົນຕີແລະປັບໃຫ້ປາຍມົນເປໃຫ່ຍອອກກວ່າທາງກົກຂອງແວ່ງ ດ້າມເຮັດດ້ວຍໄມ້ໄຜ່(ແລຣ) ຕັດໃຫ້ໄດ້ຕາມຂະໜາດ ນຳມາເຈາະຮູພໍສູບດ້າມໄດ້ ນຳແວ່ງມາໃສ່ ຕອກໃຫ້ແໜ້ນ ຖ້າບໍ່ແໜ້ນກໍ່ຈະນຳເສດໄມ້ມາອັດໃສ່ໃຫ້ແໜ້ນ ຈາກນັ້ນກໍ່ນຳປອກເຫລັກມາຮັດ ໃຫ້ແໜ້ນທັ່ງສ່ວນປາຍ ແລະ ສ່ວນກົກຂອງດ້າມຈັບນັ້ນ ເພື່ອເສີມຄວາມທົນທານເຮັດໃຫ້ດ້າມ ບໍ່ແຕກງ່າຍ.

ການນຳໃຊ້: ນຳໃຊ້ໃນການເສຍຫຍ້າໂດຍໃຊ້ມືຂວາຈັບດ້າມຂອງຂວານ(ຕ່ອງ)ນັ້ນ ແລ້ວສັບລົງດິນສ່ວນທີ່ມີຕົ້ນຫຍ້າ ຖາກ ຫລື ຂຸດ ໃຫ້ຫຍ້ານັ້ນອອກຈາກດິນ ເຄື່ອງມືສະນິດນີ້ ເປັນເຄື່ອງມືທີ່ໃຊ້ສະເພາະໃນການເສຍຫຍ້າໃນໄຮ່ທີ່ຢູ່ພູເທົ່ານັ້ນ ແຕ່ຖ້ານຳໃຊ້ໃນການເສຍຫຍ້າເຂດທົ່ງພຽງຈະບໍ່ສະດວກເທົ່າທີ່ຄວນຜູ້ນຳໃຊ້ຫລັກຈະເປັນຜູ້ຍິງ ຜູ້ຊາຍນຳໃຊ້ໄດ້ ແຕ່ເປັນບາງເວລາ.

№ 48 - ຊື່ພາສາລາວ: ຂວານຖາກໄມ້

- ຊື່ພາສາທ້ອງຖິ່ນ: ປົກ
- ເຈົ້າຂອງເຄື່ອງ: ບຸນທ່ຽວ(ຜະລິດເອງ ປີ 2002)
- ບ່ອນເກັບມ້ຽນ: ເຮືອນຄົວ ຝາເຮືອນ






- ຜູ້ນຳໃຊ້: ຊາຍ
- ການນຳໃຊ້:ຖາກເຮືອ,ຖາກເສົາ,ແປ້ນປູ

№ 49 - ຊື່ພາສາລາວ: ຂວານຖາກໄມ້


- ຊື່ພາສາທ້ອງຖິ່ນ: ປົກ
- ເຈົ້າຂອງເຄື່ອງ: ບຸນລົ້ນ (ຜະລິດເອງ ປີ 1978)
- ບ່ອນເກັບມ້ຽນ: ເຮືອນຄົວ ຝາເຮືອນ



- ຜູ້ນຳໃຊ້: ຊາຍ.
- ການນຳໃຊ້: ຖາກເຮືອ,ຖາກເສົາ, ແປ້ນປູ.

ຂວານຖາກໄມ້ (ປົກ)

ລັກສະນະຄ້າຍຄືກັບຂວານຟັນໄມ້ ຈະຕ່າງກັນໃນເວລາໃຊ້ງານເທົ່ານັ້ນ ສຳລັບຂວານຖາກໄມ້ຂະໜາດຄວາມຍາວປະມານ10-12 ຊັ່ງຕິແມັດ ຄວາມກວ້າງຂອງຄົມຢູ່ໃນລະຫວ່າງ 4-5 ຊັ່ງຕິແມັດ ສ່ວນທາງທີ່ຍຶດຕິດກັບໄມ້ ກວ້າງປະມານ 3-4 ຊັ່ງຕິແມັດ ດ້ານຂວານແບ່ງອອກເປັນສອງສ່ວນ ສ່ວນທີ່ເປັນດ້ານຈັບຂອງຂວານ ແລະ ສ່ວນທີ່ເປັນບ່ອນຈັບໃນເວລາໃຊ້ງານ ລວມຄວາມຍາວທັງໝົດ 55 - 65 ຊັ່ງຕິແມັດ.




ການຜະລິດ: ຂັ້ນຕອນການຜະລິດ ແມ່ນນຳເສດເຫລັກ ຂະໜາດຍາວປະມານ 10 -12 ຊັ່ງຕິແມັດ ກວ້າງປະມານ 5 -7 ຊັ່ງຕິແມັດ ໜາປະມານ 0,3 - 0,5 ຊັ່ງຕິແມັດ ໃຊ້ໄຟເຜົາໃຫ້ແດງ ເພື່ອໃຫ້ຕີໄດ້ງ່າຍ ໃຫ້ສ່ວນປາຍບາງເພື່ອການຝົນໄດ້ງ່າຍ ແລະ ຕີໃຫ້ມີຂະໜາດກວ້າງອອກພໍປະມານ ສະເພາະສ່ວນທາງກົກຈະຕີແຜ່ອອກ ນຳແບບເຫລັກໃຫ້ໄດ້ຕາມຂະໜາດໄມ້ ຕີສອງສິ້ນໃຫ້ງໍເຂົ້າກັນໃຫ້ເປັນຮູ ໃນການຕີຈະບໍ່ຕີໃຫ້ບາງເພາະອາດຈະແຕກຫັກງ່າຍໄດ້ ຕໍ່ຈາກນັ້ນກໍ່ຈະເຮັດດ້ານ ຊຶ່ງຈະຕ້ອງເປັນໄມ້ເນື້ອແຂງ ຫລືເອີ້ນວ່າ (ໄມ້ລຣວນ) ຫາສະເພາະສ່ວນທີ່ເປັນຂໍ້ໄມ້ ໄມ້ທີ່ເປັນງ່າ ຖາກເອົາເປືອກໄມ້ ອອກໃຫ້ຍັງແຕ່ເນື້ອຂອງໄມ້ ແລ້ວເຫລົາສ່ວນທີ່ຈະສູບໃສ່ດ້ານ ໃຫ້ໄດ້ຂະໜາດເທົ່າຮູຂອງໄມ້ໄລ່ທີ່ຈະໃຊ້ເຮັດດ້ານຈັບອີກສ່ວນໜຶ່ງນັ້ນ ຂະໜາດປະມານ15 -18 ຊັ່ງຕິແມັດ ພໍຈັບໄດ້ງ່າຍນຳມາຕອກໃສ່ ໃຫ້ແໜ້ນ ສ່ວນຂວານຈະນຳມາຕອກໃສ່ປາຍ ດ້ານໃຫ້ແໜ້ນ ແລະ ຝົນໃຫ້ຄົມ ພ້ອມທີ່ຈະໃຊ້ງານໄດ້.

ການນຳໃຊ້: ໃຊ້ໄວ້ຕັດຕົ້ນໄມ້ໃຫ່ຍ ນຳໃຊ້ໃນການຖາກໄມ້ ໃຫ້ກ້ຽງໄດ້ດີ ໃຊ້ໄວ້ຖາກແປ້ນເຮືອນ ເຈາະກົກໄມ້ທີ່ໃຊ້ໄວ້ເຮັດເຮືອ ໄວ້ເຈາະຄົກຕຳເຂົ້າ ຫລື ໃຊ້ເຂົ້າໃນການເຮັດໄຮ່, ຂຸດກະຕໍ່ໄມ້ ທີ່ກີດຂວາງໃນໄຮ່ ຜູ້ນຳໃຊ້ຫລັກຈະເປັນຜູ້ຊາຍ.

№ 50 - ຊື່ພາສາລາວ: ມີດ

- ຊື່ພາສາທ້ອງຖິ່ນ: ຈີ້
- ເຈົ້າຂອງເຄື່ອງ: ບຸນລົ້ນ
- ບ່ອນເກັບມ້ຽນ: ຂັດໄວ້ຂ້າງຝາ






- ຜູ້ນຳໃຊ້: ຊາຍ
- ການນຳໃຊ້: ຈັກສານ,ກະເຈາະ.

№ 51 - ຊື່ພາສາລາວ: ມີດ

- ຊື່ພາສາທ້ອງຖິ່ນ: ຈີ້
- ເຈົ້າຂອງເຄື່ອງ: ບຸນລົ້ນ
- ບ່ອນເກັບມ້ຽນ: ຂັດໄວ້ຂ້າງຝາ






- ຜູ້ນຳໃຊ້: ຊາຍ
- ການນຳໃຊ້: ຈັກສານ,ກະເຈາະ.

№ 52 - ຊື່ພາສາລາວ: ມີດ
- ຊື່ພາສາທ້ອງຖິ່ນ: ຈີ້
- ເຈົ້າຂອງເຄື່ອງ: ບຸນລົ້ນ
- ບ່ອນເກັບມ້ຽນ: ຂັດໄວ້ຂ້າງຝາ





- ຜູ້ນຳໃຊ້: ຊາຍ
- ການນຳໃຊ້: ຈັກສານ, ກະເຈາະ

ມີດ (ຈີ້)


ມີດໃຊ້ໄວ້ໃນການເຫລົາຕອກ ໄວ້ຊອຍເຄື່ອງປຸງແຕ່ງອາຫານ ລັກສະນະລວມແລ້ວດ້ານມີດ(ຕ່ອງ) ຈະຍາວກວ່າດວງມີດຫລາຍ ຄວາມຍາວປະມານ 35 - 45 ຊັ່ງຕິແມັດ ສ່ວນມີດມີຄວາມຍາວປະມານ10-15ຊັ່ງຕິແມັດ ສ່ວນຄົມຈະໂຄ້ງມົນເລັກນ້ອຍ ປາຍແຫລມ ແລະ ງໍ ສຳລັບສ່ວນກົກຈະນ້ອຍລົງວເຂົ້າເພື່ອໄວ້ສູບດ້ານນັ້ນ.



ການຜະລິດ: ໃຊ້ເຫລັກທີ່ມີຂະໜາດ15 -20 ຊັ່ງຕິແມັດ ກວ້າງປະມານ1,5 - 2 ຊັ່ງຕິແມັດ ໜາ0,4 -0,5ຊັ່ງ ຕິແມັດ.ເຜົາໄຟໃຫ້ແດງ ເພື່ອຕີໄດ້ງ່າຍສະເພາະສ່ວນຄົມ ຕີໃຫ້ບາງເລື້ອຍໆ ຕີອອກໃຫ້ໄດ້ຂະໜາດ1,5 - 2,5 ຊັ່ງຕິ ແມັດ ທາງດ້ານກົກຈະປັບແຕ່ງໃຫ້ລຽວ ແຫລມ ໄວ້ເພື່ອສູບໃສ່ດ້ານມີດ ສຳລັບດ້ານເຮັດດ້ວຍໄມ້ໄຜ່ ຕັດເອົາກົກທີ່ມີຄວາມແຂງແຮງທົນທານ ນຳສອງສ່ວນນັ້ນປະກອບໃສ່ກັນ ແລ້ວຮັດໃຫ້ແໜ້ນດ້ວຍອະໂລມິນຽມ (ມ້ຽນ) ເພີ້ມຄວາມທົນທານ ບໍ່ຫລຸດອອກຈາກກັນງ່າຍ.

ການນຳໃຊ້: ໃຊ້ສຳລັບຈັກຕອກ ເຫລົາຕອກ ແລະ ໃຊ້ໄວ້ເຈາະລວດລາຍທີ່ປະດັບຢູ່ກ່ອກເດ້(ກ່ອກເດ້ເປັນເຄື່ອງມືທີ່ໃຊ້ໄວ້ສູບຢາ ສຳລັບເຜົ່າແງະຈະສູບຢາ ຕະຫລອດເວລາ ບໍ່ວ່າຈະເຮັດວຽກຫລືເຮັດໄຮ່)ຜູ້ນຳໃຊ້ເຮັດເຄື່ອງຈັກສານຈະເປັນຜູ້ຊາຍ ສຳລັບຜູ້ຍິງຈະນຳໃຊ້ເຂົ້າ ໃນເວລາປຸງແຕ່ງອາຫານເຊັ່ນ: ຊອຍຊີ້ນ, ຕັດຜັກຕ່າງໆ ວິທີໃຊ້ແມ່ນຈະໃຊ້ແຂນໜີບເອົາດ້ານມີດນັ້ນແນບຂັດໄວ້ດ້ານຂ້າງໃນຂະນະທີ່ເຫລົາຕອກເພື່ອການຄວບຄຸມການເຫລົາຕອກໄດ້ດັ່ງທີ່ຄິດໄວ້ ວິທີການຊອຍຊີ້ນຂອງພວກເຂົາ ກໍ່ແຕກຕ່າງຈາກເຂດອື່ນ ຄືເຂົາຈະໃຊ້ຂາພັບສ່ວນຫົວເຂົ່າໜີບດ້ານນັ້ນໄວ້ ຊຶ່ງໃຫ້ທາງດ້ານຄົມປັ່ນ ຂົ້ນດ້ານເທິງ ແລະ ໃຊ້ສອງມືຈັບຊີ້ນຂົມລົງໄປທີ່ຄົມມີດນັ້ນເຮັດໃຫ້ຊີ້ນຂາດອອກ

№ 53 - ຊື່ພາສາລາວ: ໄມ້ສັກເຂົ້າໄຮ່
- ຊື່ພາສາທ້ອງຖິ່ນ: ມອນຣ
- ເຈົ້າຂອງເຄື່ອງ: ຄຳເກີດ
- ບ່ອນເກັບມ້ຽນ: ຖຽງ



- ຜູ້ນຳໃຊ້: ຜູ້ຊາຍ
- ການນຳໃຊ້:

ໄມ້ສັກເຂົ້າໄຮ່ (ມອນຣ)


ໄມ້ສັກເຂົ້າໄຮ່ມີຄວາມຍາວປະມານ 180-200 ຊັງຕິແມັດ ປາຍໄມ້ຈະແຫລມ ແລະ ຈະມີປອກໂລມິນຽມ ສູບໃສ່ປາຍໄມ້ສັກເຂົ້ານັ້ນ ເພື່ອໃຫ້ສັກດິນໄດ້ງ່າຍຂຶ້ນ ແລະ ເພື່ອໃຫ້ປາຍໄມ້ນັ້ນຄົງທົນ ແຕ່ສຳລັບບາງເຂດອາດຈະໃຊ້ພຽງແຕ່ໄມ້ແຫລມເທົ່ານັ້ນ.

ການຜະລິດ: ສະເພາະໄມ້ສັກເຂົ້າໄຮ່ແມ່ນຈະເຮັດດ້ວຍໄມ້ເນື້ອແຂງ ຫລືເອີ້ນ ວ່າ(ດອ່ກແລຣ) ຕັດໃຫ້ໄດ້ຕາມຂະໜາດ ນຳມາເຊາະເອົາເປືອກນອກອອກໃຫ້ກ້ຽງມ້ຽນ ສ່ວນປາຍຂອງໄມ້ຈະເຫລົາໃຫ້ແຫລມຈາກນັ້ນກໍ່ນຳໂລມິນຽມຕີໃຫ້ເປັນແຜນ ແລ້ວມ້ວນເຂົ້າໃຫ້ເປັນຮູບຈອຍຕາມໄມ້ນັ້ນ ນຳປອກໂລໄປສູບໃສ່ສ່ວນປາຍໄມ້ທີ່ ແຫລມນັ້ນຕອກໃຫ້ແໜ້ນ ຈຶ່ງສາມາດນຳໃຊ້ໄດ້.

ການນຳໃຊ້: ສຳລັບໄວ້ສັກເຂົ້າໄຮ່ສະເພາະເທົ່ານັ້ນ ວິທີການແມ່ນຈະໃຊ້ສອງມື ຈັບໄມ້ສັກເຂົ້ານັ້ນຊຶ່ງໃຫ້ປາຍແຫລມສັກລົງດິນຜູ້ຊາຍຈະເປັນຄົນສັກ ສ່ວນຜູ້ຍິງຈະຢອດ ເມັດເຂົ້າໃສ່ຊຸມແລ້ວຖີ້ມນຳຫລັງຜູ້ຊາຍ.

№ 54 - ຊື່ພາສາລາວ: ສາດກະລາ

- ຊື່ພາສາທ້ອງຖິ່ນ: ລາຍຕັນຣ
- ເຈົ້າຂອງເຄື່ອງ:
- ບ່ອນເກັບມ້ຽນ: ເທິງເຕົາໄຟ



- ຜູ້ນຳໃຊ້: ແມ່ ລູກສາວ
- ການນຳໃຊ້: ໃຊ້ຢຽບເຂົ້າ, ຕາກເຂົ້າ


ສາດກະລາ (ລາຍທຕຣັນ)

ຮູບຮ່າງເປັນຮູບສີ່ຫລ່ຽມຈະຕຸລັດ ສານດ້ວຍໄມ້ໄຜ່ຂະໜາດກວ້າງ 75 ຊັ່ງຕິແມັດ ຂະໜາດຍາວ 76 ຊັ່ງຕິແມັດ ມີຂະໜາດບາງ ແລະ ມີຂອບຂຶ້ນເລັກນ້ອຍ.

ການຜະລິດ:ວັດສະດຸທີ່ໃຊ້ຜະລິດເຮັດຈາກໄມ້ເຮັຍ ນຳໄປຈັກໃຫ້ເປັນເສັ້ນແລະ ເຫລົາໃຫ້ສະເໝີກັນ ຂະໜາດເສັ້ນປະມານ 0,5 - 1ຊັ່ງຕິແມັດ ຂຶ້ນກັບຄວາມໜາຂອງ ໄມ້ເຮັຍ ຈາກນັ້ນກໍ່ນຳໄປສານກັນດ້ວຍລາຍສອງຫລີ ເອີ້ນວ່າ (ຕະເປື້ອງເມື້ອຍເສີກເມື້ຍ)

ສານໃຫ້ໄດ້ຕາມຂະໜາດແລ້ວ ສິ້ນສຸດຂອງຂອບກະດົ້ງຈະສານຫລົບຂອບດ້ວຍລາຍຂັດ ສຳລັບຂອບຂອງສາດກະລານັ້ນ ເຮັດດ້ວຍຫວາຍ ນຳມາຜ່າເຄິ່ງເຫລົາໃຫ້ລຽບນຳມາປະກົບໃສ່ກັນທັງດ້ານເທິງ ແລະ ດ້ານລຸ່ມແລ້ວໃຊ້ຫວາຍມາສານລາຍມັດໃຫ້ຕິດກັນເພື່ອໃຫ້ຂອບຮຽບຮ້ອຍ ສວຍງາມ ແລະ ຄົງທົນ.

ການນຳໃຊ້: ໃຊ້ໄວ້ສຳລັບຮອງເພື່ອຢຽບເຂົ້າ ພາຍຫລັງທີ່ຮູດເຂົ້າມາແລ້ວ ຫງ່າເຂົ້າອາດຈະອອກບໍ່ໝົດ ຖອກເຂົ້າອອກຈາກກະເຈາະ ໃສ່ສາດກະລາແລ້ວໃຊ້ຕີນສອງເບື້ອງຫຍຽບເຂົ້າໄປມາເພື່ອໃຫ້ຫງ່າອອກຈາກເມັດເຂົ້າ ຈາກນັ້ນກໍ່ໃຊ້ວິພັດເອົາຫງ່າອອກ ຫລື ໃຊ້ກະດົ້ງພັດຫງ່າເຂົ້າອອກ ນອກນັ້ນເຂົາຍັງໃຊ້ໄວ້ຕາກເຂົ້າໃນເວລາທີ່ຝົນຕົກບໍ່ມີແດດ ເຂົາຈະໃຊ້ສາດກະລາຢອງໄວ້ເທິງຫີ້ງເທິງເຕົ້າໄຟ ເພື່ອໄວ້ຕາກເຂົ້າ ຍັງໃຊ້ໄວ້ຕາກໝາກເຜັດ ສາລີ ແລະ ອື່ນໆອີກ ຜູ້ນຳໃຊ້ຈະເປັນຜູ້ຍິງເທົ່ານັ້ນ ສຳລັບຜູ້ຊາຍແມ່ນແຕ່ຜະລິດໃຫ້ເທົ່ານັ້ນ.





ໃຊ້ໃນເວລາຢຽບເຂົ້າ ແລະ ຕາກເຂົ້າ.




ສາດກະລາໄວ້ສຳລັບຢຽບເຂົ້າ.

№ 55 - ຊື່ພາສາລາວ: ກະດົ້ງ
- ຊື່ພາສາທ້ອງຖິ່ນ: ດົ້ງ
- ເຈົ້າຂອງເຄື່ອງ: ໄດຣ
- ບ່ອນເກັບມ້ຽນ: ເຫິງຂໍ








- ຜູ້ນຳໃຊ້: ເມຍ ລູກສາວ
- ການນຳໃຊ້: ຟັດເຂົ້າ

ກະດົ້ງ (ດົ່ງ ຫລື ອົ່ມເອົ່ມ)

ກະດົ້ງຟັດເຂົ້າຂອງຊົນເຜົ່າແກະ ມີລັກສະນະຄ້າຍຄືຮູບໄຂ່ ທາງກົກຈະກວ້າງ ມົນ ປາຍກະດົ້ງຈະແຫລມມົນເລັກນ້ອຍ ຈອມເຂົ້າກວ່າສ່ວນກົກຂະໜາດສະເລ່ຍ 74 ຊັ້ງຕິແມັດ ຄວາມກວ້າງໃຫ່ຍສຸດ 60 ຊັ້ງຕິແມັດ ສູງປະມານ 8 -10 ຊັ້ງຕິແມັດ ຂອບໜາ ໃຫ່ຍພໍຈັບສະບາຍມື.

ການຜະລິດ: ກະດົ້ງເຮັດດ້ວຍໄມ້ເຮັຍ ນຳໄມ່ເຮັຍມາຕັດຂະໜາດປ້ອງທີ່ຕ້ອງ ການປະມານ 75 ຊັ້ງຕິແມັດ ແລ້ວນຳມາຜ່າໃຫ້ເປັນຕົ້ວ ເຫລົາໃຫ້ສະເໝີກັນນຳມາສານ ສ່ວນຫລາຍເຂົາຈະນິຍົມສານລາຍສອງ ຫລື ລາຍຂັດ ຕັດຕົກແຕ່ງ ສານຂົບຂອບໃຫ້ໄດ້ ຕາມຮູບແບບ ທີ່ເຫັນດັ່ງຮູບນັ້ນ ສ່ວນຂອບແມ່ນເຮັດດ້ວຍຫວາຍ(ຈວາ) ຫລື ໄມ້ເຮັຍນຳ ມາເຫລົາໃຫ້ໄດ້ຂະໜາດ ຍາວປະມານ 220 -230 ຊັ້ງຕິແມັດ ສອງເສັ້ນນຳມາແນບໃສ່ ກັບກະດົ້ງທີ່ສານໄວ້ກ່ອນນັ້ນແລ້ວເອົາຫວາຍ(ຈວາ) ມາສານມັດ(ກະຣະ) ເພື່ອຍຶດກະດົ້ງ ກັບຂອບເອີ້ນວ່າ(ກະນົມ) ໃຫ້ຕິດແໜ້ນກັນເພີ້ມຄວາມແຂງແຮງ ແລະ ທົນທານໃນເວລາ ໃຊ້ງານ.



ການນຳໃຊ້: ສຳລັບໃຊ້ໃນເວລາຕຳເຂົ້າພາຍຫລັງຕຳເຂົ້າແລ້ວ ຈະເອົາເຂົ້າໃສ່ທີ່ກະດົ້ງຈາກນັ້ນ ກໍ່ໃຊ້ສອງມືຈັບ ທາງເບື້ອງທີ່ກວ້າງສຸດ ປັ່ນເຂົ້າຫາໂຕ ທັ້ງສອງມືຈັບຍົກຂຶ້ນ ແລ້ວຟາດຂຶ້ນ ລົງ ສ່ວນທີ່ເປັນເຂົ້າຈະໄປຂ້ອນກັນຢູ່ສ່ວນທີ່ກວ້າງຂອງກະດົ້ງນັ້ນ ສ່ວນທີ່ເປັນແກບ ຫລື ເຂົ້າລີບທີ່ມີນ້ຳໜັກເບົາກວ່າຈະມາຢູ່ສ່ວນປາຍ ແລະ ປົວອອກນຳ ເຮັດໃຫ້ສາມາດແຍກເຂົ້າເປືອກອອກຈາກ ເຂົ້າສານໄດ້ງ່າຍໃນການຟັດກະດົ້ງຈະມີແຕ່ຜູ້ຍິງໃຊ້ເທົ່ານັ້ນ.




ວິທີການນຳໃຊ້ ໃຊ້ສອງມື
ຈັບຂ້າງກະດົ້ງ ແລ້ວຟັດຂຶ້ນ ລົງ.





ໝູ ໄກ່ ຈະລໍຖ້າກິນ ແກບ
ຮຳ ທີ່ຟັດອອກຈາກເຂົ້າ.

№56 - ຊື່ພາສາລາວ: ກະເຈາະ

- ຊື່ພາສາທ້ອງຖິ່ນ: ກະອ້າງ
- ເຈົ້າຂອງເຄື່ອງ: ບຸນລົ້ນ
- ບ່ອນເກັບມ້ຽນ: ທ້ອຍໄວ້ຂ້າງຝາ










- ຜູ້ນຳໃຊ້: ຍິງ.
- ການນຳໃຊ້: ຮູດເຂົ້າ, ສັກເຂົ້າ

№ 57 - ຊື່ພາສາລາວ: ກະເຈາະ
- ຊື່ພາສາທ້ອງຖິ່ນ: ກະອ້າງ
- ເຈົ້າຂອງເຄື່ອງ: ບຸນລົ້ນ
- ບ່ອນເກັບມ້ຽນ: ຫ້ອຍໄວ້ຂ້າງຝາ










- ຜູ້ນຳໃຊ້: ຍິງ.
- ການນຳໃຊ້: ຮູດເຂົ້າ, ສັກເຂົ້າ.

№ 58 - ຊື່ພາສາລາວ: ກະເຈາະ

- ຊື່ພາສາທ້ອງຖິ່ນ: ກະອ້າງ
- ເຈົ້າຂອງເຄື່ອງ: ບຸນລົ້ນ
- ບ່ອນເກັບມ້ຽນ: ຫ້ອຍໄວ້ຂ້າງຝາ










- ຜູ້ນຳໃຊ້: ຍິງ.
- ການນຳໃຊ້:ຮູດເຂົ້າ, ສັກເຂົ້າ

№ 59 - ຊື່ພາສາລາວ: ກະເຈາະ

- ຊື່ພາສາທ້ອງຖິ່ນ: ກະອ້າງ
- ເຈົ້າຂອງເຄື່ອງ: ບຸນລົ້ນ
- ບ່ອນເກັບມ້ຽນ: ຫ້ອຍໄວ້ຂ້າງຝາ









- ຜູ້ນຳໃຊ້: ຍິງ.
- ການນຳໃຊ້: ຮູດເຂົ້າ, ສັກເຂົ້າ

№ 60 - ຊື່ພາສາລາວ: ກະເຈາະ

- ຊື່ພາສາທ້ອງຖິ່ນ: ກະອ້າງ
- ເຈົ້າຂອງເຄື່ອງ: ບຸນລົ້ນ
- ບ່ອນເກັບມ້ຽນ: ຫ້ອຍໄວ້ຂ້າງຝາ








- ຜູ້ນຳໃຊ້: ຍິງ.
- ການນຳໃຊ້: ຮູດເຂົ້າ, ສັກເຂົ້າ

ກະເຈາະ (ກະອ້າງ)

ໃຊ້ໃນເວລາຮູດເຂົ້າໄຮ່ ຮູບຮ່າງສີ່ຫລ່ຽມ ປະກອບດ້ວນຂາສີ່ດ້ານ ປາກຈອມເຂົ້າ ກວ່າກົ້ນເລັກນ້ອຍ ກົ້ນກວ້າງ ແລະ ມີສາຍໄວ້ມັດແອວ ຄວາມສູງທັ້ງໝົດສະເລ່ຍ19-27 ຊັ້ງຕິແມັດ ສະເພາະກົ້ນກະເຈາະນັ້ນກວ້າງປະມານ13 -24 ຊັ້ງຕິແມັດ ລັດສະໝີຄວາມ ກວ້າງຂອງປາກປະມານ 15-25 ຊັ້ງຕິແມັດ ນ້ຳໜັກສະເລ່ຍປະມານ 0,4 ກິໂລ.








ການຜະລິດ:

ຈະນຳໃຊ້ໄມ້ໄຜ່ ຫລື ໄມ້ເຮັຍ ບາງ ໜ່ວຍເຂົາຈະນຳໃຊ້ຕີວໄມ້ໄຜ່ ຫລື ວ່າເປືອກ ຂອງໄມ້ໄຜ່ ຈັກໃຫ້ໄດ້ຂະໜາດ0,5 - 0,8 ຊັ້ງຕິ ແມັດ(ຕີວໄມ້ທີ່ກວ່ານມານັ້ນເປັນສ່ວນທີ່ມີຄວາມ ທົນທານທີ່ສຸດຂອງໄມ້ໄຜ່ ມີຄວາມເຫລື້ອມ ແລະ ເງົາງາມ) ນຳມາສານເຂົ້າກັນ ຊຶ່ງຈະເລີ້ມ ສານຈາກກົ້ນກ່ອນ ດ້ວຍການສານລາຍຂັດທຳມະດາ ໃຫ້ໄດ້ຕາມຂະໜາດທີ່ຕ້ອງການ ປະມານ13 - 24 ຊັ້ງຕິແມັດ ຈາກນັ້ນກ່ທົບເສັ້ນທັ້ງສີ່ດ້ານນັ້ນຂຶ້ນ ແລ້ວນຳເສັ້ນໄມ້ໄຜ່ມາ ສານໃນແນວຂວາງຂຶ້ນໄປເລື້ອຍໆ ດ້ວຍລາຍສານ ຫລື ເອີ້ນວ່າ (ກຳແປະ ເສີກແປະ) ສານ ຂຶ້ນໃຫ້ໄດ້ຂະໜາດປະມານ15 - 20 ຊັ້ງຕິແມັດ ສ່ວນປາກກະເຈາະສານລາຍຂັດເກັບຂອບ

ໃຫ້ລະອຽດ ສ່ວນຕີນ(ຍຸງຈະເລື້ອງ) ແມ່ນຈະໃຊ້ໄມ້ຂອດ ເຫລົາໃຫ້ໄດ້ຂະໜາດເສັ້ນຜ່າ ສູນກາງ1,5 -2 ຊັງຕີແມັດ ເຫລົາໃຫ້ປາຍແຫລມເລັກນ້ອຍຈຳນວນ ສີ່ດ້ວ ນຳໄປແນບໃສ່ ທັງສີ່ດ້ານຂອງກະເຈາະແລະເອົາເສັ້ນຫວາຍມາພັນ(ຍຸງຈະເລື້ອງ)ໃຫ້ຕິດກັບກະເຈາະນັ້ນ ຈາກນັ້ນກໍ່ນຳໄມ້ຂອດຂະໜາດຍາວເທົ່າກັບ ຂະໜາດຂອງກະເຈາະແຕ່ລະດ້ານນຳ ຫວາຍມາສານຂັດໃສ່ຕີນທັງສີ່ດ້ານ ອີກຮອບໜຶ່ງສານລາຍ(ເສັ້ກເມັຍ)ໃສ່ສີ່ມຸມຂອງແຈ ກະເຈາະນັ້ນ ນຳຫວາຍເສັ້ນທີ່ມີຄວາມຍາວເທົ່າຮອບຂອງກົ້ນກະເຈາະທັງສີ່ດ້ານມາໃສ່ ຕົ້ມແລະຄຸ່ນດ້ວຍຫວາຍ ມາມັດຍຶດແໜ້ນອີກ ສ່ວນທາງດ້ານກ້ອງກົ້ນກະເຈາະນັ້ນ ເຂົ້າ ຈະໃຊ້ໄມ້ໄລ່ ເອີ້ນວ່າໄມ້ກະລັງຂັດກົ້ນກະເຈາະໄວ້ອີກເທື່ອໜຶ່ງ ສານດ້ວຍລາຍມັດຍຶດ ຂອບຕີນ ແລະ ໄມ້ຂັດເຂົ້າກັນດ້ວຍກັນ (ຕາມຮູບ) ສ່ວນປາກກະເຈາະແມ່ນເຮັດຈາກ ຫວາຍ(ຈວງ)ມາເຫລົາໃຫ້ລະອຽດ ແລ້ວນຳມາແນບໃສ່ປາກກະເຈາະທັງດ້ານນອກ ແລະ ດ້ານໃນສານມັດດ້ວຍຫວາຍເອີ້ນວ່າ (ກະນູມ) ນຳປະກອນສາມເສັ້ນ ທີ່ເຮັດດ້ວຍຫວາຍ ນຳຫວາຍອີກເສັ້ນໜຶ່ງມາສານມັດໃຫ້ເສັ້ນປະກອນຕິດກັບ ຂອບກະເຈາະທັງດ້ານນອກ ແລະ ດ້ານໃນ ມັດຕິດເປັນໄລຍະ ເພີ້ມຄວາມແຂງແຮງໃຫ້ກັບຂອບປາກ ຈາກນັ້ນກໍ່ສານ ຫູທັງສອງເບື້ອງ ດ້ວຍຫວາຍເພື່ອໃຊ້ໄວ້ສອດເຊືອກປ໋ ໃຊ້ໃນເວລາຈະນຳໃຊ້ ເຮັດວຽກ.




ເປ໋ໃສ່ຫລັງໃສ່ເຄື່ອງກິນ
ເຄື່ອງໃຊ້ໃນເວລາໄປໄຮ່.


ການນຳໃຊ້:

ກະເຈາະແມ່ນໃຊ້ ສະເພາະໃນເວລາຮູດເຂົ້າໄຮ່ ສັກເຂົ້າໄຮ່ແລະໃນເວລາເຂົ້າ ປ່າຫາຜັກ ຫາໜໍ່ໄມ້ ມັດໃສ່ ແອວດ້ານໜ້າ ຫລື ດ້ານຫລັງ ໃຊ້ເວລາຮູດເຂົ້າ ສອງມືຈັບຮວງເຂົ້າແລ້ວຮູດກຳໃສ່ກະ ເຈາະດ້ານຂ້າງຊ້າຍ ນອກຈາກນັ້ນເຂົາຍັງໃຊ້ໃນເວລາໄປເອົາເຂົ້າມາຕຳ ຢູ່ເລົ້າເຂົ້າ (ເຜົ່າແງະຈະບໍ່ເຮັດເລົ້າເຂົ້າໄວ້ຢູ່ບ້ານ ຈະເກັບໄວ້ໃນໄຮ່ເວລາຈະກິນ ຈຶ່ງຕັກແບ່ງໃສ່ກະ ເຈາະ ເພື່ອມາຕຳກິນແຕ່ລະມື້.

№ 62 - ຊື່ພາສາລາວ: ກະພາ
- ຊື່ພາສາທ້ອງຖິ່ນ: ໂຕຣນ
- ເຈົ້າຂອງເຄື່ອງ: ບຸນລົ້ນ
- ບ່ອນເກັບມ້ຽນ: ເທິງຂີ້










- ຜູ້ນຳໃຊ້: ຍິງ
- ການນຳໃຊ້: ໃສ່ເຂົ້າ,
ເກັບມ້ຽນເຄື່ອງ.

№ 63 - ຊື່ພາສາລາວ: ກະພາ
- ຊື່ພາສາທ້ອງຖິ່ນ: ໂຕຣນ
- ເຈົ້າຂອງເຄື່ອງ: ບູນລົ້ນ
- ບ່ອນເກັບມ້ຽນ: ເທິງຂີ້








- ຜູ້ນຳໃຊ້: ຍິງ.
- ການນຳໃຊ້: ໃສ່ເຂົ້າ, ເກັບມ້ຽນເຄື່ອງ



№ 64 - ຊື່ພາສາລາວ: ກະພາ
- ຊື່ພາສາທ້ອງຖິ່ນ: ໂຕຣນ
- ເຈົ້າຂອງເຄື່ອງ: ບຸນລົ້ນ
- ບ່ອນເກັບມ້ຽນ: ເທິງຂໍ້








- ຜູ້ນຳໃຊ້: ຍິງ.
- ການນຳໃຊ້: ໃສ່ເຂົ້າ, ເກັບມ້ຽນເຄື່ອງ.


24/VII
ຫ້ອງຈຳໜ່າຍ

ກະພາ(ໂຕຣນ)

ເປັນເຄື່ອງມືທີ່ໃຊ້ໄວ້ເກັບເຂົ້າໃນເວລາຮູດແລ້ວ ຮູບຮ່າງຄ້າຍຄືກັບກະເຈາະ ແຕ່ຈະມີຄວາມສູງ ແລະ ໃຫ່ຍກວ່າເທົ່ານັ້ນ ປາກມີລັດສະໝີປະມານ 28 -45 ຊັ້ງຕິແມັດ ຄວາມສູງໂດຍສະເລ່ຍ ປະມານ 50-60 ຊັ້ງຕິແມັດ ປະກອບມີສີ່ຕີນ ກົ້ນກະພາເປັນຮູບສີ່ຫລ່ຽມ ສ່ວນກາງຂອງກະພາມີຫວາຍມັດຕິດອ້ອມຮອບຂອງກະພາ ແລະ ຈະແອບເຂົ້າເລັກນ້ອຍ ປາກກວ້າງກວ່າກົ້ນເລັກນ້ອຍ.




ຂອບ(ກະບຸມ)
ເຮັດດ້ວຍໄມ້ໄຜ່
ຂອບສານດ້ວຍຫວາຍລາຍຫົວ
ປາກ້າ(ປະລອຍ ປະໂກຣ)
ຫູ(ກະໂຕຣນ)
ສາຍຮັດ (ກະຕ່ຳ)
ໄມ້ນວນກະພາ(ຈະເລືອ)
ຄຸມດ້ວຍຫວາຍ(ຈວ)
ຂອບກົ້ນ (ຫຣະ)
ສານດ້ວຍລາຍຍືນ3ສ3
(ກ່ານປະ ເສີກນປະ)
ສານຍັດມຸມ(ຕິດ)
ສານດ້ວຍລາຍສອ(ເສີກເນືອຍ)



ການຜະລິດ:


ວັດສະດຸທີ່ໃຊ້ໃນການຜະລິດກະພາປະກອບມີສອງສະນິດຄື:ສະນິດທີ່ໜຶ່ງເປັນໄມ້ທີ່ໃຊ້ເປັນເສັ້ນຫລັກຄື ຈະເລີ້ມສານກັນດ້ວຍລາຍຂັດຢູ່ສ່ວນກົ້ນ ນັ້ນແມ່ນເຮັດດ້ວຍໄມ້(ຫຣະລ້ຽ) ເອີ້ນຕາມຊື່ທ້ອງຖິ່ນເຂົາວ່າເປັນໄມ້ສະນິດທີ່ໜຽວແໜ້ນ ແລະທົນທານທີ່ສຸດ. ສະນິດທີ່ສອງ ເປັນໄມ້ທີ່ນຳມາສານຕາມທາງຂວາງຂອງກະພາ ເຮັດດ້ວຍໄມ້ເຮັຍ (ເລ້ັຍ) ສານຂຶ້ນໄປເລື້ອຍໆ ປະກອບດ້ວຍລາຍສາມ (ເສີກແປະຕະກຳແປ) ແລະມີລາຍຄວັນໄຟ (ຕະຮູອູຍ) ປະກອບກັນ ເມື່ອສານໄດ້ຂະໜາດແລ້ວ ເຂົາຈະນຳໄມ້ມາແນບໃສ່ດ້ານຂ້າງຂອງກະພາ ຊຶ່ງຈະປະກອບຕໍ່ກັນເປັນຕີນດ້ວຍເຮັດດ້ວຍໄມ້ຊອດ ເອີ້ນວ່າ(ຈະເລືອງ) ນຳຫວາຍ(ຈວງ) ມາສານລາຍພັນໃຫ້ໄມ້ ຕິດກັບກະພາແໜ້ນຕື່ມສ່ວນ ປະກອບຂອງກົ້ນກະພາເອີ້ນວ່າ (ກຣະ) ເຮັດດ້ວຍຫວາຍ ມັດຍຶດຕິດກັບກົ້ນກະພາ ດ້ວຍການມັດນຳໃຊ້ຫວາຍ ສຳລັບກົ້ນກະພາຈະໃຊ້ໄມ້ຂັດ (ກະລ້ຽ) ເຮັດດ້ວຍໄມ້ຊອດ ຫລັງຈາກນັ້ນ ກ່ຈະມາສານປາກ(ງະ) ເຮັດດ້ວຍໄມ້ໄລ່ຂະໜາດປະມານ1-2 ຊັ້ງຕິແມັດ ແນບໃສ່ ທັ້ງສອງດ້ານຂອງປາກ ສານມັດຕິດກັບຂອບປາກ ດ້ວຍຫວາຍ ສານລາຍຫົວປາກ້ຽ ຫລື ລາຍ (ປະລອຍ ປະໂກຣ) ຈາກນັ້ນກ່ສານຕ່ລ້ຽໄປເອີ້ນວ່າ(ປະກອນ) ແມ່ນເຮັດດ້ວຍຫວາຍຫາງໜູ ແລ້ວນຳຫວາຍມາສານດ້ວຍລາຍມັດປະກອບມີສາມຊັ້ນ ທັ້ງດ້ານນອກແລະ ດ້ານໃນເຊັ່ນດຽວກັນ ທາງສ່ວນທາງຂອງກະພານັ້ນຈະໃຊ້ຫວາຍມາຄຽນອ້ອມຮອບ ກະພາປະມານສາມຮອບແລ້ວ ສານຍຶດຕິດກັບໄມ້(ຈະເລືອງ) ທັ້ງສີ່ດ້ານ ຈາກນັ້ນກ່ຈະສານຫູກະພາ(ກະໂຕຣນ) ດ້ວຍລາຍຂັດເພື່ອໄວ້ສອດສາຍ(ຕຣັນ) ສາຍເຊືອກແມ່ນເຮັດດ້ວຍ ເຊືອກປໍເອີ້ນວ່າ(ກະແຊ) ສອດໃສ່ຫູເພື່ອເປັນສາຍເປ້ທັ້ງສອງເບ້ືອງແລ້ວມັດຕິດກັນຢູ່ກົ້ນກະພາ.



ເກັບມ້ຽນໄວ້ກ້ອງຫລັງຄາ.

ການນຳໃຊ້:

ກະພາໃຊ້ໄວ້ເປ້ເຂົ້າເປືອກ ໃສ່ເຂົ້າໄວ້ໃນເລົ້າ ຫລື ອາດຈະໃສ່ເຄື່ອງຂອງໃນເວລາເດີນທາງໄກ ຫລື ໄປໄຮ່ເຂົ້າຈະໃສ່ໝົດທຸກຢ່າງ ອາຫານ ນ້ຳ ເຂົ້າ ລວມທັງເຄື່ອງມືໃນການເຮັດໄຮ່ ແລະ ອື່ນໆ. ນອກນັ້ນຍັງໃຊ້ເກັບມ້ຽນເຄື່ອງທີ່ສຳຄັນພາຍໃນຄອບຄົວເຊັ່ນ: ເສື້ອຜ້າ,ຜ້າຫົ່ມ, ຕ່າງໆ... ຜູ້ນຳໃຊ້ປະຈຳວັນຈະເປັນຜູ້ຍິງ ວິທີໃຊ້ແມ່ນຈະໃຊ້ສອງມືສອດໃສ່ເຊືອກທັງສອງເສັ້ນແລ້ວຍົກຂຶ້ນເປ້ໃສ່ດ້ານຫລັງ ສະດວກໃນເວລາເດີນທາງ.





ເປ້ກະພາໃສ່ຫລັງ
ກຽມພ້ອມໄປໄຮ່.




ພາຍຫລັງ
ການເກັບກ່ຽວມາ
ກ່ອນນຳຂຶ້ນໃສ່ເຫລົ້າເຂົ້າ

№ 65 - ຊື່ພາສາລາວ: ກະທໍ
- ຊື່ພາສາທ້ອງຖິ່ນ: ຊາງ
- ເຈົ້າຂອງເຄື່ອງ: ບົວຄຳ
- ບ່ອນເກັບມ້ຽນ: ເທິງຂໍ່







- ຜູ້ນຳໃຊ້: ຍິງ
- ການນຳໃຊ້: ເປນ້ຳ, ເປຟືນ




№ 66 - ຊື່ພາສາລາວ: ກະທໍ

- ຊື່ພາສາທ້ອງຖິ່ນ: ຊາງ
- ເຈົ້າຂອງເຄື່ອງ: ບົວຄຳ
- ບ່ອນເກັບມ້ຽນ: ເທິງຂໍ່










- ຜູ້ນຳໃຊ້: ຍິງ
- ການນຳໃຊ້: ເປນ້ຳ,ເປຟືນ

ກະທໍ (ຊາງ)

ມີຮູບຮ່າງຄ້າຍຄືກັບກະພາ ຂະໜາດປະມານດຽວກັນຄວາມສູງທັງໝົດປະມານ 50 -55 ຊັງຕິແມັດ ປາກກວ້າງມີລັດສະໝີປະມານ35 - 40 ຊັງຕິແມັດ ກົ້ນມີຂະໜາດ ກວ້າງກວ່າປາກປະມານຂ້າງລະ20 - 30 ຊັງຕິແມັດ ບໍ່ມີຕີນ ມີພຽງແຕ່ໄມ້ຂັດກົ້ນກະພາ ເທົ່ານັ້ນ ເພື່ອປ້ອງກັນກົ້ນລຸ ແລະ ຈະເສຍຮູບຊົງປະກອບມີຫູໄວ້ເພື່ອສອດສາຍເປ້.








ການຜະລິດ:

ເຮັດດ້ວຍໄມ້ກະລັງເອີ້ນຕາມພາສາທ້ອງຖິ່ນ ເປັນໄມ້ທີ່ໜຽວແໜ້ນ ຫລື ອາດ ຈະໃຊ້ໄມ້ເຮັຍ ໃຊ້ສະເພາະແຕ່ສ່ວນທີ່ເປັນຕົວຂອງໄມ້ ຈະແຂງທົນທານ ແລະ ເງົາງາມ ຂະໜາດຂອງເສັ້ນປະມານ 1-2 ຊັງຕິແມັດ ເລີ້ມຕົ້ນສານຈາກສ່ວນກົ້ນທີ່ສານດ້ວຍລາຍ ຂັດໃຫ້ໄດ້ຂະໜາດ 20-30ຊັງຕິແມັດ ແລ້ວກໍ່ທົບຕັ້ງຂຶ້ນເປັນແນວຕັ້ງເປັນເສັ້ນຫລັກຂອງ ໜ່ວຍກະທໍ ນຳເສັ້ນທາງຂວາງມາສານ ດ້ວຍລາຍຂັດເຊັ່ນດຽວກັນ ຫລື ອາດຈະສານ ລາຍຕາ(ມັດ)ສັບກັນເປັນບາງສ່ວນ ພໍສານຮອດປາກ(ງະ) ກໍ່ຈະສານຫລົບຂອບເອີ້ນ ວ່າ(ປະນຽດ) ຊຶ່ງເປັນຂັ້ນຕອນສຸດທ້າຍ ຈາກນັ້ນນຳໄມ້ຂະໜາດປະມານ 15 - 20 ຊັງຕິ ແມັດ ສອງອັນເຮັດດ້ວຍໄມ້ກະລັງ ຫລື ໄມ້ເຮັຍ ມາຂັດໃສ່ກົ້ນກະທໍ ເສີມຄວາມແຂງແຮງ ຕໍ່ຈາກນັ້ນ ກໍ່ນຳຫວາຍມາເຮັດຫູເອີ້ນວ່າ (ກະໂຕຣນ) ແລ້ວນຳເຊືອກປໍມາຝັ້ນກັນຫລາຍ ເສັ້ນມາມັດໃສ່ກະທໍເພື່ອເປັນເຊືອກເປ້ກໍ່ສາມາດນຳໃຊ້ໄດ້.



ເປ້ໄປຕັກນ້ຳຢູ່ແມ່ນ້ຳ ເຊກອງ


ການນຳໃຊ້:


ກະທໍ(ຊາງ) ໃຊ້ໃນເວລາເກັບກ່ຽວສາລີ, ໝາກອຶ, ໝາກໂຕນ ເປັນອຸປະກອນ ຫລັກທີ່ໃຊ້ໃນເວລາໄປເປ້ຫລ໊ອ, ຟືນມາດັງໄຟປຸງແຕ່ງອາຫານ ນອກນັ້ນຍັງໃຊ້ໃນການ ເປັນຖ້ຶຂຶ້ນມາໃຊ້ໃນເຮືອນຊຶ່ງຜູ້ນຳໃຊ້ປະຈຳວັນແມ່ນແຕ່ຜູ້ຍິງເທົ່ານັ້ນ ສ່ວນຜູ້ຊາຍພຽງແຕ່ ເປັນຜູ້ຜະລິດເທົ່ານັ້ນ.


ອຸປະກອນການຫາປາ

№ 67 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ຂ້ອງ ຊອງລາວ
- ເຈົ້າຂອງເຄື່ອງ: ບົວຄຳ
- ບ່ອນເກັບມ້ຽນ: ເທິງຂີ້










- ຜູ້ນຳໃຊ້: ຍິງ
- ການນຳໃຊ້: ຫາປາ,ໃສ່ພັກ

№ 68 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ຂ້ອງ ຂອງລາວ
- ເຈົ້າຂອງເຄື່ອງ: ບ້ວຄຳ
- ບ່ອນເກັບມ້ຽນ: ເທິງຂໍ່









- ຜູ້ນຳໃຊ້: ຍິງ
- ການນຳໃຊ້: ຫາປາ, ໃສ່ພັກ

ຂ້ອງ (ຊອງລາວ)

ຂ້ອງເປັນເຄື່ອງມືຊະນິດໜຶ່ງທີ່ໃຊ້ເຂົ້າໃນການຫາປາຮູບຮ່າງຄືກັນກັບຂ້ອງຂອງລາວລຸ່ມຄືປາກຈ້ອມ ສ່ວນກາງຂ້ອງໃຫ່ຍ ແລະ ຈອ້ມຫລຸດລົງເລື້ອຍໆ ສຳລັບທາງກົ້ນລັກສະນະສີ່ຫລ່ຽມ ປະກອບດ້ວຍຂາ ຂະໜາດຄວາມສູງທັງໝົດ ປະມານ30-37 ຊັ້ງຕິແມັດ ສຳລັບກົ້ນຂະໜາດປະມານ15-20 ຊັ້ງຕິແມັດ ສ່ວນທີ່ກ້ວາງທີ່ສຸດມີລວງຮອບຂະໜາດປະມານ76 ຊັ້ງຕິແມັດ ຊຶ່ງແຫກຈາກລົງມາປະມານ 12ຊັ້ງຕິແມັດ ສ່ວນປາກມີລັດສະໝີປະມານ 9 -18 ຊັ້ງຕິແມັດ ແລະ ມີຝາອັດປາກໃນເວລາໃຊ້ງານ.

ການຜະລິດ: ວັດສະດຸທີ່ນຳໃຊ້ອາດຈະເປັນໄມ້ຫົກ, ໄມ້ເຮັຍ ດ້ວຍການນຳເອົາໄມ້ດັ່ງກ່າວມາຜ່າໃຫ້ເປັນຕີ້ວແລ້ວເຫລົາໃຫ້ກ້ຽງດີ ລັກສະນະເສັ້ນຂ້ອນຂ້າງໜາ ກົມລັດສະໝີປະມານ0,2ຊັ້ງຕິແມັດ.ສ່ວນເສັ້ນຫລັກຂອງຂ້ອງນັ້ນມີລັກສະນະແປຂະໜາດ0,5 ຊັ້ງຕິແມັດ ໜາປະມານ 0,1-0,2 ຊັ້ງຕິແມັດ ເອົາເສັ້ນຫລັກນັ້ນມາສານດ້ວຍລາຍສອງ ໂດຍເລີ້ມຈາກສ່ວນກົ້ນຂອງຂ້ອງ ໃຫ້ໄດ້ຂະໜາດແລ້ວພັບທິບຂຶ້ນ ເປັນເສັ້ນທາງຕັ້ງຈາກນັ້ນກ່ຳນຳໄມ້ທີ່ກຽມໄວ້ທີ່ເປັນລັກສະນະກົມນັ້ນ ມາສານດ້ວຍລາຍສອງເຊັ່ນດຽວກັນ ໃນເວລາສານຈະສານເພີ້ມຄວາມກ້ວາງອອກເລື້ອຍໆຊຶ່ງໃຊ້ມືປັບໃຫ້ເສັ້ນຫລັກຍະອອກຈາກກັນ ພໍກ້ວາງສຸດເທົ່າທີ່ຕ້ອງການແລ້ວກ່ຳຈະເຫລົາເສັ້ນທາງຫລັກໃຫ້ນ້ອຍລົງ ເພື່ອເຮັດໃຫ້ປາກຈ້ອມເຂົ້າສານຕໍ່ດ້ວຍລາຍສອງ ເຊັ່ນດຽວກັນ.






ພໍຮອດປາກກ່ໍສານລາຍຍັດຕອກ ເກັບສິ້ນໃຫ້ຮຽບຮ້ອຍ ຈຶ່ງເຮັດຝາຕາມ ຫລັງໃຫ້ຂະໜາດນ້ອຍກວ່າປາກເພື່ອທີ່ ຈະອັດປາກຂ້ອງໄດ້ ສຳລັບຕີນນັ້ນເຮັດດ້ວຍໄມ້ຊ່ໍ ຫລື ໄມ້ເຮັຍ ນຳເອົາສ່ວນທີ່ເປັນຂໍ້ໄຜ່ ນັ້ນມາເຫລົາໃຫ້ແຫລມ ແລ້ວຕອກໃສ່ຂ້ອງທັງສີ່ດ້ານ ນຳໄມ້ຍັດທີ່ກຽມໄວ້ມາຍັດໃສ່ກົ້ນ ຂ້ອງ ຂະໜາດປະມານ 10 -15 ຊັງຕິແມັດ ດ້ວຍໄມ້ຊ່ໍ ຫລື ໄມ້ເຮັຍ ເຊັ່ນດຽວກັນ ນຳ ຫວາຍມາສານລາຍກາງປາສະເພາະສ່ວນທີ່ກວ້າງສຸດ ແລະສານຫູໄວ້ເພື່ອສອດສາຍໃສ່ ເຊືອກເຮັດດ້ວຍຫວາຍ ຫລື ປໍມາມັດໃສ່ໜ່ວຍຂ້ອງຈຶ່ງສາມາດໃຊ້ງານໄດ້.

ການນຳໃຊ້:ນຳໃຊ້ໃນເວລາຫາປາຫາຜັກຢູ່ປ່າ ໃຊ້ມັດໃສ່ແອວດ້ານຂ້າງຫລືວ່າ ດ້ານຫລັງແລ້ວແຕ່ສະດວກ ເມື່ອໄດ້ປາກໍ່ຈັບຈະປ່ອນໃສ່ຂ້ອງ ຊຶ່ງມັນຈະບໍ່ສາມາດອອກ ໄດ້ເພາະຝາຂ້ອງມີລັກສະນະພິເສດ ເຂົ້າໄດ້ແຕ່ຈະອອກບໍ່ໄດ້ ເວລາເຕັ້ນຈະໄປຕຳໃສ່ ສິ້ນຕອກທີ່ສານໄຂ່ວກັນປັນຈູມ ຜູ້ນຳໃຊ້ອາດຈະເປັນຜູ້ຊາຍ ຫລື ຜູ້ຍິງ ແຕ່ນຳໃຊ້ຫລັກ ແມ່ນແຕ່ຜູ້ຍິງ.

№ 69 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ຊອງ
- ເຈົ້າຂອງເຄື່ອງ:
- ບ່ອນເກັບມ້ຽນ: ເທິງຂໍ່ ທ້ອຍຝາເຮືອນ







- ຜູ້ນຳໃຊ້: ຊາຍ, ຍິງ
- ການນຳໃຊ້: ໃສ່ພ້າ, ຜັກ, ປາ, ປູ, ກຸ້ງ.

№ 70 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ຊອງ
- ເຈົ້າຂອງເຄື່ອງ:
- ບ່ອນເກັບມ້ຽນ: ເທິງຂໍ່ ຫ້ອຍຝາເຮືອນ








- ຜູ້ນຳໃຊ້: ຊາຍ, ຍິງ
- ການນຳໃຊ້: ໃສ່ພ້າ, ຜັກ, ປາ, ປູ, ກຸ້ງ.

№ 71 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ຊອງ
- ເຈົ້າຂອງເຄື່ອງ:
- ບ່ອນເກັບມ້ຽນ: ເທິງຂໍ່ ຫ້ອຍຝາເຮືອນ.









- ຜູ້ນຳໃຊ້: ຊາຍ, ຍິງ.
- ການນຳໃຊ້: ໃສ່ພ້າ, ຜັກ, ປາ, ປູ, ກຸ້ງ.

№ 72 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ຊອງ
- ເຈົ້າຂອງເຄື່ອງ:
- ບ່ອນເກັບມ້ຽນ: ເທິງຂໍ່, ຫ້ອຍຝາເຮືອນ









- ຜູ້ນຳໃຊ້: ຊາຍ, ຍິງ.
- ການນຳໃຊ້: ໃສ່ພ້າ, ຜ້າ, ປາ, ປູ, ກຸ້ງ.

№ 73 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ຊອງ
- ເຈົ້າຂອງເຄື່ອງ:
- ບ່ອນເກັບມ້ຽນ: ເທິງຂື່, ຫ້ອຍຝາເຮືອນ







- ຜູ້ນຳໃຊ້: ຊາຍ, ຍິງ.
- ການນຳໃຊ້: ໃສ່ພ້າ, ຜັກ, ປາ, ປູ, ກຸ້ງ.

№ 74 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ຊອງ
- ເຈົ້າຂອງເຄື່ອງ:
- ບ່ອນເກັບມ້ຽນ: ເທິງຂໍ່, ຫ້ອຍຝາເຮືອນ.








- ຜູ້ນຳໃຊ້: ຊາຍ, ຍິງ.
- ການນຳໃຊ້: ໃສ່ພ້າ, ຜັກ, ປາ, ປູ, ກຸ້ງ.

№ 75 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ຊອງ
- ເຈົ້າຂອງເຄື່ອງ:
- ບ່ອນເກັບມ້ຽນ: ເທິງຂື່, ທ້ອຍຝາເຮືອນ.










- ຜູ້ນຳໃຊ້: ຊາຍ, ຍິງ.
- ການນຳໃຊ້: ໃສ່ພ້າ, ຜັກ, ປາ, ປູ, ກຸ້ງ.

№ 76 - ຊື່ພາສາລາວ: ຂ້ອງ
- ຊື່ພາສາທ້ອງຖິ່ນ: ຊອງ
- ເຈົ້າຂອງເຄື່ອງ:
- ບ່ອນເກັບມ້ຽນ: ເທິງຂໍ່, ຫ້ອຍ ຝາເຮືອນ.







- ຜູ້ນຳໃຊ້: ຊາຍ, ຍິງ.
- ການນຳໃຊ້: ໃສ່ພ້າ, ຜັກ, ປາ, ປູ, ກຸ້ງ.

ຂ້ອງ(ຊອງ)

ຂ້ອງສະນິດນີ້ມີສັກສະນະຄ້າຍໆ ຮູບທໍ່ກົມ ບາງໜ່ວຍປາກຈອ້ມກວ່າກົ້ນ ບາງໜ່ວຍກົ້ນໃຫ່ຍກວ່າປາກ ອາດຈະມີຕີນ ຫລື ບໍ່ມີກໍ່ໄດ້ ຂະໜາດປະມານ 30 - 42 ຊັ່ງຕິແມັດ ປາກມີລັດສະໝີປະມານ10-18 ຊັ່ງຕິແມັດ ຮູບຮ່າງຂອງກົ້ນມີທັ້ງແບບມົນ ແບບສີ່ຫລ່ຽມ ຂະໜາດປະມານ14-24ຊັ່ງຕິແມັດ ມີສາມຫູ, ຫູໜຶ່ງຈະຢູ່ໄກ້ກັບຕີນ ແລະອີກສອງຫູໄກ້ກັບປາກຂ້ອງ ມີເຊືອກມັດໃນເວລາໃຊ້ງານ ຂ້ອງລັກສະນະນີ້ຈະເປັນຂ້ອງຂອງຊົນເຜົ່າແຫ ແຕ່ໃດມາ ອາດຈະບໍ່ມີຮູບຮ່າງຄ້າຍຄືກັນທັ້ງໝົດ ແຕ່ກໍ່ເປັນເອກະລັກຂອງຂ້ອງຊົນເຜົ່າດັ່ງກ່າວ.




24/VII
ห้ามจำหน่าย

ການຜະລິດ: ວັດສະດຸຫລັກທີ່ນຳໃຊ້ ແມ່ນເຮັດດ້ວຍຫວາຍດິນ(ຕະເວນ) ເປັນຫວາຍສະນິດໜຽວແໜ້ນ ທົນທານ ຊອກເສັ້ນຫວາຍຂະໜາດ 0,4-0,5 ຊັ່ງຕິແມັດ ກ່ອນຈະມາສານນັ້ນຈະນຳມັນໄປຜ່າເຄິ່ງໃຫ້ສະເໝີກັນ ຈາກນັ້ນເລີ້ມສານຈາກສ່ວນທີ່ເປັນກົ້ນກ່ອນນຳເສັ້ນຫວາຍທີ່ກຽມໄວ້ນັ້ນມາທົບເຄິ່ງແລ້ວກໍ່ສານຂັດກັນ ຈາກນັ້ນກໍ່ນຳຫວາຍອີກມາສານກັນດ້ວຍລາຍໜຶ່ງໃຫ້ສະເໝີກັນ ອ້ອມສະເພາະກົ້ນຂ້ອງນັ້ນ ພໍໄດ້ຂະໜາດກໍ່ຈະສານຂຶ້ນຕໍ່ເປັນສ່ວນຕົວຂອງຂ້ອງດ້ວຍລາຍໜຶ່ງ(ເສີກເມ້ຍ)ເຊັ່ນດຽວກັນຈົນໃຫ້ໄດ້

ຂະໜາດເທົ່າທີ່ຕ້ອງການ ກໍ່ຈະນຳຂອບມາໃສ່ຊຶ່ງຂອບນັ້ນຈະເຮັດດ້ວຍເຫລັກ ຫລືເຮັດດ້ວຍຫວາຍກໍ່ໄດ້ ໂຄງໃຫ້ເປັນວົງມົນຕາມຂະໜາດຂອງປາກຂ້ອງ ນຳມາປະກອບໃສ່ ຈາກນັ້ນກໍ່ຈະສານສອດຂັດເອົາຂອບຂອງຂ້ອງນັ້ນ ແລະ ເກັບ ເຊື່ອງສົ້ນໃຫ້ຮຽບຮ້ອຍດີ ພໍສຳເລັດກໍ່ຈະນຳໄມ້ທີ່ກຽມໄວ້ແລ້ວມາຂັດໃສ່ກົ້ນອີກເທື່ອໜຶ່ງ ວິທີການສານແບບນີ້ອາດຈະເພີ້ມສ່ວນຕີນຕັ້ງເຂົ້າ ຕີນດັ່ງກ່າວແມ່ນເຮັດດ້ວຍອະໂລມີນຽມທີ່ຫາໄດ້ ຫລື ຕີເອົາໃຫ້ເປັນຮູບວົງມົນ ຂະໜາດຕາມຕ້ອງການ ນຳມາເຈາະຮູໄວ້ເພື່ອໄວ້ມັດສາຍ ຊຶ່ງແມ່ນເຮັດຈາກຫວາຍ ນຳເສັ້ນຫວາຍເຄືອ ທີ່ມີລັກສະນະນ້ອຍກວ່າຫວາຍດົນ ຫລື ວ່າຫວາຍຫາງໜູນັ້ນມາ ສານລາຍສອງ (ປຸ່ຍມານ) ຫລື ລາຍກາງປາ ເລີ້ມສານຈາກສ່ວນທີ່ໄກ້ກັບປາກສານລົງໄປ ຈົນຮອດກົ້ນມີຫັ້ງໝົດສາມເສັ້ນ ພ້ອມກັບໃສ່ຫູສານດ້ວຍລາຍພັນດ້ວຍຫວາຍ ຈາກນັ້ນກໍ່ນຳເຊືອກມາມັດໃສ່ ສາມາດນຳໃຊ້ໄດ້.



ໃຊ້ໃນເວລາຫາປາ
ມັດໃສ່ແອວໄວ້ເພື່ອໃສ່ປາ.




ສະດວກໃນການໃຊ້
ເວລາຈັບປາໄດ້ຈະຈັບໃສ່ຂ້ອງເລີຍ.

ການນຳໃຊ້: ໃຊ້ມັດໄວ້ຢູ່ແອວເຊັ່ນດຽວກັນ ຈະໄວ້ທາງໜ້າ ຫລື ທາງດ້ານຫລັງກໍ່ໄດ້ ສຳລັບຜູ້ຍິງໃຊ້ ໃນເວລາຫາປາຢູ່ຫ້ວຍຕ່າງໆ ໄປເກັບຜັກ, ສ່ວນຜູ້ຊາຍຈະໃຊ້ໃນເວລາໄປໄຮ່ ໃສ່ມີດ, ພ້າໃນການເດີນທາງ.

№ 77 - ຊື່ພາສາລາວ: ສ້ອນປາ


- ຊື່ພາສາທ້ອງຖິ່ນ: ນູກ
- ເຈົ້າຂອງເຄື່ອງ:
- ບ່ອນເກັບມ້ຽນ: ເທິງຂື່



- ຜູ້ນຳໃຊ້: ຜູ້ຍິງ
- ການນຳໃຊ້: ສ້ອນປາ

№ 78 - ຊື່ພາສາລາວ: ສ້ອມປາ


- ຊື່ພາສາທ້ອງຖິ່ນ: ນູກ
- ເຈົ້າຂອງເຄື່ອງ:
- ບ່ອນເກັບມ້ຽນ: ເທິງຂໍ່




- ຜູ້ນຳໃຊ້: ຜູ້ຍິງ
- ການນຳໃຊ້: ສ້ອມປາ

ส้อมปา (มูก)

ส้อมปามีลักสะนะถืรูบจวย ก้ินตันฮะขนาดปะมาน 2-3 ซ้ังติแม้ด ปากกว้างมินลิ หลิ รูบอิดสะหละฮอบเฮดกว้างสุดปะมาน 20-27 ซ้ังติแม้ด ฮวามยาวทั้งหมิดปะมาน 58-67 ซ้ังติแม้ด.



การผะลิด: ผะลิดข้ึนจากไม้ไผ่ ไม้เฮ้ย หลิ หวายดิน (ถ้าเฮ้ดด้วยหวายดินแม่นจะนำมาผ่าเก่ิงให้สะเหมิกัน เหลิาให้ก้ังๆ และ ก่ำสานได้เลิย ข้ันตอนแม่นเฮ้ดเหมือกัน) ถ้าหากเฮ้ดจากไม้ไผ่แม่นตัดให้ได้ตามฮะขนาดที่ต้องการ เฮิาจะใช้ส่วนที่เป็นข้ไผ่นั้นเฮ้ดเป็นหางก้ิน จากนั้นก่ำผ่าไม้ไผ่นั้นออกเป็นด้ิว ซ่ึงอาดจะแบ่งเป็นสี่ส่วนหลิ ห้าส่วนก่ำได้ จากนั้นก่ำแบ่งแต่ละส่วนนั้นออกเป็นส่วนน้อยๆ เหลิาให้ก้ังดิ นำหวายดิน มาผ่าเก่ิง และ สานด้วยลายฮัดแต่จะบ่ให้ถ่ีหลาย สานไปได้ไลยะหน่ึง เฮิาก่ำจะเต่ิมเส้นหลักเพ่ิมเฮ้ำ จากหน่ึง



ວິທີການຫາປາຢູ່ຕາມຫ້ວຍນ້ຳ.

ເສັ້ນເປັນສອງເສັ້ນ ຕື່ມໄປເລື້ອຍໆປະ ມານ 3 - 4 ຄັ້ງ ຈຶ່ງຈະສຳເລັດຈະໄດ້ ປາກກວ້າງເທົ່າທີ່ເຫັນຕາມຮູບ ພໍສານ ຮອດປາກເຂົ້າຈະສານຫລົບຂອບ (ປະ ນຸງດ) ສານລາຍຂັດເພີ້ມຄວາມຖີ່ເຂົ້າ ເພີ້ມຄວາມແຂງແຮງທົນທານ.

ການນຳໃຊ້: ໃຊ້ໃນການສ້ອນປາໃຊ້ປາກຈຸມລົງໃນນ້ຳ ບ່ອນທີ່ມີກ້ອນຫີນ ຈາກ ນັ້ນກ່ຍົກກ້ອນຫີນຂຶ້ນ ເຮັດໃຫ້ປານ້ອຍລອຍເຂົ້າສ້ອນອາດຈະເປັນກຸ້ງ ແມງນ້ຳ ປາ ນ້ອຍ ແລະ ສະນິດອື່ນໆ ຜູ້ນຳໃຊ້ຫລັກຈະເປັນຜູ້ຍິງ.




ໃນການສ້ອນປາ
ສ່ວນໃຫ່ຍຈະມີພຽງແຕ່ຜູ້ຍິງ



ຈັບປາກສ້ອນຈຸມລົງນ້ຳ ແລ້ວ
ຍົກກ້ອນຫີນຂຶ້ນປາຈະລອຍເຂົ້າສ້ອນ

№ 79 - ຊື່ພາສາລາວ: ຫອກ

- ຊື່ພາສາທ້ອງຖິ່ນ: ດອຍ
- ເຈົ້າຂອງເຄື່ອງ: ຄຳສຸກ
- ບ່ອນເກັບມ້ຽນ: ຂ້າງຝາເຮືອນ



- ຜູ້ນຳໃຊ້: ຊາຍ
- ການນຳໃຊ້: ແທງຄວາຍ.


ຫອກແທງຄວາຍ (ກອຍ)

ເປັນເຄື່ອງມືທີ່ປະກອບເຂົ້າໃນພິທີຂ້າຄວາຍແປງຮີດຂອງຊົນເຜົ່າແງະ ລັກສະນະເປັນທ່ອນຍາວມີມີດທີ່ຄົມ ແລະ ມີປາຍຫອກທີ່ແຫລມ ຂະໜາດຍາວທັງໝົດ199 ຊັງຕິແມັດ ສຳລັບມີດ ຄວາມຍາວ 32 ຊັງຕິແມັດ ດ້ານຄົມບາງ ແລະ ໂຄ້ງປາຍແຫລມ.

ການຜະລິດ: ນຳເຫລັກຂະໜາດປະມານ35 ຊັງຕິແມັດ ກວ້າງ5 -6 ຊັງຕິແມັດ ມາເຜົາໄຟຕີໃຫ້ສ່ວນປາຍທີ່ບາງປັບແຕ່ງໃຫ້ປາຍແຫລມນຳໄປຝົນໃຫ້ຄົມນຳມາປະກອບໃສ່ໄມ້ເນື້ອແຂງ ຫລື ໄມ້ເຮັຍ ຮັດແໜ້ນລະຫວ່າງສ່ວນຕໍ່ດ້ວຍປອກໂລມິນຽມ.

ການນຳໃຊ້: ນຳໃຊ້ເຂົ້າໃນການປະກອບພິທີຂ້າຄວາຍ ຂອງຊົນເຜົ່າແງະ ອາດຈະເຮັດຂຶ້ນປະມານ3-5 ປີຕໍ່ຄັ້ງ ຂຶ້ນຢູ່ກັບຄວາມພ້ອມຂອງແຕ່ລະໝູ່ບ້ານ ໃຊ້ສອງມືຈັບຫອກແລ້ວແທງລົງໄປທີ່ຄໍຄວາຍ ໃຊ້ໄດ້ແຕ່ສະເພາະຜູ້ຊາຍເທົ່ານັ້ນຜູ້ຍິງຫ້າມໃຊ້.

№ 80 - ຊື່ພາສາລາວ: ເທັກຊີ (ໃຊ້ສາມກະຕ່ຳ)
- ຊື່ພາສາທ້ອງຖິ່ນ: ຈຣັນ ຫສູນ
- ເຈົ້າຂອງເຄື່ອງ: ບົວຄຳ (ຜະລິດເອງ ໃນປີ 2002)
- ບ່ອນເກັບມ້ຽນ: ເກັບມ້ຽນຝາເຮືອນ



- ຜູ້ນຳໃຊ້: ຜູ້ຊາຍ
- ການນຳໃຊ້: ໃຊ້ແທງຮູໃນເວລາຈັກສານ.

ເຫລັກຊີ (ຈຣັນຫຣູນ)

ນຳໃຊ້ເຂົ້າໃນການເຮັດເຄື່ອງຈັກສານ ຂະໜາດທັງໝົດປະມານ 15-20 ຊັ່ງຕິແມັດ ສ່ວນປາຍແຫລມຄົມ ແລະແປເລັກນ້ອຍ ຂະໜາດປະມານ 7 ຊັ່ງຕິແມັດ.

ການຜະລິດ: ເຮັດດ້ວຍເຫລັກ(ຕະ) ນຳເຫລັກນັ້ນມາຕີ ສະເພາະສ່ວນປາຍໃຫ້ແປແລະ ແຫລມຄົມ ຈາກນັ້ນກໍ່ນຳໄມ້ໄລ່ (ແລຣ) ແລະ ເອົາເຫລັກຊີທີ່ຕີໄວ້ແລ້ວນັ້ນມາຊຸບໃສ່ ແລະ ນຳປອກໂລມິນຽມມາຮັດໃຫ້ແໜ້ນຕື່ມ ແລ້ວກໍ່ນຳສ່ວນປາຍຂອງເຫລັກຊີໄປຝົນໃຫ້ແຫລມຄົມ.

ການນຳໃຊ້:ໃຊ້ໃນການເຮັດເຄື່ອງຈັກສານສະເພາະສ່ວນທີ່ຕ້ອງການສອດເສັ້ນຕອກທີ່ສອດຍາກ ຊຶ່ງຈະໃຊ້ເຫລັກຊີ ຊີກ່ອນແລ້ວ ຈຶ່ງສອດຕອກເຂົ້າສານຕໍ່ ຜູ້ນຳໃຊ້ຈະເປັນຜູ້ຊາຍເປັນສ່ວນໃຫ່ຍ.

ເຜົ່າສ່ວຍ

ຊົນເຜົ່າສ່ວຍ ເປັນຊົນເຜົ່າໜຶ່ງ ທີ່ມີລັກສະນະວັດທະນະທຳ ຄ້າຍຄືກັບຄົນລາວ ລຸ່ມ ແຕ່ກໍ່ຍັງມີບາງຮີດຄອງທີ່ຍັງນັບຖືຮີດຄອງຄ້າຍຄືກັບ ຊົນເຜົ່າແງະ, ອາລັກ ແລະ ເຜົ່າ ອື່ນໆ. ນັບຖືສາດສະໜາພຸດ ແລະ ກໍ່ມີສ່ວນໜຶ່ງທີ່ຍັງນັບຖືສາດສະໜາຜີ ມີພາສາປາກ ເວົ້າລັກສະນະສະເພາະຂອງເຜົ່າເອງ ທີ່ໃຊ້ຕິດຕໍ່ສື່ສານພາຍໃນກຸ່ມຊົນເຜົ່າດຽວກັນ ແລະ ກຸ່ມຊົນໄກ້ຄຽງ ແຕ່ບໍ່ມີພາສາຂຽນ.

ຊົນເຜົ່າສ່ວຍ ມີຖິ່ນຖານຕັ້ງຢູ່ຫລາຍແຫ່ງຈົນບໍ່ອາດບອກໄດ້ວ່າແຫລ່ງກຳເນີດ ດັ່ງເດີມຂອງເຜົ່າສ່ວຍນັ້ນຢູ່ທີ່ແຫ່ງໃດ ພວກເຂົາມັກຕັ້ງບ້ານເຮືອນ ຢູ່ແບບກະແຈກ ກະ ຈາຍ ຕາມຄວາມເລົ່າຂອງຜູ້ເຖົ້າ ຜູ້ແກ່ຂອງບ້ານເວົ້າວ່າ ແຕ່ເດີມບ້ານຍົກທີ່ງບໍ່ໄດ້ຢູ່ເຂດ ດັ່ງກ່າວຕັ້ງຢູ່ເຂດຫ່າງໄກຫລາຍ ແຕ່ໃນມື້ໜຶ່ງ ໄດ້ມີຄົນໃນໝູ່ບ້ານ ໄດ້ເຮັດຜິດຕໍ່ຮີດຄອງ ເປັນເຫດໃຫ້ ຜີທີ່ຄຸ້ມຄອງໝູ່ບ້ານນັ້ນເກີດຜິດໃຈ ພໍຕົກກາງຄືນຜີບ້ານ ຈຶ່ງໄດ້ຍົກບ້ານທັ້ງ ໝູ່ບ້ານມາຈາກທີ່ເດີມນັ້ນ ຍົກມາໄວ້ໃນຂອບເຂດທີ່ຕັ້ງບ້ານໃນປະຈຸບັນ ຈຶ່ງໄດ້ໃສ່ຊື່ວ່າ ຂອບເຂດບ້ານໃໝ່ນີ້ວ່າ "ບ້ານຍົກທີ່ງ" [1]

ໃນເລື້ອງຄວາມເຊື່ອ ສຳລັບຄົນເຜົ່າສ່ວຍຈະແຕກຕ່າງຈາກຊົນເຜົ່າອື່ນໆໃນຂົງ ເຂດນີ້ ເນື່ອງຈາກວ່າຄົນເຜົ່າສ່ວຍມີສ່ວນໜຶ່ງ ທີ່ນັບຖືສາດສະໜາຜີ ແຕ່ການນັບຖືນັ້ນກໍ່ ບໍ່ແມ່ນເຊື່ອ ໃນລັກສະນະຄວາມເຊື່ອແບບດັ່ງເດີມຂອງຊົນເຜົ່າ ແຕ່ເປັນການເຊື່ອແບບ ເປັນການຮັບອິດທິພົນຄວາມເຊື່ອຂອງລາວລຸ່ມເຊັ່ນ: ນັບຖືຜີບ້ານ ຜີເຮືອນ ຊຶ່ງເປັນຜີທີ່ມີ ຄວາມສຳຄັນພາຍໃນບ້ານ ນອກນັ້ນພິທີກຳໃນການດຳລົງຊີວິດກໍ່ຄື ການເຮັດໄຮ່ ເຮັດນາ ກໍ່ຄ້າຍຄືກັບຄົນລາວລຸ່ມ ການເຮັດພິທີກຳຕ່າງໆຕາມຮີດຄອງປະເພນີ ກໍ່ເຊັ່ນດຽວກັບຄົນ ລາວລຸ່ມດັ່ງ ບຸນເຂົ້າພັນສາ ອອກພັນສາ ແລະ ບຸນຕ່າງໆອີກ

ໃນປະຈຸບັນການຢູ່ອາໄສ່ກໍ່ຢູ່ເຮືອນແບບລາວລຸ່ມບໍ່ມີເຮືອນເປັນເອກະລັກຂອງ ເຜົ່າ ມີລັກສະນະຄອບຄົວດຽວທີ່ມີພຽງແຕ່ພໍ່,ແມ່,ລູກ ບໍ່ມີຍາດພີ່ນ້ອງອາໄສ່ຢູ່ນຳຫລາຍ ຄືກັບຊົນເຜົ່າອື່ນໆ ໃນແຂວງເຊກອງທີ່ມີຈຳນວນຫລາຍຄອບຄົວ ອາໄສ່ຢູ່ເຮືອນຫລັງ ດຽວກັນ.

---


[1] (ວັນທີ 23 / 12 / 03 ຕາມການບອກເລົ່າຂອງຜູ້ເຖົ້າ ພາຍໃນບ້ານ)

ສະພາບໂດຍລວມຂອງບ້ານຍົກທົ່ງ ເມືອງລະມາມ ແຂວງເຊກອງ

ບ້ານຍົກທົ່ງ ດັ່ງເດີມຕັ້ງຢູ່ຕິດກັບ ບ້ານຕົງປະຕົງໂປງ ຢູ່ເຂດຊາຍແດນລະຫວ່າງ ເມືອງກະລຶມ, ເມືອງດາກຈຶງແລະເມືອງລະມາມ ໃນຕົ້ນສັດຕະວັດທີ18ຈຶ່ງໄດ້ຍົກຍ້າຍລົງ ມາຢູ່ເຂດທົ່ງພຽງ ເມືອງທ່າແຕງ ເວລາຍົກຍ້າຍມາທຳອິດ ຊາວບ້ານໄດ້ມາຕັ້ງເຮືອນຢູ່ ແຄມທົ່ງນາຕົນພູທົ່ງ ຫລັງຈາກນັ້ນກໍ່ໄດ້ຍົກຍ້າຍບ້ານເຂົ້າມາຕັ້ງຢູ່ຂ້າງ ບ້ານທີ່ຢູ່ປະຈຸບັນ ພໍມາເຖິງປີ1958 ຈຶ່ງໄດ້ພາກັນມາຕັ້ງເປັນບ້ານຢູ່ຕອນດິນຈົນເຖິງປະຈຸບັນນີ້.

ເວົ້າລວມແລ້ວບ້ານຍົກທົ່ງນີ້ ຖືວ່າເປັນບ້ານທີ່ເກົ່າແກ່ບ້ານໜຶ່ງ ຂອງເມືອງທ່າ ແຕງ ຊົນເຜົ່າດັ່ງເດີມບ້ານແມ່ນເຜົ່າສວ່ຍ ພາຍຫລັງປະເທດຊາດໄດ້ຮັບການປົດປ່ອຍ ແລ້ວ ຈຶ່ງໄດ້ມີເຜົ່າອາລັກ ເຜົ່າແຢະ ເຂົ້າມາດຳລົງຊີວິດຢູ່ນຳ [2]

ແຜນທີ່ ເມືອງ ທ່າແຕງ
THATENG DISTRICT MAP



[2] (25 / 12 /12 ສຳພາດ: ທ່ານ ສີວິໄລ ພະແນກຖະແຫລ່ງຂ່າວ ແລະ ວັດທະນະທຳ ແຂວງເຊກອງ)

ບ້ານຍົກທົ່ງໃນປະຈຸບັນປະກອບມີ 89ຫລັງຄາເຮືອນ ມີ120ຄອບຄົວ ມີປະຊາກອນທັງໝົດ636ຄົນ ຍິງ259ຄົນ ມີວັດໜຶ່ງແຫ່ງ ປະກອບມີພະ3ອົງ ມີໂຮງຮຽນໜຶ່ງຫລັງ. ເນື້ອທີ່ນາ 91ເຮັກຕາ ເນື້ອທີ່ໄຮ່ 556 ເຮັກຕາ ທິດເໜືອຕິດກັບບ້ານນາໂພ.

ທິດໃຕ້ ຕິດກັບ ບ້ານຈະກຸດ.
ທິດຕາເວັນອອກ ຕິດກັບ ບ້ານສະທີ່.
ທິດຕາເວັນຕົກ ຕິດກັບ ບ້ານປ່າໄລ່.

ຊາວບ້ານຍົກທົ່ງສ່ວນໃຫ່ຍແມ່ນຖືສາດສະໜາພຸດ ອີກສ່ວນໜຶ່ງກໍ່ຖືສາດສະໜາຜີຊາວບ້ານຍົກທົ່ງດຳລົງຊີວິດດ້ວຍການເຮັດນາ ເຮັດໄຮ່ ແລະ ປູກຕົ້ນໄມ້ກິນໝາກ.

ບ້ານຍົກທົ່ງກໍ່ແມ່ນບ້ານໜຶ່ງທີ່ມີມູນເຊື້ອດ້ານການຜະລິດ ເຄື່ອງຈັກສານ ເຄື່ອງໃຊ້ສອຍ ຫັດຖະກຳຕີເຫລັກມາຮອດປະຈຸບັນມູນເຊື້ອ ດັ່ງກ່າວຊາວບ້ານກໍ່ຍັງຄົງສືບຕໍ່ຜະລິດເຄື່ອງມື ເຄື່ອງໃຊ້ ຊຶ່ງບໍ່ພຽງແຕ່ເປັນການຜະລິດເພື່ອໃຊ້ສອຍເທົ່ານັ້ນ ພວກເຂົາຍັງຜະລິດເພື່ອເປັນສິນຄ້າອີກດ້ວຍ.

ການດຳລົງຊີວິດໃນຮອບໜຶ່ງປີຂອງປະຊາຊົນບ້ານຍົກທົ່ງ.

ບ້ານຍົກທົ່ງຖືໄດ້ວ່າເປັນບ້ານເດີມຂອງຄົນເຜົ່າສ່ວຍ ເນື່ອງຈາກວ່າຢູ່ນີ້ປະມານ 60ກວ່າປີແລ້ວ ພາຍຫລັງປະເທດຊາດໄດ້ຮັບການການສະຖາປະນາ ຈຶ່ງໄດ້ມີຄົນຊົນເຜົ່າອື່ນໆມາອາໄສຢູ່ເຊັ່ນ:ເຜົ່າອາລັກ ເຜົ່າແຢະ ເຜົ່າຕຽງ ເຜົ່າລາວລຸ່ມ ທີ່ມີຢູ່ຈຳນວນໜຶ່ງ ຄົນເຜົ່າສ່ວຍເດີມ ແມ່ນເຂົານັບຖືສາດສະໜາພຸດ ຊຶ່ງການດຳລົງຊີວິດເປັນຕົ້ນຕໍ່ແມ່ນອາໄສ ການເຮັດໄຮ່ ແລະ ເຮັດນາໃນການປູກເຂົ້າສ່ວນຫລາຍແລ້ວແມ່ນປູກເຂົ້າໜຽວ ແລະ ເຂົ້າຈ້າວ ແຕ່ພວກເຂົາມັກຈະກິນເຂົ້າໜຽວຫລາຍກ່ອນ ນອກຈາກການປູກເຂົ້າແລ້ວເຂົາຍັງປູກພືດອື່ນໆອີກເຊັ່ນ: ສາລີ ມັນຕົ້ນ ເຜືອກ ມັນດ້ຳ ແລະ ລ້ຽງງົວ ຄວາຍ ເປັດ ໄກ່ ເພື່ອຮັບໃຊ້ໃນຊີວິດປະຈຳວັນ ຊຶ່ງເຂົາຈະບໍ່ໄດ້ລ້ຽງເປັນອາຊີບຫລັກ.

ໃນບ້ານດັ່ງກ່ວາຖ້າຫາກວ່າຄອບຄົວໃດມີເງື່ອນໄຂດີເຂົາຈະເຮັດທັງໄຮ່ແລະນາ ຜົນຜະລິດຫາກໄດ້ຫລາຍກໍ່ຈະນຳໄປຈຳໜ່າຍອອກສູ່ທ້ອງຕະຫລາດຫລືບາງຄັ້ງຈະມີຄົນມາຮັບຊື້ເອົາຕາມບ້ານ

ເວົ້າເຖິງຂັ້ນຕອນການເຮັດໄຮ່ແລ້ວແມ່ນຈະເລີ່ມຕັ້ງແຕ່ເດືອນ 2 ຈົນເຖິງເດືອນ 11 ຫລື 12 ຊຶ່ງຈະມີຂັ້ນຕອນຕ່າງໆດັ່ງລຸ່ມນີ້:

- ຖາງໄຮ່: ການເຮັດໄຮ່ສ່ວນຫລາຍແມ່ນຈະປູກເຂົ້າໜຽວໃນໄລຍະເດືອນ 2 ຕໍ່ໃສ່ເດືອນ3ຈະເລີ້ມຖາງໄຮ່ຫົກເຮື້ອ ເວົ້າສະເພາະໃນຂອບເຂດ ຂອງບ້ານຍົກທີ່ໆນີ້ຈະບໍ່ໄດ້ຍ້າຍເນື້ອທີ່ໄປເຮັດໄຮ່ບ່ອນໃໝ່ໃນທຸກໆປີ ເຂົາຈະເຮັດໄຮ່ຢູ່ບ່ອນເກົ່າຕາມເຂດທີ່ໄດ້ແບ່ງປັນໄວ້ສ່ວນໃຫ່ຍແລ້ວຈະບໍ່ເປັນປ່າດົງຕົບໜາມີພຽງແຕ່ຕົ້ນໄມ້ນ້ອຍຫຍ້າທີ່ຂຶ້ນຕາມໄຮ່ເທົ່ານັ້ນໃຊ້ເວລາປະມານ 10 ຫລື 15 ກໍ່ຈະສຳເລັດ.

- ຈູດໄຮ່: ຕໍ່ຈາກການຖາງປ່າແລ້ວເຂົາຈະປະຕາກແດດໄວ້ປະມານ 2– 3 ມື້ ຈາກນັ້ນກໍ່ຈູດໄຮ່ ຈະປ້ອງກັນຂອບເຂດໄຮ່ບໍ່ໃຫ້ລາມໄປເຂດປ່າໄກ້ຄຽງໃຊ້ເວລາປະມານ 2–3 ວັນ ໄຟກໍ່ຈະມອດ ແລະ ປະໄວ້ໄລຍະໜຶ່ງ ແລ້ວຈຶ່ງມາຮີ້ໄຮ່ ນຳໄມ້ເສດທີ່ໄໝ້ໄຟບໍ່ໝົດນັ້ນອອກ ທຳຄວາມສະອາດໃຫ້ທົ່ວເພື່ອກະກຽມການສັກເຂົ້າໄຮ່ໃນເດືອນຕໍ່ໄປ.

- ສັກເຂົ້າໄຮ່: ເລີ້ມຕົ້ນໃນລະຫວ່າງເດືອນ 5 ຕໍ່ໃສ່ເດືອນ6ໄລຍະນີ້ຝົນກໍ່ກຳລັງຈະເລີ້ມຕົກເຂົ້າກໍ່ຈະກະກຽມແນວພັນທີ່ດີ ທີ່ນິຍົມໃຊ້ປູກໃນປະຈຸບັນ ແມ່ນພັນທີ່ມາຈາກວຽງຈັນ ພັນເຂົ້າປ່ານຈະເປັນແນວພັນເຂົ້າໜຽວ ສ່ວນພັນເຂົ້າຈ້າວແມ່ນແລ້ວແຕ່ຄອບຄົວ ຈະເປັນພັນເມັດນ້ອຍຫລືໃຫ່ຍກໍ່ໃຊ້ເຊັ່ນກັນໄປພ້ອມໆກັນກັບການສັກເຂົ້າໄຮ່ຢູ່ເຂດແຄມໄຮ່ແມ່ນເຂົາຈະປູກພືດສຳຮອງເຊັ່ນ:ສາລີ, ມັນຕົ້ນ, ມັນດ້ຳ, ໝາກໂຕນ ແລະ ອື່ນໆ.

ເສຍຫຍ້າ: ຫລັງຈາກສັກເຂົ້າໄຮ່ແລ້ວໃນໄລຍະໜຶ່ງ ເຂົ້າເລີ້ມແຕກໜໍ່ອີກບໍ່ດົນຕົ້ນເຂົ້າກໍ່ຈະໃຫ່ຍພ້ອມໆກັນນັ້ນ ກໍ່ຈະມີຫຍ້າຂຶ້ນແຊມກັບຕົ້ນເຂົ້າ ຕໍ່ຈາກນັ້ນເຈົ້າຂອງໄຮ່ກໍ່ຈະເລີ້ມເສຍຫຍ້ານັ້ນ ອອກເພື່ອບໍ່ໃຫ້ລົບກວນການ ຈະເລີນເຕີບໂຕຂອງຕົ້ນເຂົ້າ ການເສຍຫຍ້າຈະເສຍເປັນໄລຍະປະມານເດືອນລະຄັ້ງຂຶ້ນກັບບາງເຂດໃນປີໜຶ່ງສະເລ່ຍແລ້ວຈະເສຍຫຍ້າຢູ່ປະມານ 2 – 3 ຄັ້ງ ກໍ່ກະກຽມເພື່ອກ່ຽວເຂົ້າ.

ກ່ຽວເຂົ້າ: ໃນເຂດນີ້ແມ່ນຈະບໍ່ໄດ້ຮູດເຂົ້າ ແມ່ນຈະໃຊ້ກ່ຽວແທນຢູ່ໃນລະຫວ່າງເດືອນ10–11 ໃນການກ່ຽວເຂົ້າແມ່ນຈະໃຊ້ມືໜຶ່ງຈັບຕົ້ນເຂົ້າ ອີກມືໜຶ່ງຈັບກ່ຽວ ກ່ຽວເອົາຕົ້ນເຂົ້າ ຈາກນັ້ນກໍ່ນຳໄປມັດໄວ້ລວມກັນ ຈົນກ່ຽວສຳເລັດທົ່ວໄຮ່ເພື່ອລໍຖ້າການຝາດເຂົ້າ ຫລັງຈາກຝາດເຂົ້າອອກຈາກຮວງແລ້ວ ຈຶ່ງນຳໄປໃສ່ກະພາ ຫລືຖົງປ່ານແລ້ວນຳຂຶ້ນໄວ້ເລົ້າເຂົ້າ ເວລາກ່ຽວເຂົ້າເຂົາຈະຊ່ວຍເຫລືອກັນພຽງແຕ່ພີ່ນ້ອງກັນເທົ່ານັ້ນ ບໍ່ໄດ້ມາຊ່ວຍກັນທັງໝູ່ບ້ານ ຄືກັບຊົນເຜົ່າອື່ນ.

ສຳລັບການເຮັດນາຂອງຊົນເຜົ່າສ່ວຍເຂົາຈະເລີ້ມຕົ້ນໃນເດືອນ7ຈະເຮັດທັງນາ

ປີແລະນາແຊງ ໄລຍະທຳອິດເລີ້ມໄຖນາກ່ອນນັ້ນແມ່ນຈະນຳໃຊ້ຄວາຍໄຖນາ ແຕ່ໃນປະຈຸບັນບາງຄອບຄົວທີ່ມີເງື່ອນໄຂດີກໍ່ຈະໃຊ້ເຄື່ອງໄຖນາຊຶ່ງຈະສະດວກກວ່າ.

ຖາງປ່າ: ກ່ອນຈະໄຖນາ ແມ່ນຈະກະກຽມພື້ນທີ່ນາກ່ອນຄື ຫາກວ່າເປັນໄຮນາທີ່ປະໄວ້ດົນ ຫລື ເປັນນາທີ່ສັບຊາວໃໝ່ເລີ້ມຕົ້ນແມ່ນເຂົ້າຈະຖາງປ່າກ່ອນ ເລີ້ມປະມານເດືອນ4 ຕໍ່ຫາເດືອນ5 ຖາງປ່າຕັດກິກໄມ້ໃຫ່ຍ ຕົ້ນໄມ້ນ້ອຍ ກະຕໍ່ໄມ້ ຈາກນັ້ນກໍ່ຈະຈູດໄມ້ ຫຍ້າໃຫ້ໝົດ.

ຊາວນາ: ພາຍຫລັງທີ່ຈູດປ່າທີ່ຖາງແລ້ວ ເຂົາຈະມາຂຸດດິນເອົາກະຕໍ່ໄມ້ອອກອີກຄັ້ງໜຶ່ງ ຈາກນັ້ນກໍ່ຂຸດດິນຟົ້ນດິນໃຫ້ທົ່ວ ພ້ອມນັ້ນກໍ່ປ່ານຄັນຄູຕາມຂອຍເຂດນາຫລັງຈາກນັ້ນກໍ່ປະໄວ້ໄລຍະໜຶ່ງເພື່ອໃຫ້ຫຍ້າຕາຍ ການຊາວນາອາດຈະໃຊ້ເວລາໄວ ຫລື ຊ້າຂຶ້ນຢູ່ກັບຈຳນວນແລະ ພື້ນທີ່ນານັ້ນ (ສຳລັບການຊາວນາແມ່ນຈະເຮັດສະເພາະແຕ່ນາທີ່ເຮັດໃໝ່ເທົ່ານັ້ນ).

ດຳນາ: ໃນໄລຍະຕົ້ນເດືອນ7ຕໍ່ໃສ່ເດືອນ8 ນາທີ່ໄດ້ຊາວໄວ້ນັ້ນແມ່ນຈະໄຖຮູດ (ໄຖບິ້ມ) ໃນໄລຍະນີ້ຈະຕ້ອງລໍຖ້າໃຫ້ຝົນຕົກກ່ອນ ຈຶ່ງສາມາດໄຖຮູດໄດ້ປະມານໄລຍະໜຶ່ງເພື່ອໃຫ້ຫຍ້າຕາຍ ຈາກນັ້ນກໍ່ມາໄຖຊ້ຳຄືນອີກເທື່ອໜຶ່ງ ກໍ່ຈະໄຖຄົ້ນ ເພື່ອບໍ່ໃຫ້ມີກະຕໍ່ ແລະ ໃຫ້ດິນນຸ່ນດີ ຫລັງຈາກນັ້ນກໍ່ຈະຄາດດິນໃຫ້ລະອຽດໃຫ້ທົ່ວພື້ນນາອີກເທື່ອໜຶ່ງ ເພື່ອກະກຽມດຳນາຕໍ່ໄປ.

ໃນໄລຍະນີ້ພວກເຂົາກໍ່ຈະແຊ່ແນວເຂົ້າ ຈະເລືອກພັນແນວເຂົ້າທີ່ດີໃຫ້ໄດ້ຕາມໄຮ່ນາທີ່ຕຽມໄວ້ນັ້ນ. ຈາກນັ້ນກໍ່ນຳເຂົ້າແນວໄປແຊ່ນ້ຳໄວ້ປະມານ 2–3ມື້ ກໍ່ນຳແນວເຂົ້າຂຶ້ນມາຕາກແດດໄວ້ ເພື່ອໃຫ້ແຕກໜໍ່ກ່ອນ ຈະນຳແຜ່ນໄມ້ໄຜ່ມາຮອງພື້ນໄວ້ກ່ອນ ຈະບໍ່ໃຫ້ວາງໃສ່ດິນເພາະປວກ, ມອດ ຈະມາເຈາະເຂົ້າເຮັດໃຫ້ແນວພັນເໜົ່າຕາຍໄດ້ ພໍເຖິງເວລາກໍ່ເອົາແນວເຂົ້າມາໃສ່ໃຫ້ທົ່ວ ແລະ ກໍ່ເອົາເຟືອງ ຫລື ຜ້າປົກປະໄວ້ປະມານ1–2ມື້ ຍອດເຂົ້າກໍ່ຈະອອກປະມານ1-2ຂໍ້ມື ມັກຍາວກໍ່ປະໄວ້ອີກມື້ໜຶ່ງ ກໍ່ສາມາດນຳໄປວານໃສ່ໄຮ່ທີ່ຕຽມໄວ້ກ່ອນໄດ້ ກ້າທີ່ເໝາະສົມແມ່ນຈະປະໄວ້ປະມານໜຶ່ງເດືອນ ຈຶ່ງສາມາດນຳໄປດຳໄດ້.

ກ່ຽວເຂົ້າ: ເຂົ້າປີແມ່ນຈະເລີ້ມກ່ຽວໃນເດືອນ11–12 ກ່ອນຈະກ່ຽວເຂົ້າຈະຕ້ອງເຮັດພິທີເບີກຜີນາກ່ອນເມື່ອກ່ຽວແລ້ວຈະເອົາຮວງເຂົ້າທີ່ກ່ຽວທຳອິດໄປປັກໄວ້ທີ່ກອງເຂົ້າກ່ອນຈະນຳຂຶ້ນເລົ້າ ໃນການກ່ຽວເຂົ້າແມ່ນຈະກ່ຽວທັງໝົດນາທີ່ມີ ມາກອງໄວ້ລວມກັນ ຈາກນັ້ນຈຶ່ງຝາດພ້ອມກັນ ຊ່ວຍກັນພາຍໃນຍາດຕິພີ່ນ້ອງກັນເທົ່ານັ້ນ ແລະ ນຳເຂົ້າ

ທີ່ໄດ້ໃສ່ກະພາ ຫລື ຖ້ຽພ້ອມທີ່ຈະເອົາເຂົ້າຂຶ້ນເລົ້າ ເລົ້າເຂົ້າເຂົາມັກຈະເຮັດໄວ້ໄກ້ກັບນາ ເມື່ອເວລາຈະກິນຈຶ່ງເອົາເມືອຕຳຢູ່ບ້ານ.ປະຈຸບັນເຂົານິຍົມກັນໄປສີທີ່ໂຮງສີເຂົ້າເຂົ້າສານ ທີ່ສີມາໄດ້ແມ່ນຈະນຳໄປໄວ້ຢູ່ບ້ານສ່ວນເຂົ້າເປືອກທີ່ຍັງເຫລືອແມ່ນຈະປະໄວ້ ທີ່ເລົ້າເຂົ້າ ແລະ ແນວເຂົ້າທີ່ຕຽມໄວ້ໃນປີຕໍ່ໄປ.

ນອກຈາກການປູກເຂົ້າແລ້ວ ເຂົາຍັງປູກພືດສຳຮອງເຊັ່ນ:ສາລີ ມັນຕົ້ນ ມັນດ້ຽງ ເຜືອກ ຜັກອີຄູ ຜັກຫອມ ໝາກນາວ ໝາກແຂ້ງ ໝາກອຶ ໝາກນັດ ແລະ ອື່ນໆ ຕົ້ນໄມ້ກິນໝາກ ແມ່ນນິຍົມປູກ ໝາກມ່ວງ ໝາກພ້າວ ໝາກກ້ວຍ ໝາກກ້ຽງ ໝາກມີ້ ແລະຍັງປູກໝາກແໜງ ກາເຟ ປູກຂາຍຈະມີຄົນມາຮັບຊື້ເອົາຢູ່ທີ່ບ້ານ ນອກນັ້ນກໍ່ຍັງລ້ຽງ ງົວ ຄວາຍ ເປັດ ໄກ່ເພື່ອຮັບໃຊ້ເປັນອາຫານໃນຊີວິດປະຈຳວັນ.

ເຄື່ອງຈັກສານ


ເຜົ່າສວ່ຍບໍ່ໄດ້ເຮັດເຄື່ອງຈັກສານເປັນອາຊີບ ພຽງແຕ່ເຮັດເພື່ອຮັບໃຊ້ໃນການເຮັດໄຮ່ເທົ່ານັ້ນແລະຮັບໃຊ້ໃນການດຳລົງຊີວິດແຕ່ລະມື້ສ່ວນໃຫ່ຍຈະສານ ກະບຸງ ກະຕ່າ ຂ້ອງໃສ່ປາ ກະພາ ກະຕິບເຂົ້າ. ແຕ່ໃນປະຈຸບັນກໍ່ໄດ້ເຮັດເພື່ອຂາຍເລັກນ້ອຍ ໃນການຜະລິດແມ່ນເຮັດຕາມການທີ່ຕະຫລາດຕ້ອງການ ມີຄົນມາຊັ້ງຜະລິດຈຶ່ງຈະເຮັດເຊັ່ນ: ກະບຸງ ກະຕ່າ ກ້ອງເຂົ້າ ເຜົ່າສ່ວຍບ້ານຍົກທົ່ງຖືໄດ້ວ່າ ເປັນບ້ານໜຶ່ງທີ່ມີຊື່ສຽງໃນເລື້ອງການເຮັດເຄື່ອງຈັກສານ ທີ່ປານີດ ມີລວດລາຍທີ່ສວຍງາມ ໃນຂົງເຂດເທດສະບານເມືອງ ລະມາມນີ້.

ອຸປະກອນການເຮັດໄຮ່

№ 81 - ຊື່ພາສາລາວ: ພ້າ

- ຊື່ພາສາທ້ອງຖິ່ນ: ບຣາປະກ່າ
- ເຈົ້າຂອງເຄື່ອງ: ສູກ
- ບ່ອນເກັບມ້ຽນ: ຂັດໄວ້ຝາ ໃນເຮືອນຄົວ ກ້ອງຕາລ່າງ






- ຜູ້ນຳໃຊ້: ຜູ້ຊາຍ
- ການນຳໃຊ້: ເສຍຫຍ້າຖາງປ່າ.

№ 82 - ຊື່ພາສາລາວ: ພ້າງໍ

- ຊື່ພາສາທ້ອງຖິ່ນ: ບຣາ ວ໋ອດ
- ເຈົ້າຂອງເຄື່ອງ: ສູກ
- ບ່ອນເກັບມ້ຽນ: ໃນເຮືອນຄົວ ກ້ອງຕາລ່າງ





- ຜູ້ນຳໃຊ້: ຊາຍ
- ການນຳໃຊ້: ຮີ້ໄຮ່,ຖາງປ່າ, ເຮັດເຮືອນ.

ພ້າ(ບຣາ)

ຊົນເຜົ່າສ່ວຍເປັນຊົນເຜົ່າໜຶ່ງ ທີ່ມີສິລະປະວັດທະນະທຳ ຄ້າຍຄືກັບລາວລຸ່ມ ເຄື່ອງມືການເຮັດໄຮ່ຂອງຊົນເຜົ່ານີ້ ຈະຄ້າຍຄືທັງສອງເຜົ່າຄື:ເຜົ່າລາວລຸ່ມ ແລະ ເຜົ່າລາວເທິງ. ສຳລັບພ້າຂອງຊົນເຜົ່ານີ້ມີສອງລັກສະນະຄື: ລັກສະນະທີ່ໜຶ່ງ (ຮູບ№81) ເປັນພ້າທີ່ຂ້ອນຂ້າງຍາວ ສັນໜາ ຊື່ ຂະໜາດກວ້າງທັງໝົດປະມານ 60-65 ຊັງຕິແມັດ ສ່ວນຄົມຂອງພ້າ30-35 ຊັງຕິແມັດ ຄວາມກວ້າງ3-5 ຊັງຕິແມັດ ເທົ່ານັ້ນດ້າມຊື່ເຮັດດ້ວຍໄມ້.

ສະນິດທີ່ສອງ ເອີ້ນວ່າພ້າງໍ(ບຣາວ່ອກ) ຄວາມຍາວທັງໝົດ50 -55 ຊັງຕິແມັດ ເວົ້າສະເພາະດວງພ້າທາງດ້ານກົກຈະນ້ອຍກວ່າປາຍແຫລມ ແລະ ງໍ ສ່ວນຄົມກໍ່ຈະງໍໄປຕາມດວງພ້ານັ້ນ ຂະໜາດຄວາມຍາວປະມານ 25 - 35 ຊັງຕິແມັດ ຄວາມກວ້າງສຸດປະມານ 8 -10 ຊັງຕິແມັດ ດ້ານຊື່ເຮັດດ້ວຍໄມ້ (ຮູບ № 82).




ການຜະລິດ:


ວັດສະດຸທີ່ໃຊ້ຜະລິດເຮັດຈາກເຫລັກນຳມາເຜົາໄຟໃຫ້ແດງ ແລະ ນຳໄປຕີ ສະເພາະພ້າ (ບຣາ) ທີ່ມີຮູບຮ່າງຊື່ນັ້ນ ຈະຕີສະເພາະ ສ່ວນທີ່ເປັນຄົມໃຫ້ບາງລົງເທົ່ານັ້ນ ສຳລັບພ້າງໍ (ບຣາວ່ອກ)ນັ້ນ ຈະຕອ້ງຕີປັບແຕ່ງໃຫ້ໄດ້ຄວາມງໍ ປາຍພ້າຈະຕ້ອງມີຂະໜາດກວ້າງກວ່າທາງກົກ(ດັ່ງຮູບ) ແລ້ວນຳໄມ້ໄຜ່(ຕ່ອງຄຣ້ອ)ປະມານ20-30 ຊັງຕິແມັດ ຕັດມາປະກອບດ້ານໃສ່ນຳປອກ(ແຂ້ວ) ທີ່ເຮັດດ້ວຍໂລມິນຽມ ເສີມຄວາມແຂງແຮງຂຶ້ນ.

ການນຳໃຊ້: ສຳລັບພ້ານຳໃຊ້ເຂົ້າໃນການຖາງປ່າ ເສຍຫຍ້າ ຖາງປ່າໜາມຕັດຕົ້ນໄມ້ນ້ອຍທົ່ວໄປ ສ່ວນພ້າງໍ(ບຣາວ່ອກ) ແມ່ນໃຊ້ຕັດໄມ້ໃຫ່ຍ ຫ່ຳໄມ້ໃຊ້ໃນເວລາຖາງປ່າ ຮົ້ໄຮ່ ຫລື ອາດຈະນຳໃຊ້ໃນການຕັດໄມ້ຜ່າເຮັດແປ້ນປູຕ່າງໆ ຜູ້ນຳໃຊ້ຫລັກຈະເປັນຜູ້ຊາຍເທົ່ານັ້ນ.

№ 83 - ຊື່ພາສາລາວ: ຂວານ

- ຊື່ພາສາທ້ອງຖິ່ນ: ຈູງ
- ເຈົ້າຂອງເຄື່ອງ: ບຸນປອນ
- ບ່ອນເກັບມ້ຽນ: ຂັດໄວ້ຝາເຮືອນ






- ຜູ້ນຳໃຊ້: ຜູ້ຊາຍ
- ການນຳໃຊ້: ຖາງປ່າ,ຖາງໄຮ່,ຮື້ໄຮ່.


ຂວານ (ຈູ)

ເປັນເຄື່ອງມືທີ່ໃຊ້ໃນການຕັດຕົ້ນໄມ້ໃຫ່ຍ ມີລັກສະນະຄ້ຽວກັນກັບຂອງຄົນເຜົ່າ ແງະ ປາຍຂວານໃຫ່ຍ ດ້າມງໍ ຕາມລັກສະນະຂອງຫງ່ຳໄມ້ມີດ້າມທີ່ແຂງແຮງຄວາມຍາວ ທັງໝົດປະມານ 60-70 ຊັ້ງຕິແມັດ ສະເພາະດ້າມຂວານ ມີຂະໜາດຄວາມກວ້ຳງ 5 -6 ຊັ້ງຕິແມັດ ຄົມຂອງມັນມີລັກສະນະມົນເລັກນ້ອຍ ຄວາມຍາວປະມານ19ຊັ້ງຕິແມັດ ທາງ ກົກຂອງດວງຂວານຈະເປັນຮູເພື່ອໄວ້ສູບໃສ່ດ້າມ.



ການຜະລິດ: ນຳເຫລັກເສັ້ນຂະໜາດ 20 - 22 ຊັ້ງຕິແມັດ ກວ້ຳງປະມານ 5 - 6 ຊັ້ງຕິ ແມັດ ມາເຜົ້າໄຟແລ້ວຕີໃຫ້ສ່ວນປາຍບາງ ສ່ວນ ກົກຈະຕີໃຫ້ກວ້ຳງອອກສອງຂ້ຳງ ຈາກນັ້ນກ່ຳນຳ ແບບຂະໜາດເທ່ຳໄມ້ທີ່ຈະສູບໃສ່ນັ້ນ ຈາກນັ້ນກ່ຳຕີໃຫ້ງໍເຂ້ຳຕາມໄມ້ແບບນັ້ນເພື່ອໄວ້ໃສ່ ດ້າມ, ດ້າມແບ່ງອອກເປັນສອງສ່ວນ ສ່ວນທີ່ໜຶ່ງແມ່ນເຮັດດ້ວຍໄມ້ເນື້ອແຂງ(ໄມ້ກວ໊ກ) ເອ້ຳສ່ວນທີ່ເປັນຂໍ້ໄມ້ມາຕັດ ຖ້ຳກເອ້ຳເປືອກອອກເຫລ້ຳໃຫ້ກ້ຽງງ່ຳມ ຈາກນັ້ນກ່ຳນຳໄມ້ໄຜ່ (ຕ່ອງຄຣ້ວ)ຊຶ່ງເປັນສ່ວນທີ່ສອງ ທີ່ເຮັດດ້ວຍໄມ້ໄລ່ ຫລ ໄມ້ເຮັຍຕັດໃຫ້ໄດ້ຕາມຂະໜາດ ທີ່ຕ້ອງການ ໄປຕອກຕ່ໃສ່ດ້າມສ່ວນທີ່ໜຶ່ງນັ້ນ ຮັດໃຫ້ແໜ້ນດ້ວຍປອກໂລມິນຽມ ເສີມ ຄວາມແໜ້ນ ພາຍຫລັງປະກອບດ້າມສຳເລັດແລ້ວ ກ່ຳຈະນຳດວງຂວານມາຕອກໃສ່ດ້າມ ຂວານໃຫ້ແໜ້ນ ຝົນປາຍຂວານໃຫ້ຄົມກ່ຳສ່ຳມ່ຳດນຳໃຊ້ໄດ້.

№ 84 - ຊື່ພາສາລາວ: ໄມ້ສັກເຂົ້າ
- ຊື່ພາສາທ້ອງຖິ່ນ: ລອງລຸງ
- ເຈົ້າຂອງເຄື່ອງ: ສູດ
- ບ່ອນເກັບມ້ຽນ: ຖຸງໄຮ່



- ຜູ້ນຳໃຊ້: ຜູ້ຊາຍ
- ການນຳໃຊ້: ສັກເຂົ້າໄຮ່


ໄມ້ສັກເຂົ້າໄຮ່(ລອງລຸງ)

ໃຊ້ໄວ້ສັກເຂົ້າໄຮ່ ລັກສະນະສະເພາະເປັນທ່ອນໄມ້ກົມ ຍາວປະມານ 120 ຊັງຕິແມັດ ມີລັດສະໝີປະມານ3 - 4 ຊັງຕິແມັດ ປາຍແຫລມ ບາງຄັ້ງອາດຈະເຮັດປອກສູບໃສ່ປາຍໄມ້ນັ້ນ.

ການຜະລິດ: ເຮັດດ້ວຍໄມ້ເນື້ອແຂງ(ໄມ້ຫວາ ຫລື ໄມ້ເໝືອດ) ຕັດມາເທົ່າກັບຂະໜາດທີ່ຕ້ອງການ ແລ້ວນຳມາຖາກເປືອກໄມ້ອອກ ໃຫ້ກ້ຽງບ່ໃຫ້ມີຄົມສ້ຽນ ຈາກນັ້ນກໍ່ເຫລົາສະເພາະສ່ວນປາຍ ໃຫ້ແຫລມເທົ່ານີ້ກໍ່ສາມາດນຳໃຊ້ໄດ້ ແຕ່ຖ້າຫາກວ່າບ່ມີປອກໂລນັ້ນປາຍແຫລມຂອງໄມ້ຈະຕ້ອງເຫລົາໃໝ່ເລື້ອຍໆ ຈົນກວ່າຈະສັກເຂົ້າໄຮ່ແລ້ວ ແລະ ປີຕໍ່ໄປກໍ່ຕ້ອງຊອກຫາໄມ້ມາເຮັດໃໝ່.

№ 85 - ຊື່ພາສາລາວ: ພ້າງໍ

- ຊື່ພາສາທ້ອງຖິ່ນ: ແວງ ວ່ອກ
- ເຈົ້າຂອງເຄື່ອງ: ບູນປອນ
- ບ່ອນເກັບມ້ຽນ: ໄວ້ໄຮ່ ກ້ອງຕາລ່າງ




- ຜູ້ນຳໃຊ້: ຊາຍ, ຍິງ
- ການນຳໃຊ້: ເສຍຫຍ້າ

24/VII
ສັງຄົມຈຳໜ່າຍ

№ 86 - ຊື່ພາສາລາວ: ພ້າງໍ


- ຊື່ພາສາທ້ອງຖິ່ນ: ແວ ວ່ອກ
- ເຈົ້າຂອງເຄື່ອງ: ບຸນປອນ
- ບ່ອນເກັບມ້ຽນ: ໄວ້ໃຮ່ ກ້ອງຕາລ່າງ



- ຜູ້ນຳໃຊ້: ຊາຍ, ຍິງ
- ການນຳໃຊ້: ເສຍຫຍ້າ

№ 87 - ຊື່ພາສາລາວ: ແວ໋ງ (ມີດເສຍຫຍ້າ)

- ຊື່ພາສາທ້ອງຖິ່ນ: ແວ໋ງ
- ເຈົ້າຂອງເຄື່ອງ: ສູ ภ
- ບ່ອນເກັບມ້ຽນ: ຂັດຝາຂ້າງເຮືອນ




- ຜູ້ນຳໃຊ້: ຍິ ງ, ຊ ายา
- ภ ານນຳໃຊ້: ເສຍຫຍ້ ภ

№ 88 - ຊື່ພາສາລາວ: ແວ໋ງ (ມີດເສຍຫຍ້າ)

- ຊື່ພາສາທ້ອງຖິ່ນ: ແວ໋ງ
- ເຈົ້າຂອງເຄື່ອງ: ສູກ
- ບ່ອນເກັບມ້ຽນ: ຂັດຝາຂ້າງເຮືອນ






- ຜູ້ນຳໃຊ້: ຍິງ, ຊາຍ
- ການນຳໃຊ້: ເສຍຫຍ້າ


ແອ (ມີດເສຍຫຍ້າ)

ປະກອບມີສອງລັກສະນະຄື :

ແບບທີ່ໜຶ່ງ:ມີດເສຍຫຍ້າງໍ(ແອງວ່ອກ) ດ້າມຈັບຊື່ແຕ່ໃຊ້ງ່ານນັ້ນຈະງໍເລັກນ້ອຍ ປາຍມົນ ແລະ ງໍ ສ່ວນຄົມໂຄ້ງກົ່ງຂຶ້ນ ຂະໜາດຄວາມຍາວທັ້ງໝົດປະມານ35-60ຊັ້ງຕິແມັດ. ມີຄໍຍື່ນອອກມາເລັກນ້ອຍແລ້ວຫັກງໍເຂົ້າ ຂະໜາດຍາວປະມານ 10-15 ຊັ້ງຕິແມັດ ຄວາມກວ້າງສູງສຸດຂອງດວງມີດ3-5 ຊັ້ງຕິແມັດ ສຳລັບດ້າມຈັບມີຂະໜາດພໍຈັບ ປະມານ 30-50 ຊັ້ງຕິແມັດ.



-ແບບທີ່ສອງ: ມີດເສຍຫຍ້າ(ແອງ) ມີລັກສະນະເປັນແອງຊື່ ມີດ້າມຈັບທີ່ຊື່ແອງ ປາຍມົນລຽວ ທາງກົ້ກກວ້າງທາງປາຍ ສ່ວນທີ່ສູບໃສ່ໄມ້ງໍຂຶ້ນເລັກນ້ອຍ ດ້າມມີຂະໜາດ ປະມານ 17- 22ຊັ້ງຕິແມັດ ແອງມີຂະໜາດ 18 - 20ຊັ້ງຕິແມັດ ຄວາມກວ້າງ 2 -3ຊັ້ງຕິ ແມັດ ມີທັ້ງປາຍຕັດ ປາຍມົນ ຄວາມຍາວທັ້ງໝົດ35 - 45 ຊັ້ງຕິແມັດ.



ການຜະລິດ:ວັດສະດຸຫລັກແມ່ນເຫລັກແມ່ນແນບລິດຊຶ່ງເປັນສ່ວນປະກອບໜຶ່ງ ຂອງລິດ ນຳມາຕັດໃຫ້ໄດ້ຂະໜາດທີ່ຕ້ອງການ ນຳໄປເຜົາໄຟໃຫ້ແດງ ແລະຕີໃຫ້ຄົມ ມີ ຄວາມບາງ ແລະໃຫ້ປາຍມົນ ຈາກນັ້ນກໍ່ຈະດັດໃຫ້ງໍຕາມຂະໜາດທີ່ຕ້ອງການ ຈາກນັ້ນ ກໍ່ນຳໄມ້ໄຜ່ອາດຈະເປັນສ່ວນຂໍ້ໄຜ່ກໍ່ດີ ຫລື ບໍ່ກໍ່ໄດ້ ແວງທີ່ຕີແລ້ວນັ້ນ ກ່ອນຈະໄປສູບໃສ່ ດ້ານໄຜ່ຈະຕ້ອງຕັດໄມ້ຂໍ (ໄມ້ເນື້ອແຂງ) ຂະໜາດລັດສະໝີເທົ່າຮູຂອງໄມ້ໄຜ່ນັ້ນ ນຳມາ ເຈາະໃຫ້ເປັນຮູ ພໍສູບດ້ານແວງເຂົ້າໄດ້ ຈາກນັ້ນຈຶ່ງນຳໄປປະກອບໃສ່ປ້ອງໄມ້ໄຜ່ທີ່ກ່າວ ມານັ້ນແລະກໍ່ໃຊ້ປອກເຫລັກ ຫລື ປອກໄມ້ໂລມິນຽມ ຮັດໃຫ້ແໜ້ນເພີ່ມຄວາມແຂງແຮງ.


ການນຳໃຊ້: ການນຳໃຊ້ຂອງແວງມີສອງແບບການນຳໃຊ້ຄື:

-ແບບທີ່ຢືນ: ເສຍຫຍ້າ(ເບີເຢິ່ງ) ໝາຍຄວາມວ່າໃນຂະນະທີ່ເສຍຫຍ້າຢູ່ນັ້ນຢູ່ ໃນທ່າຢືນແລະກົ້ມເລັກນ້ອຍໃຊ້ມືຂວາຈັບດ້ານສົບລົງດິນທີ່ມີຫຍ້ານັ້ນ ແວງປະເພດນີ້ສາ ມາດນຳໃຊ້ໄດ້ແຕ່ເຂດທີ່ເປັນພູເທົ່ານັ້ນຈຶ່ງເໝາະສົມ

- ແບບເສຍຫຍ້າແບບນັ່ງ(ເບີກົ້ມ) ໝາຍຄວາມວ່າເວລານຳໃຊ້ຈະຢູ່ໃນທ່ານັ່ງ ໃຊ້ມືຂວາຈັບ ເພື່ອສັບຫຍ້າອອກ ແວງປະເພດນີ້ອາດໃຊ້ແຕ່ການເສຍຫຍ້າຢູ່ສວນຄົວ ຕ່າງໆ ໃນລັກສະນະດິນພຽງ ບໍ່ສາມາດນຳໃຊ້ໃນລັກສະນະດິນເປັນເນີນພູ.

№ 89 - ຊື່ພາສາລາວ: ມີດເຫລົາຕອກ


- ຊື່ພາສາທ້ອງຖິ່ນ:
- ເຈົ້າຂອງເຄື່ອງ: ສູກ
- ບ່ອນເກັບມ້ຽນ: ຂັດໄວ້ຝາເຮືອນ




- ຜູ້ນຳໃຊ້: ຜູ້ຊາຍ
- ການນຳໃຊ້: ຈັກຕອກ

ມີດເຫລົາຕອກ:ເປັນມີດທີ່ໃຊ້ເຂົ້າໃນການເຮັດເຄື່ອງຈັກສານໃຊ້ໃນເວລາເຫລົາຕອກ ຊອຍອາຫານໃນຄົວເຮືອນ ລັກສະນະ ນ້ອຍຍາວ ແລະ ປາຍແຫລມ ມີດທີ່ຄວາມຍາວປະມານ 13ຊັ້ງຕິແມັດ ຄວາມກວ້າງ 2-3ຊັ້ງຕິແມັດ ດ້າມມີຄວາມຍາວເທົ່າ 35 ຊັ້ງຕິແມັດ ລວມຄວາມຍາວທັ້ງໝົດປະມານ 48 - 50 ຊັ້ງຕິແມັດ.

ການຜະລິດ: ນຳໃຊ້ເຫລັກ(ຕະ) ແລະ ໄມ້ໄຜ່ຂັ້ນຕອນປະກອບຄ້າຍຄືກັບມີດເສຍຫຍ້າ.









ການໃຊ້ມີດເຂົ້າໃນການ
ເຫລົາຕອກ ໃນເວລາຈັກສານ.

№ 90 - ຊື່ພາສາລາວ: ກະເຈາະ

- ຊື່ພາສາທ້ອງຖິ່ນ: ກະເຈາະ,ກະຢັ້ງ
- ເຈົ້າຂອງເຄື່ອງ: ເຕັ່ງ
- ບ່ອນເກັບມ້ຽນ: ເທິງຂໍ່








- ຜູ້ນຳໃຊ້: ຍິງ, ຊາຍ
- ການນຳໃຊ້: ຮູດເຂົ້າ,ເກັບພັກ


№ 91 - ຊື່ພາສາລາວ: ກະເຈາະ

- ຊື່ພາສາທ້ອງຖິ່ນ: ກະເຈາະ,ກະຢັ້ງ
- ເຈົ້າຂອງເຄື່ອງ: ເຕັ້ງ
- ບ່ອນເກັບມ້ຽນ: ເທິງຂໍ່







- ຜູ້ນຳໃຊ້: ຍິງ, ຊາຍ
- ກາບນຳໃຊ້: ຮູດເຂົ້າ,ເກັບຜັກ




№ 92 - ຊື່ພາສາລາວ: ກະເຈາະ

- ຊື່ພາສາທ້ອງຖິ່ນ: ກະເຈາະ,ກະຢັ້ງ
- ເຈົ້າຂອງເຄື່ອງ: ເຕັ້ງ
- ບ່ອນເກັບມ້ຽນ: ເທິງຂໍ່






- ຜູ້ນຳໃຊ້: ຍິງ ຊາຍ.
- ການນຳໃຊ້: ຮູດເຂົ້າ,ເກັບພັກ




№ 93 - ຊື່ພາສາລາວ: ກະເຈາະ

- ຊື່ພາສາທ້ອງຖິ່ນ: ກະເຈາະ,ກະຢ້ຳ
- ເຈົ້າຂອງເຄື່ອງ: ເຕັ ງ
- ບ່ອນເກັບມ້ຽນ: ເທິງຂໍ່








- ຜູ້ນຳໃຊ້: ຍິ ງ, ຊາຍ
- ການນຳໃຊ້: ຮູດເຂົ້າ,ເກັບພັກ

ກະເຈາະ(ກະຢັ້ງ)

ຮູບຮ່າງຄ້າຍຄືກັບຂອງຊົນເຜົ່າອື່ນໆ ເປັນຮູບສີ່ຫລ່ຽມ ປາກມົນ ຄວາມສູງປະມານ 23-25 ຊັ່ງຕິແມັດ ຄວາມກວ້າງຂອງປາກມີລັດສະໝີປະມານ 20-30 ຊັ່ງຕິແມັດ ສະເພາະສ່ວນຕີນເປັນຮູບສີ່ຫລ່ຽມ ແຕ່ລະຫລ່ຽມມີຂະໜາດປະມານ 15-18 ຊັ່ງຕິແມັດ ປາກກວ້າງກ່ອນກົ້ນເລັກນ້ອຍ.





ການຜະລິດ: ວັດຖຸຫລັກແມ່ໄມ້ຄາ (ລອງລະຕຽງ) ແລະໄມ້ເຮັຍ(ລຣອງຫລາ) ຊຶ່ງຈະເລີ້ມສານຈາກສ່ວນກົ້ນ ໂດຍໃຊ້ໄມ້ເຮັຍເປັນຫລັກ ສານດ້ວຍລາຍຍັດ ໃຫ້ໄດ້ຂະໜາດແລ້ວທິບຂຶ້ນ ໃຫ້ເປັນເສັ້ນຕັ້ງຂອງກະເຈາະສ່ວນເສັ້ນທາງນອນຫລືເສັ້ນທີ່ຈະນຳມາສານແມ່ນໃຊ້ໄມ້ຄາ(ລອງລະຕຽງ) ສານລາຍສອງເສັ້ນຄູ່ ສານຈົນສຸດຕາມແນວເສັ້ນຕັ້ງຫລືເສັ້ນຫລັກແລ້ວຫລົບຂອບ(ກະບອມ)ໃຫ້ກ້ຽງງາມ ຈາກນັ້ນກໍ່ນຳເສັ້ນຫວາຍ(ແລຣ)ມາ

ແນບໃສ່ຂອບທັ້ງດ້ານນອກ ແລະດ້ານໃນ ນຳຫວາຍອີກເສັ້ນມາສານລາຍມັດເພື່ອຄວາມ ທົນທານສຳລັບຕີນກະເຈາະແມ່ນໃຊ້ໄມ້ໜູນຕັດໃຫ້ໄດ້ຂະໜາດ15-18ຊັ້ງຕີແມັດ ກວ້າງ ປະມານ3-5ຊັ້ງຕີແມັດ ໃຫ້ເທົ່າກັນທັ້ງສີ່ດ້ານແລ້ວຍຶດຕິດກັນດ້ວຍຫວາຍນຳກະເຈາະໄປ ໃສ່ຕີນມັດຕິດກັນດ້ວຍຫວາຍເຈາະຮູຢູ່ສ່ວນຕີນໄວ້ເພື່ອມັດເຊືອກສ່ວນຫູແມ່ນສານດ້ວຍ ລາຍກ້າງປາອ້ົມໂຕຂອງກະເຈາະພ້ອມສານລາຍພັນໃສ່ສ່ວນທີ່ເປັນຫູເພື່ອສອດເຊືອກ.

ການນຳໃຊ້: ໃຊ້ເຂົ້າໃນເວລາຮູດເຂົ້າໄຮ່ ເກັບກາເຟ ໃສ່ເຂົ້າ ໃສ່ຣຳ ນອກຈາກ ນັ້ນຍັງໃຊ້ໃນເວລາເກັບຜັກ ຕ່າງໆ ຜູ້ນຳໃຊ້ຫລັກຈະເປັນຜູ້ຍິງເທົ່ານັ້ນ.

ໃຊ້ເຂົ້າໃນເວລາເກັບກາເຟ.







ໃຊ້ໄວ້ໃສ່ເຂົ້າສານ ຣຳ ແລະ ອື່ນໆ.

№ 94 - ຊື່ພາສາລາວ: ກະພາ

- ຊື່ພາສາທ້ອງຖິ່ນ: ກະພາ
- ເຈົ້າຂອງເຄື່ອງ: ບ້ົມ
- ບ່ອນເກັບມ້ຽນ: ໃນເຮືອນຄົວ









- ຜູ້ນຳໃຊ້: ຍິງ, ຊາຍ
- ການນຳໃຊ້: ຮູດເຂົ້າ,ໄປໄຮ່,ໃສ່ເຂົ້າ,ໃສ່ເຜືອກ,ສາລີ

ກະພາ (ກະພາ)

ລັກສະນະທີ່ເຫັນຈະແມ່ນເອກະລັກຂອງຊົນເຜົ່າ ທາງເມືອງກະລຶ່ມ ເປັນການນຳໃຊ້ເຂົ້າໃນການເຮັດໄຮ່ເຊັ່ນດຽວກັນ ແລ້ວຄົນເຜົ່າສ່ວຍກໍ່ບໍ່ເຄີຍທີ່ຈະຜະລິດ ໃຊ້ໄວ້ໃນເວລາໄປໄຮ່ໃສ່ເຜືອກ ມັນ ສາລີ ລັກສະນະແມ່ນຈະປາກກວ້າງ ກົ້ນຈ້ອມຄ້າຍໆກັນກັບກະພາຂອງຄົນຜົນແງະ ມີຂະໜາດຄວາມສູງ 60 ຊັ້ງຕິແມັດ ປາກກະພາມີລັດສະໝີປະມານ 40-45 ຊັ້ງຕິແມັດ ສ່ວນທາງກົ້ນມີຂາຕັ້ງ ມີຄວາມກວ້າງຂະໜາດ 20-25 ຊັ້ງຕິແມັດ ຂອງແຕ່ລະຂ້າງ ຜູ້ນຳໃຊ້ຫລັກ ຈະເປັນຜູ້ຍິງ.








№ 95 - ຊື່ພາສາລາວ: ກະພາ


- ຊື່ພາສາທ້ອງຖິ່ນ: ກະຊາງເຕາະ ປະອູ
- ເຈົ້າຂອງເຄື່ອງ: ສູດ
- ບ່ອນເກັບມ້ຽນ: ແຈເຮືອນ




- ຜູ້ນຳໃຊ້: ຍິງ, ຊາຍ
- ການນຳໃຊ້: ເມ່ືອໄຮ່,ໃສ່ເຂົ້າ, ເຜືອກ, ມັນ.

№ 96 - ຊື່ພາສາລາວ: ກະພາ

- ຊື່ພາສາທ້ອງຖິ່ນ: ກະຊາງເຕາະ ປະອູ
- ເຈົ້າຂອງເຄື່ອງ: ສູດ
- ບ່ອນເກັບມ້ຽນ: ແຈເຮືອນ






- ຜູ້ນຳໃຊ້: ຍິງ, ຊາຍ
- ການນຳໃຊ້: ເມື່ອໄຮ່, ໃສ່ເຂົ້າ, ເຜືອກ, ມັນດ້ຽງ.

ກະພາ (ກະຊາງ ຫລື ດ້ອຍ)


ລັກສະນະຂອງກະຊາງຂອງຄົນເຜົ່າສ່ວຍ ແມ່ນຄ້າຍຄືກັບກະພາແຕ່ຈະມີຮູບຮ່າງຂອງສ່ວນກາງໜ່ວຍນັ້ນກົມ ປາກກວ້າງ ແລະ ມີເຊືອກໄວ້ເປ້ໃສ່ຫລັງ ຄວາມສູງປະມານ 50-55 ຊັ້ງຕິແມັດ ຕີນເປັນຮູບສີ່ຫ່ລ່ຽມ 17-20 ຊັ້ງຕິແມັດ ຂອງແຕ່ລະດ້ານ ປາກຂອງກະຊາງມີລັກສະໝີ 35 - 40 ຊັ້ງຕິແມັດ ປະກອບມີສອງຫູ.




ການຜະລິດ: ວັດສະດຸທີ່ນຳໃຊ້ເຂົ້າໃນການຜະລິດ ແມ່ນໃຊ້ໄມ້ຄາ(ລະຕຽງ) ການສານຈະເລີ້ມຈາກສ່ວນກົ້ນຂອງກະຊາງ ສານດ້ວຍລາຍຂັດ ໃຫ້ໄດ້ຕາມຂະໜາດທີ່ຕ້ອງການ ຈາກນັ້ນກ່ໍສານທິບຂຶ້ນ ໃຫ້ເປັນເສັ້ນແນວຕັ້ງຈາກນັ້ນກ່ໍນຳໄມ້ໄຜ່ທີ່ເຫລົາເປັນດີ້ວ ມານສານກັນກັບເສັ້ນຫລັກ ຫລື ເສັ້ນແນວຕັ້ງຂອງກະຊາງນັ້ນ ດ້ວຍການລາຍລາຍສອງ ສານຂຶ້ນໄປເລື້ອຍໆ ຈົນໄດ້ຂະໜາດຄວາມສູງແລ້ວ ກ່ໍສານຫລົບຂອບໃຫ້ສວຍງາມ ສຳລັບຂອບປາກຂອງກະຊາງ(ກະບອມ) ເຫລົາໄມ້ໄຜ່ໃຫ້ໄດ້ຂະໜາດ 1,5-2ຊັ້ງ

ຕິແມ້ດ ຈຳນວນສອງເສັ້ນ ຄວາມຍາວເທົ່າຂອບປາກຂອງກະຊາງ ນຳມາແນບໃສ່ຂອບປາກກະຊາງທັງດ້ານນອກ ແລະ ດ້ານໃນ ໃຊ້ຫວາຍສານລາຍມັດໃຫ້ຍຶດແໜ້ນກັນ ທັງສອງ ດ້ານ ຫລັງຈາກນັ້ນຈຶ່ງມາປະກອບຕີນຂອງກະຊາງໃສ່ ຊຶ່ງຕີນແມ່ນເຮັດດ້ວຍໄມ້ ຂຸດຕັດໃຫ້ໄດ້ຂະໜາດ17-20 ຊັ້ງຕິແມ້ດ ໃຫ້ສະເໝີກັນຈາກນັ້ນກໍ່ເຈາະຮູຢູ່ສົ້ນສຸດຂອງສົ້ນໄມ້ ເພື່ອສອດຫວາຍຍຶດຕິດກັນໃຫ້ເປັນສີ່ຫລ່ຽມ ແລ້ວຈຶ່ງນຳໄປປະກອບໃສ່ກົ້ນກະຊາງ ດ້ວຍການມັດຕິດກັນດ້ວຍຫວາຍເຊັ່ນດຽວກັນ ຈາກນັ້ນຈຶ່ງມາສານໜູ ເພື່ອໄວ້ມັດສາຍເປ້ ຈຶ່ງສາມາດນຳໃຊ້ໄດ້.

ການນຳໃຊ້: ສ່ວນຫລາຍຈະເປັນຜູ້ຍິງໃຊ້ເຄື່ອງດັ່ງກ່າວ ເປ້ເຂົ້າ ນ້ຳ ໄປກິນຢູ່ໄຮ່ ເວລາກັບມາຈາກໄຮ່ກໍ່ໃສ່ເຂົ້າເປືອກມັນຕົ້ນ ແລະ ສິ່ງອື່ນໆທີ່ຫາໄດ້ ນອກຈາກນັ້ນຍັງໃຊ້ໃນເວລາເກັບກາເຟ ສາລີ ມັນຕົ້ນ ມັນດ້ຳ ເກັບຟືນຕ່າງໆ ນຳອີກ.



ພາຍຫລັງການເກັບກ່ຽວກະເຟ
ຈະຖອກໃສ່ກະຊາງ



ເປ້ຟືນມາຈາກປ່າ
ດ້ວຍການນຳໃຊ້ໃສ່ກະຊາງ


- ອຸປະກອນການຫາປາ

№97 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ຂ້ອງບຣາ
- ເຈົ້າຂອງເຄື່ອງ: ທົ້ວ
- ບ່ອນເກັບມ້ຽນ: ຫ້ອຍໄວ້ ໃນເຮືອນ



1





- ຜູ້ນຳໃຊ້: ຜູ້ຊາຍ
- ການນຳໃຊ້: ຫາປາ, ຕຶກແຫ


24 / VII
ขายจำหน่าย

№ 98 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ຂ້ອງບຣາ
- ເຈົ້າຂອງເຄື່ອງ: ທົ້ວ
- ບ່ອນເກັບມ້ຽນ: ທ້ອຍໄວ້ ໃນເຮືອນ









- ຜູ້ນຳໃຊ້: ຊາຍ
- ການນຳໃຊ້: ຫາປາ, ຕຶກແຫ

ຂອ້ງ (ຂ້ອງບຣາ)


ຂ້ອງນອກຈາກໃຊ້ໃນການຫາປາແລ້ວ ສ່ວນຜູ້ຊາຍກໍ່ນຳໃຊ້ຂ້ອງໃສ່ພ້າໄປໄຮ່ ໄວ້ຕັດໄມ້ຜ່າຟືນ ລັກສະນະປາກຈອມ ລຳຕົວຂ້ອງຈະກົມ ຄວາມສູງປະມານ 30-35 ຊັ້ງຕິແມັດ ສ່ວນປາກມີລັດສະໝີ12-20 ຊັ້ງຕິແມັດຂອ້ງບາງໜ່ວຍອາດຈະມີຕີນ ຫລືອາດຈະບໍ່ມີຕີນ ຂະໜາດຂອງກົ້ນຂ້ອງປະມານ 15 -20 ຊັ້ງຕິແມັດ ມີສາມຫູເພື່ອໄວ້ສອດເຊືອກມັດແອວ.



ການຜະລິດ: ການຜະລິດແມ່ນເຮັດຂຶ້ນຈາກວັດສະດຸທຳມະຊາດເຊັ່ນ: ຫວາຍ ດິນ ຊຶ່ງໃນຂອບເຂດປ່າເລິກຈະມີຫລາຍ ເປັນຫວາຍທີ່ໜຽວແໜ້ນທົນທານໃນການສານ ຈະເລີ້ມຈາກສ່ວນກົ້ນຂອງມັນກ່ອນດ້ວຍລາຍຂັດ ຈົນໄດ້ຂະໜາດທີ່ຕ້ອງການ ແລ້ວສານ ທົບໂຄ້ງດວ້ຍຫວາຍອີກເສັ້ນໜຶ່ງຂຶ້ນ ໃຫ້ເປັນໜ່ວຍສານອ້ອມເສັ້ນຫລັກນັ້ນດ້ວຍຂັດ ຈົນ ໄດ້ຂະໜາດທີ່ກຳນົດໄວ້ ພໍຮອດສິ້ນສຸດຂອງປາກຂ້ອງກໍ່ຈະສານຫລົບຂອບໃຫ້ກ້ຽງງາມດີ ຈາກນັ້ນກໍ່ນຳຫວາຍຫາງໜູ ເສັ້ນມັນຈະນ້ອຍກົມງາມ ມາສານດ້ວຍລາຍກ້າງປາ ອ້ອມ ໜ່ວຍຂ້ອງນັ້ນ ພ້ອມທັ້ງເຮັດຫູໃສ່ ສອງຫູໄກ້ກັບປາກ ອີກຫູໜຶ່ງແມ່ນໄກ້ກັບກົ້ນຂ້ອງນັ້ນ ແລ້ວສອດເຊືອກມັດໃສ່ໄວ້ເພື່ອມັດແອວໃນເວລາໃຊ້ງານ.



ໃຊ້ໃນເວລາໄປຫາປາ
ມັດໃສ່ແອວເພື່ອງ່າຍໃນເວລານຳໃຊ້.





ໃຊ້ໃສ່ມີດ ພ້າ ໃນ
ເວລາໄປໄຮ່ຫລື ໄປຕັດໄມ້ໃນປ່າ.

№ 99 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ປະແລຣ
- ເຈົ້າຂອງເຄື່ອງ: ສູດ
- ບ່ອນເກັບມ້ຽນ: ຫ້ອຍໄວ້ຝາໃນຄົວ









- ຜູ້ນຳໃຊ້: ພໍ່, ແມ່, ລູກ
- ການນຳໃຊ້: ໄປຫາປາໃສ່ປາ,ກົບ

№100 - ຊື່ພາສາລາວ: ຂ້ອງ

- ຊື່ພາສາທ້ອງຖິ່ນ: ປະແລຣ
- ເຈົ້າຂອງເຄື່ອງ: ສູດ
- ບ່ອນເກັບມ້ຽນ: ຫ້ອຍໄວ້ຝາໃນຄົວ








- ຜູ້ນຳໃຊ້: ພໍ່, ແມ່, ລູກ
- ການນຳໃຊ້: ໄປຫາປາໃສ່ປາ,ກົບ

ຂ້ອງ(ຢະແລຣ)

ໃຊ້ໃນເວລາຫາປາ ລັກສະນະຄ້າຍຄື ກັບຂ້ອງຂອງຄົນລາວລຸ່ມ ສ່ວນໂຕຈະກວ້າງ ປາກຈ້ອມ ແລະ ມີຕີນສາມາດຕັ້ງໄດ້ ຂະໜາດຄວາມສູງປະມານ 20 - 45 ຊັ່ງຕິແມັດ ປາກມີລັດສະໝີປະມານ 12 -15 ຊັ່ງຕິແມັດ ກົ້ນຂ້ອງເປັນຮູບສີ່ລ່ຽມ ຂະໜາດປະມານ 9 -12 ຊັ່ງຕິແມັດ ລັດວະໝີຂອງສ່ວນຕົວບ່ອນທີ່ກວ້າງສຸດ 40 -76 ຊັ່ງຕິແມັດ.




ການຜະລິດ:

ວັດສະດຸທີ່ໃຊ້ຜະລິດແມ່ນໄມ້


ໄຜ່(ເດີ້ວ້ຽແດຣ)ເປັນສະນິດທີ່ຄ້າຍຄືໄມ້ໄຜ່ຕັດ

ເອົາຊ່ວງທີ່ມີຂໍ້ລຽບ ນຳມາຜ່າໃຫ້ເປັນດີ້ວ ແລ້ວເຫລົາໃຫ້ໄດ້ຂະໜາດ 0,5 ຊັ່ງຕິແມັດ ໃຫ້ຄົບຕາມຈຳນວນທີ່ຕ້ອງການ ເລີ້ມດ້ວຍການສານຈາກທາງກົ້ນດ້ວຍລາຍຂັດ ຈົນໄດ້ຂະໜາດຂອງກົ້ນ ຈາກນັ້ນກ່ຳທົບເສັ້ນທີ່ສີ່ດ້ານນັ້ນຂຶ້ນ ຈາກນັ້ນກ່ຳນຳເສັ້ນຫວາຍຫລືເສັ້ນໄມ້ໄຜ່ທີ່ເຫລົາໄວ້ແລ້ວນັ້ນມາສານທາງດ້ານຂວາງນັ້ນດ້ວຍລາຍຂັດເຊັ່ນດຽວກັນ ສານໃຫ້



ຖີ່ໆ (ຕາມຮູບທີ່ເຫັນ) ສານໄປເລື້ອຍໆ ປັບຂະໜາດໃຫ້ກວ້າງອອກພໍເພາະສ່ວນຕົວຂອງຂ້ອງ ຈົນຮອດສ່ວນຄໍເຂົາຈະປັບໃຫ້ນ້ອຍເຂົ້າພໍມີເຂົ້າໄດ້ ສ່ວນປາກຈະສານໃຫ້ບານອອກເລັກນ້ອຍ ໃຫ້ໄດ້ຂະໜາດປະມານ 12 -15 ຊັ້ງຕິແມັດ ແລ້ວຈຶ່ງເກັບຂອບປາກຂ້ອງ ນັ້ນໃຫ້ລະອຽດ ສ່ວນກົ້ນຈະມີຕີນຢູ່ສີ່ດ້ານ ຊຶ່ງຕີນຂອງມັນນັ້ນເຮັດດ້ວຍໄມ້ໄຜ່ ເຂົາຈະຕັດເອົາສ່ວນທີ່ເປັນຂ້ໄມ້ນັ້ນມາເຫລົາໃຫ້ແຫລມ ແລະອີນສ່ວນຕ່ຳຈາກຂໍໄມ້ນັ້ນເຫລົາໃຫ້ເປັນຕີນ ຈາກນັ້ນກໍ່ນຳສ່ວນທີ່ແຫລມນັ້ນໄປຕອກໃສ່ແຈທັ້ງສີ່ດ້ານຂອງກົ້ນຂ້ອງດັ່ງກ່າວ ສະເພາະສ່ວນກົ້ນນັ້ນຈະໃຊ້ໄມ້ມາຂັດເພີ້ມເຂົ້າຕື່ມ ສານຫູຕິດແລ້ວກໍ່ມັດເຊືອກໃສ່ກໍ່ສາມາດນຳໃຊ້ໄດ້.


ການນຳໃຊ້: ໃຊ້ໃນເວລາໄປຫາປາຢູ່ຕາມທົ່ງນາ ຫວ້ຍຮ່ອງຕ່າງໆ ມັດໃສ່ແອວໄປທາງດ້ານຫລັງ ຫລື ທາງດ້ານຂ້າງ ນຳໃຊ້ທັ້ງຜູ້ຊາຍ ແລະຜູ້ຍິງ.



ບ່ອນເກັບມຸ້ງນຫ້ອຍໄວ້ ຝາຫລັງບ້ານ.

№101 - ຊື່ພາສາລາວ: ໄຊ

- ຊື່ພາສາທ້ອງຖິ່ນ: ຈຣ໋ອກ
- ເຈົ້າຂອງເຄື່ອງ: ສູກ
- ບ່ອນເກັບມ້ຽນ: ກ້ອງຕາລ່າງ






- ຜູ້ນຳໃຊ້: ຍິງ, ຊາຍ
- ການນຳໃຊ້: ຍາມຝົນຫາປາ

ໄຊ (ຈະລ໋ອກ)

ມີລັກສະນະເປັນທໍ່ກົມ ປາຍແຫລມ ມີຝາອັດປາກ ຊຶ່ງຝາດັ່ງກ່າວນີ້ປາສາມາດເຂົ້າໄປໄດ້ແຕ່ບໍ່ສາມາດອອກຄືນໄດ້ ຂະໜາດຄວາມຍາວທັ້ງໝົດ42ຊັ້ງຕິແມັດສະເພາະສ່ວນຕົວມີຂະໜາດ32ຊັ້ງຕິແມັດ ປາກຂອງມັນມີຂະໜາດ 9,5 ຊັ້ງຕິແມັດ ສຳລັບຝາອັດມີຂະໜາດ 8,5 ຊັ້ງຕິແມັດ.

ການຜະລິດ: ຜະລິດຂຶ້ນຈາກໄມ້ໄຜ່ເຫລົ່າໃຫ້ກ້ຽງດີ ຂະໜາດຍາວ80-90 ຊັ້ງ ຕິແມັດ ເຂົາຈະເລີ້ມສານຈາກສ່ວນຂອບປາກຂອງໄຊກ່ອນສ່ວນຂອບແມ່ນຈະໃຊ້ຫວາຍ ມັດໃຫ້ເປັນບ້ວງຕາມຂະໜາດທີ່ຕ້ອງການຈາກນັ້ນກໍ່ນຳໄມ້ໄຜ່ທີ່ຕຽມໄວ້ນັ້ນມາຟາດທົບ ເຄິ່ງຄວາມຍາວນັ້ນໃສ່ຂອບປາກແລ້ວ ນຳໄມ້ໄຜ່ທີ່ເຫລົ່າໄວ້ນັ້ນມາສານດ້ວຍລາຍສອງ ຈົນເກືອບສຸດເສັ້ນ ໃນຂະນະທີ່ສານນັ້ນເຂົາຈະປັບໃຫ້ຂະໜາດລັດສະໝີ ນັ້ນ ນ້ອຍລົງ ເລື້ອຍໆຈົນຮອດສ່ວນກົ້ນ ຂອງໄຊຈະປະສ່ວນປາຍຂອງໄມ້ໄຜ່ ນັ້ນໃຫ້ຈຸມກັນ ແລະ ມັດ ໃຫ້ແໜ້ນ.ຈາກນັ້ນກໍ່ມາສານປາກຂອງໄຊນັ້ນ ຊຶ່ງຈະເຮັດຂອບດ້ວຍຫວາຍມາພັນກັນໃຫ້ ເປັນວົງມົນຄ້າຍກັນກັບສ່ວນປາກນັ້ນແລະນຳເສັ້ນຕອກມາສານໃຫ້ ສົ້ນຂອງມັນຈຸມເຂົ້າ ກັນແຕ່ຈະບໍ່ມັດສົ້ນຂອງມັນໄວ້ເພື່ອໃຫ້ປາເຂົ້າໄປໄດ້(ເບິ່ງຕາມຮູບ)



ນ້ຳໄຫລ ໄຫລໄດ້ ດີນບໍ່ໃຫ້

ການນຳໃຊ້:

ໃສ່ຢູ່ຕາມຮ່ອງນາ ຫລື ຄັນນາໃຊ້ສະເພາະຍາມຝົນ ເມື່ອມີ ໆຈະນຳໄຊນັ້ນ ໄວ້ຮ່ອງນາ ຂຸດໃຫ້ເປັນຮ່ອງ ເພື່ອໃຫ້ນ້ຳ ເກັບຮ່ອງນານັ້ນ ສ່ວນອື່ນແມ່ນຈະຕັນ ດ້ວຍ ມາກໍ່ຈະລອຍເຂົ້າ ຮ່ອງນຳນັ້ນ ມັນບໍ່ສາມາດລອຍໄປບ່ອນອື່ນໆໄດ້ ເຂົາຈະມາຢາມເບິ່ງມື້ລະເທື່ອເພື່ອມາ ເກັບເອົາປາທີ່ລອຍເຂົ້າໄຊນັ້ນ.

ຄຸນຄ່າຂອງເຄື່ອງຈັກສານທີ່ມີຕໍ່ການດຳລົງຊີວິດ ຂອງຊົນເຜົ່າໃນແຂວງເຊກອງ

ເຄື່ອງຈັກສານຖືໄດ້ວ່າ ມີບົດບາດສຳຄັນຍິ່ງ ໃນການດຳລົງຊີວິດປະຈຳວັນຂອງ ຄົນຊົນເຜົ່າ ສິ່ງຂອງເຄື່ອງໃຊ້ທີ່ໄດ້ຜະລິດຂຶ້ນນັ້ນ ຖືກປະດິດສ້າງຂຶ້ນດ້ວຍພູມປັນຍາດ້ວຍ ຄວາມຄິດ ຄວາມຕ້ອງການ ເຂົາຈຶ່ງໄດ້ຮູ້ ແລະ ເຂົ້າໃຈເຖິງສິ່ງນັ້ນໆ ທັງນີ້ຈຶ່ງເກີດຄວາມ ຮັກແລະຫວງແຫນໃນຄຸນຄ່າຂອງເຄື່ອງໃຊ້ນັ້ນໆ ເກີດຂຶ້ນໄດ້ຍ້ອນຄວາມຕັ້ງໃຈຂອງຜູ້ຜະ ລິດ ຊຶ່ງຈະບັນຈົງເຫລົ່າເສັ້ນຕອກ ແຕ່ລະເສັ້ນ ນຳມາສານລວມກັນດ້ວຍລວດລາຍຕ່າງໆ ເຮັດໃຫ້ເກີດເປັນຮູບຮ່າງທີ່ເໝາະສົມກັບການນຳໃຊ້ສິ່ງຂອງເຄື່ອງໃຊ້ຕ່າງໆ ຈຶ່ງເກີດຂຶ້ນ ມີຄຸນຄ່າຕໍ່ກັບຈິດໃຈຢ່າງຕິດແໜ້ນ ໂດຍເຂົາຈະນຳໃຊ້ຢ່າງຖະນຸຖະໜອມບໍ່ໃຫ້ແຕກຫັກ ງ່າຍ.

ໃນການຜະລິດເຄື່ອງຈັກສານຂຶ້ນ ເພື່ອຕອບສະໜອງໃນປັດໃຈພື້ນຖານ ທາງ ດ້ານການດຳລົງຊີວິດປະຈຳວັນ ອັນປະກອບດ້ວຍກິດຈະກຳຕ່າງໆເຊັ່ນ: ການອຸປະໂພກ ການບໍລິໂພກ ແລະ ຄວາມເຊື່ອ ຊຶ່ງເປັນສິ່ງທີ່ເກີດຂຶ້ນໃນພິທີກຳຕ່າງໆ ກິດຈະກຳຕ່າງໆ ນັ້ນຈະເປັນຕ້ອງໃຊ້ເຄື່ອງມື ເຄື່ອງໃຊ້ ເປັນປະໂຫຍດຫລາຍຕໍ່ການດຳລົງຊີວິດ ດ້ວຍເຫດ ນີ້ເຄື່ອງຈັກສານຈຶ່ງຖືໄດ້ວ່າເປັນຫັດຖະກຳທີ່ໃຫ້ຄຸນຄ່າທາງດ້ານປະໂຫຍດໃຊ້ສອຍ ດ້ານ ຄວາມງາມ ແລະ ດ້ານຄວາມເຊື່ອ.

- ຄຸນຄ່າທາງດ້ານປະໂຫຍດການໃຊ້ສອຍ

ຈາກການສຶກສາຄຸນຄ່າ ທາງດ້ານປະໂຫຍດການໃຊ້ສອຍ ໃນດ້ານການນຳໃຊ້ ສິ່ງຂອງຕ່າງໆ ເຄື່ອງຈັກສານດັ່ງທີ່ກ່າວມາ ລ້ວນແຕ່ມີຄວາມກ່ຽວຂ້ອງກັບຄວາມເປັນຢູ່ ລັກສະນະພູມີປະເທດ ເຊັ່ນ: ກະເຈາະ ຂ້ອງ ສ້າງຂຶ້ນມາເພື່ອການນຳໃຊ້ໃນ ເວລາເຮັດໄຮ່ ຫາປາ ຊຶ່ງຈະປະກອບມີສາຍເຊືອກມັດໃສ່ແອວເພື່ອສະດວກໃນເວລາຮູດ ເຂົ້າແລະຫາປາ ສ້ອນປາ(ນູກ) ກໍ່ສ້າງຂຶ້ນໃຫ້ສະດວກເວລາຫາປາເພາະເຂດດັ່ງກ່າວ ຈະ ເປັນຫ້ວຍນ້ຳທີ່ໄຫລ ແລະ ປະກອບດ້ວຍຊອກຫີນ.

ຄຸນຄ່າທາງດ້ານຄວາມງາມ

1. ຄວາມງາມທີ່ເກີດຂຶ້ນຈາກວັດສະດຸ: ເຄື່ອງຈັກສານເກືອບທຸກປະເພດ ທີ່ນຳ ໃຊ້ວັດສະດຸພື້ນບ້ານທີ່ມີຢູ່ໃນທ້ອງຖິ່ນ ວັດສະດຸຫລັກຄື ໄມ້ໄຜ່ ຫວາຍ ວັດສະດຸທີ່ມີຕາມ

ທຳມະຊາດຈະມີຄວາມງາມໃນຕົວຂອງມັນເອງເຊັ່ນ: ໄມ້ບີງ ໄມ້ຫີກ ຜິວຂອງມັນມີລັກສະນະເງົາງາມ ຈະມີສີຂອງເນື້ອໄມ້ທີ່ແຕກຕ່າງກັນຂອງແຕ່ລະສະນິດ ແຕ່ຖ້າຫາກວ່ານຳມາສານລວມກັນໃຫ້ເປັນວັດຖຸໜຶ່ງ ຈະເຫັນຄວາມງາມສະເພາະຂອງເນື້ອໄມ້ນັ້ນໆ.

2. ຄວາມງາມທີ່ເກີດຂຶ້ນຈາກລວດລາຍເຄື່ອງຈັກສານ: ການຜະລິດເຄື່ອງຈັກສານ ຄືນຳວັດສະດຸກໍ່ຄືເສັ້ນຕອກນັ້ນນຳມາສານ ຫລື ຂັດ ລວມກັນໃຫ້ໄດ້ຕາມແມ່ແບບການຂັດ ຫລື ສານນັ້ນ ກໍ່ໃຫ້ເກີດລວດຂຶ້ນຊຶ່ງມີຮູບແບບຕ່າງໆກັນ ລັກສະນະທີ່ສຳຄັນມີສອງຢ່າງຄື: ລວດລາຍລະອຽດ ແລະ ລວດລາຍທຳມະດາ ກໍ່ມີຈຸດເດັ່ນສະເພາະແຕ່ລະລັກສະນະຂອງມັນ ມີເຄື່ອງຈັກສານບາງປະເພດກໍ່ມີລັກສະນະລາຍດຽວເທົ່ານັ້ນ ທີ່ກໍ່ໃຫ້ເກີດຄວາມປະສານສຳພັນກັນເຮັດໃຫ້ເກີດເປັນຄວາມງາມຂຶ້ນ.

ຜ່ານການສຶກສານັ້ນ ຄວາມງາມທີ່ເກີດຈາກລວດລາຍຂອງເຄື່ອງຈັກສານໄມ້ໄຜ່ຂອງຊົນເຜົ່າໃນແຂວງເຊກອງນີ້ເຫັນໄດ້ວ່າ ການສານລາຍແຕ່ລະສ່ວນນັ້ນ ວັດຖຸປະສົງຫລັກ ກໍ່ເພື່ອປະກອບສ້າງຂຶ້ນໃຫ້ເປັນຮູບຊົງ ຫລື ເປັນແຜ່ນເພື່ອໃຊ້ສຳລັບໃສ່ເຄື່ອງຂອງ ຫລື ຮອງຮັບສິ່ງຂອງເພື່ອເກັບມ້ຽນ ຫລື ຍົກຍ້າຍໃນທີ່ຕ່າງໆ.

ภาชนะดินเผา

